# ມາດຕະຖານດຳເນີນງານການຊ່ວຍເຫຼືອ ດ້ານຂະບວນການຍຸຕິທຳ

## ສຳລັບແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍ ຈາກຄວາມຮຸນແຮງ ຢູ່ ສປປ ລາວ



ກໍລະກົດ 2023

ນະຄອນຫຼວງວຽງຈັນ

# ສາລະບານ


**ຄຳນຳ ຂອງ ທ່ານ ນາງ ອິນລາວັນ ແກ້ວບຸນພັນ** — I

**ຄຳເຫັນ ຂອງ ທ່ານ ບຸນທາ ຊຶງເຢີທ່າວ** — II

**ຄຳເຫັນ ຂອງ ທ່ານ ນາງ ມາຕິນ ເທີເຣີ** — III

**ພາກທີ I: ພາກສະເໜີ** — 1

1. ສະພາບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ — 1
2. ນິຕິກຳສາກົນ, ນິຕິກຳພາກພື້ນອາຊຽນ ແລະ ນິຕິກຳພາຍໃນກ່ຽວຂ້ອງກັບສິດທິແມ່ຍິງ — 2
   - 2.1. ນິຕິກຳສາກົນ — 2
   - 2.2. ນິຕິກຳພາກພື້ນອາຊຽນ — 2
   - 2.3. ນິຕິກຳພາຍໃນ — 3
3. ຈຸດປະສົງ ແລະ ຂອບເຂດ — 3
4. ກຸ່ມເປົ້າໝາຍທີ່ນຳໃຊ້ ແລະ ກຸ່ມທີ່ໄດ້ຮັບການບໍລິການຊ່ວຍເຫຼືອ — 4
   - 4.1. ກຸ່ມເປົ້າໝາຍທີ່ນຳໃຊ້ — 4
   - 4.2. ກຸ່ມທີ່ໄດ້ຮັບການບໍລິການຊ່ວຍເຫຼືອ — 4

**ພາກທີ II ຄຳນິຍາມ ແລະ ອະທິບາຍຄຳສັບ** — 5

1. ຄຳນິຍາມ — 5
2. ອະທິບາຍຄຳສັບ — 6

**ພາກທີ III ບັນດາຫຼັກການສຳຄັນ ແລະ ຄຸນລັກສະນະທົ່ວໄປຂອງການປົກປ້ອງ ແລະ ການຊ່ວຍເຫຼືອອັນຈຳເປັນທາງດ້ານຂະບວນຍຸຕິທຳ** — 12

1. ຫຼັກການສຳຄັນ — 12
2. ຄຸນລັກສະນະທົ່ວໄປ ຂອງການປົກປ້ອງ ແລະ ຊ່ວຍເຫຼືອອັນຈຳເປັນທາງດ້ານຂະບວນການຍຸຕິທຳ — 13

**ພາກທີ IV ການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກ ຄວາມຮຸນແຮງ** — 16

1. ກົນໄກການລາຍງານ ແລະ ການສົ່ງຕໍ່ — 16
2. ແຜນວາດຂະບວນການ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງໃນຂະບວນການຍຸຕິທຳ — 18
3. ໜ້າທີ່ຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງໃນຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ — 19
4. ການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງຢູ່ ສປປ ລາວ — 22
   - 4.1. ການປ້ອງກັນ — 22
   - 4.2. ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍເບື້ອງຕົ້ນ — 23
     - 4.2.1. ການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນ — 23
     - 4.2.2. ການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນຂອງເຈົ້າໜ້າທີ່ຕຳຫຼວດ — 25
     - 4.2.3. ການຊ່ວຍເຫຼືອທາງດ້ານກົດໝາຍ — 28
   - 4.3. ການດຳເນີນການດ້ານຂະບວນການຍຸຕິທຳ — 29
   - 4.4. ການໄກ່ເກ່ຍ — 29
   - 4.5. ການດຳເນີນຄະດີ — 35
     - 4.5.1. ການສືບສວນ-ສອບສວນ — 36

4.5.1.1. ການຕິດຕາມກວດກາກ່ອນການເປີດການສືບສວນ-ສອບສວນ 37
4.5.1.2. ຂັ້ນຕອນໃນການດຳເນີນການສຳພາດ ເພື່ອການສືບສວນ-ສອບສວນ 38
4.5.2. ຂະບວນການກ່ອນການພິຈາລະນາຄະດີ 43
4.5.3. ຂະບວນການພິຈາລະນາຄະດີ 46
4.5.3.1. ການຮັບສຳນວນ ແລະ ພິຈາລະນາຕັດສິນຄະດີ 46
4.5.3.2. ການເປີດປະຊຸມສານ 46
4.5.4. ຄວາມຮັບຜິດຊອບຂອງຜູ້ກະທຳຜິດ ແລະ ການໃຊ້ແທນຄ່າເສຍຫາຍ 50
4.5.5. ຂະບວນການຫຼັງການພິຈາລະນາຄະດີ 53

**ພາກທີ V ການເຂົ້າເຖິງການບໍລິການທີ່ຈຳເປັນຂອງແມ່ຍິງທີ່ດ້ອຍໂອກາດ** 54
1. ການຄຳນຶງເຖິງຄວາມແຕກຕ່າງຂອງກຸ່ມແມ່ຍິງ ແລະ ເດັກທີ່ດ້ອຍໂອກາດ 54
2. ການພິຈາລະນາສຳລັບກຸ່ມແມ່ຍິງ ແລະ ເດັກທີ່ມີຄວາມສ່ຽງສະເພາະ 55
2.1. ຜູ້ຖືກເຄາະຮ້າຍ ທີ່ມີຄວາມພິການ 55
2.2. ຜູ້ຖືກເຄາະຮ້າຍທີ່ມີຄວາມແຕກຕ່າງດ້ານຄຸນລະສະນະທາງເພດ 55
2.3. ແຮງງານເຄື່ອນຍ້າຍເພດຍິງ 55
2.4. ແມ່ຍິງທີ່ມາຈາກກຸ່ມຊົນເຜົ່າ 55
2.5. ກຸ່ມຄົນທີ່ຖືກບັງຄັບໃຫ້ເປັນໂສເພນີ 56
2.6. ຜູ້ເຄາະຮ້າຍທີ່ເປັນຜູ້ສູງອາຍຸ 56
2.7. ແມ່ຍິງ ຜູ້ທີ່ຖືກກັກຂັງຢູ່ໃນຄ້າຍຄຸມຂັງ ບໍ່ວ່າດ້ວຍເຫດຜົນໃດກໍຕາມ 56

**ພາກທີ VI ການເກັບກຳຂໍ້ມູນ ແລະ ການລາຍງານ** 57
1. ການຈັດເກັບຂໍ້ມູນ 57
2. ການແລກປ່ຽນຂໍ້ມູນ 58
3. ການລາຍງານ ແລະ ວິເຄາະຂໍ້ມູນ 58
4. ແບບຟອມການເກັບຂໍ້ມູນ ແລະ ເອກະສານຂອງຜູ້ຖືກເຄາະຮ້າຍ 59

ເອກະສານຊ້ອນທ້າຍ 1 : ຕາຕະລາງຈັດປະເພດຄວາມຮີບດ່ວນ ຂອງຄະດີຄວາມຮຸນແຮງຕໍ່ແມ່ຍິງ 60
ເອກະສານຊ້ອນທ້າຍ 2 : ແບບພິມບັນທຶກຄະດີຄວາມຮຸນແຮງ 63
ເອກະສານຊ້ອນທ້າຍ 3 : ແບບພິມຍິນຍອມແລກປ່ຽນຂໍ້ມູນ 74

# ຄຳນຳ



## ທ່ານ ດຣ ນາງ ອິນລາວັນ ແກ້ວບຸນພັນ,

**ຮອງປະທານ ຜູ້ປະຈຳການ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າ ແມ່ຍິງ, ແມ່ ແລະ ເດັກ**

ໃນນາມຂອງຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ (ຄຊກມດ), ຂ້າພະເຈົ້າມີຄວາມພາກພູມໃຈຫຼາຍທີ່ໄດ້ມີການສ້າງມາດຕະຖານການດຳເນີນການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ ທີ່ຖືກຄວາມຮຸນແຮງຢູ່ ສປປ ລາວ ຖືເປັນອີກບາດກ້າວໜຶ່ງທີ່ສຳຄັນຂອງ ສປປ ລາວ, ຮັບປະກັນໃຫ້ການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ, ຊ່ວຍເຫຼືອຜູ້ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍ ໃນ ສປປ ລາວ ໄດ້ເຂົ້າເຖິງການຊ່ວຍເຫຼືອດ້ານຂະບວນການຍຸຕິທຳຢ່າງເປັນຮູບປະທຳ.

ຄຊກມດ ໄດ້ເຮັດວຽກຮ່ວມກັບ UNDP ແລະ ໄດ້ປຶກສາຫາລືຢ່າງໃກ້ຊິດກັບບັນດາຂະແໜງການທີ່ກ່ຽວຂ້ອງໃນການຮ່າງເນື້ອໃນມາດຕະຖານດັ່ງກ່າວ ເພື່ອຜູ້ໃຫ້ບໍລິການຊ່ວຍເຫຼືອ ທີ່ນຳໃຊ້ປຶ້ມເຫຼັ້ມນີ້ ມີຄວາມເຂົ້າໃຈສາມາດດຳເນີນການຊ່ວຍເຫຼືອໄປໃນທາງທິດດຽວກັນ. ສິ່ງສຳຄັນທີ່ສຸດກໍແມ່ນເຮັດໃຫ້ແມ່ຍິງ ແລະ ເດັກ ທີ່ຖືກຄວາມຮຸນແຮງໄດ້ເຂົ້າເຖິງການຊ່ວຍເຫຼືອທາງດ້ານຂະບວນຍຸຕິທຳໄດ້ຢ່າງມີຄວາມໝັ້ນໃຈ ແລະ ຮູ້ສຶກປອດໄພຕໍ່ການບໍລິການ ທີ່ເຂົາເຈົ້າຕ້ອງການ.

ມາດຕະຖານດຳເນີນການຊ່ວຍເຫຼືອດ້ານຂະບວນການຍຸຕິທຳສຳລັບແມ່ຍິງ ແລະ ເດັກ ທີ່ຖືກຄວາມຮຸນແຮງຢູ່ ສປປ ລາວ ໄດ້ນຳໃຊ້ມາດຕະຖານສາກົນ ແລະ ໄດ້ປັບໃຫ້ແທດເໝາະກັບສະພາບຕົວຈິງຂອງ ສັງຄົມລາວ, ສອດຄ່ອງກັບ ກົດໝາຍ ແລະ ນິຕິກຳຂອງ ສປປ ລາວ. ການສ້າງມາດຕະຖານດຳເນີນການຊ່ວຍເຫຼືອດ້ານຂະບວນການຍຸຕິທຳສຳລັບແມ່ຍິງ ແລະ ເດັກ ທີ່ຖືກຄວາມຮຸນແຮງ ຢູ່ ສປປ ລາວ ແມ່ນຮຽກຮ້ອງໃຫ້ທຸກຂະແໜງການທີ່ມີການບໍລິການໂດຍສະເພາະ 04 ພາກສ່ວນຫຼັກຄື: ຍຸຕິທຳ, ປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນຕ້ອງໄດ້ມີການປະສານງານກັນ ແລະ ສົມທົບກັບພາກສ່ວນອື່ນ ພ້ອມທັງມີຄວາມຮັບຜິດຊອບໃນການຊ່ວຍເຫຼືອດ້ານການເຂົ້າເຖິງຂະບວນການຍຸຕິທຳຢ່າງຮອບດ້ານ.

ຂ້າພະເຈົ້າຫວັງວ່າມາດຕະຖານດຳເນີນງານສະບັບນີ້ ຈະເປັນຄູ່ມືພື້ນຖານສຳຄັນ ໃນການຝຶກອົບຮົມ ແລະ ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດຕົວຈິງ ຂອງ ຂະແໜງການຍຸຕິທຳ, ປກສ, ອົງການໄອຍະການ ແລະ ສານປະຊາຊົນໃນຂັ້ນສູນກາງ, ບັນດາແຂວງເປົ້າໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ. ມາດຕະຖານດຳເນີນການຊ່ວຍເຫຼືອສະບັບນີ້ແມ່ນຈະຖືກນຳໄປຈັດຕັ້ງປະຕິບັດແຕ່ລະໄລຍະ, ມີການຕິດຕາມ, ສະຫຼຸບ, ຖອດຖອນບົດຮຽນ ແລະ ປັບປຸງຕໍ່ໜ້າ.

ຂໍຂອບໃຈມາຍັງອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ໂຄງການຄັນຮົ່ມ ທີ່ໄດ້ໃຫ້ການຮ່ວມມື ແລະ ສະໜັບສະໜູນເປັນຢ່າງດີ, ຂ້າພະເຈົ້າຈະສືບຕໍ່ຕິດຕາມ ຊຸກຍູ້ ການປະຕິບັດວຽກງານຕົວຈິງຮ່ວມກັບພາກສ່ວນກ່ຽວຂ້ອງຢ່າງຕັ້ງໜ້າ ເພື່ອສາມາດຊ່ວຍເຫຼືອຜູ້ຖືກເຄາະຮ້າຍໄດ້ດີທີ່ສຸດ.

**ຮອງປະທານ ຜູ້ປະຈຳການ**

ປະທານ

ດຣ.ນ. ອິນລາວັນ ແກ້ວບຸນພັນ

# ຄຳນຳ



## ທ່ານ ບຸນທາ ຊີງເຢີທ່າວ

**ຮອງລັດຖະມົນຕີ ກະຊວງຍຸຕິທຳ, ຮອງປະທານ ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າແມ່ຍິງ,ແມ່ ແລະ ເດັກ**

ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍມາຍັງຄະນະຊີ້ນຳ ແລະ ຄະນະວິຊາການໃນການຮ່າງມາດຕະຖານການດຳເນີນງານການຊ່ວຍເຫຼືອດ້ານຂະບວນການຍຸຕິທຳສຳລັບແມ່ຍິງ ແລະ ເດັກ ທີຖືກເຄາະຮ້າຍຈາກຄວາມຮຸນແຮງຢູ່ ສປປ ລາວ ທີ່ໄດ້ມີຄວາມພະຍາຍາມໃນການຮ່າງມາດຕະຖານສະບັບນີ້ຂຶ້ນມາ ເພື່ອນຳໃຊ້ເຂົ້າການຊ່ວຍເຫຼືອທາງດ້ານຍຸຕິທຳສຳລັບແມ່ຍິງແລະເດັກທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ. ມາດຕະຖານການດຳເນີນງານການຊ່ວຍເຫຼືອດ້ານຂະບວນຍຸຕິທຳສະບັບນີ້ ເປັນການຜັນຂະຫຍາຍບັນດາສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ ກໍຄືບັນດາກົດໝາຍ ແລະ ລະບຽບການຕ່າງໆ ເວົ້າສະເພາະແມ່ນຜັນຂະຫຍາຍມາດຕາ 38 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແນ່ໃສ່ຮັບປະກັນການບໍລິການ ການຊ່ວຍເຫຼືອແມ່ຍິງ ແລະ ເດັກທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງໄດ້ເຂົ້າເຖິງຂະບວນການຍຸຕິທຳຢ່າງທັນການ. ຕະຫຼອດໄລຍະການຄົ້ນຄວ້າ ແລະ ຮ່າງມາດຕະຖານດັ່ງກ່າວ, ເຖິງວ່າ ຂ້າພະເຈົ້າ ບໍ່ໄດ້ເຂົ້າຮ່ວມໂດຍກົງ ແຕ່ກໍໄດ້ຕິດຕາມການຮ່າງມາດຕະຖານດັ່ງກ່າວເປັນແຕ່ລະໄລຍະ ທີ່ສຳຄັນແມ່ນໄດ້ຊີ້ນຳທີມງານວິຊາການຂອງກະຊວງຍຸຕິທຳ ໃນການປະສານສົມທົບ ແລະ ຮ່ວມມືກັບຫ້ອງການ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ (ຄຊກມດ), ອົງການ UNDP ແລະ KOICA ເພື່ອກຳນົດກອບວຽກ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ ໂດຍສະເພາະແມ່ນພາກສ່ວນທີ່ຮັບຜິດຊອບກ່ຽວກັບການໃຫ້ບໍລິການຊ່ວຍເຫຼືອແມ່ຍິງ ແລະ ເດັກທີ່ຖືກຄວາມຮຸນແຮງ ເພື່ອຮັບປະກັນໃຫ້ຜູ້ຖືກຄວາມຮຸນແຮງສາມາດເຂົ້າມາຮັບການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ດ້ວຍຄວາມໝັ້ນໃຈ.

ຂ້າພະເຈົ້າເຊື່ອໝັ້ນວ່າ ມາດຕະຖານການດຳເນີນງານສະບັບນີ້ ຈະມີປະໂຫຍດໃຫ້ແກ່ຜູ້ທີ່ໃຫ້ບໍລິການທາງດ້ານກົດໝາຍ, ການສືບສວນ-ສອບສວນ ແລະ ຂະບວນການພິຈາລະນາຄະດີ ແລະ ພະນັກງານຍຸຕິທຳ, ເຈົ້າໜ້າທີ່ຕຳຫຼວດ, ໄອຍະການ ແລະ ຄະນະສານ ໃນບັນດາແຂວງເປົ້າໝາຍ ກໍຄືບັນດາແຂວງຕ່າງໆໃນຂອບເຂດທົ່ວປະເທດ ເພື່ອນຳໃຊ້ ແລະ ຈະເປັນຜົນປະໂຫຍດໃຫ້ກັບຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ ໄດ້ເຂົ້າເຖິງຂອດການບໍລິການຕ່າງໆທາງດ້ານກົດໝາຍ ທີ່ແທດເໝາະກັບຄວາມຕ້ອງການຂອງເຂົາເຈົ້າ.

ຂໍສະແດງຄວາມຮູ້ບຸນຄູນ ແລະ ຂອບໃຈຢ່າງສູງຕໍ່ UNDP ແລະ KOICA ທີ່ໄດ້ໃຫ້ການສະໜັບສະໜູນທາງດ້ານທຶນຮອນ, ເຕັກນິກວິຊາການ ເຮັດໃຫ້ມາດຕະຖານການດຳເນີນດ້ານຂະບວນການຍຸຕິທຳສຳລັບແມ່ຍິງແມ່ ແລະ ເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງຢູ່ ສປປ ລາວ ໄດ້ຮັບຜົນສຳເລັດຕາມແຜນການທີ່ວາງໄວ້. ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການສືບຕໍ່ຊ່ວຍເຫຼືອການຈັດຕັ້ງປະຕິບັດຕົວຈິງໃນຕໍ່ໜ້າ, ຂ້າພະເຈົ້າ ໃນນາມຂອງຮອງປະທານ ຄຊກມດ ທີ່ຊີ້ນຳວຽກຂົງເຂດຍຸຕິທຳ ກໍຈະສືບຕໍ່ຊີ້ນຳ ແລະ ຕິດຕາມດ້ານສ້າງຄວາມສາມາດ ແລະ ການປະຕິບັດຕົວຈິງ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ຮອງປະທານ ຄຊກມດ**

**ຜູ້ຊີ້ນຳວຽກງານຍຸຕິທຳ**

ບຸນທາ ຊີງເຢີທ່າວ

# ຄຳນຳ



## ທ່ານ ນາງ ມາຕິນ ເທີເຣີ

**ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ**

ຄວາມຮຸນແຮງຕໍ່ແມ່ຍິງ ເນື່ອງຈາກເຫດຜົນຄວາມແຕກຕ່າງທາງເພດ ຍັງເປັນບັນຫາກົດໜ່ວງສັງຄົມໃນທົ່ວໂລກ ແລະ ຄວາມຮຸນແຮງຕໍ່ແມ່ຍິງໄດ້ເປັນສິ່ງທ້າທາຍບັ່ນທອນຫຼັກການຄວາມສະເໝີພາບຍິງ-ຊາຍ, ກຽດສັກສີ ແລະ ຄວາມຍຸຕິທຳ ທີ່ພວກເຮົາພະຍາຍາມຍຶດໝັ້ນຮັກສາເອົາໄວ້. ເຖິງແມ່ນວ່າຫລາຍກວ່າ 1 ໃນ 3 ຂອງແມ່ຍິງໃນ ສປປ ລາວ ທີ່ມີປະສົບການຖືກຄວາມຮຸນແຮງປະເພດໃດໜຶ່ງໃນຊ່ວງຊີວິດຂອງເຂົາເຈົ້າ ແຕ່ມີແມ່ຍິງຈຳນວນບໍ່ເຖິງ 2% ຂອງຜູ້ຖືກຄວາມຮຸນແຮງ ທີ່ເຂົ້າແຈ້ງຄວາມກັບເຈົ້າໜ້າທີ່ທີ່ມີສິດອຳນາດທາງກົດໝາຍ. ນີ້ເປັນການສະແດງໃຫ້ເຫັນວ່າ ການທີ່ແມ່ຍິງບໍ່ມັກໄປຂໍຄວາມຊ່ວຍເຫລືອໃຫ້ແກ່ຕົນເອງ ນັ້ນມັນບໍ່ພຽງແຕ່ຍ້ອນມາດຖານທາງສັງຄົມ ແລະ ວັດທະນະທຳເທົ່ານັ້ນ ແຕ່ມັນເປັນຍ້ອນຄວາມບໍ່ເຊື່ອໝັ້ນຕໍ່ກັບຂະບວນການຍຸຕິທຳອີກດ້ວຍ. ຂະບວນການທາງກົດໝາຍ ມັກຈະເປັນທາງເລືອກສຸດທ້າຍສຳລັບແມ່ຍິງທີ່ປະສົບກັບຄວາມຮຸນແຮງ. ເຊິ່ງພວກເຂົາອາດຈະໃຊ້ເປັນທາງເລືອກສຸດທ້າຍເພື່ອພິຈາລະນາ ກໍຕໍ່ເມື່ອຫຼັງຈາກທີ່ແມ່ຍິງທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງໄດ້ລອງທຸກໆທາງເລືອກອື່ນມາກ່ອນແລ້ວ ແລະ ຈະຕ້ອງໄດ້ໃຊ້ຄວາມກ້າຫານຢ່າງສູງ ເພື່ອຕັດສິນໃຈເລືອກເຂົ້າສູ່ຂະບວນການທາງກົດໝາຍ. ສິ່ງດັ່ງກ່າວມັນບໍ່ພຽງແຕ່ເຮັດໃຫ້ແມ່ຍິງຕ້ອງຖືກຊ້ຳເຕີມຕໍ່ກັບການທີ່ພວກເຂົາໄດ້ຖືກຄວາມຮຸນແຮງທີ່ຜ່ານມາ ແຕ່ພວກເຂົາທັງຍັງຕ້ອງໄດ້ເຂົ້າສູ່ຂະບວນການຍຸຕິທຳທີ່ສະຫລັບຊ້ຳຊ້ອນ ຕື່ມອີກ.

ຂະແໜງຍຸຕິທຳ ມີບົດບາດທີ່ສຳຄັນທີ່ສຸດໃນການຮັບປະກັນວ່າ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ ຈະໄດ້ຮັບຄວາມຍຸຕິທຳເປັນຢ່າງດີ, ບໍ່ວ່າຈະດ້ວຍການເຮັດໃຫ້ຜູ້ກະທຳຜິດຮັບຜິດຊອບຕໍ່ການກະທຳຂອງພວກເຂົາ, ຜູ້ຖືກເຄາະຮ້າຍໄດ້ຮັບການຊົດເຊີຍຢ່າງຍຸຕິທຳແລະສຳຄັນທີ່ສຸດແມ່ນການສ້າງໂອກາດໃຫ້ແກ່ຜູ້ຖືກເຄາະຮ້າຍໄດ້ຖືກຮັບຟັງ. ການປັບປຸງຂະບວນເຂົ້າເຖິງລະບົບຍຸຕິທຳ ເຊິ່ງລວມໄປເຖິງການມີກົນໄກທີ່ຊັດເຈນ ແລະ ສອດຄ່ອງ ເປັນການສະແດງໃຫ້ເຫັນວ່າ ຄວາມຮຸນແຮງເປັນສິ່ງທີ່ຍອມຮັບບໍ່ໄດ້ໃນສັງຄົມ, ເຊິ່ງເຮັດໃຫ້ພວກເຮົາຕ້ອງໄດ້ເອົາໃຈໃສ່ປ້ອງກັນບໍ່ມີໃຫ້ຄວາມຮຸນແຮງດ້ວຍເຫດຜົນຄວາມແຕກຕ່າງທາງເພດ ທີ່ເກີດຂຶ້ນໃນສະຖານທີ່ທຳອິດ.

ມາດຕະຖານການດຳເນີນການຊ່ວຍເຫຼືອ ດ້ານຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງຢູ່ ສປປ ລາວ ສະບັບນີ້ ເປັນການສະແດງໃຫ້ເຫັນເຖິງຄວາມພະຍາຍາມໃນການຮ່ວມມືທາງດ້ານຄວາມຮູ້ ແລະ ປະສົບການຂອງຊ່ຽວຊານ ແລະ ຫຼາຍພາກສ່ວນໃນຂະແໜງຍຸຕິທຳ. ມາດຕະຖານການດຳເນີນການດັ່ງກ່າວ ເປັນການສ້າງຂັ້ນຕອນທີ່ຈະແຈ້ງ ແລະ ຊັດເຈນຕໍ່ກັບການໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ.ອົງການສະຫະປະຊາຊາດເພື່ອການພັດທະນາ(UNDP) ມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ເປັນສ່ວນໜຶ່ງໃນຂະບວນການປຶກສາຫາລື ກັບບັນດາພາກສ່ວນຂະແໜງຍຸຕິທຳ ເຊິ່ງລວມມີ ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດໂດຍພາຍໃຕ້ການຊີ້ນຳພາຂອງຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ(ຄຊກມດ) ແລະ ສູນກາງສະຫະພັນແມ່ຍິງລາວ (ສສຍລ) ແລະ ມາດຕະຖານການດຳເນີນການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ຈະກາຍເປັນຄູ່ມືທີ່ ຄົບຖ້ວນໃນການອະທິບາຍເຖິງແນວທາງວິທີການປະສານງານ ເພື່ອປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ. ເຊິ່ງມາດຕະຖານດັ່ງກ່າວໄດ້ມີການແນະນຳວິທີການ ແລະ ຂະບວນການດຳເນີນງານທີ່ຊັດເຈນ ເພື່ອໃຫ້ຮັບປະກັນໄດ້ເຖິງການ

ຊ່ວຍເຫຼືອທີ່ມີຄຸນະພາບ ແລະ ຖືຫຼັກການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ. ມາດຕະຖານການດຳເນີນການຊ່ວຍເຫຼືອສະບັບນີ້ ຈະປັບປຸງກົນໄກການປະສານງານ ແລະ ກົນໄກການຊ່ວຍເຫຼືອ ນັບແຕ່ການບໍລິການຊ່ວຍເຫຼືອຢູ່ຂັ້ນທ້ອງຖິ່ນຈົນເຖິງຂັ້ນສູນກາງ. ນີ້ກໍເພື່ອເປັນການຮັບປະກັນວ່າ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຈະໄດ້ຮັບການຊ່ວຍເຫຼືອ, ການປົກປ້ອງ ແລະ ເຂົ້າເຖິງຄວາມຍຸຕິທຳດັ່ງທີ່ພວກເຂົາຄວນຈະໄດ້ຮັບ.

ຂ້າພະເຈົ້າຊາບຊຶ້ງເປັນຢ່າງຍິ່ງຕໍ່ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ, ສະຫະພັນແມ່ຍິງລາວ ແລະ ບັນດາພາກສ່ວນໃນຂະແໜງຍຸຕິທຳ ຕໍ່ກັບພັນທະ ແລະ ການຮ່ວມມືໃນການພັດທະນາ ມາດຕະຖານການດຳເນີນງານສະບັບນີ້. ຂ້າພະເຈົ້າຂໍຂອບໃຈຕໍ່ບັນດາຄູ່ຮ່ວມພັດທະນາຂອງພວກເຮົາ ລວມເຖິງບັນດາອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາອື່ນໆ ແລະ ບັນດາອົງການຈັດຕັ້ງສະຫະປະຊາຊາດ ທີ່ໄດ້ປະກອບສ່ວນສຳຄັນໃນຂະບວນການຮ່າງເອກະສານສະບັບນີ້. ມາດຕະຖານດຳເນີນງານການຊ່ວຍທາງດ້ານຍຸຕິທຳສະບັບນີ້ ຈະບໍ່ສາມາດຜົນສຳເລັດໄດ້ຫາກປາສະຈາກການສະໜັບສະໜູນຈາກອົງການຮ່ວມມືສາກົນ ສ.ເກົາຫຼີ (KOICA) ຜ່ານໂຄງການ ຄັນຮົ່ມ.

ໂດຍສອດຄ່ອງກັບພັນທະຂອງລັດຖະບານ ສປປ ລາວ ໃນການສ້າງຄວາມເຂັ້ມແຂງໃນປົກຄອງດ້ວຍລັດແຫ່ງກົດໝາຍ, ອົງການ ສະຫະປະຊາຊາດ ເພື່ອການພັດທະນາ (UNDP) ຫວັງເປັນຢ່າງຍິ່ງວ່າ ຈະໄດ້ສືບຕໍ່ຜັນຂະຫຍາຍການຮ່ວມມືກັບບັນດາກະຊວງ/ອົງການຈັດຕັ້ງໃນຂະແໜງຍຸຕິທຳ ເພື່ອຮັບປະກັນວ່າ ມາດຕະຖານດຳເນີນງານສະບັບນີ້ ສາມາດປະກອບສ່ວນໃຫ້ການຊ່ວຍເຫຼືອທາງກົດໝາຍໃຫ້ສອດຄ່ອງ ແລະ ຍຸຕິທຳສູງສຸດແກ່ຜູ້ຖືກຄວາມຮຸນແຮງທຸກຄົນ.

ຜູ້ຕາງໜ້າອົງການ

UNITED NATIONS DEVELOPMENT PROGRAMME
VIENTIANE

# ພາກທີ I: ພາກສະເໜີ

## 1. ສະພາບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ

ຄວາມຮຸນແຮງທີ່ເກີດຂຶ້ນຕໍ່ແມ່ຍິງ ແລະ ເດັກ ບໍ່ວ່າຈະໃນລະດັບໂລກ ພາກພື້ນ ກໍຄືລະດັບປະເທດ ລ້ວນແຕ່ສິ່ງຜົນກະທົບຕໍ່ແມ່ຍິງ ແລະ ເດັກ , ເປັນການບັ່ນທອນ ສິດທິມະນຸດ ແລະ ສິດເສລີພາບຂັ້ນພື້ນຖານຂອງແມ່ຍິງ. ເປັນສິ່ງກີດຂວາງຄວາມກ້າວໜ້າຂອງແມ່ຍິງ, ທັງເປັນອຸປະສັກຕໍ່ການພັດທະນາ ແລະ ບັນລຸເປົ້າໝາຍຄວາມສະເໝີພາບຍິງ-ຊາຍ. ກຸ່ມທີ່ສ່ຽງກວ່າໝູ່ທີ່ມັກຈະຖືກຄວາມຮຸນແຮງແມ່ນແມ່ຍິງທຸກຍາກ, ແມ່ຍິງຊົນນະບົດ, ແມ່ຍິງຊົນເຜົ່າ, ແມ່ຍິງຜູ້ລີ້ໄພ, ແຮງງານເຄື່ອນຍ້າຍເພດຍິງ, ແມ່ຍິງທີ່ຢູ່ໃນສະຖານທີ່ກັກຂັງ, ແມ່ຍິງພິການ, ແມ່ຍິງທີ່ມີອາຍຸສູງ ຫຼື ຜູ້ທີ່ອົບພະຍົບ.

ການເຂົ້າເຖິງຂະບວນການຍຸຕິທຳຂອງແມ່ຍິງທີ່ຖືກຄວາມຮຸນແຮງຍັງມີລັກສະນະສັບຊ້ອນ, ແມ່ຍິງຍັງປະເຊີນກັບຄວາມຫຍຸ້ງຍາກ ໂດຍສະເພາະແມ່ນຍັງມີການຈຳແນກ ແລະ ການຕອກຢ້ຳຂອງສັງຄົມ, ການດູຖູກ, ການຂາດຄວາມຮູ້ທາງດ້ານສິດທິຂອງແມ່ຍິງເອງ ລວມເຖິງຄວາມດ້ອຍໂອກາດທາງດ້ານການສຶກສາ, ເສດຖະກິດ ແລະ ອື່ນໆ.

ອີງຕາມຜົນການສຳຫຼວດຕົວຢ່າງກ່ຽວກັບຄວາມຕ້ອງການການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການເຂົ້າເຖິງຂະບວນການຍຸຕິທຳ ໂດຍສຳຫຼວດຄວາມຄິດເຫັນຂອງປະຊາກອນທົ່ວໄປ ເຊິ່ງດຳເນີນໃນ 45 ປະເທດ ໃນລະຫວ່າງເດືອນ ກໍລະກົດ ຫາ ເດືອນ ທັນວາ 2017 ເຫັນວ່າ 53% ຂອງຜູ້ຍິງລາຍງານວ່າປະສົບບັນຫາທາງດ້ານກົດໝາຍ, ມີພຽງແຕ່ 13% ເທົ່ານັ້ນທີ່ຫັນໄປຂໍຄວາມຊ່ວຍເຫຼືອຈາກເຈົ້າໜ້າທີ່ ຫຼື ບຸກຄົນທີສາມ ເພື່ອຊ່ວຍແກ້ໄຂບັນຫາ. ພົບວ່າຜູ້ໃຫ້ບໍລິການຊ່ວຍເຫຼືອສ່ວນໃຫຍ່ ແມ່ນບໍ່ທັນມີປະສິບການສູງ ນອກນັ້ນໃນຂະບວນການດຳເນີນຄະດີຕ່າງໆແມ່ນມີຄ່າໃຊ້ຈ່າຍຫຼາຍສົມຄວນ. ( ບົດຄົ້ນຄວ້າ World justice project ).

ຜົນການສຶກສາລະດັບຊາດກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ໃນຫົວຂໍ້ "ສຸຂະພາບ ແລະ ປະສົບການຊີວິດຂອງແມ່ຍິງ" ໃນ ສປປ ລາວ, 2014 ພົບວ່າ 11,6% ຂອງແມ່ຍິງເຄີຍຖືກຄວາມຮຸນແຮງທາງດ້ານຮ່າງກາຍຈາກຜົວ ຫຼື ຄູ່ນອນ, 26.2% ຖືກຄວາມຮຸນແຮງທາງຈິດໃຈ, 7,2% ຖືກຄວາມຮຸນແຮງທາງເພດ, (12,9% ແມ່ນໄວໜຸ່ມອາຍຸລະຫວ່າງ 15-19 ປີ). 15,3% ຂອງແມ່ຍິງແມ່ນຖືກຄວາມຮຸນແຮງທາງຮ່າງກາຍ ແລະ ທາງເພດ, ໃນນັ້ນ 4,2% ແມ່ນຖືກຄວາມຮຸນແຮງ ທາງຮ່າງກາຍ ແລະ 5,3% ຂອງເດັກຍິງທີ່ມີອາຍຸຕັ້ງແຕ່ 15 ປີຖືກຄວາມຮຸນແຮງທາງເພດໂດຍບຸກຄົນອື່ນ. ແຕ່ການເຂົ້າເຖິງການບໍລິການຊ່ວຍເຫຼືອຍັງຈຳກັດ ມີພຽງແຕ່ 2% ເທົ່ານັ້ນ, ຜູ້ຖືກເຄາະຮ້າຍ ທີ່ເປັນເພດຍິງ ມີພຽງ 1 ໃນ 5 ຜູ້ຕອບຄຳຖາມ ໄດ້ລາຍງານກັບເຈົ້າໜ້າທີ່, ແລະ ມີພຽງ 3 ສ່ວນຮ້ອຍ ແລະ 4 ສ່ວນຮ້ອຍຕາມລຳດັບທີ່ໄດ້ເຂົ້າໄປຮັບການບໍລິການດ້ານສຸຂະພາບ ແລະ ໄປແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດ. ຜູ້ຖືກເຄາະຮ້າຍສ່ວນໃຫຍ່ (43,2 ສ່ວນຮ້ອຍ) ຢ້ານທີ່ຈະບອກວ່າຕົນເອງຖືກຂົ່ມເຫັງ, ເຂົາເຈົ້າມັກຈະບໍ່ລາຍງານເຫດການທີ່ຮຸນແຮງຕໍ່ໃຜ ຫຼື ອົງການຈັດຕັ້ງໃດໆ ຍ້ອນວ່າເຂົາເຈົ້າອາຍ ຫຼື ຢ້ານກົວທີ່ເຂົາອາດຈະຖືກສັງຄົມປະນາມ[1]

ບົດສຶກສາຄົ້ນຄ້ວາ ຂອງ ສະມາຄົມພັດທະນາບົດບາດຍິງ-ຊາຍ ຢູ່ແຂວງ ອຸດົມໄຊ ແລະ ແຂວງ ວຽງຈັນ ຈາກຜູ້ໃຫ້ສຳພາດຈຳນວນ 563 ຄົນ[2] ໄດ້ສະແດງໃຫ້ເຫັນວ່າ ແມ່ຍິງຍັງພົບພໍ້ກັບອຸປະສັກຫລາຍດ້ານໃນການເຂົ້າເຖິງຄວາມຍຸຕິທຳ ເປັນຕົ້ນຄວາມຮັບຮູ້, ເຂົ້າໃຈຂອງແມ່ຍິງຕໍ່ກົດໝາຍຍັງຕໍ່າ ແລະ ຮີດຄອງປະເພນີ, ຄວາມເຊື່ອຍັງມີຜົນຕໍ່ກັບບົດບາດຍິງ-ຊາຍ ໃນຊຸມຊົນ ລວມທັງຄ່າໃຊ້ຈ່າຍໃນການດຳເນີນການດ້ານຂະບວນການຍຸຕິທຳ ທັງໃນຮູບແບບທີ່ເປັນທາງການ ແລະ ບໍ່ເປັນທາງການ.

---

[1] ແຜນດຳເນີນງານແຫ່ງຊາດ ເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ 5 ປີ ຄັ້ງທີ II (2021-2025).

[2] ສະມາຄົມບົດບາດຍິງ-ຊາຍ,(2022),ການສຶກສາຄົ້ນຄວ້າບັນດາອຸປະສັກແລະຂໍ້ຈຳກັດຂອງແມ່ຍິງຊົນເຜົ່າໃນການເຂົ້າເຖິງລະບົບຍຸຕິທຳໃນກໍລະນີຖືກຄວາມຮຸນແຮງ ໂດຍສະເພາະແມ່ຍິງຊົນເຜົ່າໃນແຂວງ ວຽງຈັນ ແລະ ແຂວງ ອຸດົມໄຊ.

ລັດຖະບານ ແຫ່ງ ສປປ ລາວ ເຫັນໄດ້ເຖິງຄວາມສຳຄັນຂອງການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍໄດ້ອອກກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ປີ 2004, ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບເລກທີ 56/ສພຊ ປີ 2014 ແລະ ແຜນດຳເນີນງານແຫ່ງຊາດ ເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ 5 ປີ ຄັ້ງທີ I (2014-2020) ຄັ້ງທີ II (2021-2025) ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ. ແຕ່ເຫັນວ່າການແກ້ໄຂ ແລະ ຊ່ວຍເຫຼືອແມ່ຍິງ ແລະ ເດັກທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ ໃນການເຂົ້າເຖິງຂະບວນຍຸຕິທຳ ບໍ່ທັນເປັນເອກະພາບກັນ ໂດຍສະເພາະແມ່ນ ຂອດການ ປະສານງານ ໃນການຊ່ວຍເຫຼືອ ແລະ ສິ່ງຕໍ່. ດັ່ງນັ້ນ ການສ້າງມາດຕະຖານດຳເນີນການຊ່ວຍເຫຼືອທາງດ້ານຂະບວນຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ ຢູ່ ສປປ ລາວ ຈຶ່ງມີຄວາມຈຳເປັນ ແລະ ເພື່ອຮັບປະກັນໃຫ້ແມ່ຍິງ ແລະ ເດັກ ໄດ້ຮັບການຊ່ວຍເຫຼືອຢ່າງທັນການ ແລະ ເໝາະສົມ.

## 2. ນິຕິກຳສາກົນ, ນິຕິກຳພາກພື້ນອາຊຽນ ແລະ ນິຕິກຳພາຍໃນ ທີ່ກ່ຽວຂ້ອງກັບສິດທິຂອງແມ່ຍິງ

### 2.1. ນິຕິກຳສາກົນ

ຈາກສະພາບການຂອງໂລກທີ່ມີການໃຊ້ຄວາມຮຸນແຮງຢູ່ນັ້ນ ເຊິ່ງສ້າງຜົນກະທົບຕໍ່ແມ່ຍິງ ແລະ ເດັກ ວົງຄະນະຍາດສາກົນຈຶ່ງຮຽກຮ້ອງໃຫ້ມີການນຳເອົາປະເດັນການລຶບລ້າງຄວາມຮຸນແຮງເຂົ້າໃນສົນທິສັນຍາ,ຖະແຫຼງການສາກົນ,ຄຳໝາຍໝັ້ນໂດຍສະເພາະແມ່ນສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ,ຖະແຫຼງການ ແລະ ແຜນປະຕິບັດງານປັກກິ່ງ, ສົນທິສັນຍາວ່າດ້ວຍສິດທິເດັກ ລວມທັງວາລະການພັດທະນາ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງ ເພື່ອສົ່ງເສີມ ແລະ ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ, ນິຕິກຳອື່ນໆທີ່ກ່ຽວຂ້ອງເປັນຕົ້ນ:

- ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ປີ 1979.
- ສົນທິສັນຍາວ່າດ້ວຍສິດທິເດັກ ປີ 1989
- ສົນທິສັນຍາວ່າດ້ວຍຄົນພິການ ປີ 2008
- ມະຕິຂອງສະພາຄວາມໝັ້ນຄົງ 1325, 1920, 1888 ກ່ຽວກັບແມ່ຍິງ, ສັນຕິພາບ ແລະ ຄວາມປອດໄພ.
- ຖະແຫຼງການ ແລະ ແຜນປະຕິບັດງານປັກກິ່ງ, ປີ 1995
- ຖະແຫຼງການວ່າດ້ວຍການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ, ປີ 1993
- ເປົ້າໝາຍການພັດທະນາແບບຍືນຍົງທີ່ 5 "ບັນລຸຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກຍິງທຸກຄົນ" ລວມມີເປົ້າໝາຍເພື່ອລຶບລ້າງທຸກຮູບແບບ ຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງໃນພາກລັດ ແລະ ເອກະຊົນ, ລວມທັງການຄ້າມະນຸດ ແລະ ການຂູດຮີດທາງເພດ ແລະ ປະເພດອື່ນໆ ປີ 2015.

### 2.2. ນິຕິກຳພາກພື້ນອາຊຽນ

ໂດຍຜັນຂະຫຍາຍຈາກກອບນິຕິກຳຂອງສາກົນ ໃນບັນດາປະເທດອາຊຽນໄດ້ເອົາໃຈໃສ່ໃນການປ້ອງກັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍໄດ້ມີການອອກຖະແຫຼງການ ແລະ ແຜນປະຕິບັດງານຮ່ວມກັນໃນຫຼາຍສະບັບ ເປັນຕົ້ນ:

- ຖະແຫຼງການກ່ຽວກັບການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງໃນອາຊຽນ ປີ 2004
- ຖະແຫຼງການກ່ຽວກັບການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ການລຶບລ້າງຄວາມຮຸນແຮງຕໍ່ເດັກນ້ອຍ ປີ 2013
- ແຜນປະຕິບັດງານພາກພື້ນອາຊຽນ ກ່ຽວກັບການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ (2016-2025)
- ຂໍ້ຕົກລົງຂອງອາຊຽນ ວ່າດ້ວຍການປົກປ້ອງ ແລະ ສົ່ງເສີມສິດທິຂອງແຮງງານເຄື່ອນຍ້າຍ ປີ 2017

### 2.3. ນິຕິກຳພາຍໃນ

ພັກ ແລະ ລັດຖະບານ ສປປ ລາວເຫັນໄດ້ເຖິງຄວາມສຳຄັນ ແລະ ເອົາໃຈໃສ່ໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ການສົ່ງເສີມ, ການພັດທະນາ, ການປົກປ້ອງ ແລະ ການມີສ່ວນຮ່ວມຂອງເດັກ ລວມທັງການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ. ໂດຍສະເພາະໄດ້ໃຫ້ບຸລິມະສິດການປ້ອງກັນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ເປັນບັນຫາສຳຄັນ, ໄດ້ຮັບເອົາ ແລະ ປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ. ການສະໜອງການບໍລິການ ແລະ ການຕອບໂຕ້ຕໍ່ຄວາມຮຸນແຮງຕໍ່ ແມ່ຍິງ ແລະ ເດັກ ໂດຍນຳໃຊ້:

- ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ (2019) ມາດຕາ 30 ສັງຄົມ, ຊຸມຊົນ ແລະ ຄອບຄົວ ຮ່ວມກັນຕ້ານ ແລະ ປ້ອງກັນບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ
- ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (2004)
- ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເລກທີ 56/ສພຊ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ 5 ປີ ຄັ້ງທີ II (2021-2025).
- ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ (ສະບັບເລກທີ 73/ສພຊ,ລົງວັນທີ 17 ທັນວາ 2015)
- ກົດໝາຍວ່າດ້ວຍຄົນພິການ (ສະບັບເລກທີ 57/ສພຊ,ລົງວັນທີ 10 ທັນວາ 2018)
- ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງ, ເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017)
- ປະມວນກົດໝາຍອາຍາ (ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017)
- ດຳລັດວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ (ສະບັບເລກທີ 77/ສພຊ, ລົງວັນທີ 28 ກຸມພາ 2018)
- ຍຸດທະສາດແຫ່ງຊາດກ່ຽວກັບການປົກປ້ອງທາງສັງຄົມ
- ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ປີ 2015
- ດຳລັດວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ເລກທີ 626/ລບ,ວັນທີ 22 ຕຸລາ 2021
- ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບປີ 2007
- ກົດໝາຍວ່າດ້ວຍການດຳເນີນຄະດີເດັກ ສະບັບປີ 2013

## 3. ຈຸດປະສົງ

ຈຸດປະສົງຂອງມາດຕະຖານການດຳເນີນການຊ່ວຍເຫຼືອດ້ານຂະບວນການຍຸຕິທຳສຳລັບແມ່ຍິງ ແລະ ເດັກທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງສະບັບນີ້ເພື່ອເປັນທິດທາງ ໃຫ້ພາກສ່ວນທີ່ໃຫ້ບໍລິການຊ່ວຍເຫຼືອຂະບວນການຍຸຕິທຳ ເຊັ່ນ: ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຂອງ ສປປ ລາວ ທີ່ເຮັດໜ້າທີ່ໃນການປົກປ້ອງ ແລະ ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສຳລັບການຊ່ວຍເຫຼືອທາງດ້ານກົດໝາຍ, ການສືບສວນ-ສອບສວນ ແລະ ການພິຈາລະນາຄະດີ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ.

ມາດຕະຖານສະບັບນີ້ ແມ່ນຈະໄດ້ນຳໃຊ້ຄູ່ກັບມາດຕະຖານດຳເນີນງານດ້ານສຸຂະພາບ, ມາດຕະການດຳເນີນງານດ້ານການປົກປ້ອງ ແລະ ການຊ່ວຍເຫຼືອດ້ານສັງຄົມ ແລະ ມາດຕະການດຳເນີນງານ, ການປະສານງານ ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ ແມ່ຍິງ ແລະ ເດັກຍິງ ທີ່ຖືກຄວາມຮຸນແຮງຢູ່ ສປປ ລາວ ເພື່ອຕອບສະໜອງການບໍລິການຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງໃຫ້ມີປະສິດທິພາບ. ມາດຕະຖານເຫຼົ່ານີ້ຈະເປັນເຄື່ອງມືພື້ນຖານສຳລັບຜູ້ໃຫ້ບໍລິການໃນການຈັດຕັ້ງປະຕິບັດວຽກງານ ແລະ ການຕິດຕາມກວດກາການເຂົ້າເຖິງ ແລະ ການບໍລິການທີ່ມີຄຸນະພາບ.

## 4. ກຸ່ມເປົ້າໝາຍທີ່ນຳໃຊ້ ແລະ ກຸ່ມທີ່ໄດ້ຮັບການບໍລິການຊ່ວຍເຫຼືອ

### 4.1. ກຸ່ມເປົ້າໝາຍທີ່ນຳໃຊ້

ມາດຕະຖານດຳເນີນງານສະບັບນີ້ແມ່ນຈະນຳໃຊ້ສຳລັບຜູ້ໃຫ້ບໍລິການພາຍໃນຂະບວນການຍຸຕິທຳທີ່ຮັບຜິດຊອບ ໃນການສະໜອງຄວາມປອດໄພ, ຄວາມຍຸຕິທຳ ແລະ ການບໍລິການດ້ານກົດໝາຍແກ່ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງເຊິ່ງ ລວມມີ ພາກສ່ວນຍຸຕິທຳ, ປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ສະຫະພັນແມ່ຍິງລາວ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ,ແມ່ ແລະເດັກ ແລະ ອຳນາດການປົກຄອງທ້ອງຖິ່ນຂັ້ນແຂວງ, ເມືອງ ແລະ ບ້ານ. (ຕົວຢ່າງເຊັ່ນ: ນາຍບ້ານ) ຕາມພາລະບົດບາດຂອງຕົນ.

ໜ່ວຍງານທີ່ເຮັດວຽກສະໜັບສະໜູນໃນຂະບວນການຍຸຕິທຳ ລວມທັງອົງການຈັດຕັ້ງ ທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມພັດທະນາອື່ນໆ ສາມາດນຳໃຊ້ມາດຕະຖານຂັ້ນຕອນການປະຕິບັດງານສະບັບນີ້.

### 4.2. ກຸ່ມທີ່ໄດ້ຮັບການບໍລິການຊ່ວຍເຫຼືອ

ມາດຕະຖານດຳເນີນງານດັ່ງກ່າວ ແມ່ນນຳໃຊ້ສຳລັບໃຫ້ການບໍລິການຊ່ວຍເຫຼືອກັບທຸກຄົນທີ່ເປັນແມ່ຍິງ ແລະ ເດັກທີ່ຖືກເຄາະຮ້າຍ ຈາກທຸກຮູບແບບຂອງຄວາມຮຸນແຮງ ລວມທັງກຸ່ມຄົນຜູ້ດ້ອຍໂອກາດ ເຊັ່ນ: ແມ່ຍິງທີ່ມີຄວາມພິການ, ແຮງງານເຄື່ອນຍ້າຍເພດຍິງ, ແມ່ຍິງຈາກກຸ່ມຊົນເຜົ່າ ແລະ ກຸ່ມຄົນທີ່ມີຄວາມແຕກຕ່າງທາງເພດ.

ມາດຕະຖານດຳເນີນງານນີ້ແມ່ນກວມລວມທັງໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ແລະ ນຳໃຊ້ເຂົ້າໃນທຸກປະເພດສະຖານະການ ລວມເຖິງ ສະຖານະການທີ່ເກີດມີໄພພິບັດທາງທຳມະຊາດ, ການແຜ່ລະບາດຂອງພະຍາດ, ແລະ ເຫດການສະພາວະສຸກເສີນຕ່າງໆຂອງມວນມະນຸດ.

# ພາກທີ II: ຄຳນິຍາມ ແລະ ອະທິບາຍຄຳສັບ

ບັນດານິຍາມຄຳສັບຕໍ່ໄປນີ້ແມ່ນນຳໃຊ້ສະເພາະໃນມາດຕະຖານດຳເນີນງານສະບັບນີ້

## 1. ຄຳນິຍາມ

**ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ** ແມ່ນພຶດຕິກຳ (ການກະທຳ, ການເມີນເສີຍ) ທີ່ເຮັດໃຫ້ເກີດ ຫຼື ຈະເຮັດໃຫ້ເກີດອັນຕະລາຍ, ຄວາມເສຍຫາຍຕໍ່ແມ່ຍິງ ແລະ ເດັກ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ.[3]

ໃນຄຳນິຍາມຂອງອົງການສະຫະປະຊາຊາດ ຍັງໄດ້ຂະຫຍາຍຄຳນິຍາມນີ້ຕື່ມອີກ ແລະ ລະບຸວ່າຄວາມຮຸນແຮງຕໍ່ແມ່ຍິງເປັນການກະທຳປະເພດໃດກໍ່ຕາມບົນພື້ນຖານຄຸນລັກສະນະທາງເພດທີ່ເກີດຂຶ້ນໃນທີ່ສາທາລະນະ ຫຼື ຊີວິດສ່ວນຕົວ.[4]

**ຄວາມຮຸນແຮງຕໍ່ເດັກ** ລວມມີທຸກຮູບແບບຂອງຄວາມຮຸນແຮງທາງຮ່າງກາຍ ຫຼື ຈິດໃຈ, ການບາດເຈັບ ແລະການທາລຸນ, ລະເລີຍຫຼືການປິ່ນປົວທີ່ລະເລີຍຕໍ່ເດັກ, ການຂົ່ມເຫັງຫຼືການຂູດຮີດ, ລວມທັງການລ່ວງລະເມີດທາງເພດເດັກ (ເພດຊາຍຫຼືເພດຍິງທີ່ມີອາຍຸຕໍ່າກວ່າ 18 ປີ)[5]. ມັນເປັນສິ່ງສຳຄັນທີ່ຈະຕ້ອງຈຳແນກລະຫວ່າງແມ່ຍິງແລະເດັກ ຍ້ອນວ່າເດັກ ແລະ ແມ່ຍິງມີຄວາມສາມາດໃນການຕັດສິນໃຈທີ່ແຕກຕ່າງກັນ.

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແມ່ນມີສອງຮູບແບບຄື:

- **ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍສະມາຊິກໃນຄອບຄົວ**[6]: ແມ່ນການກະທຳ, ການເມີນເສີຍ ຫຼື ລະເລີຍ ຂອງສະມາຊິກຜູ້ໃດໜຶ່ງໃນຄອບຄົວ ທີ່ກໍ່ໃຫ້ເກີດຄວາມອັນຕະລາຍ, ຄວາມເສັຍຫາຍ ຕໍ່ແມ່ຍິງ ແລະ ເດັກທີ່ເປັນສະມາຊິກໃນຄອບຄົວ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ ໂດຍບໍ່ຂຶ້ນກັບວ່າການໃຊ້ຄວາມຮຸນແຮງດັ່ງກ່າວ ຈະເກີດຂຶ້ນຢູ່ສະຖານທີ່ໃດຕາມ.
- **ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍບຸກຄົນອື່ນ**[7]: ແມ່ນ ການກະທຳ, ການເມີນເສີຍ ຫຼື ລະເລີຍ ຂອງບຸກຄົນ, ກຸ່ມຄົນອື່ນ ທີ່ບໍ່ແມ່ນສະມາຊິກໃນຄອບຄົວ ຂອງຕົນຕໍ່ແມ່ຍິງ ແລະ ເດັກ ລວມທັງການກະທຳຂອງເຈົ້າໜ້າທີ່, ພະນັກງານ ຊຶ່ງກໍ່ໃຫ້ເກີດຄວາມອັນຕະລາຍ, ຄວາມເສັຍຫາຍຕໍ່ແມ່ຍິງ ແລະ ເດັກ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ ຢູ່ສະຖານທີ່ຊຸມຊົນ, ສະຖານທີ່ສາທາລະນະ, ສະຖານທີ່ເຮັດວຽກ, ສະຖານການສຶກສາ, ສະຖານທີ່ລ້ຽງເດັກ ແລະ ສະຖານທີ່ອື່ນ.

ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກໃນ ສປປ ລາວ[8] ແມ່ນໄດ້ກຳນົດຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ມີ 4 ປະເພດຄື:

---

[3] ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ມາດຕາ 2

[4] ຖະແຫຼງການສະພາສະຫະປະຊາຊາດກ່ຽວກັບການລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, 20 ທັນວາ 1993

[5] ສົນທິສັນຍາສະຫະປະຊາຊາດກ່ຽວກັບສິດທິເດັກ ມາດຕາ 19

[6] ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ມາດຕາ 10

[7] ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ມາດຕາ 11

[8] ກົດໝາຍວ່າການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ມາດຕາ 13-16

- **ຄວາມຮຸນແຮງຕໍ່ຮ່າງກາຍ:** ແມ່ນການກະທຳຕໍ່ຮ່າງກາຍໂດຍເຈດຕະນາ ເປັນຕົ້ນ ການທາລຸນ, ການທໍລະມານ, ການຕົບຕີ, ການເຕະ, ການຊຸກ, ການຍູ້, ການໂຍນເດັກຖິ້ມ ຊຶ່ງພາໃຫ້ ບາດເຈັບ, ມີຮອຍຊໍ້າ ຫຼື ບາງກໍລະນີອາດຈະບໍ່ເຫັນຮ່ອງຮອຍຂອງການໃຊ້ຄວາມຮຸນແຮງ, ເປັນບ້າເສຍຈິດ, ເສຍອົງຄະ ຫຼື ເສຍຊີວິດ.

- **ຄວາມຮຸນແຮງຕໍ່ຈິດໃຈ:** ຄວາມຮຸນແຮງຕໍ່ຈິດໃຈ ແມ່ນ ການກະທຳ, ການເມີນເສີຍ ຫຼື ລະເລີຍ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ຈິດໃຈຂອງແມ່ ຍິງ ແລະ ເດັກ ເປັນຕົ້ນການມີເມຍຫຼາຍຄົນ, ການໝິ່ນປະໝາດ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການປະຈານ, ການບໍ່ໃຫ້ຄວາມສຳຄັນ, ການທຳມິດສະຈານ, ການປ່ອຍປະ, ການລຳອຽງ, ການຈຳແນກ, ການແຍກຈາກໝູ່ເພື່ອນ ຫຼື ຄອບຄົວ, ການບໍ່ໃຫ້ກຽດ, ບໍ່ນັບຖື, ການເຍາະເຍີ້ຍສຽດສີ, ການກີດກັ້ນ, ການບັງຄັບ, ຫຼື ການຂົ່ມຂູ່, ຊຶ່ງເຮັດໃຫ້ເສື່ອມເສຍຊື່ສຽງ, ກຽດສັກສີ, ອັບອາຍ, ຂາດຄວາມເຊື່ອໝັ້ນ, ເສຍສຸຂະພາບຈິດ, ຊຶມເສົ້າ ຫຼື ຂ້າຕົວຕາຍ.

- **ຄວາມຮຸນແຮງທາງເພດ:** ແມ່ນ ການກະທຳ ຫຼື ຄວາມພະຍາຍາມກະທຳ ທີ່ກໍ່ຄວາມເສັຍຫາຍຕໍ່ສິດທິທາງເພດຂອງແມ່ຍິງ ແລະ ເດັກ ເປັນຕົ້ນ ການຂົ່ມຂືນທຳຊຳເລົາ, ການບັງຄັບຮ່ວມເພດ, ການທຳລາມົກ, ການທຳອານາຈານ, ການກະທຳທີ່ຫຍາບຊ້າທາງເພດ, ການເວົ້າຈາ ຫຼື ການສຳຜັດ ໃນລັກສະນະທາງເພດ ຊຶ່ງບໍ່ເປັນທີ່ຕ້ອງການຂອງຜູ່ຮັບຟັງ ຫຼື ຜູ່ຖືກສຳຜັດ ຫຼື ການສັ່ງຜູ່ຍິງ ຫຼື ເດັກ ໃຫ້ບຸກຄົນອື່ນ ເພື່ອເປັນເປົ້າໝາຍທາງເພດ.

ໃນນິຍາມຂອງສາກົນ ຄວາມຮຸນແຮງທາງເພດ ຍັງລວມເຖິງການເຮັດໃຫ້ແມ່ຍິງມີສ່ວນຮ່ວມໃນການກະທຳທາງເພດໂດຍປາສະຈາກການຍິນຍອມຂອງລາວ ແລະ ພະຍາຍາມ ຫຼື ສຳເລັດການຮ່ວມເພດກັບແມ່ຍິງທີ່ເຈັບປ່ວຍ, ພິການ, ຕົກຢູ່ໃນຄວາມກົດດັນ ຫຼື ເມົາເຫຼົ້າ ຫຼື ໃຊ້ຢາເສບຕິດອື່ນໆ. (ການຍິນຍອມໝາຍເຖິງການຕົກລົງທີ່ຈະມີເພດສຳພັນກັບໃຜຜູ້ໜຶ່ງ ແລະ ໃຫ້ພວກເຂົາຮູ້ວ່າຕ້ອງການມີເພດສຳພັນ. ການມີເພດສຳພັນໂດຍບໍ່ໄດ້ຍິນຍອມຖືວ່າເປັນການຂົ່ມຂືນ ຫຼື ການລ່ວງລະເມີດທາງເພດ)[9]

- **ຄວາມຮຸນແຮງຕໍ່ຊັບສິນ ຫຼື ເສດຖະກິດ:** ແມ່ນ ການກະທຳ, ການເມີນເສີຍ ຫຼື ລະເລີຍທີ່ກໍ່ຄວາມເສັຍຫາຍຕໍ່ຊັບສິນຂອງຄອບຄົວ, ຊັບສິນທີ່ເປັນກຳມະສິດຮ່ວມກັນ, ຊັບສິນສ່ວນຕົວ ຂອງແມ່ຍິງ ແລະ ເດັກ ຫຼື ເຮັດໃຫ້ສູນເສັຍໂອກາດໃນການສ້າງລາຍໄດ້ ຫຼື ຜົນປະໂຫຍດອື່ນທາງເສດຖະກິດ ເປັນຕົ້ນ ການທຳລາຍ, ຈູດເຜົາ, ມ້າງເຮືອນຊານ, ວັດຖຸສິ່ງຂອງ, ການຊຸກເຊື່ອງ, ການຄອບຄອງ, ໂອນ, ນຳໃຊ້ ຫຼື ແບ່ງປັນຊັບສິນ ໂດຍບໍ່ຖືກຕ້ອງ, ການໃຫ້ຄ່າແຮງງານ ຫຼື ປະຕິບັດນະໂຍບາຍ ບໍ່ເທົ່າທຽມກັບເພດຊາຍ, ການກີດກັ້ນບໍ່ໃຫ້ເຂົ້າຮ່ວມ ຫຼື ເຄື່ອນໄຫວວຽກງານໃດໜຶ່ງ ທັງໆທີ່ແມ່ຍິງ ແລະ ເດັກ ມີເງື່ອນໄຂ ແລະ ຄວາມສາມາດ ລວມເອົາການບໍ່ຍອມ ໃຫ້ແມ່ຍິງເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນຂັ້ນພື້ນຖານ.[10]

## 2. ອະທິບາຍຄຳສັບ

**ຄວາມຮຸນແຮງໃນຄອບຄົວ ຫຼື ຄວາມຮຸນແຮງຈາກຜົວ/ຄູ່ຮ່ວມຊີວິດຂອງຕົນເອງ** ໝາຍເຖິງ "ຮູບການຂອງຄວາມຮຸນແຮງທີ່ແມ່ຍິງທົ່ວໂລກໄດ້ພົບພໍ້ຫຼາຍທີ່ສຸດ ລວມທັງທຸກຮູບແບບຂອງຄວາມຮຸນແຮງທາງເພດ, ທາງຈິດໃຈ ແລະ ທາງຮ່າງກາຍຕໍ່ແມ່ຍິງ ແລະ ໄວໜຸ່ມຍິງ ຈາກຜົວ/ຄູ່ຮ່ວມຊີວິດຄົນປະຈຸບັນ ຫຼື ຜ່ານມາ ໂດຍທີ່ແມ່ຍິງບໍ່ຍິນຍອມ"[11]. ເຊິ່ງຄວາມຮຸນແຮງດັ່ງກ່າວແມ່ນບໍ່ໄດ້ຈຳກັດຢູ່ໃນພຽງການບັງຄັບຮ່ວມເພດກັບເມຍ ເຊິ່ງເປັນການກະທຳຜິດທາງອາຍາ ຕາມມາດຕາ 252 ຂອງປະມວນກົດໝາຍອາຍາ ສະບັບປີ 2017 ແຕ່ມັນຍັງໝາຍເຖິງ ທຸກຄວາມຮຸນແຮງທີ່ກະທຳໂດຍຜົວ/ຄູ່ຮ່ວມຊີວິດຜູ້ປັດຈຸບັນ ຫຼື ທີ່ຜ່ານມາ.

---

[9] Planned Parenthood, What is Sexual Consent?, ແຫຼ່ງຂໍ້ມູນຈາກເວັບໄຊທ: https://www.plannedparenthood.org/learn/relationships/sexual-consent

[10] ການສຶກສາຂອງເລຂາທິການໃຫຍ່ສະຫະປະຊາຊາດ, supra note 1, ວັກທີ 111-112.

[11] ການສຶກສາຂອງເລຂາທິການໃຫຍ່ສະຫະປະຊາຊາດ, supra note 1, ວັກທີ 111-112.

**ຄວາມຮຸນແຮງຍ້ອນຄວາມແຕກຕ່າງດ້ານຄຸນລັກສະນະທາງເພດ:** ເປັນຄຳສັບທີ່ນຳໃຊ້ໃນສາກົນທີ່ພາຍໃຕ້ກອບຂອງຄວາມຮຸນແຮງທີ່ມີຜົນ ຫລື ສິ່ງຜົນກະທົບທີ່ບໍ່ເໝາະສົມຕໍ່ບຸກຄົນໃດໜຶ່ງ ຍ້ອນເພດທີ່ແທ້ຈິງ ຫຼື ເພດທີ່ເຂົາເຈົ້າຍອມຮັບ. ຄຳວ່າ “ຄວາມຮຸນແຮງຍ້ອນຄວາມແຕກຕ່າງດ້ານຄຸນລັກສະນະທາງເພດ” ຖືກນຳໃຊ້ເປັນພື້ນຖານ ເພື່ອສະແດງໃຫ້ເຫັນເຖິງຄວາມຈິງທີ່ວ່າ ຄວາມແຕກຕ່າງທາງດ້ານໂຄງສ້າງ, ຄວາມແຕກຕ່າງດ້ານສິດອຳນາດບົນພື້ນຖານທາງເພດໃນທົ່ວໂລກ ເຮັດໃຫ້ແມ່ຍິງ ແລະ ເດັກມີຄວາມສ່ຽງຕໍ່ການຖືກຄວາມຮຸນແຮງໃນຫຼາຍຮູບການ ເຊິ່ງປະກອບມີການກະທຳທີ່ສົ່ງຜົນກະທົບທາງຮ່າງກາຍ, ທາງເພດ ຫລື ຕໍ່ຈິດໃຈ ຫລື ຄວາມເຈັບປວດ, ການຂົ່ມຂູ່ໂດຍການກະທຳທີ່ກ່າວມານັ້ນ, ການບັງຄັບ ແລະ ການເຮັດໃຫ້ຂາດເສລີພາບອື່ນໆ ບໍ່ວ່າການກະທຳນັ້ນຈະເກີດຂຶ້ນໃນທີ່ສາທາລະນະ ຫລື ໃນຊີວິດສ່ວນຕົວກໍຕາມ. ໃນຂະນະທີ່ແມ່ຍິງ ແລະ ເດັກໄດ້ຮັບຜົນກະທົບທີ່ບໍ່ເໝາະສົມຈາກຄວາມຮຸນແຮງດ້ານຄຸນລັກສະນະທາງເພດ, ຜູ້ຊາຍ ແລະ ເດັກຊາຍກໍອາດຈະຕົກເປັນເປົ້າໝາຍໄດ້ເຊັ່ນກັນ. ຄຳສັບນີ້ຍັງຖືກໃຊ້ກັບກຸ່ມຄົນຈຳນວນໜຶ່ງ ເພື່ອອະທິບາຍເຖິງຄວາມຮຸນແຮງຕໍ່ກຸ່ມຄົນທີ່ມີຄວາມແຕກຕ່າງທາງເພດ, ໃນກໍລະນີເຫຼົ່ານີ້ຄວາມຮຸນແຮງແມ່ນພົວພັນກັບຄວາມເຊື່ອຕໍ່ກັບຄວາມເປັນເພດຊາຍ/ ເພດຍິງ ແລະ/ຫຼື ບັນທັດຖານຂອງບົດບາດຍິງຊາຍ.[12]

**ຄວາມແຕກຕ່າງດ້ານຄຸນລັກສະນະທາງເພດໂດຍນຳໃຊ້ເຕັກໂນໂລຊີ:**[13] ເຖິງວ່າຈະບໍ່ມີຄຳນິຍາມທີ່ຍອມຮັບໄດ້ໃນທົ່ວໂລກກ່ຽວກັບ ຄວາມແຕກຕ່າງດ້ານຄຸນລັກສະນະທາງເພດໂດຍນຳໃຊ້ເຕັກໂນໂລຊີ ຫຼື “ຄວາມຮຸນແຮງທາງອອນລາຍ” ຫຼື “ຄວາມຮຸນແຮງທາງດິຈິຕອນ” ໂດຍທົ່ວໄປແລ້ວ ແມ່ນເຂົ້າໃຈວ່າ ເປັນຄວາມຮຸນແຮງທີ່ກະທຳໂດຍບຸກຄົນຕັ້ງແຕ່ໜຶ່ງຄົນຂຶ້ນໄປ ຫຼື ເປັນກຸ່ມ ໂດຍການນຳໃຊ້ເຕັກໂນໂລຊີ ແລະ ການສື່ສານທາງສື່ດິຈິຕອນ ໃນສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຕໍ່ບຸກຄົນໃດໜຶ່ງບົນພື້ນຖານທາງເພດຂອງເຂົາເຈົ້າ[14].

ຄຳສັບນີ້ໃນປັດຈຸບັນຍັງບໍ່ທັນໄດ້ກຳນົດສະເພາະໄວ້ໃນກົດໝາຍຂອງ ສ ປປ ລາວ, ແຕ່ໃນປະມວນອາຍາ (ສະບັບປີ 2017) ໄດ້ກຳນົດໄວ້ໃນມາດ 166, 168 ແລະ 169 ແລະ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (ປີ 2015) ໄດ້ກຳນົດໄວ້ໃນມາດ 11: ການຕັດຕໍ່ເນື້ອໃນ, ຮູບພາບ,ການເຄື່ອນໄຫວ, ສຽງ ແລະ ວິດີໂອ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ມາດຕາ 14 ການເຜີຍແຜ່ສິ່ງລາມົກຜ່ານລະບົບຄອມພິວເຕີ ເປັນຕົ້ນ: ຮູບ, ພາບການເຄື່ອນໄຫວ, ສຽງ ແລະ ວິດີໂອ ກ່ຽວກັບ ອະໄວຍະວະເພດ ແລະ ພຶດຕິກຳທາງເພດຂອງຄົນ.

ອົງການສະຫະປະຊາຊາດຍັງໃຫ້ຄວາມໝາຍຂອງຄວາມຮຸນແຮງຍ້ອນຄວາມແຕກຕ່າງທາງເພດທີ່ອຳນວຍຄວາມສະດວກໂດຍເຕັກໂນໂລຊີ ແມ່ນ ການຂົ່ມຂູ່ທາງອອນໄລ, ການເຜີຍແຜ່ຂໍ້ມູນສ່ວນຕົວຂອງໃຜຜູ້ໜຶ່ງໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ, ການສະກົດຮອຍຕາມໃນໂລກອອນໄລ, ຈຳກັດ ແລະ ຄວບຄຸມການນຳໃຊ້ເຕັກໂນໂລຊີຂອງແມ່ຍິງໂດຍຄູ່ຮັກ ຫຼື ຜົວ, ຫຼື ການໃຊ້ໂດຣນເພື່ອລັກຖ່າຍວິດີໂອ ຮູບພາບ ແລະ ການເຝົ້າລະວັງທາງອີເລັກໂທຣນິກເພື່ອອຳນວຍຄວາມສະດວກໃຫ້ແກ່ການໃຊ້ຄວາມຮຸນແຮງ.

ສິ່ງທີ່ໜ້າເປັນຫ່ວງທີ່ສຸດແມ່ນເທັກໂນໂລຊີທີ່ອຳນວຍຄວາມສະດວກໃນການລ່ວງລະເມີດທາງເພດ, ລວມທັງການແບ່ງປັນຮູບພາບສ່ວນຕົວໂດຍບໍ່ໄດ້ຮັບຄວາມຍິນຍອມ, ການປອມແປງ (ການຕັດຕໍ່ເນື້ອໃນ, ຮູບພາບ, ພາບເຄື່ອນໄຫວ, ສຽງ ແລະ ວິດີໂອ), ຮູບພາບລາມົກອານາຈານຂອງເດັກ ແລະ ການຖ່າຍຮູບແບບລ່ວງລະເມີດທາງເພດຂອງຜູ້ໃດຜູ້ໜຶ່ງໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງຮູບພາບ(ການຖ່າຍຮູບກ້ອງກະໂປ່ງ/ສິ້ນຂອງແມ່ຍິງໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກເຂົາເຈົ້າ).

---

12 ຄະນະກຳມະທິການປະຈຳລະຫວ່າງອົງການ, ຄຳແນະນຳສຳລັບການລວມເອົາການແຊກແຊງຄວາມຮຸນແຮງໂດຍອີງໃສ່ບົດບາດຍິງຊາຍໃນການປະຕິບັດດ້ານມະນຸດສະທຳ: ຫຼຸດຜ່ອນຄວາມສ່ຽງ, ສົ່ງເສີມຄວາມຕ້ານທານ ແລະ ການຟື້ນຟູການຊ່ວຍເຫຼືອ (2015)

13 ໃນເມື່ອບໍ່ມີຂໍ້ແນະນຳສາກົນ ແລະ ການຕອບສະໜອງຕໍ່ຄວາມຮຸນແຮງທີ່ອຳນວຍຄວາມສະດວກໂດຍເຕັກໂນໂລຊີ, ຄູ່ມືມາດຕະຖານການດຳເນີນງານສະບັບນີ້ ກໍບໍ່ໄດ້ລວມເອົາຂັ້ນຕອນສະເພາະໃດໜຶ່ງ. ການລາຍງານກ່ຽວກັບຄວາມຮຸນແຮງທາງເພດທີ່ອຳນວຍຄວາມສະດວກໂດຍເຕັກໂນໂລຊີ ຄວນຖືກແກ້ໄຂໃນລັກສະນະດຽວກັນກັບບົດລາຍງານອື່ນໆກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ

14 UNFPA, “Making all spaces safe: Technology Facilitated Gender-Based Violence”, December 2021.

**ຜູ້ຖືກເຄາະຮ້າຍ** ໝາຍເຖິງແມ່ຍິງ ຫຼື ເດັກ ທີ່ໄດ້ຮັບຄວາມເສຍຫາຍທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ ຈາກການກະທຳ, ການເມີນເສີຍ ຫຼື ລະເລີຍຂອງຜູ້ໃຊ້ຄວາມຮຸນແຮງ[15].

**ຜູ້ລອດຊີວິດ** ໝາຍເຖິງຄຳສັບທີ່ໃຊ້ສຳລັບບຸກຄົນທີ່ຖືກຄວາມຮຸນແຮງ, ຖືກລ່ວງລະເມີດ. ບາງຄັ້ງເຂົາເຈົ້າຖືກເອີ້ນວ່າຜູ້ຖືກເຄາະຮ້າຍ. ຄຳວ່າ "ຜູ້ລອດຊີວິດ" ຖືກເລືອກໃຫ້ໃຊ້ແທນຄຳວ່າ "ຜູ້ຖືກເຄາະຮ້າຍ" ເພື່ອສ້າງຄວາມເປັນເອກະພາບ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກ.[16] ເຖິງຢ່າງໃດກໍຕາມ, ຄຳສັບ "ຜູ້ຖືກເຄາະຮ້າຍ" ຄວນນຳໃຊ້ຢູ່ໃນບໍລິບົດຂອງກົດໝາຍ ແລະ ຂັ້ນສານ. ສະນັ້ນ, ເອກະສານສະບັບນີ້ ເຊິ່ງແມ່ນບໍລິບົດຂອງ ກົດໝາຍ ແລະ ຂັ້ນສານ, ຈະໃຊ້ຄຳວ່າ "ຜູ້ຖືກເຄາະຮ້າຍ", ເພື່ອໃຫ້ສອດຄ່ອງກັບກົດໝາຍລາວ.

**ຜູ້ໃຊ້ຄວາມຮຸນແຮງ** ໝາຍເຖິງ "ຜູ້ກະທຳ, ຜູ້ເມີນເສີຍ ຫຼື ລະເລີຍ ເຊິ່ງກໍ່ໃຫ້ເກີດຄວາມເສຍຫາຍຕໍ່ແມ່ຍິງ ຫຼື ເດັກ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ"[17]

**ໜ່ວຍງານທີ່ໃຫ້ບໍລິການທາງດ້ານຍຸຕິທຳ** ໝາຍເຖິງພະນັກງານລັດຖະກອນ, ຜູ້ພິພາກສາ, ໄອຍະການ, ຕຳຫຼວດ, ຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ, ຄະນະພະນັກງານສານ, ນັກກົດໝາຍ, ຜູ້ຊ່ວຍທະນາຍຄວາມ, ແລະ ຜູ້ໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍ/ເຈົ້າໜ້າທີ່ໜ່ວຍງານສັງຄົມສົງເຄາະທີ່ເຮັດໜ້າທີ່ ແລະ ຄວາມຮັບຜິດຊອບໃນການໃຫ້ການບໍລິການ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ.

**ພາກສ່ວນກ່ຽວຂ້ອງ** ໝາຍເຖິງ ທຸກອົງການຈັດຕັ້ງຂອງລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມທີ່ມີບົດບາດໃນ ການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນທຸກລະດັບຂອງລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ. ພາກສ່ວນກ່ຽວຂ້ອງ ຫຼືອາດຈະລວມເຖິງຜູ້ຕາງໜ້າໃຫ້ຜູ້ຖືກເຄາະຮ້າຍ, ພາກສ່ວນໃຫ້ການບໍລິການສັງຄົມ, ຂະແໜງປິ່ນປົວສຸຂະພາບ, ຜູ້ໃຫ້ບໍລິການທາງກົດຫມາຍ, ຕຳຫຼວດ, ໄອຍະການ, ຜູ້ພິພາກສາ, ອົງການປົກປ້ອງເດັກ ແລະ ຂະແໜງການສຶກສາ, ແຮງງານເຄື່ອນຍ້າຍ, ພະນັກງານປະຈຳກົງສູນ ແລະ ສູນຂໍ້ມູນຂ່າວສານແຮງງານເຄື່ອນຍ້າຍ ແລະ ອື່ນໆ[18].

**ພາກສ່ວນຊ່ວຍເຫຼືອກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ**[19]**:** ລວມເອົາ "ພາກສ່ວນໃຫ້ການບໍລິການທົ່ວໄປ" ແລະ "ພາກສ່ວນໃຫ້ບໍລິການສະເພາະດ້ານ" ທີ່ໃຫ້ບໍລິການແກ່ແມ່ຍິງຜູ້ຖືກເຄາະຮ້າຍ ຈາກຄວາມຮຸນແຮງ:

- ພາກສ່ວນສະໜອງການບໍລິການທົ່ວໄປໝາຍເຖິງ ສະໜອງການບໍລິການໂດຍອຳນາດການປົກຄອງຂອງລັດ ເຊັ່ນ: ການບໍລິການສັງຄົມ, ການບໍລິການສຸຂະພາບ, ການບໍລິການດ້ານການຈ້າງງານ ເຊິ່ງບໍ່ໄດ້ອອກແບບ ສະເພາະເພື່ອຜົນປະໂຫຍດຂອງຜູ້ເຄາະຮ້າຍເທົ່ານັ້ນ.
- ພາກສ່ວນສະໜອງການບໍລິການສະເພາະດ້ານແມ່ນຖືກອອກແບບໃຫ້ສາມາດຕອບສະໜອງການບໍລິການສະເພາະກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ແນ່ໃສ່ຜູ້ຖືກເຄາະຮ້າຍ. ການບໍລິການເຫຼົ່ານີ້ສາມາດເປັນການບໍລິການທີ່ດຳເນີນໂດຍລັດ ຫຼື ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ເຊັ່ນ: ທີ່ພັກເຊົາ, ການຊ່ວຍເຫຼືອທາງດ້ານກົດໝາຍ, ສູນໃຫ້ຄຳປຶກສາ ຫຼື ການບໍລິການອື່ນໆ.

**ການປ້ອງກັນ:** ໝາຍເຖິງ ການປ້ອງກັນບໍ່ໃຫ້ເກີດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດ້ວຍການນຳໃຊ້ວິທີການ, ຮູບການ ແລະ ມາດຕະຖານຕ່າງໆ

---

[15] ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ມາດຕາ 4

[16] ຄະນະກຳມະການນິຕິສາດສາກົນ. ການເຂົ້າເຖິງຄວາມຍຸຕິທຳຂອງແມ່ຍິງສຳລັບຄວາມຮຸນແຮງທີ່ອີງໃສ່ບົດບາດຍິງຊາຍ: ຄູ່ມືຜູ້ປະຕິບັດ, ສະບັບເລກທີ 12. 2016. (ເຈນີວາ)

[17] ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ມາດຕາ 4

[18] UN Women, UNFPA, WHO, UNDP, UNODC ຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະເດັກຍິງທີ່ຂຶ້ນກັບຄວາມຮຸນແຮງ ເຂົ້າເຖິງໄດ້ທີ່ https://www.unwomen.org/en/digital-library/publications/2015/12/essential-services-package-for-women-and-girls-subject-to-violence

[19] Kelly, L. (2018). ແຜນທີ່ບໍລິການສະໜັບສະໜູນຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຕໍ່ແມ່ຍິງ ທີ່ສອດຄ່ອງກັບ ມາດຕະຖານສິນທິສັນຍາອິສຕັນບູນ. ເຂົ້າເຖິງເອກະສານໄດ້ທີ່ 16808ec66b (coe.int)

**ການຊ່ວຍເຫຼືອທີ່ຈຳເປັນ** ໝາຍເຖິງການໃຫ້ການບໍລິການຫຼັກທີ່ຂະແໜງສາທາລະນະສຸກ, ການບໍລິການສັງຄົມ, ຂະແໜງຍຸຕິທຳ. ການໃຫ້ການຊ່ວຍເຫຼືອດັ່ງກ່າວບົນພື້ນຖານ ຕ້ອງຮັບປະກັນສິດທິ, ຄວາມປອດໄພ ແລະ ຊີວິດຄວາມເປັນຢູ່ຂອງແມ່ຍິງ ຫຼື ເດັກ ຜູ້ທີ່ປະສົບກັບຄວາມຮຸນແຮງ[20].

**ການສົ່ງຕໍ່** ໝາຍເຖິງຂະບວນການສົ່ງຜູ້ຖືກເຄາະຮ້າຍໄປຮັບການຊ່ວຍເຫຼືອທີ່ເໝາະສົມ. **ເສັ້ນທາງການສົ່ງຕໍ່** ໝາຍເຖິງກອບວຽກທີ່ເປັນເອກະພາບກັນ ຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອເປັນແນວທາງຊ່ວຍໃຫ້ບັນດາໜ່ວຍງານຕ່າງໆ ໃນການແກ້ໄຂກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ວ່າສາມາດຮັບການຊ່ວຍເຫຼືອໄດ້ບ່ອນໃດແດ່ ແລະ ການຊ່ວຍເຫຼືອແນວໃດແດ່ເຊັ່ນ: ການບໍລິການປິ່ນປົວດ້ານສຸຂະພາບ, ການຊ່ວຍເຫຼືອທາງດ້ານຈິດຕະ, ການຊ່ວຍເຫຼືອທາງສັງຄົມ, ການຊ່ວຍເຫຼືອຈາກຕຳຫຼວດ, ການຊ່ວຍເຫຼືອດ້ານກົດໝາຍ ແລະ ການຊ່ວຍເຫຼືອເຂົ້າສູ່ຂະບວນການຍຸຕິທຳ.[21]

**ການລາຍງານພາກບັງຄັບ:** ການລາຍງານພາກບັງຄັບແມ່ນໃຫ້ປະຕິບັດຕາມທີ່ໄດ້ລະບຸໄວ້ ມາດຕາ 29 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

**ກຸ່ມຄົນດ້ອຍໂອກາດ** ແມ່ນກຸ່ມຄົນ ຫຼື ຊຸມຊົນທີ່ປະສົບກັບການກີດກັນ ແລະ ຖືກຈຳແນກບໍ່ໃຫ້ມີສ່ວນຮ່ວມ (ທາງສັງຄົມ, ການເມືອງ ແລະ ເສດຖະກິດ) ເນື່ອງຈາກຄວາມແຕກຕ່າງທາງດ້ານເສດຖະກິດ, ການເມືອງ, ສັງຄົມ ແລະ ວັດທະນະທຳ. ເຊິ່ງກຸ່ມຄົນດັ່ງກ່າວລວມມີ: ແມ່ຍິງທີ່ມີຄວາມພິການ; ແມ່ຍິງຊົນເຜົ່າ; ກຸ່ມຄົນແຕກຕ່າງທາງເພດ; ແມ່ຍິງສູງອາຍຸ; ແຮງງານເຄື່ອນຍ້າຍເພດຍິງ; ແມ່ຍິງທີ່ຖືກບັງຄັບໃຫ້ເປັນໂສເພນີ.

**ລະບົບຍຸຕິທຳ** ໝາຍເຖິງຂະບວນຍຸຕິທຳທີ່ຮັບຜິດຊອບບັງຄັບ ແລະ ນຳໃຊ້ກົດໝາຍໂດຍລັດ ເຊັ່ນ:ອົງການສືບສວນ-ສອບສວນຂອງ ເຈົ້າໜ້າທີ່ຕຳຫຼວດ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ຂະແໜງການຍຸຕິທຳ.

**ຂັ້ນຕອນຄວາມຍຸຕິທຳ** ກວມເອົາຕັ້ງແຕ່ຜູ້ຖືກເຄາະຮ້າຍເຂົ້າສູ່ລະບົບຍຸຕິທຳ ຈົນເຖິງຂັ້ນຕອນຂອງການສະຫຼຸບຄະດີ. ຜູ້ຖືກເຄາະຮ້າຍອາດຈະດຳເນີນການຕາມຂະບວນການຍຸຕິທຳໃນຫຼາຍໆທາງ, ນັບແຕ່ການລາຍງານ ຫຼື ແຈ້ງຄວາມ ເຊິ່ງແມ່ນຂັ້ນຕອນການລິເລີ່ມໃນການສືບສວນ-ສອບສວນ ແລະ ການຮ້ອງຟ້ອງໃນຄະດີອາຍາ ຫຼື ການຮ້ອງຂໍຄວາມຊ່ວຍເຫຼືອ, ແລະ/ຫຼື ການດຳເນີນຄະດີທາງແພ່ງລວມທັງ ການຢ່າຮ້າງ ແລະ ການເບິ່ງແຍງດູແລລູກ ແລະ/ຫຼື ການໃຊ້ແທນ ຄ່າເສຍຫາຍສຳລັບ ບຸກຄົນ ຫຼື ຄວາມເສຍຫາຍອື່ນໆ.

**ການຮັບແຈ້ງຄວາມເບື້ອງຕົ້ນ** ໝາຍເຖິງການລາຍງານເຫດການທີ່ເກີດຂຶ້ນຈາກການໃຊ້ຄວາມຮຸນແຮງແກ່ອຳນາດການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ການບັນທຶກເອກະສານການລາຍງານ, ການລົງບັນທຶກຄະດີອາຍາ ແລະ ຄະດີແພ່ງ, ການບໍລິການໃຫ້ຄຳປຶກສາ ໂດຍນັກກົດໝາຍ, ໃບຄຳຮ້ອງຕໍ່ຝ່າຍບໍລິຫານ ທີ່ສ້າງຂຶ້ນກັບໂຄງການການຊົດໃຊ້ແທນຄ່າເສຍຫາຍຈາກລັດ, ແລະ ໃບຄຳຮ້ອງເພື່ອການແຍກ, ສິດທິການລ້ຽງດູລູກ ແລະ/ຫຼື ມາດຕະການຮ້ອງຟ້ອງດ່ວນ/ສຸກເສີນໂດຍຜ່ານໜ່ວຍງານ/ກົນໄກທາງອາຍາ, ແພ່ງ, ສານຄອບຄົວ ຫຼື ໜ່ວຍງານ/ກົນໄກການບໍລິຫານ.

**ການສືບສວນ-ສອບສວນ** ໝາຍເຖິງ ການຊອກຫາ ແລະ ການເກັບກຳຂໍ້ມູນຫຼັກຖານ ການສືບສວນ-ສອບສວນ ຊຶ່ງລວມທັງການສັນລະສູດ, ການພິສູດ , ການສ້າງແຜນການດຳເນີນການ ສືບສວນ-ສອບສວນ, ການສຳພາດຜູ້ຖືກເຄາະຮ້າຍ ແລະ ພະຍານ, ການທ້ອນໂຮມຂໍ້ມູນຫຼັກຖານຕ່າງໆ ແລະ ພິສູດຫຼັກຖານດ້ານນິຕິວິທະຍາ ແລະ

---

20 ຄືກັບຂ້າງເທິງ

21 ດັດແປງເອົາຈາກຄະນະປະຈຳອົງການອະນຸກຳມະການດ້ານການກະທຳກ່ຽວກັບບົດບາດຍິງ-ຊາຍແລະມະນຸດສະທຳສ້າງຕັ້ງຂັ້ນຕອນການດຳເນີນງານມາດຕະຖານການໃຊ້ຄວາມຮຸນແຮງໂດຍອີງໃສ່ບົດບາດຍິງ-ຊາຍ (SOPs) ເພື່ອປ້ອງກັນ ແລະ ຕອບສະໜອງຕໍ່ຄວາມຮຸນແຮງທີ່ອີງໃສ່ບົດບາດຍິງຊາຍ, 2008. ຄະນະປະຈຳລະຫວ່າງອົງການ. ແນວທາງການລວມເອົາການແຊກແຊງຄວາມຮຸນແຮງໂດຍອີງໃສ່ບົດບາດຍິງຊາຍໃນການປະຕິບັດດ້ານມະນຸດສະທຳ: ການຫຼຸດຜ່ອນຄວາມສ່ຽງ, ສົ່ງເສີມຄວາມຢືດຢຸ່ນ ແລະການຊ່ວຍເຫຼືອຟື້ນຟູ, 2015.

ການນຳໃຊ້ມາດຕະການ ແລະ ການກຳນົດຕົວ, ການສຳພາດ, ການກັກຂັງ ຜູ້ຕ້ອງສົງໄສກະທຳຜິດ, ລວມທັງ ການຂັ້ນຕອນການດຳເນີນງານ, ການບັນທຶກເອກະສານຫຼັກຖານ ແລະ ການດຳເນີນການສືບສວນ-ສອບສວນ ຊຶ່ງກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີທາງອາຍາ.

**ຂະບວນການກ່ອນພິຈາລະນາ/ການໄຕ່ສວນຄະດີ** ໝາຍເຖິງການພິຈາລະນາການປະກັນຕົວ, ການໄຕ່ສວນຄະດີ. ການວາງໂທດ, ການຕັດສິນເພື່ອຮ້ອງຟ້ອງ ແລະ ການກະກຽມເພື່ອການດຳເນີນຄະດີອາຍາ. ໃນທາງແພ່ງ ແລະ ຄອບຄົວ, ລວມເຖິງຄຳສັ່ງໃນໄລຍະເວລາການຂໍຄຸ້ມຄອງ/ລ້ຽງດູເດັກ, ການກວດສອບຫຼັກຖານໃນຂັ້ນສານ ຂອງຄະດີແພ່ງ, ແລະ ການກະກຽມເພື່ອການດຳເນີນຄະດີ/ການໄຕ່ສວນໃນສານ.

**ຂະບວນການພິຈາລະນາ/ການໄຕ່ສວນຄະດີ** ໝາຍເຖິງຂະບວນການທີ່ລວມເຖິງການສະແດງຫຼັກຖານ ແລະ ຄຳຕັດສິນທາງແພ່ງ.

**ຂະບວນການຫຼັງການພິຈາລະນາຄະດີ** ໝາຍເຖິງການປະຕິບັດໂທດຕ່າງໆ ເຊິ່ງກ່ຽວຂ້ອງກັບການປົກປ້ອງຜູ້ຖືກເຄາະຮ້າຍ, ການຫຼຸດຜ່ອນຄວາມສ່ຽງໃນການກະທຳຜິດຊ້ຳອີກ ໂດຍຜູ້ກະທຳຜິດ. ຍັງໄດ້ກວມເອົາການບໍລິການໃນການປົກປ້ອງ ແລະ ປ້ອງກັນ ແກ່ແມ່ຍິງ ຜູ້ທີ່ຖືກກັກຂັງໃນບັນດາຄ້າຍຄຸມຂັງ-ດັດສ້າງ ແລະ ສຳລັບແມ່ຍິງ ໃນຄ້າຍຄຸມຂັງ ທີ່ໄດ້ຮັບຜົນກະທົບຈາກຄວາມຮຸນແຮງ.

**ການບໍລິການທາງດ້ານກົດໝາຍ** ໝາຍເຖິງການບໍລິການທີ່ຈຳເປັນຕ່າງໆ ລວມທັງການຊ່ວຍເຫຼືອ ຫຼື ການບໍລິການທາງດ້ານກົດໝາຍໂດຍໄອຍະການ ໃຫ້ແກ່ຜູ້ຖືກເຄາະຮ້າຍ, ໂດຍສະເພາະຢູ່ໃນບາງຂະບວນການ ຂັ້ນສານທີ່ຜູ້ຖືກເຄາະຮ້າຍ ບໍ່ມີຜູ້ຕາງໜ້າທາງດ້ານກົດໝາຍ ໃນການດຳເນີນຄະດີທາງອາຍາ.

**ການຊ່ວຍເຫຼືອທາງດ້ານກົດໝາຍ** ໝາຍເຖິງການໃຫ້ຄຳປຶກສາ, ການໃຫ້ການຊ່ວຍເຫຼືອ ແລະ ການເປັນຕົວແທນໃນທາງກົດໝາຍໃຫ້ແກ່ຜູ້ຖືກເຄາະຮ້າຍ ໂດຍບໍ່ໄດ້ເສຍຄ່າໃຊ້ຈ່າຍໃດໆ ສຳລັບຜູ້ທີ່ບໍ່ມີຊັບພະຍາກອນພຽງພໍ ຫຼື ຕ້ອງການຄວາມຍຸຕິທຳ ການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ຍັງໝາຍເຖິງ ການເຂົ້າເຖິງຂໍ້ມູນທາງດ້ານກົດໝາຍອີກດ້ວຍ.

**ຫຼັກຖານທາງນິຕິ-ການແພດ** ໝາຍເຖິງ "ການບັນທຶກເອກະສານກ່ຽວກັບການບາດເຈັບກໍລະນີພິເສດ ແລະ ອະໄວຍະວະເພດ ແລະ ສະພາວະທາງອາລົມ ພ້ອມທັງບັນດາຕົວຢ່າງ ທີ່ເກັບມາຈາກຮ່າງກາຍຂອງຜູ້ຖືກຄວາມຮຸນແຮງ ຫຼື ເຄື່ອງນຸ່ງ ພຽງເພື່ອຈຸດປະສົງການດຳເນີນທາງກົດໝາຍ. ເຊິ່ງບັນດາຫຼັກຖານທີ່ໄດ້ແກ່ ນ້ຳລາຍ, ນ້ຳອະສຸຈິ, ເສັ້ນຜົມ, ຂົນ, ເລືອດ, ປັດສະວະ, ເສັ້ນໄຍ, ເສດສ່ວນສິ່ງຂອງ ແລະ ດິນ"[22]

**ການຊົດເຊີຍ** ໝາຍເຖິງການຟື້ນຟູຄືນ, ການໃຊ້ແທນຄ່າເສຍຫາຍ; ການຮັບຮູ້ຂອງສາທາລະນະກ່ຽວກັບຂໍ້ມູນຄວາມຈິງ ແລະ ການຍອມຮັບເຖິງຄວາມຮັບຜິດຊອບ, ການຮ້ອງຟ້ອງ ຕໍ່ຜູ້ກະທຳຜິດ, ການຟື້ນຟູກຽດສັກສີຂອງຜູ້ຖືກຄວາມຮຸນແຮງຕາມຫຼາຍແນວທາງ ແລະ ການຮັບປະກັນຂອງການບໍ່ ໄດ້ດຳເນີນການຮ້ອງທຸກ. ມາດຕະການການຊົດເຊີຍຄວນຈະຮັບປະກັນວ່າເປັນມາດຕະການທີ່ແກ້ໄຂແບບກວມລວມ ແລະ ບໍ່ຈຳກັດເຊິ່ງກັນແລະກັນ.

**ການໃຊ້ແທນຄ່າເສຍຫາຍ** ໝາຍເຖິງ ການໃຊ້ຄືນຄ່າເສຍຫາຍທີ່ເປັນຈຳນວນເງິນ ຫຼື ວັດຖຸສິ່ງຂອງຈາກເຫດການການກະທຳຜິດທີ່ເກີດຂຶ້ນຂອງຜູ້ກະທຳຜິດໃຫ້ກັບ ຜູ້ຖືກເຄາະຮ້າຍ ເຊັ່ນ: ຄ່າການປິ່ນປົວທາງການແພດ ຫຼື ການສູນເສຍເງິນເດືອນ[23].

**ການຟື້ນຟູຄືນ** ໝາຍເຖິງ ບັນດາມາດຕະການເພື່ອຟື້ນຟູຜູ້ຖືກຄວາມຮຸນແຮງ ໃຫ້ກັບຄືນ ສູ່ສັງຄົມຂອງພວກເຂົາກ່ອນຖືກຄວາມຮຸນແຮງ.

---

[22] Du Mont, Janice and D. White (2007), "The uses and impacts of medico-legal evidence in sexual assault cases: A Global Review (WHO: Geneva).

[23] RAINN, Crime Victim Compensation, accessed at: https://www.rainn.org/articles/crime-victim-compensation#:~:text=Victim%20compensation%20is%20a%20direct,assault%20and%20other%20violent%20crimes

**ການຍິນຍອມ ພາຍຫຼັງໄດ້ຮັບການແຈ້ງຂໍ້ມູນທີ່ຈຳເປັນ:** ແມ່ນການຕົກລົງເຫັນດີຂອງຜູ້ຖືກເຄາະຮ້າຍກັບການບໍລິການບົນພື້ນຖານທີ່ມີຂໍ້ມູນຄົບຖ້ວນ, ລວມທັງຄວາມສ່ຽງ ແລະ ຜົນປະໂຫຍດ; ເຂົາເຈົ້າສາມາດຕັດສິນໃຈເອງ ແລະ ບໍ່ມີການບັງຄັບ ຫຼື ການຂົ່ມຂູ່ ເພື່ອໃຫ້ຜູ້ເຄາະຮ້າຍຍິນຍອມ ຫຼື ການໃຫ້ຄຳສັນຍາແກ່ຜູ້ຖືກເຄາະຮ້າຍວ່າໄດ້ຮັບຜົນປະໂຫຍດ ຈາກການການຍິນຍອມດັ່ງກ່າວ[24].

**ການມອບສິດ:** ຕາມກົດໝາຍແລ້ວ ເດັກບໍ່ສາມາດໃຫ້ການຍິນຍອມດ້ວຍຕົນເອງໄດ້ຈົນກວ່າຈະມີອາຍຸຄົບ 18 ປີ ແຕ່ ອາດຕົກລົງ (ຍິນຍອມ) ທີ່ຈະເຂົ້າຮ່ວມໃນຂະບວນການທາງກົດໝາຍ. ເຖິງຢ່າງໃດກໍຕາມ, ອີງຕາມຫຼັກການຂອງການມີສ່ວນຮ່ວມຂອງເດັກ, ເດັກ (ອີງຕາມອາຍຸ) ຄວນໄດ້ຮັບຂໍ້ມູນກ່ຽວກັບ ຂະບວນການທາງກົດ ໝາຍ ແລະ ຄວາມຄິດເຫັນຂອງເຂົາເຈົ້າກໍຄວນໄດ້ຮັບການພິຈາລະນາ ໃນການຕັດສິນບັນຫາສຳຄັນຕ່າງໆ. ຄຳແນະນຳທົ່ວໄປກ່ຽວກັບອາຍຸມີດັ່ງນີ້:

- ໂດຍທົ່ວໄປແລ້ວເດັກອາຍຸ 16 ປີ ແລະ 16 ຂຶ້ນໄປ ເປັນຜູ້ໃຫຍ່ພຽງພໍ ທີ່ຈະສາມາດສະໜອງ ຂໍ້ມູນທີ່ສຳຄັນ ໃນການຕັດສິນໃຈ.
- ເດັກອາຍຸລະຫວ່າງ 14 ຫາ 16 ປີ ຖືວ່າເປັນຜູ້ໃຫຍ່ພຽງພໍທີ່ຈະປະກອບສ່ວນ ເຂົ້າໃນການຕັດສິນໃຈໂດຍການແລກປ່ຽນແນວຄວາມຄິດຂອງເຂົາເຈົ້າ.
- ເດັກອາຍຸລະຫວ່າງ 8 ຫາ 14 ປີ ສາມາດມີສ່ວນຮ່ວມທີ່ສຳຄັນຄັນເຂົ້າໃນຂັ້ນຕອນການຕັດສິນໃຈ ແຕ່ຕ້ອງໄດ້ມີການປະເມີນຄວາມເປັນຜູ້ໃຫຍ່ເປັນລາຍບຸກຄົນ.
- ເດັກອາຍຸຕ່ຳກວ່າ 9 ປີ ມີສິດທີ່ຈະອອກຄຳຄິດເຫັນ ແລະ ການໄດ້ຮັບຟັງຄຳຄິດເຫັນຂອງເຂົາເຈົ້າ. ເຂົາເຈົ້າອາດຈະສາມາດເຂົ້າຮ່ວມໄດ້ໃນສ່ວນໃດໜຶ່ງຂອງຂະບວນການດຳເນີນຄະດີ ທີ່ບໍ່ມີຜົນກະທົບຕໍ່ສະພາບຈິດໃຈຂອງພວກເຂົາ ແລະ ຄວນລະມັດລະວັງ ບໍ່ໃຫ້ເພີ່ມພາລະໃຫ້ເຂົາເຈົ້າ ໂດຍເຮັດໃຫ້ເຂົາເຈົ້າມີຄວາມຮູ້ສຶກວ່າເຂົາເຈົ້າມີຄວາມຮັບຜິດຊອບ ຕໍ່ການຕັດສິນໃຈ.

**ຂໍ້ແນະນຳ:** ຕ້ອງໄດ້ມີການຊັ່ງຊາ ແລະ ຕັດສິນຕາມແຕ່ລະກໍລະນີ ອີງຕາມອາຍຸຂອງເດັກ, ຄວາມເປັນຜູ້ໃຫຍ່ ແລະ ການພັດທະນາຂອງເດັກ ລວມໄປເຖິງປັດໃຈທາງດ້ານວັດທະນາທຳ, ຮີດຄອງປະເພນີ ແລະ ສະພາບແວດລ້ອມ ແລະ ພິເສດກໍຄື ໃຫ້ຄຳນຶງເຖິງຜົນປະໂຫຍດອັນຊອບທຳຂອງເດັກ ເປັນສິ່ງສຳຄັນທີ່ສຸດ.

(ເອົາໃຈໃສ່ ການມອບສິດນີ້ແມ່ນໃຊ້ສຳລັບຜູ້ຖືກເຄາະຮ້າຍທີ່ເປັນເດັກເທົ່ານັ້ນ. ສຳລັບການປະຕິບັດຕໍ່ຜູ້ກະທຳຜິດທີ່ເປັນເດັກ ແມ່ນໃຫ້ດຳເນີນຕາມກົດໝາຍວ່າດ້ວຍການດຳເນີນຄະດີເດັກ)

**ການຕົກເປັນຜູ້ຖືກເຄາະຮ້າຍຄັ້ງທີສອງ** (ຫຼື ການຕົກເປັນຜູ້ຖືກເຄາະຮ້າຍອີກຄັ້ງ ຫຼື ການໄດ້ຮັບບາດແຜທາງດ້ານຈິດໃຈອີກຄັ້ງ) ໝາຍເຖິງການເປັນຜູ້ຖືກເຄາະຮ້າຍ ເຊິ່ງອາດຈະບໍ່ໄດ້ເປັນຜົນໂດຍກົງມາຈາກການກະທຳຄວາມຜິດທາງອາຍາ ແຕ່ຜ່ານການຕອບສະໜອງທີ່ບໍ່ຄົບຖ້ວນຂອງ ສະຖາບັນ ແລະ ພະນັກງານຕໍ່ກັບຜູ້ຖືກເຄາະຮ້າຍ.

---

[24] ເອກະສານຂອງຜູ້ລອດຊີວິດຈາກຄວາມຮຸນແຮງທາງເພດ (GBV) - GSDRC

# ພາກທີ III: ບັນດາຫຼັກການສຳຄັນ ແລະ ຄຸນລັກສະນະທົ່ວໄປຂອງການປົກປ້ອງ ແລະ ການຊ່ວຍເຫຼືອອັນຈຳເປັນທາງດ້ານຂະບວນຍຸຕິທຳ

## 1. ຫຼັກການສຳຄັນ[25]

ໜ່ວຍງານໃຫ້ການບໍລິການທາງດ້ານຍຸຕິທຳຄວນເອົາໃຈໃສ່ຄວາມບໍ່ສະເໝີພາບຍິງ-ຊາຍ ທີ່ເປັນສາເຫດໃຫ້ເກີດຊ່ອງຫວ່າງບົດບາດຍິງ-ຊາຍ ບໍ່ວ່າຈະເປັນຄວາມເປັນອິດສະຫຼະທາງດ້ານເສດຖະກິດ ແລະ ກົດໝາຍ ມັນສົ່ງຜົນຕໍ່ການນຳໃຊ້ບໍລິການທາງດ້ານຂະບວນການຍຸຕິທຳຂອງແມ່ຍິງ, ສ້າງອຸປະສັກໃນການເຂົ້າເຖິງລະບົບຍຸຕິທຳ ແລະ ການແກ້ໄຂບັນຫາໃນຂະບວນການຍຸຕິທຳທີ່ມີຜົນກະທົບຕໍ່ແມ່ຍິງ (ຕົວຢ່າງ: ການປັບ ໄໝໃນຄະດີຄວາມຮຸນແຮງຈາກຜົວ/ຄູ່ຮ່ວມຊີວິດ). ການນຳໃຊ້ມາດຕະຖານສະບັບນີ້ ປະຕິບັດຕາມບັນດາຫຼັກການຕໍ່ໄປນີ້:

**ຫຼັກການສິດທິພື້ນຖານເປັນໃຈກາງ:** ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແມ່ນໜຶ່ງໃນການລະເມີດສິດທິພື້ນຖານຂອງສິດທິມະນຸດ. ລັດຖະບານ ແລະ ທຸກພາກສ່ວນມີໜ້າທີ່ຮັບຜິດຊອບໃນການເຄົາລົບ, ປົກປ້ອງ ແລະ ສົ່ງເສີມສິດທິຂອງແມ່ຍິງ ແລະ ເດັກ. ການບໍລິການຕ້ອງໃຫ້ບູລິມະສິດຕໍ່ກັບຄວາມປອດໄພ ແລະ ຄວາມເປັນຢູ່ທີ່ດີ ຂອງແມ່ຍິງ ແລະ ເດັກ ແລະ ການປະຕິບັດຕໍ່ພວກເຂົາດ້ວຍການເອົາໃຈໃສ່, ເຄົາລົບກຽດ ແລະ ສັກສີ. ນອກຈາກນີ້, ຍັງຮຽກຮ້ອງໃຫ້ມີມາດຕະຖານສູງສຸດໃນການບໍລິການດ້ານຂະບວນການຍຸຕິທຳ ເຊິ່ງເປັນການບໍລິການທີ່ມີປະສິດທິພາບ, ຄົບຖ້ວນ ແລະ ສາມາດເຂົ້າເຖິງໄດ້.

**ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ:** ການບໍລິການຂອງທຸກພາກສ່ວນຕ້ອງຮັບປະກັນວ່າຈະບໍ່ໃຫ້ອະໄພ ແລະ ອົດທົນຕໍ່ຜູ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຫຼື ປ່ອຍໃຫ້ມັນເກີດຂຶ້ນຢ່າງຕໍ່ເນື່ອງ. ການບໍລິການຕ່າງໆຈະຕ້ອງສົ່ງເສີມໜ່ວຍງານແມ່ຍິງ ໃຫ້ພວກເຂົາສາມາດຕັດສິນໃຈ ລວມທັງການຕັດສິນໃຈປະຕິເສດຕໍ່ການບໍລິການທີ່ຈຳເປັນ. ຜູ້ໃຫ້ການບໍລິການຄວນຊຸກຍູ້ໃຫ້ຜູ້ໄດ້ຮັບຄວາມຮຸນແຮງມາໃຊ້ການບໍລິການ ເພື່ອຜົນປະໂຫຍດຫຼາຍທີ່ສຸດຂອງເຂົາເຈົ້າ.

**ເອົາໃຈໃສ່ຕໍ່ໄວອາຍຸ ແລະ ວັດທະນະທຳທ້ອງຖິ່ນ:** ການບໍລິການທີ່ຈຳເປັນ ແມ່ນຕອບສະໜອງຕໍ່ສະຖານະການ ທີ່ແຕກຕ່າງກັນຂອງແຕ່ລະບຸກຄົນ ແລະ ປະສົບການຊີວິດຂອງແມ່ຍິງ ແລະ ເດັກໃນການຄຳນຶງເຖິງອາຍຸ, ເອກະລັກ, ວັດທະນະທຳ, ຄ່ານິຍົມທາງເພດ, ລັກສະນະທາງເພດ, ຊົນເຜົ່າ ແລະ ພາສາປາກເວົ້າ. ສຳຄັນການບໍລິການແມ່ນຕອບສະໜອງຢ່າງເໝາະສົມແກ່ແມ່ຍິງ ແລະ ເດັກ ທີ່ປະສົບກັບຫຼາຍຮູບແບບຂອງການຈຳແນກ, ເຊິ່ງບໍ່ພຽງແຕ່ຍ້ອນເຫດຜົນວ່າລາວເປັນແມ່ຍິງ ແລະ ເດັກ ແຕ່ອາດຍ້ອນ ຊົນເຜົ່າ, ຊົນຊັ້ນ, ຄ່ານິຍົມທາງເພດ, ສາສະໜາ, ຄວາມພິການ, ສະຖານະພາບການແຕ່ງງານ, ອາຊີບ ຫຼື ລັກສະນະອື່ນໆ ຫຼື ຍ້ອນລາວເຄີຍຖືກຄວາມຮຸນແຮງມາກ່ອນ.

**ການເອົາຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດ ເປັນໃຈກາງ:** ແມ່ນການປະຕິບັດເອົາໃຈໃສ່ເຖິງສິດທິ, ຄວາມຕ້ອງການ ແລະ ຄວາມປາຖະໜາຂອງແມ່ຍິງທີ່ຖືກເຄາະຮ້າຍເປັນໃຈກາງຂອງການບໍລິການຫຼາຍກວ່າສຸມໃສ່ການບັນລຸຕາມຈຸດປະສົງເປົ້າໝາຍຂອງອົງກອນ; ໝາຍເຖິງການໃຫ້ບູລິມະສິດເຖິງຄວາມປອດໄພ, ການສ້າງຄວາມເຂັ້ມແຂງ ແລະ ການຮັກສາປິ່ນປົວສຸຂະພາບຂອງແມ່ຍິງ; ການໃຫ້ຄວາມເຄົາລົບຕໍ່ກັບແມ່ຍິງທຸກຄົນ; ລວມທັງການໃຫ້ການສະໜັບສະໜູນ ແລະ ສະໜອງຂໍ້ມູນຕ່າງໆກ່ຽວກັບຂະບວນການທາງດ້ານຍຸຕິທຳໃຫ້ແກ່ພວກເຂົາເຈົ້າ. ເພື່ອໃຫ້ເປັນແນວນັ້ນ, ມັນຈຳເປັນຕ້ອງໄດ້ມີການພິຈາລະນາເຖິງປັດໄຈຕ່າງໆຂອງຜູ້ຖືກເຄາະຮ້າຍ ເຊັ່ນ: ບັນດາຄວາມຕ້ອງການທີ່ຈຳເປັນຕ່າງໆຂອງແມ່ຍິງ, ບັນດາຄວາມສ່ຽງ ແລະ ຄວາມບອບບາງຂອງແມ່ຍິງ, ຜົນກະທົບຂອງການຕັດສິນໃຈ

[25] UN Women. (2021) "A Practical Guide: Developing Standard Operating Procedures (SOPs) for a Coordinated Response to Violence against Women, including women migrant workers" accessed at: https://asiapacific.unwomen.org/en/digital-library/-publications/2021/12/practical-guide-developing- standard-operating-procedures-for-a-coordinated-response-to-vaw

ແລະ ການເຄື່ອນໄຫວທີ່ໄດ້ດຳເນີນປະຕິບັດ ແລະ ການຮັບປະກັນວ່າ ການກະທຳດັ່ງກ່າວແມ່ນສາມາດຍອມຮັບໄດ້ ຕໍ່ກັບຄວາມຕ້ອງການພິເສດຂອງແມ່ຍິງແຕ່ລະຄົນ ແລະ ການຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງເຂົາເຈົ້າ.

**ຂໍ້ຄວນລະວັງ:** ທຸກໜ່ວຍງານຊ່ວຍເຫຼືອຕ້ອງຮັບປະກັນໃຫ້ມີການປ້ອງກັນ ແລະ ຫຼຸດຜ່ອນທຸກໆຜົນກະທົບທາງລົບຕໍ່ກັບຜູ້ຖືກເຄາະຮ້າຍ ຜ່ານແນວທາງທີ່ໄດ້ຈັດຕັ້ງປະຕິບັດ.

**ຮັກສາຄວາມລັບ ແລະ ຄວາມປອດໄພແມ່ນສິ່ງທີ່ສຳຄັນທີ່ສຸດ:** ໃນການຊ່ວຍເຫຼືອທີ່ຈຳເປັນຢ່າງມີປະສິດທິພາບແກ່ແມ່ຍິງ ແລະ ເດັກ, ຄວາມລັບ ແລະ ຄວາມປອດໄພຂອງເຂົາເຈົ້າ ແມ່ນສິ່ງທີ່ສຳຄັນທີ່ສຸດ ທີ່ເຈົ້າໜ້າທີ່ ແລະ ພາກສ່ວນທີ່ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຕ້ອງຮັກສາຄວາມລັບຂໍ້ມູນທັງໝົດຂອງຜູ້ຖືກເຄາະຮ້າຍ, ການຊ່ວຍເຫຼືອທີ່ຈຳເປັນຕ້ອງໃຫ້ບູລິມະສິດແກ່ຄວາມປອດໄພ ແລະ ຄວາມສະຫງົບສຸກຂອງແມ່ຍິງ ແລະ ການຫຼີກລ້ຽງບໍ່ໃຫ້ແມ່ຍິງເກີດອັນຕະລາຍຕື່ມອີກ.

**ຄວາມຮັບຜິດຊອບຂອງຜູ້ກະທຳຜິດ:** ເມື່ອໃດກໍຕາມທີ່ມີການກະທຳຜິດ ຜູ້ກະທຳຜິດຕ້ອງມີຄວາມຮັບຜິດຊອບຕໍ່ຜູ້ທີ່ຖືກກະທຳ; ການໃຫ້ຜູ້ກະທຳຜິດຮັບຜິດຊອບຕໍ່ການກະທຳຂອງເຂົາເຈົ້ານັ້ນ ຈຳເປັນຕ້ອງໄດ້ມີການຊ່ວຍເຫຼືອທີ່ຈຳເປັນຕ່າງໆທີ່ເໝາະສົມ ເພື່ອໃຫ້ຜູ້ກະທຳຜິດ ຮັບຜິດຊອບຕໍ່ກັບການກະທຳຜິດເກີດຂຶ້ນຢ່າງມີປະສິດທິພາບ, ເຊິ່ງໃນຂະນະດຽວກັນກໍໃຫ້ການຮັບປະກັນ ເຖິງຄວາມທ່ຽງທຳໃນການຕອບສະໜອງທາງດ້ານຂະບວນການຍຸຕິທຳແກ່ພວກເຂົາໄປພ້ອມກັນ. ການຊ່ວຍເຫຼືອທີ່ຈຳເປັນ ຕ້ອງໄດ້ໃຫ້ການສະໜັບສະໜູນ ແລະ ອຳນວຍຄວາມສະດວກໃຫ້ແກ່ການມີສ່ວນຮ່ວມຂອງຜູ້ຖືກເຄາະຮ້າຍໃນຂະບວນການຍຸຕິທຳ, ໂດຍການສົ່ງເສີມຄວາມສາມາດໃນການຕັ້ງໜ້າປະກອບສ່ວນເຂົ້າໃນຂະບວນການທາງຍຸຕິທຳ ເຊິ່ງໃນເວລາດຽວກັນ ກໍໄດ້ມີການຮັບປະກັນວ່າ ການໃຫ້ຄວາມຍຸຕິທຳ ແມ່ນຄວາມຮັບຜິດຊອບພາກລັດ ບໍ່ແມ່ນພາລະຂອງຜູ້ຖືກເຄາະຮ້າຍ.

**ການໃສ່ໃຈຜູ້ກະທຳຜິດ:** ແມ່ນຂະບວນການທີ່ເນັ້ນໜັກໃສ່ ພຶດຕິກຳ ແລະ ການກະທຳຂອງຜູ້ກະທຳຜິດໃນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ລວມທັງເບິ່ງວ່າລາວມີເຈດຕະນາເຮັດໃຫ້ຜູ້ຖືກເຄາະຮ້າຍມີຄວາມຍິນຍອມດ້ານຄວາມຮຸນແຮງທາງເພດ ຫຼື ບໍ່.

**ໜ່ວຍງານຮັບຜິດຊອບ:** ໃນການແກ້ໄຂບັນຫາຄວາມຮຸນແຮງເຊັ່ນ: ການຕິດຕໍ່ເບື້ອງຕົ້ນ/ການລາຍງານຢ່າງຕັ້ງໜ້າ, ການດຳເນີນການສືບສວນ-ສອບສວນ, ການຕັດສິນໃຈໃນການຮ້ອງຟ້ອງ ແມ່ນຄວາມຮັບຜິດຊອບຂອງ ພາກສ່ວນລັດຖະບານ ບໍ່ແມ່ນຜູ້ຖືກຄວາມຮຸນແຮງເປັນຜູ້ຮັບຜິດຊອບ.

**ການປ້ອງກັນການຂູດຮີດ ແລະ ການລ່ວງລະເມີດທາງເພດ:** ທຸກພາກສ່ວນທີ່ໃຫ້ການຊ່ວຍເຫຼືອ ແມ່ນຫ້າມເດັດຂາດບໍ່ໃຫ້ມີການຂູດຮີດທາງເພດເກີດຂຶ້ນ ບໍ່ວ່າຈະດ້ວຍການກະທຳທີ່ຕັ້ງໃຈ ຫຼື ພະຍາຍາມກະທຳໃນການໃຊ້ອຳນາດຕຳແໜ່ງ ເພື່ອຈຸດປະສົງທາງເພດຕ່າງໆ. ຫຼັກການນີ້ແມ່ນລວມເອົາການຫຼຸດຜ່ອນຄວາມສ່ຽງ, ທັງເປັນການປ້ອງກັນ ແລະ ການຕອບໂຕ້ຕໍ່ກັບການກ່າວຫາການກະທຳຜິດໃນການກົດຂີ່ຂູດຮີດຈາກການລ່ວງລະເມີດທາງເພດຢ່າງມີປະສິດທິພາບ. ທຸກຂໍ້ກ່າວຫາຕ້ອງຖືກລາຍງານ ແລະ ໄດ້ຮັບການແກ້ໄຂຜ່ານຂະບວນການທາງກົດໝາຍແບບເປັນທາງການໃນໄລຍະເວລາ ແລະ ການດຳເນີນການທີ່ເໝາະສົມ.

## 2. ຄຸນລັກສະນະທົ່ວໄປ ຂອງການປົກປ້ອງ ແລະ ຊ່ວຍເຫຼືອອັນຈຳເປັນທາງດ້ານຂະບວນການຍຸຕິທຳ

ໃນການປົກປ້ອງ ແລະ ຊ່ວຍເຫຼືອອັນຈຳເປັນເບື້ອງຕົ້ນແກ່ຜູ້ຖືກເຄາະຮ້າຍນັ້ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຕ້ອງດຳເນີນບົນພື້ນຖານການຍິນຍອມ ຫຼື ການປະຕິບັດທີ່ຈະຮັບເອົາການຊ່ວຍເຫຼືອຂອງຜູ້ຖືກເຄາະຮ້າຍ. ໝາຍເຖິງວ່າຜູ້ຖືກເຄາະຮ້າຍມີສິດທີ່ຈະປະຕິເສດການໄດ້ຮັບການຊ່ວຍເຫຼືອ; ຊຶ່ງໃນກໍລະນີນັ້ນ, ພາກສ່ວນໃຫ້ການຊ່ວຍເຫຼືອກົດໝາຍບໍ່ຄວນບັງຄັບໃຫ້ຜູ້ຖືກເຄາະຮ້າຍ ດຳເນີນການທາງກົດໝາຍໃດໆ (ຍົກເວັ້ນວ່າ ການກະທຳ ກາຍເປັນການກະທຳທີ່ເປັນອາຈິນ ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ສັງຄົມ ຊຸມຊົນ), ຊຶ່ງພາກສ່ວນໃຫ້ການຊ່ວຍເຫຼືອທາງກົດໝາຍຕ້ອງເອົາໃຈໃສ່ຕໍ່ຄຸນລັກສະນະຕໍ່ໄປນີ້:

ໃນການນຳໃຊ້ຫຼັກການທົ່ວໄປນັ້ນບັນດາໜ່ວຍງານໃຫ້ການຊ່ວຍເຫຼືອດ້ານຂະບວນການຍຸຕິທຳແມ່ນຈະຕ້ອງເອົາໃຈໃສ່ຄຸນລັກສະນະທົ່ວໄປໃນການປົກປ້ອງ ແລະ ຊ່ວຍເຫຼືອຈຳເປັນເບື້ອງຕົ້ນໃຫ້ແກ່ຜູ້ຖືກເຄາະຮ້າຍຄື[26]:

- ການລົ້ມເຫຼວ ໃນການພິຈາລະນາໃນການປົກປ້ອງ ແລະ ການຊ່ວຍເຫຼືອຢ່າງຕໍ່ເນື່ອງໃນຕະຫຼອດຂະບວນການຍຸຕິທຳ ສາມາດນຳໄປສູ່ຜົນໄດ້ຮັບທີ່ເປັນອັນຕະລາຍໄດ້.
- ການສື່ສານ, ປະສານງານ, ການສົ່ງຕໍ່ໃນເຄືອຂ່າຍ ແລະ ກົນໄກການດຳເນີນງານລະຫວ່າງຂະບວນການຍຸຕິທຳ ແລະ ພາກສ່ວນໃຫ້ການຊ່ວຍເຫຼືອອື່ນ ທີ່ດຳເນີນໄປຢ່າງມີລະບົບ, ທັນເວລາ, ຊັດເຈນ ແລະ ມີປະສິດທິພາບ ແມ່ນສິ່ງສຳຄັນໃນການຮັກສາຄວາມປອດໄພ ແລະ ປົກປ້ອງຕໍ່ຜູ້ຖືກເຄາະຮ້າຍ ແລະ ເປັນການຮັບປະກັນຕໍ່ຜູ້ຖືກເຄາະຮ້າຍໃຫ້ໄດ້ຮັບການຊ່ວຍເຫຼືອ ແລະ ການສະໜັບສະໜູນຕາມສິດທີ່ລາວຄວນໄດ້ຮັບ.

**ຄວາມພ້ອມຂອງການບໍລິການ:** ການບໍລິການທີ່ຈຳເປັນທາງດ້ານຂະບວນການຍຸຕິທຳ (ການສະໜອງຂໍ້ມູນ, ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ການດຳເນີນຄະດີ) ຕ້ອງຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ໂດຍບໍ່ໃຫ້ມີການຈຳແນກຖານະທາງດ້ານເສດຖະກິດ-ສັງຄົມ, ຕົ້ນກຳເນີດ, ຊົນຊັ້ນ, ເພດ, ຊົນເຜົ່າ, ອາຍຸ, ສາສະໜາ, ພາສາ, ພູມລຳເນົາ, ບ່ອນຢູ່ອາໄສ ແລະ ອື່ນໆ.

**ການເຂົ້າເຖິງການບໍລິການ:** ການບໍລິການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຕ້ອງຮັບປະກັນໃຫ້ສາມາດເຂົ້າເຖິງການບໍລິການຊ່ວຍເຫຼືອໄດ້ (ຕົວຢ່າງ: ຕັ້ງຢູ່ໃນໄລຍະທີ່ປອດໄພ ແລະ ສາມາດເດີນທາງເຂົ້າເຖິງໄດ້ ແລະ ອຳນວຍຄວາມສະດວກໃຫ້ຜູ້ພິການທາງຮ່າງກາຍ), ສາມາດເຂົ້າເຖິງໄດ້ທາງເສດຖະກິດ (ຕົວຢ່າງ: ບໍ່ມີການເສຍຄ່າບໍລິການໃດໆ ຫຼື ມີຄ່າໃຊ້ຈ່າຍຕໍ່າ), ການເຂົ້າເຖິງທາງດ້ານພາສາ (ຕົວຢ່າງ: ຂໍ້ມູນຂ່າວສານຕ່າງໆແມ່ນສາມາດເຂົ້າໃຈໄດ້ງ່າຍ, ມີເປັນຫຼາຍພາສາທ້ອງຖິ່ນ, ການສະໜອງໃຫ້ແກ່ຜູ້ພິການ ເຊັ່ນ: ອັກສອນເບວ ຫຼື ພາສາມື)

**ຄວາມເໝາະສົມແລະແທດເໝາະຂອງການບໍລິການ:** ການບໍລິການຕ້ອງອີງໃສ່ຜົນກະທົບຂອງຄວາມຮຸນແຮງຕໍ່ກຸ່ມຕ່າງໆ, ຕອບສະໜອງຄວາມຕ້ອງການ, ຮັບປະກັນຫຼັກການມະນຸດສະທຳ, ຄວາມລັບ ແລະ ເຄົາລົບກຽດສັກສີ ແລະ ວັດທະນະທຳຂອງຜູ້ເຄາະຮ້າຍ.

**ຖືຄວາມປອດໄພຂອງຜູ້ຖືກເຄາະຮ້າຍເປັນບູລິມະສິດ (ການປະເມີນຄວາມສ່ຽງ ແລະ ຄວາມປອດໄພຂອງຜູ້ຖືກເຄາະຮ້າຍ):** ການຮັກສາຄວາມປອດໄພໃຫ້ຜູ້ຖືກເຄາະຮ້າຍ ທີ່ກຳລັງປະເຊີນໜ້າກັບຄວາມຮຸນແຮງໃນປັດຈຸບັນ ແລະ ຈະສືບຕໍ່ມີຄວາມສ່ຽງໃນອະນາຄົດນັ້ນ ຕ້ອງມີການປະເມີນ, ການຄຸ້ມຄອງບໍລິຫານກໍລະນີ ໂດຍອີງໃສ່ລະດັບຂອງຄວາມຮຸນແຮງ, ການກຳນົດວິທີການ ແລະ ການປະສານງານຢ່າງເປັນລະບົບຕໍ່ເນື່ອງລະຫວ່າງຂະແໜງສັງຄົມ, ສາທາລະນະສຸກ ແລະ ຍຸຕິທຳ.

---

[26] ຊຸດບໍລິການທີ່ຈຳເປັນ

**ການຍິນຍອມ/ເຫັນດີ ແລະ ການຮັກສາຄວາມລັບຂອງຜູ້ຖືກເຄາະຮ້າຍ:** ຜູ້ຖືກເຄາະຮ້າຍຄວນໄດ້ຮັບຂໍ້ມູນ, ຂ່າວສານກ່ຽວກັບການປົກປ້ອງ ແລະ ການບໍລິການຊ່ວຍເຫຼືອ, ລວມທັງປັດໃຈສ່ຽງ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການບໍລິການດັ່ງກ່າວ ເພື່ອເປັນຂໍ້ມູນໃນການຕັດສິນໃຈຮັບ ຫຼື ປະຕິເສດການຊ່ວຍເຫຼືອ.

**ການສະໜອງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ:** ຕ້ອງຮັບປະກັນຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບ,ຫ້າມເປີດເຜີຍຂໍ້ມູນສ່ວນຕົວໂດຍບໍ່ໄດ້ຮັບການເຫັນດີຈາກຜູ້ຖືກເຄາະຮ້າຍ, ເນື່ອງຈາກຂໍ້ມູນກ່ຽວກັບຄວາມຮຸນແຮງທີ່ຜູ້ກ່ຽວໄດ້ຮັບຜ່ານມານັ້ນ ເປັນບັນຫາລະອຽດອ່ອນທີ່ສຸດ, ຫາກຖືກເປີດເຜີຍໃນທາງທີ່ບໍ່ເໝາະສົມ ອາດຈະນຳໄປສູ່ຄວາມເສຍຫາຍອັນໜັກໜ່ວງ ອາດເປັນໄພຂົ່ມຂູ່ ແລະ ເປັນອັນຕະລາຍຮ້າຍແຮງຕໍ່ຜູ້ຖືກເຄາະຮ້າຍ ແລະ ຜູ້ໃຫ້ການຊ່ວຍເຫຼືອ.

**ການສື່ສານ ແລະ ການມີສ່ວນຮ່ວມທີ່ມີປະສິດທິພາບຂອງຂະແໜງການທີ່ກ່ຽວຂ້ອງໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ປະເມີນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ:** ຜູ້ຖືກເຄາະຮ້າຍທຸກຄົນ ລ້ວນແຕ່ຢາກຮູ້ວ່າບັນຫາຄວາມຮຸນແຮງທີ່ເກີດຂຶ້ນກັບຕົນ, ມີຜູ້ຮັບຟັງ, ເຂົ້າໃຈ, ຄວາມຕ້ອງການຂອງເຂົາເຈົ້າຖືກຮັບຮູ້ ແລະ ໄດ້ຮັບການຕອບສະໜອງ. ການໃຫ້ຂໍ້ມູນ ແລະ ມີວິທີການສື່ສານທີ່ດີ ຈະສາມາດສ້າງຄວາມເຂັ້ມແຂງໃຫ້ຜູ້ຖືກເຄາະຮ້າຍ ຊຶ່ງການສື່ສານດັ່ງກ່າວ ຕ້ອງໃຫ້ກຽດ ແລະ ມີຄວາມເຄົາລົບເຂົາເຈົ້າ.

**ການເກັບກຳ, ການຄຸ້ມຄອງ ແລະ ຮັກສາຂໍ້ມູນ:** ການເກັບກຳຂໍ້ມູນກ່ຽວກັບການສະໜອງການຊ່ວຍເຫຼືອທີ່ຖືກຕ້ອງ ແລະ ຕໍ່ເນື່ອງ ເປັນປັດໄຈສຳຄັນຂອງການສືບຕໍ່ປັບປຸງການບໍລິການ. ໃນຂະບວນການຊ່ວຍເຫຼືອຕ້ອງມີການບັນທຶກຂໍ້ມູນຂອງຜູ້ຖືກເຄາະຮ້າຍ ແລະ ຂໍ້ມູນກ່ຽວກັບການບໍລິການ ໃຫ້ຈະແຈ້ງ, ຖືກຕ້ອງ, ປິດລັບ ແລະ ເກັບຮັກສາໄວ້ໃຫ້ປອດໄພ.

**ການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ແລະ ການສົ່ງຕໍ່:** ບັນດາຂະແໜງການທີ່ເຮັດໜ້າທີ່ປົກປ້ອງ, ການຊ່ວຍເຫຼືອອັນຈຳເປັນດ້ານສັງຄົມ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງຕ້ອງມີການປະສານງານກັນຢ່າງທັນເວລາ, ຮັບປະກັນໃຫ້ການສົ່ງຕໍ່ຖືກປະຕິບັດຕາມມາດຕະຖານທີ່ກຳນົດໄວ້, ໃຫ້ມີການບໍລິການທີ່ຈຳເປັນດ້ານຕ່າງໆ ແລະ ສາມາດເຂົ້າເຖິງການຊ່ວຍເຫຼືອໄດ້ຢ່າງງ່າຍດາຍ. ເພື່ອຮັບປະກັນໃຫ້ໄດ້ສິ່ງທີ່ກ່າວມານີ້ ຕ້ອງມີນິຕິກຳກ່ຽວກັບການປະສານງານທີ່ກຳນົດຄວາມຮັບຜິດຊອບຢ່າງຈະແຈ້ງ ລະຫວ່າງ ຂະແໜງສັງຄົມ, ສາທາລະນະສຸກ ແລະ ຂະແໜງຍຸຕິທຳ.

# ພາກທີ IV: ການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ

## 1. ກົນໄກການລາຍງານ ແລະ ການສົ່ງຕໍ່[27]

ຜູ້ຖືກເຄາະຮ້າຍ ຈາກຄວາມຮຸນແຮງມີສິດ ແລະ ເສລີພາບໃນການຕັດສິນໃຈວ່າຈະລາຍງານເຫດການດັ່ງກ່າວ ຫຼື ບໍ່. ຖ້າຜູ້ຖືກເຄາະຮ້າຍຕັດສິນໃຈລາຍງານ, ລາວອາດຈະໄປຫາຕຳຫຼວດ, ອຳນາດການປົກຄອງບ້ານ, ຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ, ແພດ, ໝໍ ຫຼື ສະຫະພັນແມ່ຍິງ.

ຕ້ອງຮັບປະກັນວ່າປະຕູທຳອິດທີ່ຜູ້ຖືກເຄາະຮ້າຍເລືອກເພື່ອຊອກຫາການຊ່ວຍເຫຼືອແມ່ນ**"ປະຕູທີ່ຖືກຕ້ອງ"** ຜູ້ໃຫ້ບໍລິການໃນໄລຍະແຈ້ງຄວາມເບື້ອງຕົ້ນມີຄວາມຮັບຜິດຊອບໃນການໃຫ້ຂໍ້ມູນທັງໝົດທີ່ຊັດເຈນ ແລະ ຄົບຖ້ວນກ່ຽວກັບຂະບວນການຍຸຕິທຳ ແລະ ການບໍລິການທັງໝົດທີ່ມີຢູ່, ຂໍ້ມູນກ່ຽວກັບຄວາມສ່ຽງ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການໃຫ້ການຊ່ວຍເຫຼືອ ແລະ ສະໜອງການສະໜັບສະໜູນຕະຫຼອດຂະບວນການ ໄປຈົນເຖິງຂັ້ນຕອນການສິ້ນສຸດການດຳເນີນຂະບວນການຍຸຕິທຳ.

ຖ້າຜູ້ໃຫ້ບໍລິການບໍ່ມີຄວາມຮູ້ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ, ຈຳເປັນຫຼາຍ ແລະ ຮັບປະກັນວ່າຜູ້ຖືກເຄາະຮ້າຍຖືກສົ່ງໄປຫາຜູ້ໃຫ້ການບໍລິການທີ່ໄດ້ຜ່ານການຝຶກອົບຮົມມາແລ້ວກ່ຽວກັບການຕອບໂຕ້ຕໍ່ຄວາມຮຸນແຮງຕໍ່ແມ່ຍິງ ເພື່ອສາມາດໃຫ້ຂໍ້ມູນທີ່ສຳຄັນດັ່ງກ່າວ ຫຼື ສາມາດໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນຕະຫຼອດຂະບວນການຍຸຕິທຳໄດ້. ການດຳເນີນການທັງໝົດຄວນໄດ້ຮັບການຍິນຍອມ ແລະ ຕົກລົງເຫັນດີຈາກຜູ້ຖືກເຄາະຮ້າຍ[28].

ການສົ່ງຕໍ່ສາມາດເກີດຂຶ້ນຢູ່ 2 ທາງທີ່ແຕກຕ່າງກັນດັ່ງນີ້:

1) **ຜູ້ຖືກເຄາະຮ້າຍໄປຂໍຄວາມຊ່ວຍເຫຼືອດ້ວຍຕົນເອງ:** ການສົ່ງຕໍ່ນີ້ເກີດຂຶ້ນເມື່ອຜູ້ຖືກເຄາະຮ້າຍຕິດຕໍ່ຫາຜູ້ໃຫ້ບໍລິການການຊ່ວຍເຫຼືອໂດຍກົງ ແລະ ບໍ່ໄດ້ຖືກສົ່ງຕໍ່ ຫຼື ສົ່ງໂດຍໜ່ວຍງານການຊ່ວຍເຫຼືອ.
2) **ການສົ່ງຕໍ່ເກີດຂຶ້ນລະຫວ່າງຂະແໜງການທີ່ກ່ຽວຂ້ອງ:** ໄດ້ແກ່ການສົ່ງຕໍ່ຈາກອົງການຊ່ວຍເຫຼືອທາງດ້ານຂະບວນການຍຸຕິທຳໄປຫາໜ່ວຍງານໃຫ້ຄວາມຊ່ວຍເຫຼືອທາງດ້ານສັງຄົມຫຼືໜ່ວຍງານໃຫ້ການຊ່ວຍເຫຼືອທາງສາທາລະນະສຸກ ຫຼື ສົ່ງຕໍ່ຈາກອົງການຈັດຕັ້ງຂອງລັດໄປຫາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ.

ຈຸດປະສົງຂອງການສົ່ງຕໍ່ແມ່ນເພື່ອສະໜອງການປົກປ້ອງ ແລະ ການຊ່ວຍເຫຼືອຢ່າງເປັນລະບົບ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ.

ສ່ວນຫຼາຍແລ້ວ ຜູ້ຖືກເຄາະຮ້າຍຈະເຂົ້າຫາໜ່ວຍງານບໍລິການທາງດ້ານສາທາລະນະສຸກ ຫຼື ສັງຄົມເປັນຈຸດທຳອິດ ແລ້ວຈຶ່ງຖືກສົ່ງມາຍັງຕຳຫຼວດ, ອຳນາດການປົກຄອງບ້ານ ຫຼື ຫ້ອງການຊ່ວຍເຫຼືອທາງກົດໝາຍ. ອີງຕາມ

[27] [28] [29] ປຶ້ມຄູ່ມືກ່ຽວກັບ ການຄຸ້ມຄອງການຮ້ອງຟ້ອງທີ່ມີປະສິດທິພາບຕໍ່ກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ (ອົງການ UNDOC and ອົງການ UN Women, 2014) ເບິ່ງໄດ້ທີ່: https://www.unodc.org/documents/justice-and-prisonreform/Handbook_on_effective_prosecution_responses_to_violence_against_women_and_girls.pdf p.54.

ມາດຕະຖານດຳເນີນການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ແມ່ຍິງ ແລະ ເດັກ ທີ່ຖືກຄວາມຮຸນແຮງຢູ່ ສປປ ລາວ ສຳລັບວຽກງານການປະສານງານໂດຍລວມ[29]

ຄະນະກຳມະການຄຸ້ມຄອງ ແລະ ການປະສານງານເພື່ອແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຢູ່ ສປປ ລາວ ໄດ້ຮັບການແຕ່ງຕັ້ງຂຶ້ນ ແລະ ໄດ້ລະບຸວ່າ ທຸກຂະແໜງການທີ່ກ່ຽວຂ້ອງ ລວມທັງ ຂະບວນການຍຸຕິທຳຕ້ອງໄດ້ລາຍງານປະຈຳປີໃຫ້ກັບຄະນະກຳມະການດັ່ງກ່າວ ກ່ຽວກັບການສະຫຼຸບຊຸດຂໍ້ມູນຂັ້ນຕ່ຳພື້ນຖານ ທີ່ບໍ່ໄດ້ເປີດເຜີຍຂໍ້ມູນສ່ວນຕົວ ເພື່ອໃຊ້ໃນການວິເຄາະ. ອີງຕາມພາກທີ 6 (ການເກັບກຳຂໍ້ມູນ ແລະ ການລາຍງານ) ຂອງມາດຕະຖານດຳເນີນການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ແມ່ຍິງ ແລະ ເດັກຍິງທີ່ຖືກຄວາມຮຸນແຮງຢູ່ ສປປ ລາວ

## 2. ແຜນວາດຂະບວນການ ແລະ ການສົ່ງຕໍ່ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງໃນຂະບວນການຍຸຕິທຳ



## 3. ໜ້າທີ່ຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງໃນຂະບວນການຍຸຕິທຳ ສຳລັບ ແມ່ຍິງ ແລະ ເດັກ

| **ໜ່ວຍງານຮັບຜິດຊອບ ກ່ຽວກັບຄວາມຮຸນແຮງຕໍ່ ແມ່ຍິງ** | **ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ** |
|---|---|
| **ສະຫະພັນແມ່ຍິງລາວ (ສຍລ)**<br><br>ມາດຕາ 62 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ | • ຈັດຕັ້ງການໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ, ເພື່ອໃຫ້ແມ່ຍິງ ແລະ ເດັກໄດ້ຮັບ ການຊ່ວຍເຫຼືອ, ຮູ້ກ່ຽວກັບເງື່ອນໄຂ ແລະ ວິທີການເຂົ້າເຖິງຂະບວນການຍຕິທຳ<br>• ການຊ່ວຍເຫລືອໃຫ້ແກ່ຜູ້ຖືກເຄາະຮ້າຍດ້ານການໃຫ້ຄຳປຶກສາ, ທີ່ພັກເຊົາຊົ່ວຄາວທີ່ປອດໄພ, ດ້ານກົດໝາຍ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະການສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ທັງເປັນຜູ້ປົກປ້ອງຜູ້ຖືກເຄາະຮ້າຍໃນການດຳເນີນຄະດີໂດຍບໍ່ເສຍຄ່າ.<br>• ປະສານສົມທົບ, ຊຸກຍູ້ ແລະ ຕິດຕາມກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການປະຕິບັດວຽກງານປ້ອງກັນ, ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.<br>• ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງ ສປປ ລາວ. |
| **ກະຊວງປ້ອງກັນຄວາມສະຫງົບ (ປກສ)**<br><br>ມາດຕາ 68. ຂອງກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ | • ຕິດຕາມ, ຊອກຫາ, ເກັບຂໍ້ມູນ ແລະ ລິເລີ່ມການດຳເນີນຄະດີຕໍ່ຜູ້ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ມີຄວາມຊັດເຈນ, ຖືກຕ້ອງ ແລະ ວ່ອງໄວ.<br>• ສຶກສາອົບຮົມ, ກ່າວເຕືອນ, ໄກ່ເກ່ຍຜູ້ໃຊ້ຄວາມຮຸນແຮງທີ່ກໍ່ຜົນເສຍຫາຍບໍ່ຫຼວງຫຼາຍ<br>• ຊີ້ນຳ ແລະ ຄຸ້ມຄອງການນຳໃຊ້ວິທີການສືບສວນ-ສອບສວນ ຫຼື ມາດຕະການສະກັດກັ້ນ ເຊັ່ນ: ການຈັບຕົວ, ກັກຕົວ, ກັກຂັງພາງ ຫຼື ການຫ້າມບໍ່ໃຫ້ໃຊ້ຄວາມຮຸນແຮງເຂົ້າໃກ້ຜູ້ຖືກເຄາະຮ້າຍ.<br>• ຊ່ວຍເຫຼືອ ແລະ ກອບກູ້ເອົາຜູ້ຖືກເຄາະຮ້າຍ ພ້ອມທັງປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ.<br>• ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກການຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ<br>• ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. |
| **ກະຊວງຍຸຕິທຳ (ຍຕທ)**<br><br>ມາດຕາ 69 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ | • ໃຫ້ການຊ່ວຍເຫຼືອດ້ານກົດໝາຍແກ່ແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ<br>• ຈັດອົບຮົມ ແລະ ຍົກລະດັບຄວາມຮູ້ດ້ານກົດໝາຍກ່ຽວກັບການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃຫ້ພະນັກງານ ແລະ ການຈັດຕັ້ງທີ່ຂຶ້ນກັບຕົນເຊັ່ນ: ຫ້ອງການຍຕິທຳເມືອງ, ສະພາທະນາຍຄວາມ, ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ. |

| | |
|---|---|
| **ຄະນະໄກ່ເກ່ຍຂັ້ນບ້ານ**<br><br>ມາດຕາ 41 ດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ<br><br>ມາດຕາ 51 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ | • ໜ່ວຍງານໄກ່ເກ່ຍຂັ້ນບ້ານ ແມ່ນຢູ່ພາຍໃຕ້ການຊີ້ນຳຂອງຫ້ອງການຍຸຕິທຳເມືອງ ແລະ ແມ່ນ "ການຈັດຕັ້ງບໍ່ປະຈຳການຂອງບ້ານ…ມີພາລະບົດບາດໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນຢູ່ພາຍໃນບ້ານ".<br>• ໃນກໍລະນີຄວາມຮຸນແຮງ, ອະນຸຍາດໃຫ້ດຳເນີນການໄກ່ເກ່ຍໄດ້ໃນກໍລະນີທີ່ບໍ່ແມ່ນການກະທຳຜິດທາງອາຍາ. |
| **ການໃຫ້ການຊ່ວຍເຫຼືອທາງກົດໝາຍ**<br><br>ມາດຕາ 15, 16, 23 ຂອງດຳລັດວ່າດ້ວຍການຊ່ວຍເຫຼືອທາງກົດໝາຍ | • ບັນດາອົງການຈັດຕັ້ງ ແລະ ບຸກຄົນສາມາດໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ແລະ 16 ຂອງດຳລັດວ່າດ້ວຍການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແຕ່ມີພຽງທະນາຍຄວາມຈາກສະພາທະນາຍຄວາມເທົ່ານັ້ນ ທີ່ສາມາດເປັນຜູ້ຕາງໜ້າທາງດ້ານກົດໝາຍໄດ້ (ມາດຕາ 23).<br>• ການຊ່ວຍເຫຼືອດ້ານກົດໝາຍ ແມ່ນການໃຫ້ການບໍລິການທາງດ້ານກົດໝາຍ ໂດຍບໍ່ຄິດຄ່າ ແກ່ຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ຄົນພິການ, ເດັກທີ່ຕ້ອງການປົກປ້ອງພິເສດ, ຜູ້ກະທຳຜິດຕໍ່ກົດໝາຍ ກຳນົດໃຫ້ມີທະນາຍຄວາມ ເຂົ້າໄປຊ່ວຍເຫຼືອ, ແມ່ຍິງ ແລະ ເດັກນ້ອຍ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍຜ່ານອົງການຈັດຕັ້ງໃຫ້ການຊ່ວຍເຫຼືອ ທາງດ້ານກົດໝາຍ.<br>• ການຊ່ວຍເຫຼືອດ້ານກົດໝາຍ ມີສີ່ປະເພດຄື: 1. ການສະໜອງຂໍ້ມູນຂ່າວສານ; 2. ການໃຫ້ຄຳປຶກສາທາງດ້ານກົດໝາຍ; 3. ການຊ່ວຍເຫຼືອໃນການຮ່າງເອກະສານ; 4. ການເປັນຜູ້ຕາງໜ້າໃນການດຳເນີນຄະດີ |
| **ອົງການໄອຍະການ**<br><br>ມາດຕາ 49 ຂອງ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ<br><br>ນອກຈາກທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລ້ວ ຍັງມີໃນ ກົດໝາຍຂອງອົງການໄອຍະການ ມາດຕາ 9: ພາລະບົດບາດຂອງອົງການໄອຍະການ | • ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນສອບສວນ<br>• ດຳເນີນການສືບສວນສອບສວນຄະດີໃດໜຶ່ງ ເປັນບາງສ່ວນ ຫຼື ທັງໝົດຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ<br>• ສັ່ງຟ້ອງຜູ້ຖືກຫາຂຶ້ນສານ<br>• ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ<br>• ຕິດຕາມກວດກາການປະຕິບັດຄຳຕົກລົງຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ<br>• ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ,ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ<br>• ປະສານສົມທົບກັບອົງການສືບສວນສອບສວນແລະອົງການອື່ນທີ່ກ່ຽວຂ້ອງດຳເນີນການສະກັດກັ້ນ, ຕ້ານອາຊະຍາກຳຫຼື ການກະທຳຜິດ ແລະ ການລະເມີດກົດໝາຍອື່ນພ້ອມທັງລົບລ້າງບັນດາສາເຫດແລະເງື່ອນໄຂທີ່ພາໃຫ້ການກະທຳຜິດເກີດຂຶ້ນ<br>• ຮື້ຟື້ນຄະດີຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ |

| | |
|---|---|
| | • ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. |
| **ສານປະຊາຊົນ**<br>ມາດຕາ 51 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2017 | • ພິຈາລະນາຕັດສິນຄະດີອາຍາພ້ອມດ້ວຍການໃຊ້ແທນຄ່າເສຍຫາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2017<br>• ນຳໃຊ້ວິທີການສືບສວນສອບສວນແລະມາດຕະການສະກັດກັ້ນໃນກໍລະນີທີ່ສຳນວນຄະດີ ມາຮອດສານ |
| **ຜູ້ໃຫ້ການຊ່ວຍເຫຼືອທີ່ເປັນອົງການຈັດຕັ້ງທີ່ບໍ່ສັງກັດກັບລັດຖະບານ** | • ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGOs) ໃຫ້ການບໍລິການຕ່າງໆ ລວມທັງທີ່ພັກອາໄສທີ່ປອດໄພ, ການຊ່ວຍເຫຼືອທາງດ້ານຈິດ ໃຈ-ສັງຄົມ, ສຸຂະພາບ, ທາງດ້ານກົດໝາຍ ແລະ ການບໍລິການອື່ນໆ. ຜູ້ໃຫ້ບໍລິການຂອງອົງການທີ່ບໍ່ສັງກັດລັດຖະບານຄວນຖືກລະບຸຢູ່ໃນຊຸມຊົນ ແລະ ລວມຢູ່ໃນບັນຊີລາຍຊື່ຜູ້ໃຫ້ບໍລິການ. |
| **ຄະນະກຳມະທິການເພື່ອຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກ**<br>ມາດຕາ 63 ຂອງກົດ ໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ | • ເປັນໃຈກາງປະສານສົມທົບ, ຊຸກຍູ້ ແລະ ຕິດຕາມກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ. |

# 4. ການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງຢູ່ ສປປ ລາວ

ການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ ແມ່ນໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຮັດໜ້າທີ່ໃນການປົກປ້ອງ ແລະ ຊ່ວຍເຫຼືອອັນຈຳເປັນ ດ້ານຂະບວນການຍຸຕິທຳຕ້ອງຖືຜູ້ຖືກເຄາະຮ້າຍເປັນໃຈກາງ ໂດຍການຍິນຍອມຂອງຜູ້ຖືກເຄາະຮ້າຍວ່າຈະຮັບ ຫຼື ປະຕິເສດການຊ່ວຍເຫຼືອ.

ການຊ່ວຍເຫຼືອດ້ານຂະບວນການຍຸຕິທຳປະກອບມີ:

1. ການປ້ອງກັນ
2. ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍເບື້ອງຕົ້ນ
3. ການດຳເນີນການດ້ານຂະບວນການຍຸຕິທຳ

ນອກຈາກນັ້ນ ໃນຂະບວນການຍຸຕິທຳຍັງມີການປ້ອງກັນບໍ່ໃຫ້ເກີດຄວາມຮຸນແຮງ ແລະ ຕະຫຼອດຂະບວນການ

## 4.1. ການປ້ອງກັນ

ຜູ້ໃຫ້ບໍລິການດ້ານຂະບວນການຍຸຕິທຳ ມີບົດບາດສຳຄັນໃນການປ້ອງກັນຄວາມຮຸນແຮງຕໍ່ແມ່ຍິງ, ໂດຍສະເພາະໃນເງື່ອນໄຂຂອງການຮັກສາລະບຽບກົດຫມາຍ, ຄວາມຮັບຜິດຊອບຂອງຜູ້ກະທຳຜິດ ແລະ ລົບລ້າງແນວຄິດຄອງເດີມທີ່ເປັນອຸປະສັກໃນການຈັດຕັ້ງປະຕິບັດກົດໝາຍຂອງລັດ, ການພັດທະນາ ແລະ ສົ່ງເສີມການເຮັດວຽກຂອງອົງກອນທີ່ມີຄວາມຍຸຕິທຳໂດຍບໍ່ມີການຈຳແນກ ແລະ ເອົາຜູ້ຖືກເຄາະຮ້າຍຈາກ ຄວາມຮຸນແຮງເປັນໃຈກາງ ໃຫ້ປະສົບຜົນສຳເລັດຫຼາຍກວ່າເກົ່າສຳລັບການປ້ອງກັນອາຊະຍາກຳ ຍ້ອນວ່າມັນຈະສ້າງຄວາມຊອບທຳ ແລະ ສະໜັບສະໜູນການປະຕິບັດວຽກງານຂອງຂະບວນການຍຸຕິທຳ ແລະຄວາມໄວ້ວາງໃຈຈາກຊຸມຊົນທີ່ໃຊ້ບໍລິການ.[30] ມາດຕະຖານການປ້ອງກັນລວມມີ:

- ຮັບປະກັນໃຫ້ບັນດາພາກສ່ວນກ່ຽວຂ້ອງ (ຜູ້ທີ່ມີຄວາມສ່ຽງ,ຜູ້ຖືກເຄາະຮ້າຍ, ຜູ້ຖືກສົງໄສ, ຜູ້ກະທຳຜິດ, ຜູ້ໃຫ້ບໍລິການ ແລະ ຜູ້ປະຈຳການ) ໄດ້ຮັບຮູ້ເຖິງກົດໝາຍ, ມາດຕະຖານດຳເນີນງານສະບັບນີ້ ແລະ ສິດທິຂອງຜູ້ເຄາະຮ້າຍ.
- ຮັບປະກັນວ່າມີຕຳຫຼວດປະຕິບັດງານຢ່າງມີປະສິດທິຜົນ ແລະ ເຂົ້າເຖິງຊຸມຊົນ ແລະ ມີຄວາມມຸ່ງໝັ້ນໃນການປ້ອງກັນ ແລະ ໂຕ້ຕອບຄວາມຮຸນແຮງຕໍ່ແມ່ຍິງ ຕາມກົດໝາຍ
- ການພົວພັນປະສານງານກັບຊຸມຊົນ ແລະ ພາກສ່ວນກ່ຽວຂ້ອງກ່ຽວກັບການບໍລິການຂອງເຈົ້າໜ້າທີ່ຕຳຫຼວດ ທີ່ເອົາໃຈໃສ່ຜູ້ຖືກເຄາະຮ້າຍເປັນໃຈກາງ, ວິທີການສືບສວນທີ່ເລັ່ງໃສ່ຜູ້ກະທຳຜິດ ແລະ ການສົ່ງເສີມຄວາມຮັບຜິດຊອບຂອງສະຖາບັນ ແລະ ມີຄວາມຊຳນານການທາງວິຊີບ.[31]
- ເຈົ້າໜ້າທີ່ຕຳຫຼວດ ແລະ ອຳນາດການປົກຄອງທ້ອງຖິ່ນ ຄວນຈະປຶກສາຫາລືກັບຊຸມຊົນຢ່າງປົກກະຕິເພື່ອເຂົ້າໃຈສາເຫດ ແລະ ບັນຫາຂອງຄວາມຮຸນແຮງ ແລະ ຫາທາງປ້ອງກັນຢ່າງມີປະສິດຕິຜົນ. ຕ້ອງໂຄສະນາເຜີຍແຜ່ໂຄສະນາເຜີຍແຜ່ໃຫ້ທົ່ວສັງຄົມຮັບຮູ້ວ່າຄວາມຮຸນແຮງບໍ່ແມ່ນເລື່ອງສ່ວນຕົວພາຍໃນຄອບຄົວແຕ່ແມ່ນບັນຫາເລື່ອງກົດໝາຍທີ່ຊຸມຊົນຄວນເຂົ້າມີສ່ວນຮ່ວມກັບເຈົ້າໜ້າທີ່ຕຳຫຼວດແລະເຈົ້າໜ້າທີຂົງເຂດ

---

[30] ປຶ້ມຄູ່ມືກ່ຽວກັບ ການຄຸ້ມຄອງການຮ້ອງຟ້ອງທີ່ມີປະສິດທິພາບຕໍ່ກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ (ອົງການ UNDOC and ອົງການ UN Women, 2014) ເບິ່ງໄດ້ທີ່: https://www.unodc.org/documents/justice-and-prisonreform/Handbook_on_effective_prosecution_responses_to_violence_against_women_and_girls.pdf p.54.

[31] ຄືກັນກັບຂ້າງເທິງ

ຍຸຕິທຳ ເພື່ອສ້າງຄວາມຮູ້ ຄວາມເຂົ້າໃຈຕາມເນື້ອໃນຂອງກົດໝາຍເຈົ້າໜ້າທີ່ຕຳຫຼວດ ແລະ ອຳນາດການປົກຄອງທ້ອງຖິ່ນຄວນເອົາໃຈ ໃສ່ປຶກສາຫາລື ກັບໂຮງໝໍ ແລະ ບ່ອນບໍລິການດ້ານສາທາລະນະສຸກ, ສະຫະພັນແມ່ຍິງລາວ, ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ, ໂຮງຮຽນ ແລະ ອົງການຈັດຕັ້ງໃນຊຸມຊົນ ເພື່ອເກັບກຳຂໍ້ມູນ ແລະ ບັນທຶກຂໍ້ມູນ ໃນຄະດີກ່ຽວ ກັບຄວາມຮຸນແຮງຕໍ່ແມ່ຍິງໃນຊຸມຊົນ ເພື່ອຮັບປະກັນວ່າບັນຫາໄດ້ຖືກແກ້ໄຂແລ້ວ ຫຼື ບໍ່ ຖ້າຍັງ, ຕ້ອງມີການ ຕິດຕາມຕໍ່ໄປ.

ເຜີຍແຜ່ບັນດາກົດໝາຍທີ່ກ່ຽວຂ້ອງ

## 4.2. ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍເບື້ອງຕົ້ນ

### 4.2.1. ການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນ

ການແຈ້ງເບື້ອງຕົ້ນ ຫຼື ການຕິດຕໍ່ຄັ້ງທຳອິດ ກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ຜູ້ແຈ້ງເບື້ອງຕົ້ນ ຫຼື ຜູ້ຕິດຕໍ່ຄັ້ງທຳອິດ ຫຼື ຈາກການລາຍງານ ອາດແມ່ນຜູ້ຖືກເຄາະຮ້າຍເອງ, ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຮູ້ເຫັນເຫດການ.

ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນ ມີດັ່ງນີ້:

- ສະມາຊິກຄອບຄົວ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ພົບເຫັນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຕາມລັກສະນະຂອງຄວາມຮຸນແຮງ ແລະ ຄວາມຈຳເປັນຮີບດ່ວນ ດ້ວຍວິທີການຕ່າງໆເຊັ່ນ: ເຂົ້າໄປຫ້າມ (ຫຼື ແຈ້ງເຈົ້າໜ້າທີ່ກ່ຽວຂ້ອງ), ກີດກັ້ນການໃຊ້ຄວາມຮຸນແຮງ ດ້ວຍຄວາມລະມັດລະວັງ, ສຶກສາອົບຮົມຄູ່ກໍລະນີ (ຜູ້ໃຊ້ຄວາມຮຸນແຮງ) ດ້ວຍຕົນເອງ ຫຼື ຮ້ອງຂໍໃຫ້ບຸກຄົນ, ການຈັດຕັ້ງອື່ນເຂົ້າມາຊ່ວຍເຫຼືອຢ່າງທັນການ. ໃນກໍລະນີການໃຊ້ຄວາມຮຸນແຮງເຮັດໃຫ້ມີການບາດເຈັບຕ້ອງນຳສົ່ງຄົນເຈັບໄປໂຮງໝໍ.
- ກໍລະນີບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮູ້ເຫດການກ່ຽວກັບການໃຊ້ຄວາມຮຸນແຮງ ໂດຍຜ່ານການລາຍງານ, ການແຈ້ງຄວາມທາງໂທລະສັບ ກໍຕ້ອງຫາວິທີໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຢ່າງທັນການ.
- ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຖືກຮ້ອງຂໍໃຫ້ປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ກໍຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອ ບົນພື້ນຖານຄວາມສາມາດຂອງຕົນ ຕາມວິທີການທີ່ໄດ້ກ່າວມາໃນວັກທີ 1 ເທິງນີ້. ຜູ້ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍດ້ວຍຄວາມບໍລິສຸດໃຈ ຈະໄດ້ຮັບການຄຸ້ມຄອງ ແລະ ປົກປ້ອງຕາມກົດໝາຍ ແລະ ລະບຽບການ.

ສະຫຼຸບແລ້ວ ການເຂົ້າໄປປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຕ້ອງຄຳນຶງເຖິງຄວາມເປັນອັນຕະລາຍການໃຊ້ຄວາມຮຸນແຮງຂອງແຕ່ລະກໍລະນີ ແລະ ຄວາມປອດໄພຂອງຜູ້ໃຫ້ການຊ່ວຍເຫຼືອ. ໃນກໍລະນີການໃຊ້ຄວາມຮຸນແຮງຫາກເປັນອັນຕະລາຍຮ້າຍແຮງ, ຜູ້ພົບເຫັນເຫດການຕ້ອງຮີບຮ້ອນແຈ້ງເຈົ້າໜ້າທີ່ ທີ່ກ່ຽວຂ້ອງເພື່ອໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ກໍລະນີເຊິ່ງໜ້າທີ່ຮ້າຍແຮງ ເຈົ້າໜ້າທີ່ຕຳຫຼວດຈະຕ້ອງໃຊ້ມາດຕະການສະກັດກັ້ນ.

**ກ່ອງທີ 1: ຂອບເຂດນິຕິກຳຕໍ່ການແຈ້ງຄວາມ ຫຼື ການລາຍງານຄວາມຄະດີຄວາມຮຸນແຮງຕໍ່ແມ່ຍິງ**

**ຜູ້ມີສິດຮັບແຈ້ງຄວາມ ຕາມກົດໝາຍວ່າດ້ວຍ ການຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

1. ອົງການປົກຄອງບ້ານ
2. ການຈັດຕັ້ງ ແລະ ສະຖານທີ່ບ່ອນເກີດເຫດ
3. ເຈົ້າໜ້າທີ່ຕຳຫຼວດ
4. ສະຫະພັນແມ່ຍິງລາວ

**ດຳລັດວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ, ອົງການທີ່ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍມີ:**

1. ກົມສົ່ງເສີມລະບົບຍຸຕິທຳ ຂອງຂະແໜງຍຸຕິທຳ, ຂະແໜງສົ່ງເສີມວຽກງານຍຸຕິທຳຮາກຖານຂອງພະແນກຍຸຕິທຳ ແຂວງ, ນະຄອນຫຼວງ.
2. ໜ່ວຍງານສົ່ງເສີມວຽກງານຍຸຕິທຳຮາກຖານຂອງຫ້ອງການຍຸຕິທຳເມືອງ,ເທດສະບານ,ນະຄອນ.
3. ຫ້ອງການຊ່ວຍເຫຼືອດ້ານກົດໝາຍ ຂອງສະພາທະນາຍຄວາມ.
4. ການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍຂອງສະຫະພັນແມ່ຍິງ ແລະ ຂອງອົງການຈັດຕັ້ງອື່ນ.
5. ລັດຖະກອນ ຫຼື ທະນາຍຄວາມທີ່ຖືກແຕ່ງຕັ້ງໂດຍການຈັດຕັ້ງກ່ຽວຂ້ອງເພື່ອໃຫ້ການຊ່ວຍເຫຼືອດ້ານກົດໝາຍ.

**ຖ້າຫາກຜູ້ຖືກເຄາະຮ້າຍໄປຂໍຄວາມຊ່ວຍເຫຼືອຈາກອຳນາດການປົກຄອງ/ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫຼື ເຈົ້າໜ້າທີ່ຕຳຫຼວດ, ບາງຈະຕ້ອງຖືກສົ່ງຕໍ່ໃຫ້ອົງການຈັດຕັ້ງທີ່ສາມາດໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາທີ 15-16 ຂອງດຳລັດວ່າດ້ວຍການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ. ສາມາດເບິ່ງເພີ່ມເຕີມກ່ຽວກັບຂະບວນການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍທີ່ກ່ຽວຂ້ອງກັບມາດຕະຖານການດຳເນີນງານນີ້ ໄດ້ທີ່ກ່ອງທີ 2 ທາງລຸ່ມ*

**ຜູ້ມີສິດແຈ້ງຄວາມ**

ອີງຕາມມາດຕາ 29 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໄດ້ລະບຸໄວ້ວ່າ: "ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮູ້ ຫຼື ໄດ້ເຫັນກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ" ມີສິດໃນການເຂົ້າແຈ້ງຄວາມກ່ຽວກັບຄວາມຮຸນແຮງທີ່ເກີດຂຶ້ນ ກັບ 6 ພາກສ່ວນຊ່ອງທາງທີ່ກ່ຽວຂ້ອງ ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງນີ້.

ໃນກໍລະນີທີ່ຜູ້ຖືກເຄາະຮ້າຍເປັນເດັກ, ອົງການຈັດຕັ້ງທີ່ໄດ້ຮັບການແຈ້ງຄວາມ ຕ້ອງໄດ້ປະສານສົມທົບກັບ ເຄືອຄ່າຍໜ່ວຍງານການປົກປ້ອງ ແລະ ໃຫ້ການຊ່ວຍເຫຼືອເດັກ ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ເພື່ອກ້າວເຂົ້າໄປໃນການປົກປ້ອງ ແລະ ຊ່ວຍເຫຼືອເດັກໃນທັນທີ.

ການແຈ້ງຄວາມອາດຈະເປັນການແຈ້ງຄວາມແບບປາກເປົ່າ ຫຼື ແບບການຂີດຂຽນບັນທຶກ ແກ່ເຈົ້າໜ້າທີ່ຕຳຫຼວດ ເຊິ່ງຜູ້ທີ່ມີສິດໃນເຂົ້າການແຈ້ງຄວາມແມ່ນໄດ້ກຳນົດໄວ້ໃນມາດຕາ 57. ຈາກນັ້ນ, ເຈົ້າໜ້າທີ່ຕຳຫຼວດຕ້ອງໄດ້ຕັດສິນໃຈວ່າຈະດຳເນີນຄະດີໄດ້ດ້ວຍການໄກ່ເກ່ຍ ຫຼື ທາງກົດໝາຍ ພາຍໃນໄລຍະເວລາ 3 ວັນທາງລັດຖະການ.

- **ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ມາດຕາ 101)** ສະບັບປັບປຸງ ເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017

ທຸກພາກສ່ວນທີ່ໃຫ້ການຊ່ວຍເຫຼືອຕ້ອງໄດ້ຮັກສາຂໍ້ມູນຂອງຜູ້ຖືກເຄາະຮ້າຍຢູ່ຕະຫຼອດເວລາ ແລະຜູ້ຖືກເຄາະຮ້າຍກໍຕ້ອງໄດ້ຮັບຮູ້ເຖິງຫຼັກການດັ່ງກ່າວນັບຕັ້ງແຕ່ຕອນທຳອິດ.ສຳລັບໃຜທີ່ລະເມີດການຮັກສາຄວາມລັບ ແມ່ນຈະໄດ້ຮັບຜິດຊອບທາງກົດໝາຍ.

ການຈັບຕົວ ເພື່ອຈຸດປະສົງໃນການຮັກສາຄວາມປອດໄພ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ (ສາມາດເບິ່ງຂໍ້ມູນເພີ່ມຕື່ມໄດ້ທີ່ກ່ອງທີ 2 ກ່ຽວກັບບັນດາມາດຕະການດັ່ງກ່າວ) ສາມາດດຳເນີນໄດ້ ຕາມເງື່ອນໄຂທີ່ກຳນົດໄວ້ໃນ**ມາດຕາ 139** ໃນການອອກຄຳສັ່ງໂດຍ ໄອຍະການ ແລະ ສານປະຊາຊົນ. ການຈັບຕົວ ໃນກໍລະນີຮີບດ່ວນ ສາມາດດຳເນີນໂດຍພາຍໃຕ້ເງື່ອນໄຂດັ່ງຕໍ່ໄປນີ້ ໂດຍບໍ່ຈຳເປັນຕ້ອງມີຄຳສັ່ງຈາກ ອົງການໄອຍະການ ຫຼື ສານປະຊາຊົນກໍໄດ້ (**ມາດຕາ 140**):

ການຈັບຕົວ ໃນກໍລະນີແບບເຊິ່ງໜ້າ

1. ບຸກຄົນ ທີ່ພວມກະທຳຜິດຢູ່ ຫຼື ຫາກໍສິ້ນສຸດການກະທຳຜິດ
2. ບຸກຄົນທີ່ໄດ້ກະທຳຜິດ ທີ່ພວມຖືກໄລ່ຕິດຕາມໄປ ຫຼື ມີບຸກຄົນ ຊຶ່ງຜູ້ເຫັນເຫດການ ຫຼື ຜູ້ຖືກເສຍຫາຍ ໄດ້ຊີ້ຕົວວ່າ ເປັນຜູ້ກະທຳຜິດ

### 4.2.2. ການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນຂອງເຈົ້າໜ້າທີ່ຕຳຫຼວດ

**ເຈົ້າໜ້າທີ່ຕຳຫຼວດຄວນເອົາໃຈໃສ່ຕໍ່ມາດຕະການຕໍ່ໄປນີ້:**

ຜູ້ເຄາະຮ້າຍຈາກຄວາມຮຸນແຮງອາດຈະຢ້ານ ທີ່ຈະເຂົ້າຫາຕຳຫຼວດ/ອຳນາດການປົກຄອງບ້ານ ແລະ ຈະຕິດຕໍ່ຫາຕຳຫຼວດກໍຕໍ່ເມື່ອເປັນກໍລະນີທີ່ຮຸນແຮງເທົ່ານັ້ນ, ຖ້າຜູ້ຖືກເຄາະຮ້າຍເຫັນວ່າເຈົ້າໜ້າທີຕຳຫຼວດບໍ່ໜ້າເຊື່ອຖື, ມີທັດສະນະແນວຄິດຄອງເດີມ, ກ່າວໂທດຜູ້ຖືກເຄາະຮ້າຍ ໃນການແຈ້ງຄວາມເບື້ອງຕົ້ນ ຈະເຮັດໃຫ້ພວກເຂົາບໍ່ຢາກທີ່ຈະສືບຕໍ່ທີ່ຈະດຳເນີນຂະບວນການທາງກົດໝາຍຕໍ່ໄປອີກເລີຍ. ດ້ວຍເຫດນີ້, ການຕິດຕໍ່ຄັ້ງທຳອິດ ຫຼື ການແຈ້ງເບື້ອງຕົ້ນຈຶ່ງເປັນຂັ້ນຕອນທີ່ສຳຄັນທີ່ສຸດ ທີ່ຈະເຮັດໃຫ້ການດຳເນີນການທາງດ້ານຂະບວນການຍຸຕິທຳສຳເລັດໄດ້.

ຖ້າສະຖານທີ່ໂອ້ລົມກັບຜູ້ຖືກເຄາະຮ້າຍຢູ່ບ່ອນອື່ນທີ່ບໍ່ຢູ່ໃນຫ້ອງການຕຳຫຼວດຈະເປັນມິດຕໍ່ຜູ້ຖືກເຄາະຮ້າຍຫຼາຍກວ່າ, ຍົກເວັ້ນເປັນສະຖານທີ່ສະດວກຕໍ່ກັບຜູ້ຖືກເຄາະຮ້າຍ, ເປັນບ່ອນທີ່ພວກເຂົາຮູ້ສຶກສະບາຍໃຈ, ມີຄວາມເປັນສ່ວນຕົວ ແລະ ຮັກສາຄວາມລັບ; ເນື່ອງຈາກວ່າກໍລະນີຄວາມຮຸນແຮງ, ໂດຍສະເພາະຄວາມຮຸນແຮງໃນຄອບຄົວ ຖືກເບິ່ງວ່າ ເປັນ "ເລື່ອງສ່ວນຕົວ" ເຮັດໃຫ້ຜູ້ຖືກຄວາມຮຸນແຮງກໍອາດຄິດວ່າ ເຈົ້າໜ້າທີ່ລັດ ບໍ່ໃຫ້ການຊ່ວຍເຫຼືອຕໍ່ກັບກໍລະນີດັ່ງກ່າວ. ດັ່ງນັ້ນ, ມັນຈຶ່ງສຳຄັນຫຼາຍທີ່ຜູ້ຮັບຜິດຊອບໃນເບື້ອງຕົ້ນ ບໍ່ຄວນສ້າງອຸປະສັກເພີ່ມຕື່ມເຊັ່ນ: ມີທັດສະນະຄະຕິທາງລົບ, ບໍ່ມີສະຖານທີ່ສະດວກ ຫຼື ຂາດເຂີນອຸປະກອນອຳນວຍຄວາມສະດວກຕ່າງໆ. ເຈົ້າໜ້າທີ່ຕຳຫຼວດຄວນໃຫ້ແນ່ໃຈວ່າຜູ້ຖືກເຄາະຮ້າຍມີຄວາມຮູ້ສຶກປອດໄພຈາກຜູ້ກະທຳຜິດ ແລະ ໃຫ້ຜູ້ກະທຳຜິດ ຢູ່ຫ່າງຈາກຜູ້ຖືກເຄາະຮ້າຍຖ້າຈຳເປັນ.

ການບໍລິການຂອງເຈົ້າໜ້າທີ່ຕຳຫຼວດຕ້ອງມີຄວາມພ້ອມ, ສາມາດເຂົ້າເຖິງໄດ້ ແລະ ເອົາໃຈໃສ່ ຄື:

- **ເຂົ້າເຖິງໄດ້** 24 ຊົ່ວໂມງຕໍ່ວັນ, 365 ມື້ຕໍ່ປີ

  - ເຈົ້າໜ້າທີ່ຕ້ອງຮັບເອົາການແຈ້ງຄວາມເບື້ອງຕົ້ນຂອງຜູ້ຖືກເຄາະຮ້າຍ ແລະ ດຳເນີນການຕາມການແຈ້ງຄວາມຢ່າງຄົບຖ້ວນໂດຍບໍ່ຈຳເປັນຕ້ອງຮຽກໃຫ້ມີເອກະສານປະກອບເພີ່ມຕື່ມເພື່ອປະກອບເຂົ້າໃນການເຂົ້າແຈ້ງຄວາມເບື້ອງຕົ້ນຂອງພວກເຂົາ.

- **ສາມາດເຂົ້າເຖິງໄດ້ຢູ່ບ່ອນຫ່າງໄກ:** ໃນບ່ອນທີ່ບໍ່ສາມາດເຂົ້າເຖິງໄດ້ເຈົ້າໜ້າທີ່ຕຳຫຼວດຕ້ອງຈັດຕັ້ງການປະຈຳການຢ່າງເປັນປົກກະຕິ ແລະ ລົງທ້ອງຖິ່ນເພື່ອໃຫ້ຜູ້ຖືກເຄາະຮ້າຍສາມາດເຂົ້າເຖິງ.

  - ເພື່ອໃຫ້ພວກເຂົາປະກົດຕົວໃນຊຸມຊົນ ແລະ ເຮັດໃຫ້ພວກເຂົາສາມາດຕິດຕໍ່ ແລະ ເຂົ້າຫາໄດ້, ສິ່ງດັ່ງກ່າວສາມາດດຳເນີນການໄດ້ໂດຍຜ່ານການລົງພົບປະກັບບັນດາສະຖາບັນປະຈຳຊຸມຊົນ, ສູນສາທາລະນະສຸກ, ໂຮງຮຽນເປັນຕົ້ນ. ເຈົ້າໜ້າທີ່ຄວນມີການດຳເນີນການເກັບກຳຂໍ້ມູນຢ່າງຫ້າວຫັນ ກ່ຽວກັບຄວາມປອດໄພຂອງແມ່ຍິງ ແລະ ຄວາມຮຸນແຮງຕໍ່ແມ່ຍິງ ຈາກສູນໃຫ້ຄຳປຶກສາຂອງສະຫະພັນແມ່ຍິງລາວ, ສູນສາທາລະນະສຸກ ແລະ ອື່ນໆ ເພື່ອເຂົ້າໃຈໄດ້ດີຂຶ້ນກ່ຽວກັບຮູບແບບຂອງຄວາມຮຸນແຮງຕໍ່ແມ່ຍິງໃນລະດັບຊຸມຊົນແລະຕິດຕາມກ່ຽວກັບການລາຍງານໃນທຸກບັນດາກໍລະນີທີ່ຮຸນແຮງ.

- **ງ່າຍຕໍ່ຜູ້ຊົມໃຊ້:** ສະໜອງຂໍ້ມູນຂ່າວສານ ແລະ ການບໍລິການຕ່າງໆໃຫ້ມີຫຼາກຫຼາຍພາສາ ເພື່ອຜູ້ ທີ່ກຶກໜັງສື ແລະ ຜູ້ທີ່ມີຄວາມພິການທາງສາຍຕາ

- **ບໍ່ມີຄ່າທຳນຽມ:** ຜູ້ຖືກຄວາມຮຸນແຮງບໍ່ຄວນມີການໃຊ້ຈ່າຍໃດໆສຳລັບໃນການເຂົ້າລາຍງານກ່ຽວກັບກໍລະນີຄວາມຮຸນແຮງຕໍ່ແມ່ຍິງ, ການເຂົ້າແຈ້ງຄວາມຄະດີ, ການສືບສວນ-ສອບສວນ, ການດຳເນີນຄະດີໃນສານ, ການໄກ່ເກ່ຍ ແລະ ອື່ນໆ.

- **ຮັບປະກັນສະຖານທີ່ບໍລິການຍຸຕິທຳ** ມີຄວາມປອດໄພ ແລະ ມີສະຖານທີ່ ທີ່ເປັນມິດຕໍ່ກັບແມ່ຍິງ ແລະ ເດັກ ແລະ ຮັບປະກັນໃຫ້ມີການຮັກສາຄວາມເປັນສ່ວນຕົວ, ສະພາບແວດລ້ອມທີ່ມີຄວາມປອດໄພຕໍ່ຜູ້ຖືກເຄາະຮ້າຍ ແລະ ບໍ່ມີການແຊກແຊງຈາກບຸກຄົນພາຍນອກ, ມີຫ້ອງສະເພາະ ຫຼື ອາຄານທີ່ສະດວກຕໍ່ຜູ້ຖືກເຄາະຮ້າຍ ແລະ ເປັນບ່ອນທີ່ຜູ້ເຄາະຮ້າຍ ຈະບໍ່ໄດ້ພົບກັບຜູ້ຖືກກ່າວຫາ[32].

  - ຮັບປະກັນວ່າມີພະນັກງານເພດຍິງທີ່ຜ່ານການຝຶກອົບຮົມມາແລ້ວ ແລະ ໃຫ້ເຈົ້າໜ້າທີ່ຄົນດຽວ ເຂົ້າຮ່ວມການສົນທະນາກັບຜູ້ຖືກເຄາະຮ້າຍ. ແຕ່ຖ້າໃນກໍລະນີທີ່ເຈົ້າໜ້າທີ່ສືບສວນບໍ່ແມ່ນເພດຍິງໃຫ້ແນ່ໃຈວ່າມີຜູ້ສະໜັບສະໜູນ, ບໍ່ວ່າຈະເປັນເຈົ້າຫນ້າທີ່ ທີ່ໄດ້ຮັບການຝຶກອົບຮົມ ຫຼື ການຕິດຕໍ່ສ່ວນບຸກຄົນ ແມ່ນໃຫ້ມີຄົນເບິ່ງແຍງເພື່ອໃຫ້ແນ່ໃຈວ່າມີການປົກປ້ອງ.[33]

  - ຈຳກັດຈຳນວນຜູ້ທີ່ມາພົວພັນກັບຜູ້ຖືກເຄາະຮ້າຍຕ້ອງພົວພັນນຳແລະຫຼຸດຈຳນວນຄັ້ງເພື່ອບໍ່ໃຫ້ຜູ້ຖືກເຄາະຮ້າຍ ຕ້ອງໄດ້ເລົ່າເລື່ອງຂອງລາວຄືນ (ຫຼຸດຜ່ອນການຕົກເປັນເຫຍື່ອຜູ້ຖືກຄວາມຮຸນແຮງອີກຄັ້ງ)

  - ເພື່ອຫຼີກລ້ຽງການຕົກເປັນຜູ້ຖືກເຄາະຮ້າຍອີກຄັ້ງ, ຜູ້ໃຫ້ການຊ່ວຍເຫຼືອຈະຕ້ອງບໍ່ມີອະຄະຕິ/ບໍ່ຕັດສິນຜູ້ອື່ນ, ມີຄວາມເຫັນອົກເຫັນໃຈ ແລະ ໃຫ້ການສະໜັບສະໜູນ

- **ການຮັບຟັງຢ່າງຕັ້ງໃຈ:** ນຳໃຊ້ການສື່ສານທີ່ບໍ່ເປັນຄຳເວົ້າ ຫຼື ພາສາກາຍໃນທາງບວກ - ການສື່ສານທາງສາຍຕາ, ທ່າທາງ, ການສະແດງອອກທາງສີໜ້າ ເຊັ່ນ: ການຍິ້ມໃນເວລາທີ່ເໝາະສົມ, ການງຶກຫົວເພື່ອສະແດງຄວາມເຫັນອົກເຫັນໃຈ.

- **ຫຼີກເວັ້ນການນຳໃຊ້ພາສາກາຍໃນທາງລົບເຊັ່ນ:** ບໍ່ມີການສື່ສານທາງສາຍຕາ, ການກອດເອິກ, ການແນມໄປທາງອື່ນ ຫຼື ແນມກາຍຜູ້ຖືກເຄາະຮ້າຍໄປ, ການສັ່ນຫົວ, ການສະແດງອອກທາງສີໜ້າໃນດ້ານລົບ, ຍົກຕົວຢ່າງ: ການເຮັດໜ້າຫຍຸ້ງ.

---

[32] ການປ້ອງກັນ ແລະ ສະກັດກັ້ນຄວາມຮຸນແຮງພາຍໃນຄອບຄົວຕໍ່ແມ່ຍິງ (ສະພາເອີລົບ)

[33] ການປ້ອງກັນ ແລະ ສະກັດກັ້ນຄວາມຮຸນແຮງພາຍໃນຄອບຄົວຕໍ່ແມ່ຍິງ (ສະພາເອີລົບ)

- ຮັກສາຄວາມເປັນສ່ວນຕົວ ແລະ ຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ເປັນບູລິມະສິດສຳຄັນ
- ຜູ້ຖືກເຄາະຮ້າຍ ໄດ້ຮັບຂໍ້ມູນເພື່ອຊ່ວຍໃນການຕັດສິນໃຈ ເພື່ອດຳເນີນໃນຂະບວນການ ຍຸຕິທຳ (ໃຫ້ຂໍ້ມູນທາງເລືອກກ່ຽວກັບການບໍລິການທີ່ມີຢູ່ຂອງແຕ່ລະຂະແໜງການ)
- ການອະນຸຍາດໃຫ້ເລົ່າເລື່ອງຢ່າງເສລີ: ອະນຸຍາດໃຫ້ຜູ້ຖືກຄວາມຮຸນແຮງ ເລົ່າຄືນຄວາມຊົງຈຳກ່ຽວກັບເຫດການທີ່ເກີດຂຶ້ນ ໂດຍບໍ່ຂັດຈັງຫວະພວກເຂົາ.

ຄວາມຮຸນແຮງໃນຄອບຄົວ ຫຼື ຄວາມຮຸນແຮງທີ່ເກີດຈາກຄູ່ຮັກ ມັກຈະເກີດຂຶ້ນຊໍ້າແລ້ວ ຊໍ້າອີກ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ບັນທຶກທຸກເຫດການທີ່ເກີດຂຶ້ນໄວ້. ສຳລັບເຈົ້າໜ້າທີ່ຕຳຫຼວດຮັບແຈ້ງຄວາມ, ຂໍ້ມູນທີ່ຖືກບັນທຶກໄວ້ ອາດຊ່ວຍກຽມຄວາມພ້ອມໃຫ້ ພວກເຂົາໃນກໍລະນີທີ່ພວກເຂົາຂໍຄວາມຊ່ວຍເຫຼືອໂທເຂົ້າມາອີກໃນອະນາຄົດ.

ຜູ້ໃຫ້ການຊ່ວຍເຫຼືອເບື້ອງຕົ້ນຈະຕ້ອງມີຄວາມຮູ້ກ່ຽວກັບບໍລິການອື່ນໆທີ່ສາມາດຕອບສະໜອງໃຫ້ ແລະທັງຍັງສາມາດສົ່ງ ຜູ້ຖືກເຄາະຮ້າຍຕໍ່ໃຫ້ກັບຂະແໜງການທີ່ກ່ຽວຂ້ອງໄດ້. ອີງຕາມມາດຕະຖານຂັ້ນຕອນດຳເນີນການປະສານງານ ແລະ ມາດຕາ 28-41 ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

**ກ່ອງທີ 2 ມາດຕະການໃນການປົກປ້ອງ ແລະ ຄວາມປອດໄພ**

ເມື່ອໄລຍະການຕັດສິນທີ່ຈະດຳເນີນການຮ້ອງຟ້ອງແລ້ວ ຕ້ອງມີມາດຕະການຄວາມປອດໄພເພື່ອຮັບປະກັນການປົກປ້ອງຂອງຜູ້ຖືກເຄາະຮ້າຍ. ມາດຕະການຄວາມປອດໄພ ແລະ ການປົກປ້ອງ ທີ່ຈະຕ້ອງໄດ້ພິຈາລະນາໃນລະຫວ່າງໄລຍະກ່ອນຂຶ້ນສານລວມມີ:

- ການກັກຂັງພາງຂອງຜູ້ກະທຳຜິດ
- ການແຍກຜູ້ກະທຳຜິດອອກຈາກທີ່ພັກຮ່ວມກັບຜູ້ຖືກຄວາມຮຸນແຮງ;
- ຂໍ້ບັງຄັບຫ້າມບໍ່ໃຫ້ຜູ້ກະທຳຜິດເຂົ້າໃກ້ຜູ້ຖືກຄວາມຮຸນແຮງ; ຫ້າມບໍ່ໃຫ້ຜູ້ກະທຳຜິດເຂົ້າໃກ້ ຫຼື ຕິດຕໍ່ກັບຜູ້ຖືກຄວາມຮຸນແຮງ ຫຼື ໄປຍັງສະຖານທີ່ທີ່ຜູ້ຖືກຄວາມຮຸນແຮງມັກໄປຢູ່ເລື້ອຍໆ ເພື່ອເປັນການຮັກສາສະພາບຮ່າງກາຍ ແລະ ຈິດໃຈໃຫ້ແກ່ຜູ້ຖືກຄວາມຮຸນແຮງ

**ມາດຕະການປົກປ້ອງຜູ້ຖືກເຄາະຮ້າຍ**

ໝາຍເຖິງສານຕ້ອງອອກຄຳສັ່ງໃຫ້ປົກປ້ອງຜູ້ຖືກເຄາະຮ້າຍຊ່ວຍປ້ອງກັນບໍ່ໃຫ້ຜູ້ກະທຳຜິດເຂົ້າໃກ້ ຫຼື ຕິດຕໍ່ກັບຜູ້ຖືກຄວາມຮຸນແຮງ ຫຼື ອະນຸຍາດໃຫ້ນຳເອົາ ຜູ້ກະທຳຜິດອອກຈາກທີ່ພັກ ທີ່ພວກເຂົາອາໄສຢູ່ ຮ່ວມກັບຜູ້ເຄາະຮ້າຍ ເປັນໄລຍະເວລາໃດໜຶ່ງ. ຈຸດປະສົງຂອງຄຳສັ່ງແມ່ນເພື່ອສະໜອງວິທີແກ້ໄຂບັນຫາ ທາງກົດໝາຍຢ່າງໄວວາ ເພື່ອຊ່ວຍປ້ອງກັນຜູ້ຖືກເຄາະຮ້າຍ. ຄຳສັ່ງປົກປ້ອງແມ່ນມາດຕະການ ທາງຂະບວນການທາງແພ່ງ ຫຼື ອາຍາທີ່ຈຳເປັນ ເຊິ່ງແນໃສ່ປ້ອງກັນບໍ່ໃຫ້ເກີດຄວາມຮຸນແຮງເພີ່ມຕື່ມ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ. ຄຳສັ່ງດັ່ງກ່າວຊ່ວຍໃຫ້ຜູ້ຖືກຄວາມຮຸນແຮງມີເວລາໄດ້ພິຈາລະນາທາງເລືອກ ໃນດ້ານຄວາມປອດໄພ ແລະ ຕັດສິນໃຈກ່ຽວກັບອະນາຄົດຂອງຕົນ. ຄຳສັ່ງປົກປ້ອງຍັງເຮັດໜ້າທີ່ເປັນ ມາດຕະການກົດຂວາງ, ຍ້ອນວ່າມັນສົ່ງສັນຍານໃຫ້ຜູ້ກະທຳຜິດຮູ້ວ່າ ພຶດຕິກຳຂອງພວກເຂົາແມ່ນສິ່ງທີ່ຍອມຮັບບໍ່ໄດ້ ແລະ ພວກເຂົາກໍຈະຕ້ອງໄດ້ຮັບຜິດຊອບຕໍ່ຜົນທີ່ຕາມມາຈາກການກະທຳດັ່ງກ່າວແນ່ນອນ. ຜົນສັກສິດຂອງຄຳສັ່ງປົກປ້ອງແມ່ນຈະຂຶ້ນກັບວ່າຄຳສັ່ງດັ່ງກ່າວມີຄວາມເຈາະຈົງ ແລະ ຮອບດ້ານຄືແນວໃດ ແລະ ໄດ້ຮັບການບັງຄັບໃຊ້ຄືແນວໃດ. ການລະເມີດຄຳສັ່ງປົກປ້ອງ ຈະຕ້ອງຖືກໃສ່ໂທດຢ່າງມີປະສິດພາບ, ສົມສ່ວນ ແລະ ເໝາະສົມ.

**ກ່ອງທີ 3 ການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍແມ່ນຫຍັງ?**

ການຊ່ວຍເຫຼືອດ້ານກົດໝາຍແມ່ນການໃຫ້ບໍລິການຊ່ວຍເຫຼືອດ້ານກົດໝາຍໂດຍບໍ່ເສຍຄ່າແກ່ຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ຄົນພິການ, ເດັກທີ່ຕ້ອງການປົກປ້ອງເປັນພິເສດ, ຜູ້ກະທຳຜິດທີ່ກົດໝາຍກຳນົດໃຫ້ມີທະນາຍຄວາມເຂົ້າໄປຊ່ວຍເຫຼືອ, ແມ່ຍິງ ແລະ ເດັກ ທີ່ເປັນຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍຜ່ານການຈັດຕັ້ງໃຫ້ການຊ່ວຍເຫຼືອດ້ານກົດໝາຍ.

ທຸກອົງການຊ່ວຍເຫຼືອດ້ານກົດໝາຍ ຄວນໄດ້ຮັບການຝຶກອົບຮົມ ມາດຕະຖານ ດຳເນີນງານດ້ານຂະບວນການຍຸຕິທຳສະບັບນີ້.

ທຸກກໍລະນີຄວາມຮຸນແຮງຕໍ່ແມ່ຍິງທີ່ໄດ້ລາຍງານ ຕ້ອງຖືກບັນທຶກ ແລະ ການເກັບກຳທຸກຂໍ້ມູນ, ການລາຍງານ ແມ່ນເກັບເປັນຄວາມລັບ, ເກັບມ້ຽນຢູ່ບ່ອນທີ່ປອດໄພ ແລະ ຮັບປະກັນໃຫ້ມີມາດຕະການຮັບມືທັນທີ (ພາຍໃນ 24 ຊົ່ວໂມງ) ໃນເວລາທີ່ຜູ້ຖືກເຄາະຮ້າຍ ລາຍງານກໍລະນີຄວາມຮຸນແຮງ. (ລາຍລະອຽດຂອງຂັ້ນຕອນກ່ຽວກັບການຄຸ້ມຄອງຂໍ້ມູນແມ່ນກວມຢູ່ໃນພາກ 6 ໜ້າ 57-59)

**ກ່ອງທີ 4 ນະໂຍບາຍບ້ານແບບຢ່າງຕໍ່ກັບການບັງຄັບນຳໃຊ້ກົດໝາຍ**

ຄວນເອົາໃຈໃສ່ບາງນະໂຍບາຍຂອງກະຊວງຍຸຕິທຳກ່ຽວກັບບ້ານແບບຢ່າງປະຕິບັດກົດໝາຍ ແລະ ເພື່ອຮັບປະກັນໃນການສ້າງບ້ານແບບຢ່າງປະຕິບັດກົດໝາຍ ອາດເປັນສາເຫດເຮັດໃຫ້ ຜູ້ຖືກຄວາມຮຸນແຮງບໍ່ກ້າທີ່ຈະເຂົ້າລາຍງານກ່ຽວກັບບັນຫາຂອງຕົນ ແລະ ຢ້ານວ່າຈະເປັນການສ້າງຄວາມເສື່ອມເສຍໃຫ້ກັບອົງການການປົກຄອງ ທ້ອງຖິ່ນ.

ຈຸດປະສົງຂອງ ນະໂຍບາຍດັ່ງກ່າວແມ່ນເພື່ອຊຸກຍູ້ໃຫ້ພວກເຂົາເຈົ້າໄດ້ເຂົ້າເຖິງຂະບວນການຍຸຕິທຳໃນເບື້ອງຕົ້ນ. ເຖິງແມ່ນວ່າຈະມີນະໂຍບາຍດັ່ງກ່າວແລ້ວກໍ່ຕາມ ແຕ່ວ່າ ຜູ້ຖືກເຄາະຮ້າຍຍັງມີຄວາມກັງວົນທີ່ຈະລາຍງານກ່ຽວກັບບັນຫາຄວາມຮຸນແຮງທີ່ເກີດຂຶ້ນກັບຕົນ ຍ້ອນເຫດຜົນ ເພື່ອຢາກຮັກສາບ້ານຂອງຕົນໃຫ້ເປັນບ້ານແບບຢ່າງປະຕິບັດກົດໝາຍສິ່ງດັ່ງກ່າວເປັນການສະແດງໃຫ້ເຫັນເຖິງຄວາມບໍ່ເຂົ້າໃຈໃນຂອບນະໂຍບາຍຂອງ ສປປ ລາວ ແລະ ຈຳເປັນຕ້ອງໄດ້ ຮັບການແກ້ໄຂ. (ເບິ່ງເພີ່ມເຕີມຕື່ມທີ່ບົດລາຍງານ ການສຳຫຼວດກ່ຽວກັບອຸປະສັກໃນການເຂົ້າເຖິງລະບົບຍຸຕິທຳຂອງຜູ້ຖືກ ຄວາມຮຸນແຮງ, ໜ້າທີ່ 23-24).

ອົງການປົກຄອງຂັ້ນບ້ານຄວນຕ້ອງລາຍງານ ແລະ ແຈ້ງກໍລະນີທີ່ມີຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ອຳນວຍຄວາມສະດວກໃຫ້ເຂົາເຈົ້າໃນການເຂົ້າເຖິງຂະບວນການຍຸຕິທຳ.

ການປະກອບເອກະສານ (ເບິ່ງເພີ່ມຕື່ມໄດ້ທີ່ ພາກເອກະສານຊ້ອນທ້າຍທີ 2) ຕ້ອງດຳເນີນການ ໂດຍໜ່ວຍງານແຈ້ງເບື້ອງຕົ້ນ (ລວມມີອຳນາດການປົກຄອງຂັ້ນບ້ານ, ໜ່ວຍງານການໄກ່ເກ່ຍຂັ້ນບ້ານ, ສະຫະພັນແມ່ຍິງລາວ, ເຈົ້າໜ້າທີ່ຕຳຫຼວດ ແລະ ອື່ນໆ). ເຊິ່ງການປະກອບເອກະສານຕ່າງໆເຫຼົ່ານັ້ນແມ່ນລວມເຖິງພາກສ່ວນ ສຳລັບການປະເມີນຄວາມສ່ຽງ[34]ເພື່ອກຳນົດຂອບເຂດຄວາມສ່ຽງຕໍ່ຄວາມຮຸນແຮງຕໍ່ແມ່ຍິງ ຂອງຜູ້ຖືກເຄາະຮ້າຍ.

ການປະເມີນຄວາມສ່ຽງມີຈຸດປະສົງເພື່ອສະແດງໃຫ້ເຫັນເຖິງຄວາມຂົ່ມຂູ່ຈາກຄວາມຮຸນແຮງ, ຄາດຄະເນເຖິງຄວາມຮ້າຍແຮງຂອງການຂົ່ມຂູ່ ແລະ ຄວາມເປັນໄປໄດ້ຂອງຜົນທີ່ຕາມມາ (ປະເມີນວ່າຜູ້ຖືກຄວາມຮຸນແຮງຈະໄດ້ຮັບຄວາມຮຸນແຮງເພີ່ມອີກ). ແນະນຳໃຫ້ສຸມໃສ່ປັດໄຈຕ່າງໆເຊັ່ນ: ຄວາມຮຸນແຮງ, ການຂົ່ມຂູ່, ການເພີ່ມຂຶ້ນຂອງຄວາມຮຸນແຮງ, ການກະທຳຜິດ, ທາງຈິດຕະສາດ ແລະ ອື່ນໆ. ການປະເມີນຄວາມສ່ຽງຄວນດຳເນີນການປະຕິບັດຕາມແຜນການຄວາມປອດໄພ, ມີການຄຳນຶງເຖິງການຕັດສິນໃຈ ເປີດການສືບສວນ-ສອບສວນຫຼືບໍ່ ແລະ ຄວນບັນທຶກໃນຖານເກັບຂໍ້ມູນຂອງເຈົ້າໜ້າທີ່ທ້ອງຖິ່ນ.

## 4.3. ການດຳເນີນການດ້ານຂະບວນການຍຸຕິທຳ

ການດຳເນີການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດຳເນີນດ້ວຍ 2 ຮູບການຄື:

1. ການໄກ່ເກ່ຍ
2. ການດຳເນີນຄະດີ

## 4.4. ການໄກ່ເກ່ຍ

ການໃຊ້ຄວາມຮຸນແຮງທີ່ນຳມາໄກ່ເກ່ຍມີ:

1) ການໃຊ້ຄວາມຮຸນແຮງທີ່ບໍ່ເປັນການກະທຳຜິດທາງອາຍາ, ເບົາບາງ

2) ການໃຊ້ຄວາມຮຸນແຮງທີ່ເປັນການກະທຳຜິດໃນສະຖານລະຫຸໂທດຫຼືໂທສານຸໂທດທີ່ກົດໝາຍກຳນົດໂທດຕັດອິດສະຫຼະພາບແຕ່ 1 ປີລົງມາ ຫຼື ເປັນຄະດີທີ່ຈັດຢູ່ໃນອັນດັບ 2, 3, 4 ຕາມຕາຕະລາງຈັດປະເພດຄວາມຮັບຜິດຊອບຂອງຄະດີ (ເອກະສານຊ້ອນທ້າຍ...) ແລະ ຕ້ອງບໍ່ຢູ່ໃນເງື່ອນໄຂຂອງມາດຕາ 41 ຂໍ້ 1 ຂອງປະມວນກົດໝາຍອາຍາ.

**ກ່ອງທີ 5: ຂອບເຂດນິຕິກຳຂອງການແກ້ໄຂບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

**ກົດໝາຍວ່າດ້ວຍການຕ້ານແລະສະກັດກັ້ນການແກ້ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແລະເດັກ ສະບັບເລກທີ 015/ສພຊ, ລົງວັນທີ 23 ທັນວາ 2014**

ມາດຕາ 47: ການແກ້ໄຂການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ດຳເນີນດ້ວຍສອງຮູບການ ດັ່ງນີ້:

- ສຶກສາອົບຮົມ, ປະນີປະນອມ ຫຼື ໄກ່ເກ່ຍ;
- ການດຳເນີນຄະດີ

ໃນນັ້ນຍັງໄດ້ກຳນົດອີກວ່າ: "ສຳລັບການໃຊ້ຄວາມຮຸນແຮງທີ່ມີຜົນເສຍຫາຍບໍ່ຫຼວງຫຼາຍ ຜູ້ຖືກເຄາະຮ້າຍສາມາດເລືອກເອົາຮູບການແກ້ໄຂໃດໜຶ່ງ ແຕ່ໃນກໍລະນີການໃຊ້ຄວາມຮຸນແຮງທີ່ມີຜົນເສຍຫາຍຫຼວງຫຼາຍ ຕ້ອງໄດ້ດຳເນີນຄະດີຕໍ່ຜູ້ໃຊ້ຄວາມຮຸນແຮງ.

[34] ປຶ້ມຄູ່ມືກ່ຽວກັບ ການຄຸ້ມຄອງການຮ້ອງຟ້ອງທີ່ມີປະສິດທິພາບຕໍ່ກັບຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກຍິງ (ອີງການ UNDOC and ອີງການ UN Women, 2014) ເບິ່ງໄດ້ທີ່: https://www.unodc.org/documents/justice-and-prisonreform/Handbook_on_effective_prosecution_responses_to_violence_against_women_and_girls.pdf p.54.

ມາດຕາ 51 ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ນຳມາໄກ່ເກ່ຍ ມີດັ່ງນີ້:

- ຄວາມຮຸນແຮງທີ່ບໍ່ແມ່ນການກະທຳຜິດທາງອາຍາ
- ການໃຊ້ຄວາມຮຸນແຮງທີ່ເປັນການກະທຳຜິດໃນສະຖານລະຫຸໂທດຫຼືໂທສານຸໂທດທີ່ກົດໝາຍກຳນົດໂທດຕັດອິດສະລະພາບ ແຕ່ໜຶ່ງປີລົງມາ.

**ດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໄດ້ລະບຸໄວ້ວ່າ:**

- ຂໍ້ຂັດແຍ່ງກ່ຽວກັບສາຍຜົວພັນຄອບຄົວສາມາດນຳມາໄກ່ເກ່ຍໄດ້ທີ່ເປັນການໃຊ້ຄວາມຮຸນແຮງພາຍໃນຄອບຄົວທີ່ບໍ່ເປັນອັນຕະລາຍຮ້າຍແຮງ ເປັນຕົ້ນແມ່ນການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການກີດກັ້ນບໍ່ໃຫ້ເຄື່ອນໄຫວວຽກງານທາງສັງຄົມ, ການບໍ່ຊ່ວຍເຫຼືອກັນທຳມາຫາກິນ, ການບໍ່ຮ່ວມກັນສຶກສາອົບຮົມລູກ (ມາດຕາ 18 (14)).
- "ການທຳຮ້າຍຮ່າງກາຍຕໍ່ແມ່ຍິງ ແລະ ເດັກ" ແມ່ນບໍ່ສາມາດນຳມາໄກ່ເກ່ຍໄດ້ ຕາມມາດຕາ 21 (2) ແລະ ການກະທຳຜິດດັ່ງກ່າວ ເປັນການກະທຳຜິດທາງອາຍາ ອີງຕາມປະມວນກົດໝາຍອາຍາ ມາດຕາ 194.

ບັນດານິຍາມທີ່ກຳນົດຢູ່ໃນດຳລັດວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ເຊິ່ງເປັນນິຕິກຳລ່າສຸດໃນໄລຍະການຂຽນຮ່າງມາດຕະຖານສະບັບນີ້ຂຶ້ນ ແລະ ເປັນເຄື່ອງມືສຳຄັນໃນການບັງຄັບນຳໃຊ້ກົດໝາຍ ແມ່ນຖືເປັນຕົວກຳນົດວ່າຈະເລືອກເປັນການໄກ່ເກ່ຍ ຫຼື ດຳເນີນການຮ້ອງຟ້ອງຄະດີ.

ຂໍ້ຄວນເອົາໃຈໃສ່: ອີງຕາມປະມວນກົດໝາຍ ປີ(2021) ມາດຕາ 41

ການຕັດສິນໃຈດຳເນີນການໄກ່ເກ່ຍ ຄວນອີງໃສ່ບົນພື້ນຖານ ຂອງການສະຫຼຸບຂໍ້ມູນຈາກເອກະສານເບື້ອງຕົ້ນ ດັ່ງທີ່ໄດ້ກ່າວໄວ້ຢູ່ຂ້າງເທິງ. ເຊິ່ງທຸກໆຈຸດການຕິດຕໍ່ເບື້ອງຕົ້ນ ຄວນຄຳນຶງເຖິງ ແລະ ຈັດຕັ້ງການດຳເນີນງານຕາມບັນທັດຖານເຫຼົ່ານັ້ນ ເພື່ອໃຫ້ການສະໜັບສະໜູນແກ່ຜູ້ຖືກເຄາະຮ້າຍໃນການຕັດສິນໃຈເລືອກເສັ້ນທາງໃດ ລະຫວ່າງການໄກ່ເກ່ຍ ຫຼື ການດຳເນີນຄະດີ. ການຊ່ວຍເຫຼືອດ້ານກົດໝາຍ ແມ່ນກ່ຽວຂ້ອງໂດຍສະເພາະໃນຂັ້ນຕອນນີ້ໃນການໃຫ້ການແນະນຳຕ່າງໆ ຕໍ່ກັບການຕັດສິນໃຈທີ່ສຳຄັນດັ່ງກ່າວ.

ອີງຕາມຄູ່ມືການຝຶກອົບຮົມກ່ຽວກັບ ການແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວ ໂດຍເອົາຜູ້ຖືກເຄາະຮ້າຍເປັນໃຈກາງ, ກໍລະນີທີ່ບໍ່ສາມາດດຳເນີນການໄກ່ເກ່ຍໄດ້ມີດັ່ງນີ້:[35]

- ກໍລະນີທີ່ປະກົດ ຫຼື ຄາດຄະເນໄດ້ວ່າ ຖ້າມີການໄກ່ເກ່ຍຕໍ່ໄປ ຈະເຮັດໃຫ້ຄວາມປອດໄພຂອງຜູ້ຖືກເຄາະຮ້າຍຫຼຸດລົງ ຫຼື ເຮັດໃຫ້ລາວໄດ້ຖືກຄວາມຮຸນແຮງຫຼາຍຂຶ້ນ;
- ກໍລະນີທີ່ມີການຂົ່ມຂູ່ຕໍ່ຜູ້ຖືກເຄາະຮ້າຍເຖິງຂັ້ນຈຳກັດການດຳລົງຊີວິດຂອງພວກເຂົາ;
- ໃນກໍລະນີທີ່ຜູ້ກະທຳຜິດດຳເນີນການກະທຳຜິດຊໍ້າ ແລະ ໄດ້ລະເມີດຕໍ່ຂໍ້ຕົກລົງຈາກການໄກ່ເກ່ຍໃນເທື່ອກ່ອນ;

ການໄກ່ເກ່ຍຄວນນຳໃຊ້ເພື່ອແກ້ໄຂຂໍ້ຂັດແຍ່ງເທົ່ານັ້ນ. ຄວາມຮຸນແຮງຕໍ່ແມ່ຍິງທາງດ້ານຮ່າງກາຍ ແລະ ທາງເພດ ບໍ່ແມ່ນຂໍ້ຂັດແຍ່ງ ແຕ່ເປັນກະທຳຜິດທາງອາຊະຍາກຳ. ດັ່ງນັ້ນ "ບໍ່ຄວນນຳມາໄກ່ເກ່ຍ ເພື່ອແກ້ໄຂບັນດາຄະດີອາຊະຍາກຳ."

---

[35] ມືຝຶກອົບຮົມການໄກ່ເກ່ຍຂອງອົງການ UN Women-ກະຊວງຍຸຕິທຳ

ການໄກ່ເກ່ຍຈະຖືກນຳໃຊ້ໃນກໍລະນີຂອງຂໍ້ຂັດແຍ່ງທີ່"ບໍ່ແມ່ນຄວາມຮຸນແຮງ"ເທົ່ານັ້ນ ໂດຍຈະຕ້ອງໄດ້ຮັບຄວາມຍິນຍອມຈາກຜູ້ຖືກເຄາະຮ້າຍ ແລະ ບໍ່ຄວນມີການໄກ່ເກ່ຍກໍລະນີຄວາມຮຸນແຮງຕໍ່ຮ່າງກາຍ ຫຼື ທາງເພດໃດໆ.[36] ໃນກໍລະນີທີ່ໜ່ວຍໄກ່ເກ່ຍຂັ້ນບ້ານໄດ້ຮັບການແຈ້ງ/ລາຍງານ ທີ່ສົງໄສວ່າເປັນກໍລະນີການໃຊ້ຄວາມຮຸນແຮງ ທີ່ຮ້າຍແຮງ ຫຼື ບໍ່ (ທາງຮ່າງກາຍ ຫຼື ເພດ), ເຊິ່ງເປັນພັນທະຂອງໜ່ວຍງານໃນການວິເຄາະວ່າມັນເປັນກໍລະນີທີ່ຮ້າຍແຮງ ຕ້ອງໄດ້ສົ່ງຕໍ່ໃຫ້ເຈົ້າໜ້າທີ່ຕຳຫຼວດ ແລະ ຜູ້ປະສານງານຂັ້ນບ້ານ. ເຈົ້າໜ້າທີ່ຕຳຫຼວດຕ້ອງລົງດຳເນີນການສືບສວນ-ສອບສວນ ແບບເຊິ່ງໜ້າ ແລະ ເຈົ້າໜ້າທີ່ປະສານງານຂັ້ນບ້ານຕ້ອງໄດ້ຕິດຕາມອີງການສືບສວນ-ສອບສວນ. ສຳລັບຂັ້ນຕອນການດຳເນີນການສືບສວນ-ສອບສວນ ສາມາດເບິ່ງເພີ່ມຕື່ມໄດ້ທີ່ ພາກການສືບສວນ-ສອບສວນ.

**ກ່ອງທີ 6:**
**ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ**

ໃນເຂດຊົນນະບົດ, ເຂດຫ່າງໄກສອກຫຼີກບ່ອນບໍ່ມີ ຕຳຫຼວດ ແລະ ສານ, ແມ່ຍິງຈະອາໄສຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເຊິ່ງຈະມີໜ້າທີ່ໃນການໄກ່ເກ່ຍໃນກໍລະນີທີ່ມີການທຳຮ້າຍຮ່າງກາຍເລັກນ້ອຍ. ດັ່ງນັ້ນ,ຈຶ່ງຕ້ອງມີການຝຶກອົບຮົມທີ່ເຂັ້ມງວດພໍສົມຄວນໃຫ້ໜ່ວຍໄກ່ເກ່ຍຂັ້ນບ້ານຮູ້ວິທີການປົກປ້ອງແມ່ຍິງ ແລະ ເດັກທີ່ໄດ້ຮັບຄວາມຮຸນແຮງ ໂດຍນຳໃຊ້ຂໍ້ແນະນຳການເຝິກອົບຮົມຂອງ UNW/MOJ VMU. ບົດລາຍງານໂຄງການ CEGGA ໂດຍ ທ່ານ Geraldine Yam, ໄດ້ກ່າວວ່າ: ຄຳແນະນຳທົ່ວໄປໃນສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ສະບັບເລກທີ່ 35 ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງສະບັບປັບປຸງປີ 1992 ຕາມຄຳແນະນຳຂອງສະບັບເລກທີ19 (ປີ 2017) ອະນຸຍາດໃຫ້ ຄວາມຮຸນແຮງຕໍ່ແມ່ຍິງ ສາມາດຕັດສິນຜ່ານຂະບວນການແກ້ໄຂທາງເລືອກພິເສດ: ຖ້າບໍ່ມີລະບົບສິ່ງຕໍ່ທີ່ເປັນທາງການ ຫຼື ບ່ອນທີ່ແມ່ຍິງບໍ່ໄດ້ເຂົ້າເຖິງຄວາມຍຸຕິທຳຢ່າງເປັນທາງການ, ໂດຍບໍ່ເສຍຄ່າ ແລະ ມີການຍິນຍອມໂດຍຜູ້ໄດ້ຮັບເຄາະຮ້າຍ, ບໍ່ມີສິ່ງຊີ້ບອກຄວາມສ່ຽງຕ່າງໆຕໍ່ຜູ້ຖືກເຄາະຮ້າຍ ຫຼື ສະມາຊິກໃນຄອບຄົວ ຂອງພວກເຂົາໃນຕໍ່ໜ້າ ແລະ ຂະບວນການແກ້ໄຂຂໍ້ຂັດແຍ່ງ, ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນການປົກປ້ອງສິດທິຂອງແມ່ຍິງ ແລະ ເດັກ ເຊັ່ນດຽວກັບການເຂົ້າຊ່ວຍ ເພື່ອບໍ່ໃຫ້ຕົກເປັນຜູ້ຖືກເຄາະຮ້າຍຄືນໃໝ່ (ຫຍໍ້ໜ້າທີ32)"[37]ສິ່ງນີ້ຄວນຈະເປັນມາດຕະຖານສຳລັບ ການໄກ່ເກ່ຍ ຂອງໜ່ວຍໄກ່ເກ່ຍຂັ້ນບ້ານ ໃນກໍລະນີການທຳຮ້າຍຮ່າງກາຍເລັກນ້ອຍທີ່ບໍ່ຮຸນແຮງ"

ພາຍຫຼັງທີ່ຮັບການລາຍງານຈາກໜ່ວຍໄກ່ເກ່ຍຂັ້ນບ້ານ, ເຈົ້າໜ້າທີ່ຕຳຫຼວດຈຳເປັນຕ້ອງໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດການສືບສວນ-ສອບສວນ ເພື່ອເປັນການກຳນົດລະບຸ ແລະ ຕິດຕາມກ່ຽວກັບກໍລະນີຄວາມຮຸນແຮງທີ່ "ຮ້າຍແຮງ" ຜ່ານກົນໄກການປະສານງານ ແລະ ການສົ່ງຕໍ່ ຂອງອຳນາດການປົກຄອງທ້ອງຖິ່ນ, ຂະແໜງສາທາລະນະສຸກ, ສູນໃຫ້ຄຳປຶກສາ, ແລະ ໜ່ວຍການໃຫ້ບໍລິການອື່ນໆ. ເຊິ່ງຂະບວນການດັ່ງກ່າວ ຄວນໄດ້ຮັບການຈັດຕັ້ງປະຕິບັດຜ່ານຄະນະຊີ້ນຳການຄຸ້ມຄອງ ແລະ ການປະສານງານ ແມ່ຍິງ ແລະ ເດັກຍິງທີ່ຖືກຄວາມຮຸນແຮງ (ເບິ່ງມາດຕະຖານຂັ້ນຕອນການດຳເນີນການປະສານງານ).

ຖ້າຫາກກໍລະນີຄວາມຮຸນແຮງເກີດຂຶ້ນ (ທາງຮ່າງກາຍ ຫຼື ທາງເພດ) ຫຼື ເປັນກໍລະນີທີ່ມີ ຄວາມສ່ຽງສູງ (ໂດຍອີງໃສ່ຈາກການປະເມີນຄວາມສ່ຽງ) ແຕ່ໃນສະຖານະການດັ່ງກ່າວຜູ້ທີ່ຖືກຄວາມຮຸນແຮງ ເລືອກທີ່ຈະບໍ່ໃຫ້ມີການແຈ້ງຄວາມ, ຕຳຫຼວດຕ້ອງເຂົ້າໃຈເຫດຜົນທີ່ເຂົາບໍ່ຍອມໃຫ້ດຳເນີນຄະດີ ແລະ ສະຫຼຸບສຳນວນສົ່ງໃຫ້ ໄອຍະການປະຊາຊົນໃຫ້ຮັບຊາບ ເພື່ອໃຊ້ດຸນພິນິດ ໃນການພິຈາລະນາວ່າ ຄວນ ຫຼື ບໍ່ຄວນໃຫ້ມີການສອບສວນ ໃນຂັ້ນຂອງໄອຍະການ ໂດຍອີງຕາມຜົນປະໂຫຍດຂອງ ຜູ້ຖືກຄວາມຮຸນແຮງ ແລະ ສາທາລະນະຊົນ.

---

[36] ດັດປັບມາຈາກ ເອກະສານວ່າດ້ວຍການຄຸ້ມຄອງ ແລະ ສະກັດກັ້ນຄວາມຮຸນແຮງພາຍໃນຄອບຄົວຕໍ່ແມ່ຍິງ (ສະພາເອີລົບ)

[37] ທ່ານ Geraldine Yam (2020) ບົດລາຍງານ CEGGA ວ່າດ້ວຍການພັດທະນາຍຸດທະສາດການໄກ່ເກ່ຍຂັ້ນບ້ານໃນຂົງເຂດບົດບາດຍິງຊາຍ ເພື່ອຮັບປະກັນພົນລະເມືອງໄດ້ເຂົ້າເຖິງກົນໄກການໄກ່ເກ່ຍຢ່າງເທົ່າທຽມ ໂດຍປາສະຈາກການຈຳແນກທາງເພດ ໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລັດແຫ່ງກົດໝາຍ

ການສືບສວນ-ສອບສວນ, ຖ້າເຈົ້າໜ້າທີ່ຕຳຫຼວດ ຫຼື ໄອຍະການປະຊາຊົນບໍ່ມີຫລັກຖານພຽງພໍ (ບໍ່ຄົບອົງປະກອບຂອງການກະທຳຜິດ) ທີ່ຈະດຳເນີນການຮ້ອງຟ້ອງຕໍ່ ຫຼື ຜູ້ເຄາະຮ້າຍບໍ່ຕ້ອງການທີ່ຈະຮ້ອງຟ້ອງ, ເຈົ້າໜ້າທີ່ຕຳຫຼວດ ຫຼື ໄອຍະການ ຕ້ອງໄດ້ກວດຄືນສຳນວນຄະດີ ແລະ ເຮັດການປະເມີນ ແລະ ລາຍງານຄວາມສ່ຽງຕ່າງໆ; ຖ້າຍັງມີຄວາມສ່ຽງຕ່າງໆຕໍ່ຄວາມປອດໄພຂອງຜູ້ຖືກເຄາະຮ້າຍຫຼືຄອບຄົວຂອງພວກເຂົາເຈົ້າຊຶ່ງຖ້າຜູ້ກະທຳຜິດບໍ່ໄດ້ຖືກກັກຕົວ ຫຼື ຖືກຮ້ອງຟ້ອງ, ຄະດີດັ່ງກ່າວຕ້ອງຖືກສົ່ງໄປຫາໄອຍະການ, ແຕ່ຖ້າຫາກວ່າບໍ່ມີຄວາມສ່ຽງອີກແລ້ວຄະດີຈະຖືກສົ່ງໃຫ້ອຳນາດການປົກຄອງບ້ານເພື່ອດຳເນີນການໄກ່ເກ່ຍ.

ເຈົ້າໜ້າທີ່ທ້ອງຖິ່ນ ແລະ ຕຳຫຼວດ ຕ້ອງຮັກສາຄວາມລັບຂອງກໍລະນີ (ແບບຟອມ ລະບຸຊື່ຂອງຜູ້ກະທຳຜິດແຕ່ບໍ່ແມ່ນຜູ້ຖືກເຄາະຮ້າຍ) ເຖິງແມ່ນວ່າຜູ້ເຄາະຮ້າຍບໍ່ຍິນຍອມທີ່ຈະໃຫ້ມີການສືບສວນກໍຕາມ, ນີ້ແມ່ນການຮັບປະກັນວ່າຢ່າງນ້ອຍແມ່ນມີການບັນທຶກຜິດຕິກຳຂອງຜູ້ກະທຳຜິດ ເພື່ອໃຫ້ສາມາດຕິດຕາມ ແລະ ແກ້ໄຂຖ້າຫາກມັນເກີດຂຶ້ນອີກຄັ້ງ. ມັນຍັງໄດ້ບົ່ງບອກໃຫ້ຜູ້ກະທຳຜິດຮູ້ວ່າຍັງມີເຈົ້າໜ້າທີ່ຕຳຫຼວດຕິດຕາມ ແລະ ຖ້າຫາກມັນເກີດຂຶ້ນອີກແມ່ນຈະມີການດຳເນີນການໂຕຕອບຕາມກົດໝາຍ (ສືບສວນ-ສອບສວນ) ຄວນປ້ອງກັນບໍ່ໃຫ້ເກີດຄວາມຮຸນແຮງຕໍ່ແມ່ຍິງໃນອະນາຄົດ.

ການລາຍງານທາງການໃຫ້ຄະກຳມະການປະສານງານຄວນປະກອບມີ ຄະດີທີ່ໄດ້ໄກ່ເກ່ຍ ຫຼື ຄະດີທີ່ບໍ່ໄດ້ໄກ່ເກ່ຍ, ຂໍ້ມູນທີ່ໄດ້ສອບສວນ-ສືບສວນ (ສາມາດເບິ່ງພາກທີ 6 ກ່ຽວກັບການເກັບ ແລະ ລາຍງານຂໍ້ມູນ)

### ❖ ຂະບວນການການໄກ່ເກ່ຍ

**ກ່ອງ 7: ຂອບເຂດນິຕິກຳຂອງ ສປປລາວ ກ່ຽວກັບຂະບວນການໄກ່ເກ່ຍ**

ຂັ້ນຕອນການໄກ່ເກ່ຍຕໍ່ໄປນີ້ ແມ່ນໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

**ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ມາດຕາ 52: ອົງການທີ່ມີສິດໃນການໄກ່ເກ່ຍ

- ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ
- ໜ່ວຍງານໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກ
- ເຈົ້າໜ້າທີ່ສືບສວນ-ສອບສວນ ຂອງຕຳຫຼວດ
- ອົງການໄອຍະການປະຊາຊົນ
- ສານປະຊາຊົນ

ມາດຕາ 53: ຫຼັກການໄກ່ເກ່ຍ: ການໄກ່ເກ່ຍ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

- ມີການເຫັນດີຂອງຜູ້ຖືກເຄາະຮ້າຍ ພາຍຫຼັງໄດ້ຮັບການແຈ້ງສິດ ແລະ ທາງເລືອກໃນການແກ້ໄຂ
- ມີຂໍ້ມູນ, ຫຼັກຖານຮັດກຸມ, ໜັກແໜ້ນ ແລະ ຄົບຖ້ວນ
- ມີການຮັບສາລະພາບຂອງຜູ້ໃຊ້ຄວາມຮຸນແຮງ
- ຄຳນຶງເຖິງສິດ ແລະ ຄວາມປອດໄພຂອງຜູ້ຖືກເຄາະຮ້າຍເປັນຫລັກ
- ຕົກລົງຮັບເອົາແຜນຂອງການໄກ່ເກ່ຍດ້ວຍຄວາມສະໝັກໃຈຂອງຜູ້ຖືກເຄາະຮ້າຍ
- ສະເໜີຍຸດຕິການໄກ່ເກ່ຍໄດ້ທຸກເວລາ ໂດຍຜູ້ຖືກເຄາະຮ້າຍ
- ຮັກສາຄວາມລັບຕໍ່ທຸກບັນຫາທີ່ນຳມາປຶກສາຫາລືໃນການໄກ່ເກ່ຍ

**ດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ພາກທີ IV ແລະ V**

ອີງຕາມມາດຕາ 31 ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງຄົ້ນຄວ້າຄຳຮ້ອງຂໍ ຂອງຄູ່ກໍລະນີ ພາຍໃນກຳນົດ ສາມ ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງນັ້ນ ເປັນຕົ້ນໄປ.

ໃນມາດຕາທີ 56 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ ແລະ ມາດຕາທີ 33 ດຳລັດ ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໄດ້ກ່າວໄວ້ວ່າ ບົດບັນທຶກການໄກ່ເກ່ຍ ເປັນການສະຫຼຸບເນື້ອໃນການໄກ່ເກ່ຍ ແລະ ຜົນໄດ້ຮັບທີ່ໄດ້ກະກຽມ ແລະ ເຫັນດີໂດຍທຸກໆພາກສ່ວນ ແລະ ສະບັບສຳເນົາແມ່ນເກັບໄວ້ ໂດຍຄະນະໜ່ວຍໄກ່ເກ່ຍ ຂັ້ນບ້ານ ແລະ ສາມາດເຂົ້າເຖິງໄດ້ທັງສອງພາກສ່ວນ.

ການໄກ່ເກ່ຍສາມາດດຳເນີນໄດ້ໂດຍບັນດາອົງການຈັດຕັ້ງທີ່ມີສິດອຳນາດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍສະເພາະຕໍ່ກັບບັນດາກໍລະນີກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເຊິ່ງບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງດັ່ງກ່າວຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບການດຳເນີນການໄກ່ເກ່ຍໃນກໍລະນີຄວາມຮຸນແຮງຕໍ່ແມ່ຍິງ.

**ການໄກ່ເກ່ຍຂອງຄະນະກຳມະການໄກ່ເກ່ຍຂັ້ນບ້ານ:** ແນະນຳໃຫ້ນຳໃຊ້ຄູ່ມືການຝຶກອົບຮົມການໄກ່ເກ່ຍ "ຄວາມຮຸນແຮງຕໍ່ແມ່ຍິງ ແລະ ວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເພື່ອແກ້ໄຂບັນຫາກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງຢູ່ ສປປ ລາວ" ໂດຍ ກະຊວງຍຸຕິທຳ ເຊິ່ງໄດ້ຮັບການສະໜັບສະໜູນຈາກ ອົງການສະຫະປະຊາຊາດ ເພື່ອຄວາມສະເໝີພາບ ລະຫວ່າງຍິງ - ຊາຍ ແລະ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ແມ່ຍິງ (UN Women) ແລະ ອົງການຮ່ວມມືສາກົນ ສ.ເກົາຫຼີ, ຄູ່ມືແນະນຳໃນການດຳເນີນການຝຶກອົບຮົມເພື່ອການໄກ່ເກ່ຍ.

ອີງຕາມ ມາດຕາ 31 ຂອງດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໄດ້ລະບຸໄວ້ວ່າ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຕ້ອງຄົ້ນຄວ້າຄຳຮ້ອງຂໍ ຂອງຄູ່ກໍລະນີ ພາຍໃນກຳນົດ ສາມ ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍນັ້ນ ເປັນຕົ້ນໄປ. ໃນການຄົ້ນຄວ້າໃນໄລຍະຕໍ່ມາ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຕ້ອງໄດ້ແຈ້ງຜົນຂອງການຄົ້ນຄວ້າຄຳຮ້ອງ ພາຍໃນເວລາ 5 ມື້.

ບົດບັນທຶກການໄກ່ເກ່ຍຄວນແບ່ງປັນໃຫ້ຄະນະຄຸ້ມຄອງ,ປະສານງານຂັ້ນບ້ານຕ້ອງສົ່ງໃຫ້ຄະນະຄຸ້ມຄອງ ແລະ ປະສານງານ ຂັ້ນເມືອງ ແລະ ເກັບກຳໄວ້ໃນຄັງເອກະສານນຳກັນກັບເອກະສານ ປະກອບເບື້ອງຕົ້ນ. ສິ່ງດັ່ງກ່າວຈະເຮັດໃຫ້ເຈົ້າໜ້າທີ່ຕຳຫຼວດສາມາດຕິດຕາມການເຄື່ອນໄຫວພຶດຕິກຳຂອງຜູ້ໃຊ້ຄວາມຮຸນແຮງ ແລະ ດຳເນີນການແຊກແຊງໃນກໍລະນີທີ່ມີການນຳໃຊ້ຄວາມຮຸນແຮງເກີດຂຶ້ນຊ້ຳອີກ.

ໃນບັນດາການໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ, ຄະນະກຳມະການໄກ່ເກ່ຍຂໍ້ຂັດແຍ່ງຕ້ອງແມ່ນແມ່ຍິງທັງໝົດເປັນຜູ້ດຳເນີນການໄກ່ເກ່ຍ. ຖ້າຫາກບໍ່ມີເງື່ອນໄຂ ໃຫ້ຫຼຸດຈຳນວນຄະນະກຳມະການໄກ່ເກ່ຍຂໍ້ຂັດແຍ່ງໃຫ້ເຫຼືອເປັນ ສາມຄົນ ແລະ ຮັບປະກັນວ່າ ຢ່າງໜ້ອຍ 50 ສ່ວນຮ້ອຍຂອງຄະນະກຳມະການຜູ້ທີ່ດຳເນີນການໄກ່ເກ່ຍ ມີຜູ້ສາມາດຊ່ວຍຮັກສາການ ເພື່ອດຳເນີນການໄກ່ເກ່ຍໃຫ້ໄດ້. ເຈົ້າໜ້າທີ່ໃນໜ່ວຍໄກ່ເກ່ຍທຸກຄົນຄວນໄດ້ຜ່ານການຝຶກອົບຮົມຕາມຄູ່ມືຝຶກອົບຮົມການໄກ່ເກ່ຍຂອງອົງການສະຫະປະຊາຊາດເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.

**ຜູ້ຖືກເຄາະຮ້າຍບໍ່ຄວນຖືກຮຽກຮ້ອງໃຫ້ມີຄ່າໃຊ້ຈ່າຍໃດໆສຳລັບການໄກ່ເກ່ຍ ຫຼື ເຊັ່ນດຽວກັນກັບຫ້ອງການບ້ານ ຫຼື ໃນການເປັນເຈົ້າພາບໃນການໄກ່ເກ່ຍ ຫຼື ບາດກ້າວອື່ນໆໃນການດຳເນີນການຕໍ່ໃນຂະບວນການຍຸຕິທຳ.**

**ຄຳແນະນຳກ່ອນການກວດສອບ:** ໃນທຸກໆການໄກ່ເກ່ຍຄະດີຕ້ອງມີການກວດສອບກ່ອນ(ໂດຍໃຊ້ການປະເມີນຄວາມສ່ຽງຕາມເອກະສານການຮັບແຈ້ງຄວາມ)ເພື່ອຮັບປະກັນວ່າໃນການໄກ່ເກ່ຍນັ້ນມີຄວາມເໝາະສົມ ແລະ ປອດໄພ,ໂດຍກົນໄກການປະສານງານກັບຫຼາຍພາກສ່ວນໃນທ້ອງຖິ່ນ, ໂດຍອີງຕາມ 'ຂໍ້ຕົກລົງ ຂອງ ຄະນະຄຸ້ມຄອງການປະສານງານ, ການປະສານງານ ແລະ ສົ່ງຕໍ່, ເພື່ອຮັບປະກັນວ່າໃນການໄກ່ເກ່ຍທຸກຄະດີແມ່ນມີການປະຕິບັດຕາມມາດຕະຖານສຳລັບການໄກ່ເກ່ຍ ແລະ ຄວາມຕ້ອງການຕ່າງໆຂອງຂະບວນການໄກ່ເກ່ຍ. ຮັບປະກັນຄວາມປອດໄພໃນການຈັດຕັ້ງປະຕິບັດ.

**ໃນຂະບວນການໄກ່ເກ່ຍ ຜູ້ຖືກເຄາະຮ້າຍຄວນໄດ້ສິດດັ່ງນີ້:**

- ສິດໃນການໄດ້ຮັບການປົກປ້ອງ ຫຼື ຄຳສັ່ງໃນການຄຸ້ມຄອງເພື່ອຮັບປະກັນຄວາມປອດໄພກ່ອນ, ລະຫວ່າງການໄກ່ເກ່ຍ ແລະ ຫຼັງຈາກການໄກ່ເກ່ຍສິ້ນສຸດ.
- ສິດໃນການຮ້ອງທຸກກັບຕຳຫຼວດ ຫຼື ເຈົ້າໜ້າທີ່ທີ່ເໝາະສົມໃນການສັ່ງດຳເນີນຄະດີກັບຜູ້ກະທຳຜິດໃນຊັ້ນສານ, ແທນທີ່ການໄກ່ເກ່ຍ.
- ສິດໃນການໄດ້ຮັບການປົກປ້ອງຄຸ້ມຄອງຈາກໄພຄຸກຄາມທຸກຮູບແບບ, ການຂົ່ມຂູ່ໃດໆ, ການໃຊ້ອິດທິພົນ, ການກົດດັນ, ການລ່ວງລະເມີດ, ຫຼື ຄວາມຮຸນແຮງຕ່າງໆໃນທຸກຮູບແບບໃນກ່ອນ ຫຼື ລະຫວ່າງຂະບວນການໄກ່ເກ່ຍ ແລະ ຫຼັງຈາກການໄກ່ເກ່ຍສິ້ນສຸດ.
- ສິດໃນການຮຽກຮ້ອງຄ່າຊົດເຊີຍ ແລະ ມາດຕະການໃນການຄຸ້ມຄອງ ແລະ ການສັ່ງຫ້າມຜູ້ກະທຳຜິດທຳການລະເມີດຕື່ມອີກໃນຕໍ່ໜ້າ.
- ສິດໃນການຮຽກຮ້ອງໃຫ້ຜູ້ກະທຳຜິດຂຽນຍອມຮັບຮູ້ເຖິງການລ່ວງລະເມີດເປັນລາຍລັກອັກສອນເຊິ່ງເປັນສ່ວນໜຶ່ງໃນຂໍ້ຕົກລົງຂອງການໄກ່ເກ່ຍ.
- ສິດໃນການຮຽກຮ້ອງໃຫ້ຜູ້ກະທຳຜິດປັບປ່ຽນການກະທຳໄປໃນທາງທີ່ດີເພື່ອປ່ຽນພຶດຕິກຳທີ່ບໍ່ເໝາະສົມເປັນຕົ້ນ: ຜ່ານການປຶກສາຫາລື ຫຼື ການໃຊ້ຈິດຕະວິທະຍາໃນຮູບແບບຕ່າງໆເຂົ້າຊ່ວຍ.
- ສິດໃນການຂຽນຂໍ້ຕົກລົງໃນເວລາສະຫຼຸບການໄກ່ເກ່ຍທີ່ສະແດງເຖິງຄວາມເປັນທຳ, ເມື່ອບັນລຸຂໍ້ຕົກລົງກັນ ແລ້ວ.
- ສິດໃນການຮຽກຮ້ອງການຕິດຕາມໂດຍຄວາມຮັບຜິດຊອບຂອງລັດຖະບານ ຫຼື ເຈົ້າໜ້າທີ່ທ້ອງຖິ່ນ ໃນການຕິດຕາມການປະຕິບັດຂອງຜູ້ກະທຳຜິດຕາມຂໍ້ຕົກລົງໃນການໄກ່ເກ່ຍ. ຕິດຕາມເບິ່ງຫຼັງການໄກ່ເກ່ຍເພື່ອຮັບປະກັນວ່າຂໍ້ຕົກລົງຈະບໍ່ຖືກລະເມີດ.

**ກ່ອງ 8: ຄວາມອັນຕະລາຍຂອງການໄກ່ເກ່ຍໃນກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ**

ການໄກ່ເກ່ຍ (ບາງຄັ້ງແມ່ນເອີ້ນວ່າເປັນການ ແກ້ໄຂຂໍ້ຂັດແຍ່ງພິພາກ) ແມ່ນຖືກນຳໃຊ້ໃນທັງຂະແໜງການຍຸຕິທຳແບບທາງການ ແລະ ບໍ່ເປັນທາງການ ເຊິ່ງສາມາດສ້າງບັນຫາ ແລະ ເປັນອັນຕະລາຍຫຼາຍ ໃນບາງກໍລະນີ ຄວາມຮຸນແຮງພາຍໃນ ຄອບຄົວ / ຄວາມຮຸນແຮງກັບຄົນຮູ້ຈັກສ່ວນຕົວທີ່ມີລັກສະນະຕໍ່ໄປນີ້:

- ກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ແມ່ນກ່ຽວຂ້ອງກັບສິດອຳນາດທີ່ບໍ່ເທົ່າທຽມໃນຄວາມສຳພັນລະຫວ່າງ ສອງຝ່າຍ ເຊິ່ງໂດຍພື້ນຖານແມ່ນບັນດາພຶດຕິກຳການນຳໃຊ້ຄວາມຮຸນແຮງ, ການທຳຮ້າຍເມຍ/ຄູ່ຊີວິດ ແລະ/ຫຼື ການຄວບຄຸມຂົ່ມເຫັງ, ການລ່ວງລະເມີດ ແລະ ພຶດຕິກຳທີ່ເຮັດໃຫ້ໜ້າອັບອາຍຂາຍໜ້າ;

- ການໄກ່ເກ່ຍ ເປັນການເຮັດໃຫ້ເຂົ້າໃຈວ່າ ແຕ່ລະຝ່າຍມີການເຂົ້າເຖິງຂະບວນການທາງຍຸຕິທຳ ທີ່ມີຄວາມເທົ່າທຽມກັນທາງດ້ານຊັບພະຍາກອນ ແລະ ສິດອຳນາດ ເຊິ່ງມັນບໍ່ສາມາດໃຊ້ໄດ້ ສະເໝີໄປໃນສະຖານະການເຫຼົ່ານີ້.

ເຖິງຢ່າງໃດກໍຕາມ, ເນື່ອງຈາກການໄກ່ເກ່ຍຂໍ້ຂັດແຍ່ງ ແມ່ນຖືກໃຊ້ໃນຫຼາຍປະເທດ, ອົງການສະຫະປະຊາຊາດ ວ່າດ້ວຍ ຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODC) ແນະນຳວ່າ ການລິເລີ່ມໃດກໍຕາມ ໃນການປະຕິຮູບຂອງ ຂະແໜງການຍຸຕິທຳ ພ້ອມທັງ ອົງປະກອບຂອງການໄກ່ເກ່ຍຄວນປະຕິບັດຕາມມາດຕະຖານດັ່ງຕໍ່ໄປນີ້ຢ່າງເຂັ້ມງວດ:

- ທຸກຄົນທີ່ມີສ່ວນຮ່ວມອຳນວຍຄວາມສະດວກໃນການດຳເນີນການໄກ່ເກ່ຍຄວນໄດ້ຮັບການຝຶກອົບຮົມໃນວຽກງານກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍສະເພາະແມ່ນຄວາມຮຸນແຮງ ພາຍໃນຄອບຄົວ /ຄວາມຮຸນແຮງຈາກຄູ່ຮ່ວມຊີວິດ;
- ການຝຶກອົບຮົມຄວນສຸມໃສ່ການປະເມີນຄວາມສ່ຽງ;
- ການພັດທະນາ ແລະ ການນຳໃຊ້ເຄື່ອງມືເພື່ອປະເມີນຄວາມສ່ຽງທີ່ຖືກກວດສອບແລ້ວ ສຳລັບກໍລະນີ ການລ່ວງລະເມີດ/ທຳຮ້າຍຄູ່ຮ່ວມຊີວິດ.

ໂດຍທົ່ວໄປແລ້ວ, ອົງການ ສປຊ ວ່າດ້ວຍ ການຕ້ານຢາເສບຕິດ ແລະ ອາຊະຍາກຳ ມີຂໍ້ແນະນຳທີ່ເໝາະສົມ ສຳລັບນຳໃຊ້ໃນການໄກ່ເກ່ຍ ແລະ ການຟື້ນຟູອື່ນໆໃນຂະບວນຍຸຕິທຳ ສຳລັບກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ເຊັ່ນ:

- ຂະບວນການການຟື້ນຟູທາງທາງດ້ານຍຸຕິທຳ ຕ້ອງໃຊ້ມາດຕະການໃນການປົກປ້ອງທີ່ຄືກັນ ຫຼື ຫຼາຍກວ່າ ເພື່ອຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ຕາມຂະບວນການຍຸຕິທຳທາງອາຍາ;
- ການສົ່ງຕໍ່ໃຫ້ຂະບວນການຍຸຕິທຳຄືນໃໝ່ແມ່ນໄດ້ດຳເນີນພາຍຫຼັງທີ່ຜູ້ກະທຳຜິດໄດ້ຖືກກ່າວຫາໃນອາຊະຍາກຳ ແລະ ໄດ້ຮັບການອະນຸມັດຂອງໄອຍະການ ຫຼື ຜູ້ພິພາກສາສືບສວນ;
- ການກຳນົດວ່າ ເປັນກໍລະນີທີ່ບໍ່ມີຄວາມສ່ຽງສູງ ແມ່ນຄວນໄດ້ຮັບການກຳນົດໂດຍເຈົ້າໜ້າທີ່ ທີ່ໄດ້ຜ່ານການຝຶກອົບຮົມ ແລະ ມີຄວາມຊຳນານ
- ຜູ້ຖືກຄວາມຮຸນແຮງແມ່ນໄດ້ຮັບການແຈ້ງສິດຂອງຕົນ ແລະ ຍິນຍອມໃນການດຳເນີນຕາມຂັ້ນຕອນທາງດ້ານຂະບວນການຍຸຕິທຳ.[38]

## 4.5. ການດຳເນີນຄະດີ

ໃນການດຳເນີນຄະດີຕໍ່ກັບຜູ້ໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ເດັກ ບໍ່ວ່າຈະຢູ່ໃນຂັ້ນຕອນສືບສວນ-ສອບສວນ ຈົນຮອດການໄຕ່ສວນຄະດີ ອີງໃສ່ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ບົດແນະນຳຂອງມາດຕະຖານດຳເນີນງານສະບັບນີ້.

ໃນກໍລະນີຜູ້ຖືກເຄາະຮ້າຍເປັນເດັກຫຼືເດັກເປັນຜູ້ໃຊ້ຄວາມຮຸນແຮງໃຫ້ປະຕິບັດຕາມຫຼັກການທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີເດັກ.

ໃນຂະບວນການດຳເນີນຄະດີປະກອບມີ:

---

[38] ແຫຼ່ງທີ່ມາ: 'Strengthening Crime Prevention and Criminal Justice Response to Violence against Women' (UNODC, 2014) and 'A Study for Creating a Multidisciplinary Response Mechanism to Violence Against Women in Egypt' (UNODC, 2015), as cited in UNODC Handbook on Gender-Responsive Police Services

1. ການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕຳຫຼວດ
2. ຂະບວນການພິຈາລະນາຄະດີ ຂອງອົງການໄອຍະການປະຊາຊົນ
3. ຂະບວນການພິຈາລະນາຄະດີຂອງໄອຍະການ ແລະ ສານປະຊາຊົນ
4. ຄວາມຮັບຜິດຊອບຂອງຜູ້ກະທຳຜິດ ແລະ ການແກ້ໄຂ ເຊິ່ງຢູ່ໃນຂັ້ນຕັດສິນຂອງສານ
5. ຂະບວນການຫຼັງການພິຈາລະນາຄະດີຂອງຍຸຕິທຳ ແລະ ປ້ອງກັນຄວາມສະຫງົບ

### 4.5.1. ການສືບສວນ-ສອບສວນ

**ກ່ອງທີ 9: ຂອບເຂດນິຕິກຳຂອງ ສປປ ລາວ ກ່ຽວກັບການສືບສວນ-ສອບສວນ**

**ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017**

ການດຳເນີນການສືບສວນ-ສອບສວນເລີ່ມຕົ້ນນັບຕັ້ງແຕ່ມີການເປີດການສືບສວນ-ສອບສວນ (ມາດຕາ 84). ການດຳເນີນການສືບສວນ-ສອບສວນ ຈະຕ້ອງດຳເນີນຕາມ ມາດຕາ 86 ແລະ ດຳເນີນການສືບສວນ-ສອບສວນໂດຍ ບັນດາອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງ ດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 46 ແລະ ມາດຕາ 91.

ອີງຕາມ ມາດຕາ 86 ການເປີດການສືບສວນ-ສອບສວນ ຄວນດຳເນີນການ ຫາກມີເງື່ອນໄຂດັ່ງຕໍ່ໄປນີ້:

- ເມື່ອມີຄຳຮ້ອງຟ້ອງ ແລະ ການແຈ້ງຄວາມຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການກະທຳຜິດ. (ມາດຕາ 87)
- ມີການເຂົ້າມອບຕົວຂອງຜູ້ກະທຳຜິດ (ມາດຕາ 88)
- ພົບເຫັນຮ່ອງຮອຍຂອງການກະທຳຜິດໂດຍອົງການສືບສວນ–ສອບສວນຫຼືອົງການໄອຍະການປະຊາຊົນ (ມາດຕາ 89)

ອີງຕາມ ມາດຕາ 90 ອົງການສືບສວນ-ສອບສວນ ແລະ ອົງການໄອຍະການປະຊາຊົນ ຈະຕ້ອງພິຈາລະນາຄຳຮ້ອງຟ້ອງພາຍໃນ 5 ວັນ ເພື່ອຕັດສິນໃຈໃນການ:

- ອອກຄຳສັ່ງເປີດການສືບສວນ-ສອບສວນ
- ອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ
- ສົ່ງຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມໄປໃຫ້ອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງ ພິຈາລະນາ

ການອອກຄຳສັ່ງໃນການເປີດການສືບສວນ-ສອບສວນ ສາມາດດຳເນີນຕາມ ມາດຕາ 91 ແລະ ການເກັບໂຮມຫຼັກຖານຕ້ອງປະຕິບັດຕາມມາດຕາ 27-44

ເຈົ້າໜ້າທີ່ຕຳຫຼວດ ແລະ ໄອຍະການປະຊາຊົນ ຄວນໃຫ້ການຮ່ວມມື ແລະ ນຳໃຊ້ມາດຕະການ ການປົກປ້ອງ ແລະ ປ້ອງກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 136

ການດຳເນີນການສຳພາດ ເພື່ອການສືບສວນ-ສອບສວນ ແມ່ນໄດ້ຖືກລະບຸໄວ້ໃນ ໝວດທີ VI ພາກທີ I ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ປະມວນກົດໝາຍອາຍາ ສະບັບເລກທີ 013/ສພຊ, ລົງວັນທີ 17 ພຶດສະພາ 2017**
ຂໍ້ຄວນເອົາໃຈໃສ່: ປະມວນກົດໝາຍອາຍາ ມາດຕາ 392 ການບັງຄັບໃຫ້ຜູ້ອື່ນໃຫ້ການ ແລະ ການນຳເອົາຫຼັກຖານເທັດມາໃຊ້

ການດຳເນີນການສືບສວນ-ສອບສວນເລີ່ມຕົ້ນຂຶ້ນນັບຕັ້ງແຕ່ ເລີ່ມມີການເປີດການສືບສວນ-ສອບສວນ ຕາມມາດຕາ 84 ວ່າດ້ວຍການເປີດການສືບສວນ-ສອບສວນ ເຊິ່ງດຳເນີນການໂດຍອີງການສືບສວນ-ສອບສວນ ຫຼື ອີງການໄອຍະການປະຊາຊົນ ດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 46. ເຈົ້າໜ້າທີ່ຕຳຫຼວດ ອາດຈະໄດ້ຮັບການແຈ້ງຄວາມ ຈາກຜູ້ຖືກເຄາະຮ້າຍດ້ວຍຕົວພວກເຂົາເອງ ຫຼື ຖືກສົ່ງຕໍ່ມາຈາກຜູ້ໄດ້ຮັບການຕິດຕໍ່ເບື້ອງຕົ້ນ (ສູນໃຫ້ຄຳປຶກສາຂອງ ສະຫະພັນແມ່ຍິງລາວ, ອຳນາດການປົກຄອງບ້ານ, ຫ້ອງການໃຫ້ການຊ່ວຍເຫຼືອດ້ານກົດໝາຍ).

### ການຮ່ວມມືໃນການດຳເນີນຄະດີຂອງເຈົ້າໜ້າທີ່ຕຳຫຼວດ[39]

ເຈົ້າໜ້າທີ່ຕຳຫຼວດ ແລະ ໄອຍະການຈະຕ້ອງໄດ້ສ້າງຄວາມເຂົ້າໃຈຮ່ວມກັນ ແລະ ສ້າງແຜນໃນວິທີການ ດຳເນີນການສືບສວນທີ່ດີເຊັ່ນ: ກຳນົດບຸລິມະສິດໃນຂະບວນການສືບສວນ– ສອບສວນ ແລະ ສ້າງບົດບັນທຶກລົງເລິກ ໃນລາຍລະອຽດຕ່າງໆ. ພວກເຂົາຄວນຮັບປະກັນວ່າ ຜູ້ຕ້ອງສົງໄສ ຖືກຄວບຄຸມໂຕໄວເທົ່າທີ່ສາມາດຈະດຳເນີນໄດ້ ແລະ ຜູ້ໃຫ້ບໍລິການດ້ານຍຸຕິທຳ ອຳນວຍຄວາມສະດວກໃນການເຂົ້າເຖິງການຊ່ວຍເຫຼືອທາງການແພດ ແລະ ການ ກວດສຸຂະພາບຕາມກົດໝາຍ.

#### 4.5.1.1. ການຕິດຕາມກວດກາກ່ອນການເປີດການສືບສວນ-ສອບສວນ

ອີງຕາມມາດຕາ 86 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ການເປີດການສືບສວນ-ສອບສວນ ຄວນດຳເນີນການຕາມເງື່ອນໄຂດັ່ງຕໍ່ໄປນີ້:

- ມີຄຳຮ້ອງຟ້ອງ ແລະ ການແຈ້ງຄວາມຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການກະທຳຜິດ.
- ມີການເຂົ້າມອບຕົວຂອງຜູ້ກະທຳຜິດ.
- ພົບເຫັນຮ່ອງຮອຍຂອງການກະທຳຜິດໂດຍອີງການສືບສວນ-ສອບສວນຫຼືອີງການໄອຍະການປະຊາຊົນ.

ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ມາດຕາ 91) ຄຳສັ່ງເປີດການສືບສວນ-ສອບສວນ ແລະ ມາດຕາ 41, ເຈົ້າໜ້າທີ່ຄວນປະຕິບັດຕາມມາດຕະຖານດັ່ງຕໍ່ໄປນີ້:

- ກວດກາບົດບັນທຶກຄະດີ ທີ່ໄດ້ບັນທຶກຜ່ານມາ, ຕົວຢ່າງ ຖ້າຫາກ ເປັນການກະທຳຜິດຊ້ຳ (ບໍ່ວ່າຈະແມ່ນ ຄວາມຮຸນແຮງໃນຮູບແບບໃດກໍຕາມ) ແມ່ນຈະບໍ່ສາມາດດຳເນີນການໄກ່ເກ່ຍໄດ້. ດ້ວຍເຫດນັ້ນ ຈຶ່ງຈະ ຕ້ອງໄດ້ດຳເນີນການສືບສວນ-ສອບສວນ.
- ດຳເນີນການສືບສວນ-ສອບສວນແບບເຊິ່ງໜ້າ ແລະ ບັນທຶກເອົາຄຳໃຫ້ການທີ່ເປັນລາຍລັກອັກສອນ ຈາກເຫດການທີ່ເກີດຂຶ້ນຢ່າງໜ້ອຍຈາກ 3 ພາກສ່ວນທີ່ກ່ຽວຂ້ອງຄື ຜູ້ຖືກເຄາະຮ້າຍ, ຜູ້ກະທຳຜິດ ແລະ ຖ້າເປັນໄປໄດ້ ແມ່ນລວມທັງພະຍານ ເຊັ່ນດຽວກັນກັບ ຄຳໃຫ້ການຂອງແຕ່ລະກໍລະນີທີ່ຜ່ານມາ.
- ການເກັບໂຮມຫຼັກຖານ ແມ່ນປະຕິບັດຕາມມາດຕາ 27-44 ລວມທັງຫຼັກຖານທາງນິຕິ-ການແພດ ໂດຍ ຜ່ານການມີສ່ວນຮ່ວມຈາກພາກສ່ວນອື່ນໆທີ່ກ່ຽວຂ້ອງ (ອີງຕາມມາດຕະຖານຂັ້ນຕອນການດຳເນີນງານ ຂະແໜງສຸຂະພາບ ແລະ ຂະແໜງສັງຄົມ).

ເຈົ້າໜ້າທີ່ຕຳຫຼວດແລະເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງເກັບກຳຂໍ້ມູນຫຼັກຖານທາງດ້ານວັດຖຸ,ຫຼັກຖານ ທາງດ້ານເອກະສານ ແລະ ຫຼັກຖານທາງດ້ານບຸກຄົນ ເຊິ່ງໄດ້ລະບຸເນື້ອໃນໄວ້ແຕ່ລະມາດຕາຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ມາດຕາ 29, 32 ແລະ 34. ສຳລັບຫຼັກຖານທາງນິຕິວິທະຍາ: ອີງໃສ່ມາດຕະຖານການດຳເນີນ ງານຂະແໜງສາທາລະນະສຸກຂອງ ສປປ ລາວ ຂໍ້ 5.3 ກ່ຽວກັບຫຼັກຖານທາງນິຕິວິທະຍາ, ແຕ່ຫຼັກຖານທາງນິຕິວິທະຍາ

[39] ດັດປັບມາຈາກ ເອກະສານວ່າດ້ວຍການຄຸ້ມຄອງ ແລະ ສະກັດກັ້ນຄວາມຮຸນແຮງພາຍໃນຄອບຄົວຕໍ່ແມ່ຍິງ (ສະພາເອີລົບ) ແລະ UN Women, UNFPA, WHO, UNDP, UNODC ຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະ ເດັກຍິງທີ່ຂຶ້ນກັບຄວາມຮຸນແຮງ ເຂົ້າເຖິງໄດ້ທີ່ https://www.unwomen.org/en/digital-library/publications/2015/12/essential-services-package-for-women-and-girls-subject-to-violence

ບໍ່ແມ່ນພາກບັງຄັບ ເພື່ອເຮັດການລາຍງານ ຫຼື ຮ້ອງຟ້ອງໃນກໍລະນີການຂົ່ມຂືນກະທຳຊຳເລົາ. ເຖິງແມ່ນວ່າມັນເປັນຫຼັກຖານທີ່ສຳຄັນ ແຕ່ກໍມີຫຼາຍເຫດຜົນວ່າຍ້ອນຫຍັງ ມັນຈຶ່ງເປັນໄປບໍ່ໄດ້ທີ່ຈະຕ້ອງເກັບຫຼັກຖານທາງນິຕິວິທະຍາ.

### 4.5.1.2. ຂັ້ນຕອນໃນການດຳເນີນການສຳພາດ ເພື່ອການສືບສວນ-ສອບສວນ

- **ຕ້ອງມີການປະເມີນຄວາມສ່ຽງ:** ການປະເມີນຄວາມສ່ຽງຄວນດຳເນີນອີກຄັ້ງເພື່ອປະເມີນຄືນຄວາມສ່ຽງວ່າມີຄວາມສ່ຽງອື່ນອີກບໍ່ ເພື່ອຊອກໃຫ້ເຫັນເຖິງລະດັບຄວາມສ່ຽງຂອງຄວາມຮຸນແຮງ, ຄາດຄະເນເຖິງຄວາມສ່ຽງອື່ນໆທີ່ເກີດຂຶ້ນໄດ້, (ປະເມີນວ່າຜູ້ຖືກຄວາມຮຸນແຮງຈະໄດ້ຮັບຄວາມຮຸນແຮງເພີ່ມອີກ). ພ້ອມທັງແນະນຳໃຫ້ສຸມໃສ່ປັດໄຈຕ່າງໆເຊັ່ນ: ຄວາມຮຸນແຮງ, ການຂົ່ມຂູ່, ການເພີ່ມຂຶ້ນຂອງຄວາມຮຸນແຮງ, ການກະທຳຜິດ, ທາງຈິດຕະສາດ ແລະ ອື່ນໆ
- **ກ່ອນຈະດຳເນີນການສືບສວນ-ສອບສວນ ຕ້ອງໄດ້ຮັບການຍິນຍອມ ພາຍຫຼັງໄດ້ຮັບການແຈ້ງຂໍ້ມູນທີ່ຈຳເປັນ** (ເບິ່ງເພີ່ມເຕີມຄຳນິຍາມຈາກໜ້າທີ 7), ຄວນໃຫ້ຂໍ້ມູນທາງເລືອກຢ່າງຄົບຖ້ວນຕໍ່ຜູ້ຖືກເຄາະຮ້າຍເຊັ່ນ: ຂັ້ນຕອນ, ຄວາມສ່ຽງແລະຜົນປະໂຫຍດແລະອື່ນໆເພື່ອໃຫ້ຜູ້ຖືກເຄາະຮ້າຍສາມາດເລືອກຄວາມຕ້ອງການຂອງຕົນ
- ເຈົ້າໜ້າທີ່ຕ້ອງທົບທວນຄືນ ເອກະສານຂໍ້ມູນເບື້ອງຕົ້ນ ແລະ ດຳເນີນການສຳພາດເພີ່ມເຕີມໄດ້ໃນກໍລະນີທີ່ມີຄວາມຈຳເປັນເທົ່ານັ້ນ ເພື່ອເຮັດໃຫ້ການປະກອບເອກະສານຄົບຖ້ວນ ແລະ ເພື່ອເກັບກຳເອົາຂໍ້ມູນເພີ່ມເຕີມ.
- ຜູ້ຖືກເຄາະຮ້າຍ (ແລະ ຄອບຄົວຂອງລາວ) ບໍ່ຄວນເສຍຄ່າໃຊ້ຈ່າຍໃດໆ ສຳລັບການສືບສວນ-ສອບສວນຫຼືການດຳເນີນການຮ້ອງຟ້ອງຜູ້ກະທຳຜິດແລະບັນດາເຈົ້າໜ້າທີ່ພະນັກງານບໍ່ຄວນຮຽກຮ້ອງໃຫ້ມີຄ່າໃຊ້ຈ່າຍໃນການບໍລິການອື່ນໆຈາກຜູ້ຖືກຄວາມຮຸນແຮງ.
- ບໍ່ຄວນມີຄ່າໃຊ້ຈ່າຍໃດໆໃນຕະຫຼອດໄລຍະກ່ອນ, ໃນຂະນະ ຫຼື ຫຼັງການດຳເນີນກາສືບສວນ-ສອບສວນ. ຫາກມີການຮຽກຮ້ອງຄ່າໃຊ້ຈ່າຍໃດໆເກີດຂຶ້ນ ແມ່ນໃຫ້ລາຍງານໄປທີ່ຫ້ອງການຊ່ວຍເຫຼືອດ້ານກົດໝາຍ, ຫ້ອງການຍຸຕິທຳເມືອງ ຫຼື ໄອຍະການປະຊາຊົນ.

- **ການກະກຽມກ່ອນການສືບສວນ ສອບສວນ/ການເກັບກຳຂໍ້ມູນ**

**ກ. ສະຖານທີ່ສຳພາດ**

✓ ໃນການສຳພາດ, ຫ້ອງສຳພາດຕ້ອງມີອຸປະກອນຄົບຊຸດກໍລະນີທີ່ບໍ່ມີຫ້ອງສຳພາດ ຕ້ອງນຳໃຊ້ສະຖານທີ່ທີ່ເໝາະສົມປາສະຈາກການລົບກວນ ມີລັກສະນະເປັນສ່ວນຕົວ ແລະ ມີສະພາບແວດລ້ອມທີ່ເປັນມິດ

✓ ໃນກໍລະນີເປັນເດັກຄວນມີເຄື່ອງຫຼິ້ນໃຫ້ເດັກ

**ຂ. ບຸກຄະລາກອນທີ່ສຳພາດຈະຕ້ອງເອົາໃຈໃສ່ຄື:**

✓ ເປັນບຸກຄົນທີ່ໄດ້ຮັບການຝຶກອົບຮົມກ່ຽວກັບເຕັກນິກການສຳພາດ; ຜູ້ສຳພາດຕ້ອງຮູ້ຄວບຄຸມອາລົມຈິດຂອງຕົນເອງແລະບໍ່ເອົາອາລົມຂອງຕົນໄປປະທະ ຫຼື ມີອາລົມຮ່ວມກັບຜູ້ຖືກສຳພາດ. (ເບິ່ງເພີ່ມເຕີມທີ່ມາດຕະຖານທາງດ້ານລຸ່ມ).

✓ ມີຄວາມຮູ້ທາງດ້ານຈິດຕະວິທະຍາ, ຄວາມຮູ້ທາງດ້ານກົດໝາຍ; ລວມທັງມາດຕະຖານດຳເນີນງານໃນເອກະສານສະບັບນີ້.

✓ ມີຄວາມຮູ້ດ້ານບົດບາດຍິງ-ຊາຍ, ສິດທິແມ່ຍິງ, ສິດທິເດັກ, ສັງຄົມສົງເຄາະແລະຄວາມຮຸນແຮງຕໍ່ແມ່ຍິງ.

✓ ຮັບປະກັນຖື ວິທີການຊ່ວຍເຫຼືອຜູ້ຖືກເຄາະຮ້າຍເປັນໃຈກາງ: ເຂົ້າໃຈມຸມມອງຂອງຜູ້ເຄາະຮ້າຍ ແລະໃຫ້ການຊ່ວຍເຫຼືອແກ່ພວກເຂົາຢ່າງຈິງໃຈ. ເຈົ້າໜ້າທີ່ຕຳຫຼວດໃຫ້ຄຳນຶງສະເໝີວ່າມີໜ້າທີ່ຕົ້ນຕໍ ໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ ແລະ ເຂົ້າໃຈສະເໝີວ່າ ພວກທ່ານຢູ່ບ່ອນນັ້ນເພື່ອຊ່ວຍເຫຼືອ ແຕ່ບໍ່ແມ່ນເພື່ອຕັດສິນຜູ້ຖືກເຄາະຮ້າຍ. ຖ້າຜູ້ຖືກເຄາະຮ້າຍເຫັນວ່າຜູ້ໃຫ້ການຊ່ວຍເຫຼືອບໍ່ໜ້າເຊື່ອຖື, ມີທັດສະນະແນວຄິດຄອງເດີມ, ນອກຈາກນັ້ນຍັງມີລັກສະນະໄປກ່າວໂທດແກ່ຜູ້ຖືກເຄາະຮ້າຍຈຶ່ງເຮັດໃຫ້ພວກເຂົາເຈົ້າບໍ່ຢາກຈະສືບຕໍ່ດຳເນີນ ຂະບວນການ ທາງກົດໝາຍຕໍ່ໄປອີກ.

- ✓ ຫຼີກລ່ຽງທັດສະນະແນວຄິດຄອງເດີມ: ຮັບປະກັນບໍ່ໃຫ້ຕັດສິນຜູ້ຖືກເຄາະຮ້າຍ ບົນພື້ນຖານຂອງຂໍ້ສົມມຸດ ຫຼື ທັດສະນະແນວຄິດຄອງເດີມ (ເບິ່ງໜ້າທີ 49). ເຈົ້າໜ້າທີ່ຕ້ອງຮັບຮູ້ວ່າ ຄວາມລຳອຽງທາງເພດນັ້ນ ມີຜົນເສຍຕໍ່ວຽກງານຂອງເຈົ້າໜ້າທີ່ຕຳຫຼວດຄືແນວໃດ, ລວມທັງມັນຈະສົ່ງຜົນກະທົບຕໍ່ຄຸນະພາບ ຂອງ ວຽກງານສືບສວນ-ສອບສວນ; ມັນຍັງສາມາດສົ່ງຜົນຕໍ່ຄວາມຄິດຂອງປະຊາຊົນທົ່ວໄປຕໍ່ກັບການປະຕິບັດງານຂອງເຈົ້າໜ້າທີ່ຕຳຫຼວດທີ່ເຮັດໃຫ້ນຳໄປສູ່ການຫຼຸດລົງການເຂົ້າແຈ້ງຄວາມຄະດີອາຍາ.
- ✓ ຖ້າຜູ້ຖືກເຄາະຮ້າຍເປັນເພດຍິງ ຜູ້ສຳພາດກໍ່ເປັນເພດຍິງ.

**ຄ. ການນຸ່ງຖື**

ຜູ້ສຳພາດຕ້ອງແຕ່ງກາຍສຸພາບ, ສະອາດ, ບໍ່ໃສ່ເຄື່ອງແບບ ແລະ ບໍ່ຖືອາວຸດ.

**ງ. ຜູ້ເຂົ້າຮ່ວມການສຳພາດ**

- ✓ ຄວນປະກອບມີ 2-3 ຄົນ ເພື່ອທຳການບັນທຶກ ແລະ ສຳພາດ;
- ✓ ຖ້າຜູ້ຖືກເຄາະຮ້າຍເປັນ ຜູ້ພິການ, ເດັກຊົນເຜົ່າ ຈະມີພໍ່ແມ່, ຄູ, ຜູ້ຊ່ຽວຊານ ຫຼື ຊຳນານງານ, ທະນາຍຄວາມ ແລະ ຜູ້ແປພາສາເຂົ້າຮ່ວມ;
- ✓ ຜູ້ຖືກສຳພາດທີ່ຖືກກະທົບທາງດ້ານຈິດໃຈຢ່າງຮຸນແຮງຕ້ອງມີນັກຈິດຕະວິທະຍາ ຫຼື ຊ່ຽວຊານເຂົ້າຮ່ວມ.

**ຈ. ການກະກຽມຄວາມພ້ອມຂອງຜູ້ຖືກສຳພາດ (ຜູ້ຖືກເຄາະຮ້າຍ)**

- ✓ ສັງເກດຄວາມພ້ອມທາງດ້ານຮ່າງກາຍ ແລະ ຈິດໃຈຂອງຜູ້ຖືກເຄາະຮ້າຍ;
- ✓ ປະເມີນຄວາມສາມາດໃນການສື່ສານ ຫຼື ການໃຫ້ຂໍ້ມູນ;
- ✓ ປະເມີນຄວາມສະໝັກໃຈຂອງຜູ້ຖືກສຳພາດ.
- ✓ ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍສາມາດພາບຸກຄົນທີ່ພວກເຂົາເຊື່ອໃຈ(ລວມທັງທະນາຍຄວາມ)ເຂົ້າຮ່ວມນຳ.

- **ໃນລະຫວ່າງການສຳພາດ (ການສືບສວນ-ສອບສວນ ຫຼື ເອົາຄຳໃຫ້ການ)**

- ✓ ໃນເວລາການສຳພາດຄວນແຍກຜູ້ຖືກເຄາະຮ້າຍ, ຜູ້ກະທຳຜິດ ແລະ ພະຍານ ເພື່ອບໍ່ໃຫ້ເຫັນ ແລະ ໄດ້ຍິນການສົນທະນາ.
- ✓ ຜູ້ສຳພາດຕ້ອງໄດ້ສ້າງຄວາມລຶ້ງເຄີຍ ແນະນຳຕົນເອງ, ສະເໜີຈຸດປະສົງຂອງການສຳພາດ ແລະ ແຈ້ງສິດຕ່າງໆຂອງຜູ້ຖືກສຳພາດ.
- ✓ ອະທິບາຍໃຫ້ຜູ້ຖືກຄວາມຮຸນແຮງຊາບວ່າ, ໃນລະຫວ່າງການສຳພາດ, ຈຳເປັນຈະຕ້ອງໄດ້ຖາມຄຳຖາມໂດຍລະອຽດ, ເຊິ່ງບາງຂໍ້ອາດມີລັກສະນະທີ່ລົງເລິກ; ແລະ ອະທິບາຍຫຼັກການປົກປ້ອງໃຫ້ພວກເຂົາຮັບຮູ້ ເຊັ່ນ: ຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບ
- ✓ ໃຫ້ພວກເຂົາໄດ້ເວົ້າຢ່າງເສລີ ແລະ ຮັບຟັງຢ່າງຕັ້ງໃຈ (ບໍ່ຂັດຈັງຫວະ, ອົດທົນກັບຄວາມງຽບ)
- ✓ ຄຳຖາມທີ່ໃຊ້ສຳພາດ ຄຳຖາມຊຸດທີ່ 1 ແມ່ນໃຊ້ສຳລັບເກັບກຳຂໍ້ມູນເບື້ອງຕົ້ນ: ປະຫວັດຫຍໍ້ຂອງຜູ້ຖືກສຳພາດ
- ✓ ຄຳຖາມທີ່ໃຊ້ສຳພາດ ຄຳຖາມຊຸດທີ່ 2 ເພື່ອໃຊ້ຢັ້ງຢືນການກຳນົດຕົວຜູ້ຖືກເຄາະຮ້າຍ: ຫຼັກຖານໃນການໃຊ້ຄວາມຮຸນແຮງ
- ✓ ຮັບປະກັນໃຫ້ການເກັບກຳຫຼັກຖານທັງໝົດທີ່ມີນ້ຳໜັກພຽງພໍເພື່ອການນຳໄປສູ່ການເປັນຂໍ້ກ່າວຫາແກ່ຜູ້ກະທຳຜິດ ໃຫ້ຢູ່ບົນພື້ນຖານການເຄົາລົບຕໍ່ຜູ້ຖືກເຄາະຮ້າຍ ເພື່ອຮັກສາກຽດສັກສີຂອງພວກເຂົາ. ສິ່ງດັ່ງກ່າວລວມທັງການສົ່ງເສີມການສ້າງຫຼັກຖານ ທີ່ເນັ້ນໃສ່ຄວາມໜ້າເຊື່ອຖືຂອງການກ່າວຫາຫຼາຍກວ່າຄວາມໜ້າເຊື່ອຖືຂອງຜູ້ຖືກຄວາມຮຸນແຮງ.
- ✓ ເຈົ້າໜ້າທີ່ຕຳຫຼວດຈະດຳເນີນການສຳພາດຜູ້ຖືກຄວາມຮຸນແຮງ ເພື່ອຢັ້ງຢືນສິ່ງທີ່ເກີດຂຶ້ນ. ຄຳໃຫ້ການແບບປາກເປົ່າ/ຜ່ານການສຳພາດກັບຜູ້ຖືກຄວາມຮຸນແຮງແລະພະຍານ ມັກຈະເປັນຫຼັກຖານທີ່ສຳຄັນທີ່ສຸດໃນຄະດີຄວາມຮຸນແຮງ.

- ✓ ເຈົ້າໜ້າທີ່ຕຳຫຼວດທີ່ດຳເນີນການສຳພາດຜູ້ຖືກຄວາມຮຸນແຮງ ຈະຕ້ອງໄດ້ຮັບຮອງເອົາແນວທາງ ທີ່ຄຳນຶງເຖິງ ຄວາມອ່ອນໄຫວ ແລະ ສະແດງອອກເຖິງຄວາມເຫັນອົກເຫັນໃຈ, ມີວິທີການທີ່ນິ້ມນວນ ແລະ ເປັນມິດຕໍ່ຜູ້ຖືກເຄາະຮ້າຍ ແລະ ຄວນຖາມພຽງແຕ່ຄຳຖາມ ທີ່ບໍ່ໄດ້ ຢູ່ໃນການປະກອບເອກະສານເບື້ອງຕົ້ນເພື່ອປ້ອງກັນບໍ່ໃຫ້ມີການຕົກເປັນເຫຍື່ອຊ້ຳຊ້ອນ.
- ✓ ໃຊ້ຄຳຖາມທີ່ເຂົ້າໃຈງ່າຍ ເໝາະສົມກັບເພດ, ອາຍຸ ຂອງຜູ້ຖືກສຳພາດ.
- ✓ ຫຼີກລ້ຽງບັນດາຄຳຖາມທີ່ມີລັກສະນະຊີ້ນຳ, ຊັກຈູງ, ຄຳຖາມແບບກົດດັນ ແລະ ໃຊ້ຄຳຖາມປິດ.
- ✓ ຮັບປະກັນໃຫ້ມີເວລາພຽງພໍສຳລັບການສຳພາດ.
- ✓ ສຳພາດເດັກບໍ່ຄວນໃຊ້ເວລາເກີນ 90 ນາທີ ແລະ ການດຳເນີນຄະດີຕ້ອງສຳເລັດພາຍໃນ 30 ວັນ.
- ✓ ມີສິ່ງອຳນວຍຄວາມສະດວກທີ່ເປັນໄປໄດ້ ເພື່ອສ້າງພື້ນທີ່ປອດໄພໃຫ້ຜູ້ຖືກເຄາະຮ້າຍເຊັ່ນ: ນ້ຳດື່ມ, ຜ້າຫົ່ມ ຖ້າອາກາດໜາວ, ເປັນຕົ້ນ. ໃນຂະນະດຽວກັນຕ້ອງໝັ້ນໃຈວ່າ ຜູ້ຖືກເຄາະຮ້າຍບໍ່ຖືກສຳຜັດ ຫຼື ແຕະຕ້ອງໃດໆທາງຮ່າງກາຍ.
- ✓ ໃນການສຳພາດຜູ້ຖືກເຄາະຮ້າຍຫາກມີອາການຜິດປົກກະຕິເຊັ່ນ: ເປັນລົມ, ເປັນວິນ ຫຼື ຕ້ອງການຢາກຢຸດການໃຫ້ສຳພາດ ຜູ້ສຳພາດຕ້ອງຢຸດການສຳພາດທັນທີ.
- ✓ ຫຼີກເວັ້ນການນຳໃຊ້ຄຳສັບສະເພາະທາງ, ຕ້ອງອະທິບາຍຄຳສັບເຫລົ່ານັ້ນດ້ວຍຄຳເວົ້າທີ່ເຂົ້າໃຈງ່າຍ.
- ✓ ຫຼີກເວັ້ນການມີອັກຄະຕິ ແລະ ຕັດສິນຕີລາຄາຜູ້ຖືກເຄາະຮ້າຍ.
- ✓ ໃນເວລາສຳພາດອາດພົບກັບຫຼາຍເຫດການທີ່ຜິດປົກກະຕິເຊັ່ນ, ຜູ້ເຄາະຮ້າຍໂສກເສົ້າ, ບໍ່ສະບາຍ, ເປັນວິນ, ໃຈຮ້າຍ ແລະ ອື່ນໆ ເຈົ້າໜ້າທີ່ຕຳຫລວດບໍ່ຄວນສະແດງຄຳຄິດເຫັນ ຫຼື ມີການຕອບໂຕ້ໃດໆ.
- ✓ **ຫຼີກລ້ຽງການກ່າວໂທດຜູ້ຖືກເຄາະຮ້າຍ:** ການກ່າວໂທດແມ່ນ ການກ່າວວິຈານຜູ້ຖືກເຄາະຮ້າຍ ຕໍ່ອາຊະຍາກຳທີ່ເກີດຂຶ້ນກັບພວກເຂົາເອງ. ການກ່າວໂທດດັ່ງກ່າວອາດມີຜົນເສຍຫາຍທາງລົບ ຕໍ່ເຈົ້າໜ້າທີ່ຜູ້ໃຫ້ບໍລິການດ້ານກົດໝາຍ, ການແພດ ແລະ ຈິດຕະແພດ, ລວມທັງຈາກສື່ ແລະ ສະມາຊິກໃນຄອບຄົວຂອງພວກເຂົາເອງ ແລະ ຄົນທີ່ຮູ້ຈັກອື່ນໆ. ຕົວຢ່າງຂອງການກ່າວໂທດຜູ້ຖືກເຄາະເຊັ່ນ: ການແຕ່ງຕົວຂອງລາວ, ການອອກໄປນອກຕອນກາງຄ່ຳກາງຄືນຄົນດຽວ, ການບໍ່ຟັງຄວາມຜົວຂອງຕົນ
- ✓ ໃຫ້ເຂົ້າໃຈວ່າ ການປະພຶດຕົວທີ່ "ປົກກະຕິ" ພວກເຂົາອາດຈະວິຕົກກັງວົນ ແລະ ເສຍໃຈ ຫຼື ອາດຈະຢູ່ໃນສະພາວະທີ່ຕື່ນຢ້ານ/ເຈັບປວດ ຫຼື ໃຈຮ້າຍ, ສັບສົນເປັນຕົ້ນ. ເຈົ້າໜ້າທີ່ຄວນອອກຄຳເຫັນ ຫຼື ບັນທຶກເພື່ອປະກອບໃນການດຳເນີນຄະດີໃນສານໃດໆຕໍ່ກັບປະຕິບັດດັ່ງກ່າວຂອງພວກເຂົາ.
- ✓ ຖ້າຜູ້ຖືກເຄາະຮ້າຍແຈ້ງວ່າລາວຕ້ອງການອອກຈາກທີ່ພັກຂອງລາວ, ເຈົ້າໜ້າທີ່ຄວນອຳນວຍຄວາມສະດວກໃນການຕິດຕໍ່ຫາຄອບຄົວ ຫຼື ໝູ່ເພື່ອນຂອງລາວ ແລະ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຜູ້ຖືກເຄາະຮ້າຍ ເຈົ້າໜ້າທີ່ຕ້ອງມີມາດຕະການທີ່ເໝາະສົມ ແລະ ການຊ່ວຍເຫຼືອຕ່າງໆ ເຊັ່ນ: ສູນພັກເຊົາ, ການຄຸ້ມກັນຜູ້ຖືກເຄາະຮ້າຍຖ້າເປັນໄປໄດ້.

**ກ່ອງທີ 10: ການເຂົ້າໃຈພຶດຕິກຳຂອງຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ**

- ເນື່ອງຈາກມີບາດແຜທາງໃຈ, ຜູ້ຖືກເຄາະຮ້າຍອາດບໍ່ມີພຶດຕິກຳຕາມທີ່ຄາດຫວັງໄວ້. ຍົກຕົວຢ່າງ, ຜູ້ກ່ຽວອາດບໍ່ສະແດງອອກໃຫ້ເຫັນເຖິງຄວາມບໍ່ພໍໃຈຢ່າງຊັດເຈນ ຫຼື ບອກເລົ່າເລື່ອງລາວຕາມລຳດັບເວລາ, ໃນທິດທາງທີ່ສອດຄ່ອງ ຫຼື ແນ່ນອນ ແລະ ທ່ານຈະຕ້ອງເຂົ້າໃຈວ່າລັກສະນະດັ່ງກ່າວ ນີ້ບໍ່ໄດ້ໝາຍຄວາມວ່າພວກເຂົາກຳລັງເວົ້າຂີ້ຕົວະ.
- **ການຕອບສະໜອງຕ່າງໆທີ່ເປັນໄປໄດ້ຂອງຜູ້ຖືກຄວາມຮຸນແຮງ**
  - **ຜູ້ຖືກເຄາະຮ້າຍອາດມີລັກສະນະນິ້ງເສີຍ:** ພວກເຂົາອາດງຽບ ແລະ ສະຫງວນທ່າທີ; ລັງເລທີ່ຈະຕອບຄຳຖາມກ່ຽວກັບການຂົ່ມເຫັງ.

- ຜູ້ຖືກເຄາະຮ້າຍອາດມີການປະຕິເສດ: ພວກເຂົາອາດປະຕິເສດບໍ່ຮັບຮູ້ກ່ຽວກັບເຫດການຄວາມຮຸນແຮງທີ່ເກີດຂຶ້ນ ຫຼື ຫຼຸດຜ່ອນຄວາມຮຸນແຮງຂອງການຂົ່ມຂູ່ລົງ ຫຼື ຖອນຄຳໃຫ້ການຄືນໃນພາຍຫຼັງ. ພວກເຂົາອາດປົກປ້ອງຜູ້ກະທຳຜິດ ແລະ ສະແດງທ່າທີຕໍ່ຕ້ານເຈົ້າໜ້າທີ່ຕຳຫຼວດ.
- ຜູ້ຖືກເຄາະຮ້າຍອາດໃຈຮ້າຍ: ພວກເຂົາອາດໃຈຮ້າຍ ຍ້ອນການລາຍງານຄວາມຮຸນແຮງ ກ່ອນໜ້ານີ້ ບໍ່ໄດ້ພາໃຫ້ມີການລົງໂທດຜູ້ກະທຳຜິດເລີຍ; ພວກເຂົາອາດໃຈຮ້າຍ ຍ້ອນບໍ່ໄດ້ຮັບການຄຸ້ມຄອງ ຈາກການຂົ່ມຂູ່ທີ່ກຳລັງເກີດຂຶ້ນໂດຍຜູ້ກະທຳຜິດ.
- ຜູ້ຖືກເຄາະຮ້າຍອາດເກີດຄວາມຢ້ານກົວ: ຜູ້ຖືກເຄາະຮ້າຍອາດຖືກຜູ້ກະທຳຜິດຂົ່ມຂູ່ ຍ້ອນແຈ້ງໃຫ້ຕຳຫຼວດດຳເນີນຄະດີ; ຜູ້ຖືກເຄາະຮ້າຍຢ້ານວ່າເຈົ້າໜ້າທີ່ຈະບໍ່ດຳເນີນການຫຍັງເລີຍ; ຈະເຊື່ອຜູ້ກະທຳຜິດ ຫຼາຍກວ່າຜູ້ຖືກເຄາະຮ້າຍ ແລະ ຢ້ານອຳນາດການປົກຄອງແຍກລູກຂອງພວກເຂົາເຈົ້າໄປ.

- ຫາກສັງເກດເຫັນສັນຍານວ່າຜູ້ຖືກຄວາມຮຸນແຮງ ກໍອາດເປັນຜູ້ໃຊ້ຄວາມຮຸນແຮງເຊັ່ນກັນ ຕ້ອງຮັບປະກັນໃນຂັ້ນຕອນການເກັບຫຼັກຖານຄື:

- ✓ ຄວາມສ່ຽງຂອງແມ່ຍິງທີ່ກ່າວຫາ ຖືກຮັບຮູ້ ແລະ ພິຈາລະນາ ໃນເວລາສຳພາດຜູ້ຖືກສົງໄສ ແລະ ກ່ອນການຕັດສິນ ກ່ຽວກັບການຈັບກຸມ ແລະ ກັກຂັງ.
- ✓ ເກັບກຳຫຼັກຖານ ແລະ ກຽມຄະດີ ເຊິ່ງຮັບຮູ້ສະພາບຄວາມຮຸນແຮງທີ່ພວກເຂົາປະສົບຢູ່, ຕົວຢ່າງ ຫຼັກຖານທີ່ອາດຈະສະໜັບສະໜູນການກ່າວຫາກ່ຽວກັບການປ້ອງກັນຕົວ.
- ✓ ດຳເນີນການວິເຄາະສະພາບການ ລວມທັງ ການສຶກສາສາຍສຳພັນຕັ້ງແຕ່ຕົ້ນ ລະຫວ່າງຜູ້ຖືກກ່າວຫາ ແລະ ຜູ້ກ່າວຫາ ແລະ ແຮງຈູງໃຈຂອງຜູ້ຖືກກ່າວຫາ ແລະ ຈຸດປະສົງຂອງການໃຊ້ຄວາມຮຸນແຮງ

**ພາຍຫຼັງການສຳພາດ,** ເຈົ້າໜ້າທີ່ຕ້ອງໄດ້ອະທິບາຍ ທາງເລືອກຕ່າງໆຂອງພວກເຂົາທີ່ຈະເລືອກໃນການດຳເນີນຄະດີ ແລະ ຂອບເຂດໜ້າທີ່ຂອງເຈົ້າໜ້າທີ່ຕຳຫຼວດ, ສຳຄັນທີ່ຕ້ອງແຈ້ງໃຫ້ຜູ້ຖືກເຄາະຮ້າຍຮັບຊາບ ເຖິງຂັ້ນຕອນຕໍ່ໄປຂອງການດຳເນີນຄະດີ ແລະ ບົດບາດຂອງການສືບສວນ-ສອບສວນໃນທາງກົດໝາຍ. ສະໜອງຂໍ້ມູນທີ່ສຳຄັນແກ່ຜູ້ຖືກເຄາະຮ້າຍໃນຕອນຕົ້ນຂອງຂະບວນການດຳເນີນຄະດີເພື່ອສິ່ງດັ່ງກ່າວຈະສາມາດຊ່ວຍຜູ້ຖືກເຄາະຮ້າຍສາມາດຕັ້ງຄວາມຫວັງຂອງຕົນຕໍ່ກັບຂະບວນການດຳເນີນຄະດີທັງໝົດ.

### ❖ ການສືບສວນ-ສອບສວນ ສຳລັບຜູ້ຖືກສົງໄສ

ເຈົ້າໜ້າທີ່ຂອງອົງການສືບສວນ-ສອບສວນ ຄວນປະຕິບັດຕາມເນື້ອໃນທີ່ລະບຸໄວ້ໃນ ພາກທີ IV ໝວດທີ 2 ໂດຍສະເພາະແມ່ນ ມາດຕາ 64 ແລະ 65 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເມື່ອມີການສຳພາດຜູ້ຖືກສົງໄສ, ແລະ ດຳເນີນການເອົາໃຈໃສ່ຕາມມາດຕະຖານດັ່ງຕໍ່ໄປນີ້:

- ຮັບປະກັນວ່າ ຜູ້ກະທຳຜິດໄດ້ຮັບການຊີ້ຕົວ, ສຳພາດເອົາຄຳໃຫ້ການ ແລະ ດຳເນີນການຈັບກຸມເມື່ອມີຂໍ້ມູນຖືກຕ້ອງຄົບຖ້ວນ.
- ຫົວຂໍ້ຂອງການສຳພາດຕ້ອງໄດ້ເນັ້ນໃສ່ ຄະດີເປັນຫຼັກ ແລະ ປະເພດຂອງຫຼັກຖານທີ່ເກັບກຳໄດ້.
- ຖ້າເຈົ້າໜ້າທີ່ຕຳຫຼວດບໍ່ມີຂໍ້ມູນພຽງພໍຈາກການສຳພາດເບື້ອງຕົ້ນຈາກຜູ້ຖືກເຄາະຮ້າຍ ແລະ ບັນດາພະຍານ, ຕຳຫຼວດຄວນພິຈາລະນາວ່າ ຄວນດຳເນີນການສຳພາດພະຍານຄົນອື່ນໆ ທີ່ກ່ຽວຂ້ອງກັບຄະດີດັ່ງກ່າວຕື່ມອີກ ຫຼື ບໍ່, ກ່ອນຈະດຳເນີນການສຳພາດຜູ້ຖືກສົງໄສ.
- ກ່ອນທີ່ຈະເລີ່ມດຳເນີນການສຳພາດ, ຜູ້ສຳພາດຈະຕ້ອງອະທິບາຍໃຫ້ກັບຜູ້ຖືກສົງໄສກ່ຽວກັບສິດຂອງພວກເຂົາ ແລະ ພວກເຂົາຈະຍັງເປັນຜູ້ບໍລິສຸດຈົນກວ່າພວກເຂົາຈະຖືກພິສູດແລ້ວວ່າພວກເຂົາກະທຳຜິດແທ້.

- ເນື້ອໃນແນະນຳໃນການເອົາຄຳໃຫ້ການລວມມີ:
  - ໃຫ້ລາຍລະອຽດກ່ຽວກັບປະຫວັດສ່ວນຕົວຕໍ່ເຈົ້າໜ້າທີ່ຕຳຫຼວດ.
  - ຂໍໃຫ້ຜູ້ກະທຳຜິດອະທິບາຍເຖິງສາຍພົວພັນກັບຜູ້ຖືກຄວາມຮຸນແຮງ.
  - ຂໍໃຫ້ຜູ້ກະທຳຜິດອະທິບາຍລາຍລະອຽດກ່ຽວກັບການໃຊ້ຄວາມຮຸນແຮງ.
- ຜູ້ກະທຳຜິດທີ່ເສບຢາເສບຕິດ, ເສຍຈິດ ຕ້ອງໄດ້ຮັບການປະເມີນຈາກແພດເພື່ອຢັ້ງຢືນວ່າເຂົາປ່ວຍແທ້ ແລະ ຖ້າຈຳເປັນ ພວກເຂົາຕ້ອງໄດ້ຮັບການປິ່ນປົວ. ເມື່ອຫາຍດີແລ້ວກໍ່ຕ້ອງນຳເອົາຕົວຜູ້ກ່ຽວມາດຳເນີນຄະດີຕາມລະບຽບກົດໝາຍ.

### ສິ່ງທີ່ຄວນເອົາໃຈໃສ່ເປັນພິເສດ ສຳລັບຜູ້ຖືກເຄາະຮ້າຍທີ່ເປັນເດັກ

- ໃນເວລາສຳພາດເດັກ ທີ່ເປັນຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ ການສຳພາດຕ້ອງດຳເນີນໄປຢ່າງນຸ້ມນວນ ແລະ ເໝາະສົມຕໍ່ເດັກໂດຍອີງຕາມໄວອາຍຸ:
  - ຫ້ອງສຳພາດ ແລະ ການສຳພາດທີ່ເປັນມິດຕໍ່ກັບເດັກ.
  - ການເອົາຄຳໃຫ້ການໃນແຕ່ລະຄັ້ງຄວນເອົາໃຈໃສ່ຕໍ່ເດັກ ແລະ ດຳເນີນດ້ວຍວິທີການເປີດເຜີຍໂດຍປາສະຈາກການບັງຄັບ ຫຼື ການນາບຂູ່ເດັກ. ຫຼີກລ້ຽງການໃຊ້ຄຳເວົ້າທີ່ເປັນການແຕະຕ້ອງເຖິງກຽດສັກສີ ແລະ ຈິດໃຈຂອງເດັກ.
  - ມີສ່ວນຮ່ວມຂອງພໍ່/ແມ່ ແລະ ຜູ້ປົກຄອງທີ່ບໍ່ແມ່ນຜູ້ກະທຳຜິດ, ຜູ້ຕາງໜ້າທາງກົດໝາຍ ຫຼື ອົງການໃຫ້ການຊ່ວຍເຫຼືອເດັກ.
  - ການບໍລິການທາງການແພດ, ຈິດຕະວິທະຍາ-ສັງຄົມ ແລະ ຊ່ວຍເຫຼືອຜູ້ຖືກຄວາມຮຸນແຮງເໝາະສົມກັບອາຍຸ.
  - ຕ້ອງຮັກສາຄວາມລັບ ແລະ ຈຳກັດການເປີດເຜີຍຂໍ້ມູນທີ່ພົວພັນກັບເດັກຍິງ.

#### ❖ ສະຫຼຸບການສືບສວນ-ສອບສວນ ແລະ ສຳນວນຄະດີ

**ກ່ອງທີ 11: ຂອບເຂດນິຕິກຳຂອງ ສປປ ລາວຕໍ່ການສະຫຼຸບການສືບສວນ-ສອບສວນ**

- ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ
  - ມາດຕາ 150 ໃນການສະຫຼຸບການສືບສວນ-ສອບສວນ ເຈົ້າໜ້າທີ່ຕຳຫຼວດຈະຕ້ອງປະກອບສຳນວນຄະດີ ແລະ ສົ່ງໃຫ້ເຈົ້າໜ້າທີ່ໄອຍະການພາຍໃນ 3 ວັນ.
  - ການຈັບຕົວ ຄວນດຳເນີນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 139
  - ຜູ້ຖືກເຄາະຮ້າຍ ຫຼື ຕົວແທນຂອງພວກເຂົາຄວນດຳເນີນການຮ້ອງຂໍຄ່າເສຍຫາຍຕໍ່ກັບຄວາມຮຸນແຮງທີ່ເກີດຂຶ້ນ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 103

ຄະນະຄຸ້ມຄອງ ແລະ ປະສານງານ ສຳລັບແມ່ຍິງທີ່ຖືກຄວາມຮຸນແຮງຂັ້ນບ້ານຈະຕ້ອງໄດ້ລາຍງານຄະດີໃຫ້ກັບເຈົ້າໜ້າທີ່ຕຳຫຼວດ ແລະ ຮັບປະກັນໃຫ້ມີການຕິດຕາມຕໍ່ກັບຄະດີດັ່ງກ່າວ ໂດຍເຈົ້າໜ້າທີ່ຕຳຫຼວດ ແລະ ອົງການປົກຄອງບ້ານ ຢ່າງໜ້ອຍເປັນເວລາ 4 ອາທິດ ຈົນກວ່າ ຜູ້ຖືກເຄາະຮ້າຍຮູ້ສຶກປອດໄພ ແລະ ບໍ່ມີຄວາມສ່ຽງຕໍ່ພວກເຂົາອີກແລ້ວ ເຊິ່ງລວມທັງການຕິດຕໍ່ສື່ສານກັບພວກເຂົາປະຈຳອາທິດ ເພື່ອຮັບປະກັນໃນການປົກປ້ອງແກ່ພວກເຂົາ.

ທັງຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດ ຄວນໄດ້ຮັບການແຈ້ງເຖິງຜົນຂອງການສືບສວນ-ສອບສວນດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ.

ອີງຕາມການສືບສວນ-ສອບສວນເຈົ້າໜ້າທີ່ອາດຈະຕ້ອງດຳເນີນການຈັບກຸມຜູ້ກະທຳຜິດຕາມມາດຕາທີ 139 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ເມື່ອມີການຕັດສິນໃຫ້ມີການຈັບກຸມ, ເຈົ້າໜ້າທີ່ຄວນຄຳນຶງເຖິງຄວາມປອດໄພຂອງຜູ້ຖືກເຄາະຮ້າຍເປັນບູລິມະສິດສຳຄັນ.

ໃນລະຫວ່າງການສືບສວນ-ສອບສວນ, ຜູ້ຖືກເຄາະຮ້າຍຫຼືຜູ້ຕາງໜ້າຂອງຜູ້ກ່ຽວມີສິດຮ້ອງຂໍຄ່າເສຍຫາຍທາງແພ່ງເນື່ອງມາຈາກການກະທຳຜິດທາງອາຍາໃນເວລາດຳເນີນການສືບສວນ-ສອບສວນ ອີງຕາມມາດຕາ 103 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ການຮ້ອງຂໍຄ່າເສຍຫາຍສາມາດເຮັດເປັນລາຍລັກອັກສອນ ຫຼື ທາງປາກເປົ່າກໍ່ໄດ້. ໃນກໍລະນີການຮ້ອງຂໍຄ່າເສຍຫາຍທາງປາກເປົ່າຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການຕ້ອງເຮັດບົດບັນທຶກເອົາການຮ້ອງຂໍດັ່ງກ່າວຢ່າງລະອຽດ ແລະ ຄົບຖ້ວນ, ບົດບັນທຶກກ່ຽວກັບການຮ້ອງຂໍຄ່າເສຍຫາຍໃຫ້ເກັບໄວ້ໃນສຳນວນຄະດີ.

### 4.5.2. ຂະບວນການກ່ອນການພິຈາລະນາຕັດສິນຄະດີ

**ກ່ອງທີ 12: ຂອບເຂດນິຕິກຳ ສປປ ລາວ ຕໍ່ກັບຂະບວນການກ່ອນການພິຈາລະນາຄະດີ: ການຮ້ອງຟ້ອງຕໍ່ຜູ້ກະທຳຜິດ**

ອີງຕາມ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ພາກທີ VII ໝວດທີ I ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ (ມາດຕາ 152, 153 ແລະ 154)

**ມາດຕາ 152 ກຳນົດເວລາ ໃນການຄົ້ນຄວ້າຄະດີ ແລະ ການລົງຄຳເຫັນ**

ຫົວໜ້າອົງການໄອຍະການ ຕ້ອງຄົ້ນຄວ້າຄະດີທີ່ໄດ້ຮັບ ຈາກອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການຢ່າງຊ້າບໍ່ໃຫ້ເກີນສິບຫ້າວັນນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປແລ້ວຕ້ອງອອກຄຳສັ່ງໃດໜຶ່ງ ດັ່ງນີ້:

1. ຖ້າຫາກເຫັນວ່າການສືບສວນ-ສອບສວນຄະດີຍັງບໍ່ທັນຄົບຖ້ວນນັ້ນຫົວໜ້າອົງການໄອຍະການຕ້ອງສົ່ງສຳນວນຄະດີຄືນໃຫ້ອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການ ພ້ອມດ້ວຍປະເດັນການສືບສວນ-ສອບສວນ ເພີ່ມເຕີມ;
2. ຖ້າຫາກເຫັນວ່າມີສາເຫດທີ່ພາໃຫ້ໂຈະການສືບສວນ-ສອບສວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 146 ຂອງກົດໝາຍສະບັບນີ້ ຫົວໜ້າອົງການໄອຍະການ ຕ້ອງອອກຄຳສັ່ງໂຈະການດຳເນີນຄະດີ;
3. ຖ້າຫາກເຫັນວ່າ ມີສາເຫດທີ່ພາໃຫ້ຊັດມ້ຽນຄະດີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 148 ຂອງກົດໝາຍສະບັບນີ້ຫົວໜ້າອົງການໄອຍະການ ຕ້ອງອອກຄຳສັ່ງຊັດມ້ຽນຄະດີ;
4. ຖ້າຫາກເຫັນວ່າ ມາດຕະການສະກັດກັ້ນ ຊຶ່ງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານໄອຍະການ ໄດ້ນຳໃຊ້ນັ້ນຍັງບໍ່ທັນສອດຄ່ອງກັບສະພາບຂອງຄະດີແລ້ວ ຫົວໜ້າອົງການໄອຍະການ ກໍມີສິດ ປ່ຽນແປງ, ເພີ່ມເຕີມ, ຍົກເລີກ ຫຼື ລຶບລ້າງ ມາດຕະການດັ່ງກ່າວ,
5. ຖ້າຫາກເຫັນວ່າ ມີຂໍ້ມູນຫຼັກຖານພຽງພໍ ຮັດກຸມແລ້ວຫົວໜ້າອົງການໄອຍະການ ຕ້ອງອອກຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານ.

ພາຍຫຼັງໄດ້ລົງຄຳເຫັນໃດໜຶ່ງຕາມທີ່ໄດ້ກ່າວມານີ້ແລ້ວ ຫົວໜ້າອົງການໄອຍະການ ຕ້ອງແຈ້ງໃຫ້ ຜູ້ຖືກຫາ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງ ພາຍໃນເວລາ ສາມວັນ ລັດຖະການ ນັບແຕ່ວັນອອກຄຳສັ່ງເປັນຕົ້ນໄປ.

ຄູ່ຄວາມມີສິດ ເບິ່ງສຳນວນຄະດີ, ອ່ານຄຳສັ່ງ ຂອງຫົວໜ້າອົງການໄອຍະການ, ຈົດກ່າຍ ຫຼື ສຳເນົາເອກະສານໃນສຳນວນຄະດີ.

ອົງການໄອຍະການ ຕ້ອງສົ່ງຄຳສັ່ງຟ້ອງ ແລະ ສຳນວນຄະດີ ພ້ອມດ້ວຍຂອງກາງ ໄປຍັງສານ ພາຍໃນເວລາສາມວັນ ລັດຖະການ ນັບແຕ່ວັນໄດ້ອອກຄຳສັ່ງຟ້ອງ ເປັນຕົ້ນໄປ.

ໃນກໍລະນີທີ່ເຫັນວ່າ ຄະດີທີ່ກຳລັງຄົ້ນຄວ້າພິຈາລະນາຢູ່ນັ້ນ ຫາກບໍ່ຢູ່ໃນສິດ ແລະ ໜ້າທີ່ຂອງ ຕົນ ຫົວໜ້າອົງການໄອຍະການ ຕ້ອງສົ່ງສຳນວນຄະດີໄປຍັງ ອົງການໄອຍະການ ທີ່ມີສິດ ແລະ ໜ້າທີ່ ເປັນ ຜູ້ດຳເນີນ.

ກຳນົດເວລາໃນການຄົ້ນຄວ້າຄະດີ ແລະ ການລົງຄຳເຫັນ ຂອງອົງການໄອຍະການ ໃນຂັ້ນອຸທອນ ແລະ ຂັ້ນລົບລ້າງ ຢ່າງຊ້າບໍ່ໃຫ້ເກີນ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີ ເປັນຕົ້ນໄປ.

### ມາດຕາ 153 (ປັບປຸງ) ການສົ່ງສຳນວນຄະດີຄືນ ເພື່ອໃຫ້ສືບສວນ-ສອບສວນເພີ່ມເຕີມ

ພາຍຫຼັງໄດ້ຄົ້ນຄວ້າສຳນວນຄະດີແລ້ວ ອົງການໄອຍະການ ອາດສົ່ງສຳນວນຄະດີຄືນ ໃຫ້ອົງການ ສືບສວນ-ສອບສວນ ເພື່ອສືບສວນ-ສອບສວນເພີ່ມເຕີມ ໃນກໍລະນີ ດັ່ງນີ້:

1. ປະກອບຂໍ້ມູນຫຼັກຖານຍັງບໍ່ທັນຄົບຖ້ວນ ຊຶ່ງອົງການໄອຍະການ ບໍ່ສາມາດດຳເນີນການສືບ ສວນ-ສອບສວນເພີ່ມເຕີມ ດ້ວຍຕົນເອງໄດ້;
2. ມີພື້ນຖານໃນການເປີດການສືບສວນ-ສອບສວນ ໃສ່ຜູ້ຖືກຫາ ຫຼື ຜູ້ຮ່ວມມືອື່ນ ໃນຄະດີດຽວ ກັນ ທີ່ຍັງບໍ່ທັນໄດ້ນຳຕົວມາດຳເນີນຄະດີ;
3. ມີການລະເມີດກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ໃນການສົ່ງສຳນວນຄະດີຄືນ ໃຫ້ອົງການສືບສວນ-ສອບສວນ ຫົວໜ້າອົງການໄອຍະການ ຕ້ອງ ເຮັດປະເດັນການສືບສວນ-ສອບສວນເພີ່ມເຕີມ.

ອົງການສືບສວນ-ສອບສວນ ຕ້ອງສົ່ງສຳນວນຄະດີພ້ອມທັງບົດສະຫຼຸບຜົນຂອງການສືບສວນ-ສອບສວນເພີ່ມເຕີມ ໄປຍັງອົງການໄອຍະການທີ່ກ່ຽວຂ້ອງ ພາຍໃນເວລາສອງເດືອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 110 ວັກສາມຂອງກົດໝາຍສະບັບນີ້.

### ມາດຕາ 154 ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ

ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແມ່ນ ການອອກຄຳສັ່ງ ໂດຍຫົວໜ້າອົງການໄອຍະການ ຊຶ່ງຕັ້ງ ຂໍ້ກ່າວຫາໃສ່ຜູ້ຖືກຫາເພື່ອໃຫ້ສານພິຈາລະນາຕັດສິນ.

ຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຕ້ອງມີເນື້ອໃນ ດັ່ງນີ້:

1. ວັນ, ເດືອນ, ປີ ແລະ ສະຖານທີ່ ອອກຄຳສັ່ງຟ້ອງ;
2. ຊື່ ນາມສະກຸນ, ໜ້າທີ່ ແລະ ຕຳແໜ່ງ ພ້ອມທັງລາຍເຊັນ ຂອງຜູ້ອອກຄຳສັ່ງຟ້ອງ;
3. ຊື່ ແລະ ນາມສະກຸນ ຂອງຜູ້ຖືກຫາ, ອາຍຸ, ສັນຊາດ, ເຜົ່າ, ອາຊີບ, ເລກບັດປະຈຳຕົວ ຫຼື ສຳມະ ໂນຄົວ, ທີ່ຢູ່;

4. ຂໍ້ກ່າວຫາ, ວັນ, ເດືອນ, ປີ ກັກຂັງ, ປ່ອຍຕົວພາງ, ສະຖານທີ່ກັກຂັງ, ມາດຕາ ປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ.

ຫົວໜ້າອົງການໄອຍະການ ຕ້ອງແຈ້ງຄຳສັ່ງຟ້ອງ ໃຫ້ຜູ້ຖືກຫາ ຫຼື ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງຜູ້ກ່ຽວ ແລ້ວໃຫ້ລົງລາຍເຊັນຮັບຮູ້ ພາຍໃນເວລາ ສາມວັນ ລັດຖະການ ກ່ອນການສົ່ງສຳນວນຄະດີໃຫ້ສານ, ໃນກໍລະນີທີ່ບໍ່ລົງລາຍເຊັນໃນຄຳສັ່ງຟ້ອງ ກໍໃຫ້ບັນທຶກໄວ້.

ໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຕ້ອງສົ່ງສຳນວນຄະດີ ແລະ ຂອງກາງໄປພ້ອມ ເພື່ອໃຫ້ສານພິຈາລະນາຕາມກົດໝາຍ.

ໄອຍະການປະຊາຊົນອາດມີການດຳເນີນງານຫຼາຍຢ່າງໃນຄະດີອາຍາ ແລະ ສິ່ງສຳຄັນແມ່ນພວກເຂົາຕ້ອງຮັບຮູ້ເຖິງຜົນກະທົບຂອງແຕ່ລະການຕັດສິນໃຈຂອງພວກເຂົາທີ່ອາດກໍ່ໃຫ້ເກີດຄວາມສ່ຽງຕໍ່ຜູ້ຖືກຄວາມຮຸນແຮງ. ສິ່ງສຳຄັນແມ່ນໄອຍະການຈະຕ້ອງເຂົ້າໃຈຜົນສະທ້ອນຂອງຜົນໄດ້ຮັບ ແລະ ນຳໃຊ້ຜົນດັ່ງກ່າວ ເພື່ອສະໜັບສະໜູນການປຶກສາຫາລືກັບຜູ້ຖືກຄວາມຮຸນແຮງ. ສິ່ງນີ້ຈະຊ່ວຍໃຫ້ໄອຍະການປະຊາຊົນ ເຂົ້າໃຈສະພາບການ ແລະ ຮູບແບບໂດຍລວມຂອງເຫດການຄວາມຮຸນແຮງທີ່ເກີດຂຶ້ນ.

ໃຫ້ໂອກາດຜູ້ຖືກເຄາະຮ້າຍ ໃນການເລົ່າ ແລະ ຮັບຟັງເລື່ອງເລົ່າຂອງລາວ ກ່ອນທີ່ຈະມີການຕັດສິນໃຈໃດໆກ່ຽວກັບຄະດີ. ໃຫ້ມີການຮັບປະກັນການເກັບກຳຫຼັກຖານທັງໝົດທີ່ມີຢູ່ ໃນເວລາສຶກສາຄວາມໜ້າເຊື່ອຖືຂອງຄະດີ ສຳລັບຕັດສິນຄະດີ ແລະ ຮັບປະກັນວ່າ ໜ້າທີ່ຮັບຜິດຊອບພື້ນຖານ ສຳລັບການລິເລີ່ມການຕັດສິນຄະດີ ແມ່ນຂຶ້ນກັບຜູ້ສະໜອງການບໍລິການດ້ານຍຸຕິທຳ ແລະ ບໍ່ແມ່ນຂຶ້ນຢູ່ກັບຜູ້ຖືກຄວາມຮຸນແຮງ. ໃຫ້ຂໍ້ມູນຜູ້ຖືກຄວາມຮຸນແຮງກ່ຽວກັບການຕັດສິນໃຈທີ່ພົວພັນກັບການຕັດສິນຄະດີ ຍົກເວັ້ນວ່າລາວແຈ້ງວ່າບໍ່ຕ້ອງການຂໍ້ມູນນີ້.

ທັດສະນະແນວຄິດຄອງເດີມ ແລະ ທັດສະນະຄະຕິທາງລົບ ທີ່ອີງໃສ່ເລື່ອງເລົ່າ ອາດສົ່ງຜົນກະທົບຕໍ່ວິທີທາງ ໃນການລວບລວມຫຼັກຖານຂອງຕຳຫຼວດ ແລະ ສິ່ງທີ່ຖືວ່າເປັນຫຼັກຖານ, ເຊັ່ນດຽວກັບ ການປະເມີນຄະດີ ຂອງໄອຍະການ. ສະນັ້ນ, ສິ່ງສຳຄັນແມ່ນໄອຍະການຈະຕ້ອງຮັບຮູ້ເຖິງຄວາມລຳອຽງຕ່າງໆ ໃນເວລາດຳເນີນການປະເມີນລັກສະນະຂອງຜູ້ຖືກຄວາມຮຸນແຮງ, ພຶດຕິກຳ ແລະ ຄວາມໜ້າເຊື່ອຖືຂອງພວກເຂົາ ແລະ ທຸກຫຼັກຖານທີ່ກ່ຽວຂ້ອງກັບປະຫວັດທາງເພດ ແລະ ລົດນິຍົມທາງເພດຂອງຜູ້ຖືກຄວາມຮຸນແຮງ ຈະຕ້ອງບໍ່ຖືກນຳມາໃຊ້ເພື່ອເປັນສິ່ງຫັກລ້າງຄວາມໜ້າເຊື່ອຖືຕໍ່ຫຼັກຖານທີ່ຜູ້ຖືກຄວາມຮຸນແຮງນຳສະເໜີ. ໄອຍະການປະຊາຊົນຕ້ອງຮັບປະກັນໃຫ້ການປະເມີນບໍ່ຢູ່ບົນພື້ນຖານຂອງການມີແນວຄິດຄອງເດີມທີ່ຊັກນຳໃຫ້ເຂົ້າໃຈວ່າ "ຜູ້ຖືກຄວາມຮຸນ ແຮງທີ່ແທ້ຈິງ" ແລະ "ພຶດຕິກຳເໝາະສົມ" ຄວນເປັນແນວໃດ.

ໄອຍະການປະຊາຊົນ ຈະຕ້ອງປຶກສາຫາລືບັນຫາດ້ານຄວາມຕ້ອງການ ແລະ ຄວາມຢ້ານຂອງຜູ້ຖືກຄວາມຮຸນແຮງ, ຕ້ອງຮັບປະກັນໃຫ້ຜູ້ຖືກຄວາມຮຸນແຮງສາມາດໃຫ້ການຕໍ່ສານ ໂດຍບໍ່ຈຳເປັນຕ້ອງມີໜ້າຢູ່ໃນຫ້ອງ ພິຈາລະນາຄະດີກໍ່ໄດ້ ຫຼື ຢ່າງໜ້ອຍຕ້ອງບໍ່ໃຫ້ຜູ້ກະທຳຜິດມີໜ້າຢູ່ໃນຫ້ອງພິຈາລະນາຄະດີ.

ຖ້າໄອຍະການຊັດມ້ຽນຄະດີ, ອົງການໄອຍະການຕ້ອງໄດ້ມີການແຈ້ງຕໍ່ຜູ້ຖືກເຄາະຮ້າຍ ແລະ ຜູ້ປະສານງານຂັ້ນເມືອງ. ໄອຍະການຄວນແນະນຳໃຫ້ລາວຂໍຄວາມຊ່ວຍເຫຼືອດ້ານກົດໝາຍ ເພື່ອອຸທອນ ຫຼື ດຳເນີນການໄກ່ເກ່ຍຕາມມາດຕະຖານທີ່ໄດ້ລະບຸໄວ້ໃນໜ້າ 25 ຂອງມາດຕະຖານຂັ້ນຕອນທານດຳເນີນງານສະບັບນີ້ ກ່ຽວກັບການໄກ່ເກ່ຍ. ມີການແຈ້ງໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບຮູ້ເຖິງທຸກໆການຕັດສິນໃຈ ກ່ຽວການສັ່ງຟ້ອງຄະດີ ຍົກເວັ້ນຫາກລາວບໍ່ຕ້ອງການຮັບຮູ້ເຖິງຂໍ້ມູນດັ່ງກ່າວ.

### 4.5.3. ຂະບວນການພິຈາລະນາຄະດີ

#### 4.5.3.1. ການຮັບສຳນວນ ແລະ ພິຈາລະນາຄະດີ

**ກ່ອງ 13: ຂອບເຂດນິຕິກຳ ສປປ ລາວ ຕໍ່ຂັ້ນຕອນການພິຈາລະນາຄະດີ:**

**ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ**

ມາດຕາ 164, ຄະດີອາຍາຈະໄດ້ຮັບການພິຈາລະນາໄດ້ກໍຕໍ່ເມື່ອມີຄຳສັ່ງຟ້ອງຈາກໄອຍະການປະຊາຊົນ, ສານປະຊາຊົນ ແລະ ສານທະຫານ ຕ້ອງໄດ້ພິຈາລະນາ ແລະ ດຳເນີນການຕັດສິນພາຍໃນ 30 ວັນ ນັບແຕ່ມື້ໄດ້ຮັບຄຳສັ່ງຟ້ອງ (ມາດຕາ 165).

ດັ່ງທີ່ໄດ້ລະບຸໄວ້ໃນມາດຕາ167ນັບແຕ່ໄດ້ຮັບສຳນວນຄະດີຈາກໄອຍະການ,ຜູ້ພິພາກສາຈະຕ້ອງໄດ້ກວດກາ ຊັ່ງຊາ ຕີລາຄາຫຼັກຖານ ຖ້າເຫັນວ່າຄົບຖ້ວນແລ້ວ ຈຶ່ງນຳສະເໜີໃຫ້ປະທານສານ. ຈາກນັ້ນ, ປະທານສານຈະພິຈາລະນາຕົກລົງຕາມແຕ່ລະກໍລະນີດັ່ງນີ້:

1) ສົ່ງສຳນວນຄະດີຄືນໃຫ້ອົງການໄອຍະການປະຊາຊົນເພື່ອທຳການສືບສວນ-ສອບສວນເພີ່ມເຕີມ
2) ສົ່ງສຳນວນຄະດີຄືນໃຫ້ອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງເພີ່ມເຕີມ
3) ຕົກລົງວັນ, ເວລາ ນຳເອົາຄະດີອອກມາພິຈາລະນາໃນທີ່ປະຊຸມສານ (ມາດຕາ 169)- ເບິ່ງເພີ່ມເຕີມທີ່ພາກຂະບວນການດຳເນີນຄະດີ

ພາຍຫຼັງປະທານສານ ໄດ້ອອກຂໍ້ຕົກລົງໃດໜຶ່ງດັ່ງທີ່ກ່າວມາຂ້າງເທິງນີ້ແລ້ວ ກໍຕ້ອງແຈ້ງໃຫ້ຈຳເລີຍ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີຊາບ ພາຍໃນເວລາ 3 ວັນ ນັບແຕ່ວັນອອກຂໍ້ຕົກລົງ ເປັນຕົ້ນໄປ.

ໃນການກວດກາ, ຊັ່ງຊາຕີລາຄາຫຼັກຖານນັ້ນ ຖ້າຫາກຍັງສົງໄສວ່າຜູ້ຖືກຫາ ຫຼື ຈຳເລີຍອາດຈະເປັນຜູ້ກະທຳຜິດ ຫຼື ບໍ່ເປັນຜູ້ກະທຳຜິດນັ້ນກໍ່ຕ້ອງປ່ອຍຕົວຜູ້ກ່ຽວ ຫຼື ໃຫ້ຜູ້ກ່ຽວພົ້ນຂໍ້ກ່າວຫາ.

ເຖິງແມ່ນວ່າຜູ້ຖືກຫາຮັບຄຳສາລະພາບການກະທຳຜິດ,ໃນການດຳເນີນຄະດີອາຍາບໍ່ຄວນຖືເອົາການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍເປັນຕົ້ນຕໍແຕ່ຕ້ອງຊອກຫາຫຼັກຖານອື່ນມາຢັ້ງຢືນການກ່າວຫາ ຫຼື ການກະທຳຜິດຂອງຜູ້ກ່ຽວຕື່ມອີກ.

ຫຼັກຖານຂໍ້ມູນໃດກໍຕາມທີ່ໄດ້ມາດ້ວຍວິທີການທີ່ລະເມີດກົດໝາຍແມ່ນຈະບໍ່ຖືເປັນຫຼັກຖານໃນຄະດີອາຍາ ແລະ ບໍ່ສາມາດໃຊ້ເປັນພື້ນຖານໃນການດຳເນີນຄະດີອາຍາ.

#### 4.5.3.2. ການເປີດປະຊຸມສານ

ເມື່ອຄົ້ນຄວ້າສຳນວນຄະດີຄົບຖ້ວນ ແລະ ຊັດເຈນແລ້ວ, ປະທານສານ ຈະອອກຄຳສັ່ງໃຫ້ນຳເອົາຄະດີອອກມາພິຈາລະນາໃນທີ່ປະຊຸມສານ,ສານປະຊາຊົນຄວນດຳເນີນຕາມມາດຕາ185ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເພື່ອເປີດ ແລະ ດຳເນີນການໄຕ່ສວນ.

**ໃນການປະຕິບັດຂັ້ນຕອນຕ່າງໆເຫຼົ່ານັ້ນຄວນເອົາໃຈໃສ່ດຳເນີນປະຕິບັດຕາມມາດຕະຖານຂັ້ນຕອນ**ໂດຍ ການນຳໃຊ້ວິທີດຳເນີນການແບບມີການປະສານງານ ແລະ ເຊື່ອມໂຍງເຊິ່ງກັນ ແລະ ກັນ ໃນຄະດີອາຍາ, ແພ່ງ, ຄອບຄົວ ແລະ ບໍລິຫານ, ໝາຍວ່າ ຈະຕ້ອງມີການຊອກຫາຂໍ້ມູນ ຢ່າງຮັດກຸມ ກ່ຽວກັບ ຂັ້ນຕອນຍຸຕິທຳທີ່ກຳລັງດຳເນີນຢູ່ (ກ່ຽວກັບຄະດີອາຍາ, ແພ່ງ, ຄອບຄົວ, ບໍລິຫານ) ໃນສ່ວນທີ່ກ່ຽວຂ້ອງ.

**ກ່ອງ 14: ຂອບເຂດນິຕິກຳຂອງ ສປປ ລາວ ຕໍ່ຂະບວນການໄຕ່ສວນຄະດີໃນທີ່ປະຊຸມສານ: ສານປະຊາຊົນສູງສຸດ**

**ກົດໝາຍວ່າດ້ວຍ ສານປະຊາຊົນ**

ນິຍາມຂອງ ສານປະຊາຊົນ ແມ່ນໄດ້ຖືກລະບຸໄວ້ໃນມາດຕາ 2

**ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ**

ຂັ້ນຕອນຕ່າງໆກ່ຽວກັບການໄຕ່ສວນຄະດີແມ່ນໄດ້ກຳນົດໃນພາກທີVIII(ມາດຕາ171-203)

- ໝວດທີ 3:ລະບຽບການລວມກ່ຽວກັບການດຳເນີນຄະດີໃນທີ່ປະຊຸມສານ(ມາດຕາ171-184)
- ໝວດທີ 4: ການເປີດປະຊຸມສານ (ມາດຕາ 185-191)
- ໝວດທີ 5: ການໄຕ່ສວນຄະດີໃນທີ່ປະຊຸມສານ (ມາດຕາ 192-200)
- ໝວດທີ 6: ການໂຕ້ຖຽງໃນທີ່ປະຊຸມສານ (ມາດຕາ 201-203)
- ໝວດທີ 7: ການພິຈາລະນາຄະດີໃນຫ້ອງປະຊຸມລັບ ແລະ ການອ່ານຄຳຕັດສິນ (ມາດຕາ 204-210)

**ປະມວນກົດໝາຍອາຍາ**

ຂໍ້ຄວນເອົາໃຈໃສ່: ປະມວນກົດໝາຍອາຍາ ມາດຕາ 392 ການບັງຄັບໃຫ້ຜູ້ອື່ນໃຫ້ຄຳໃຫ້ການ ແລະ ນຳເອົາຫຼັກຖານເທັດມາໃຫ້

**ກົດໝາຍວ່າດ້ວຍການດຳເນີນຄະດີເດັກ**

ເມື່ອເດັກທີ່ຖືກເຄາະຮ້າຍ ຖືກຮຽກໂຕມາສຳພາດ ຄວນປະຕິບັດຕາມຂະບວນການຕ່າງໆຕາມ ມາດຕາ 21 ຂອງກົດໝາຍວ່າດ້ວຍການດຳເນີນຄະດີເດັກ.

## ♦ ການເຂົ້າຮ່ວມຂອງເຈົ້າໜ້າທີ່ໄອຍະການ

- ກວດກາຂັ້ນຕອນຂອງການເປີດປະຊຸມສານ
- ຊັກຖາມຈຳເລີຍກ່ຽວກັບການປະຕິເສດຂໍ້ກ່າວຫາຕາມຄຳສັ່ງຟ້ອງຂອງໄອຍະການ ເພື່ອຢັ້ງຢືນການກະທຳຜິດຂອງຈຳເລີຍ
- ຖະແຫຼງສັ່ງຟ້ອງຈຳເລີຍຕໍ່ຄະນະສານ.
- ເຈົ້າໜ້າທີ່ໄອຍະການຈະຕ້ອງເອົາໃຈໃສ່ ເຖິງສິດທິດ້ານຄວາມເຄົາລົບ ແລະ ຄວາມເປັນສ່ວນຕົວຂອງຜູ້ຖືກເຄາະຮ້າຍ ຢູ່ຕະຫຼອດເວລາ ພ້ອມນັ້ນ ໄອຍະການກໍຍັງຕ້ອງໄດ້ ໂຕ້ແຍ້ງຕໍ່ການຕີລາຄາທີ່ບໍ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍໃນລະຫວ່າງການໄຕ່ສວນ. ທຸກຫຼັກຖານທີ່ກ່ຽວຂ້ອງກັບປະຫວັດທາງເພດ ແລະ ລົດນິຍົມທາງເພດຂອງຜູ້ຖືກເຄາະຮ້າຍຈະຕ້ອງບໍ່ຖືກນຳມາໃຊ້ເພື່ອມາເປັນການໂຕ້ແຍ້ງ ໃນຄວາມໜ້າເຊື່ອຖືຕໍ່ຫຼັກຖານທີ່ຜູ້ເຄາະຮ້າຍຈາກຄວາມຮຸນແຮງນຳມາສະເໜີ.

## ♦ ຜູ້ພິພາກສາ ຄວນເອົາໃຈໃສ່ປະຕິບັດຕາມມາດຕະຖານຕໍ່ໄປນີ້ ໃນຕະຫຼອດຂະບວນການດຳເນີນຄະດີຄື:

- **ວິທີການຊ່ວຍເຫຼືອຜູ້ຖືກເຄາະຮ້າຍເປັນໃຈກາງ**[40]
  - ນຳໃຊ້ທຸກມາດຕະການທີ່ສາມາດປົກປ້ອງຄວາມເປັນສ່ວນຕົວ, ຮັກສາຄວາມລັບ, ຄວາມໂປ່ງໃສ ແລະ ກຽດສັກສີຂອງ ຜູ້ຖືກເຄາະຮ້າຍ.
  - ຕ້ອງມີຄວາມຮູ້ ແລະ ເຂົ້າໃຈຮູບແບບ, ລັກສະນະ, ສາເຫດ ລວມທັງຄວາມສ່ຽງຂອງຄວາມຮຸນແຮງໃນຕໍ່ໜ້າໄດ້ທີ່ອາດສິ່ງຜົນເຮັດໃຫ້ຜູ້ຖືກເຄາະຮ້າຍເກີດຄວາມລັງເລໃຈທີ່ຈະເຂົ້າໃຫ້ຄຳໃຫ້ການໃນສານ.
  - ຕ້ອງມີຄວາມເຂົ້າໃຈຄວາມຕ້ອງການສະເພາະຂອງກຸ່ມທີ່ມີຄວາມສ່ຽງສູງ, ຍຸດທະສາດຜູ້ກະທຳຜິດ ເພື່ອຫຼີກລ່ຽງຄວາມຮັບຜິດຊອບໃນການກະທຳຜິດຂອງພວກເຂົາ, ຄວາມຮັບຜິດຊອບຂອງຜູ້ກະທຳຜິດ ແລະ ອື່ນໆ. ຄວາມເຂົ້າໃຈດັ່ງກ່າວຖືເປັນເຄື່ອງມືທີ່ສຳຄັນ ໃນການຮັບປະກັນໃຫ້ຜົນການຕັດສິນຂອງສານ ບໍ່ຢູ່ບົນພື້ນຖານຂອງແນວຄິດແບບຄອງເດີມ ຫຼື ອັກຄະຕິ.
  - ສະແດງອອກໃຫ້ແມ່ຍິງຮູ້ວ່າ ສານປະຊາຊົນຕີລາຄາສູງຕໍ່ຄວາມກ້າຫານຂອງພວກເຂົາເຈົ້າໃນການເຂົ້າສູ່ຂະບວນການຍຸຕິທຳ, ທັງຍັງສະແດງໃຫ້ເຫັນອີກວ່າ ພວກເຂົາເຈົ້າຕ້ອງໄດ້ຮັບຄວາມເປັນທຳ ແລະ ໃນຕະຫຼອດໄລຍະການພິຈາລະນາຂອງສານ ຈະສາມາດຮັບປະກັນຄວາມປອດໄພຂອງພວກເຂົາໄວ້ໄດ້ ແລະ ສິ່ງດັ່ງກ່າວຈະກາຍເປັນຂໍ້ຄຳນຶງທີ່ສຳຄັນຂອງຜູ້ພິພາກສາໃນການຕັດສິນຄະດີ.
  - ຄຳນຶງເຖິງສິດຜົນປະໂຫຍດຂອງຜູ້ຖືກເຄາະຮ້າຍເປັນໃຈກາງໃນການດຳເນີນຄະດີໃນສານ.
  - ໃນຕະຫຼອດຂອງຂະບວນການດຳເນີນຄະດີທັງໝົດ, ຜູ້ພິພາກສາຄວນໃຊ້ເວລາ ໃນຕອນຕົ້ນກ່ອນເລີ່ມການດຳເນີນຄະດີ ຂໍ້ມູນກ່ຽວກັບຂັ້ນຕອນຂອງການດຳເນີນຄະດີໃນສານໃຫ້ແກ່ຜູ້ຖືກເຄາະຮ້າຍ. ສິ່ງດັ່ງກ່າວເປັນການກຳນົດບັນຍາກາດຂອງການດຳເນີນຄະດີໃນສານ ແລະ ເປັນການຮັບປະກັນໃຫ້ຜູ້ຖືກເຄາະຮ້າຍຮູ້ສຶກປອດໄພ ແລະ ສະບາຍໃຈ.
  - ຜູ້ຖືກເຄາະຮ້າຍອາດຈະໄດ້ຮັບຂໍ້ມູນພື້ນຖານໃນການດຳເນີນຄະດີ ທີ່ມີປະລິມານ ແລະ ຄວາມຊັບຊ້ອນຫຼາຍເກີນໄປ. ສະນັ້ນ, ຜູ້ພິພາກສາ ຕ້ອງເອົາໃຈໃສ່ໃນການໃຊ້ຄຳສັບ ແລະ ພາສາທີ່ເຂົ້າໃຈງ່າຍ. ຄວນມີການສະໜອງນາຍແປພາສາໃຫ້ຜູ້ຖືກເຄາະຮ້າຍບໍ່ສາມາດເວົ້າ ແລະ ເຂົ້າໃຈພາສາລາວ ຊຶ່ງ ສຳຄັນຫຼາຍທີ່ຕ້ອງໄດ້ມີການສະໜອງຂໍ້ມູນກ່ຽວກັບບຸກຄົນທີ່ພວກເຂົາສາມາດຕິດຕໍ່ຫາໄດ້ ແລະ ວິທີໃນການຕິດຕໍ່ເພື່ອໃຫ້ພວກເຂົາສາມາດສະແດງຄຳຄິດຄຳເຫັນ ແລະ ຂໍ້ກັງວົນໃຈກ່ຽວກັບຄະດີ.
  - ຫຼີກລ້ຽງຄຳຖາມທີ່ສິ່ງຜົນກະທົບທາງດ້ານຈິດໃຈຕໍ່ຜູ້ຖືກເຄາະຮ້າຍ. ການດຳເນີນຄະດີຄວນອີງໃສ່ຂໍ້ມູນຈາກເອກະສານທາງນິຕິເວດ ຫຼື ເຈົ້າໜ້າທີ່. ຖ້າເປັນໄປໄດ້, ຈະຕ້ອງໃຫ້ແພດນິຕິວິທະຍາເຂົ້າຮ່ວມໃນໄລຍະການດຳເນີນຂຶ້ນສານຄັ້ງທຳອິດ ຂອງຜູ້ຖືກຄວາມຮຸນແຮງ, ຮ່ວມກັບຕຳຫຼວດ ແລະ ທີ່ປຶກສາຂອງຜູ້ເຄາະຮ້າຍ, ເພື່ອເປັນການຈຳກັດ ຈຳນວນຄັ້ງທີ່ຜູ້ກ່ຽວ ຈະຕ້ອງໄດ້ໃຫ້ການຊໍ້າຄືນກ່ຽວກັບຄວາມຮຸນແຮງທີ່ຕົນໄດ້ຮັບ.
  - ຖືເອົາຄຳໃຫ້ການຂອງຜູ້ຖືກເຄາະຮ້າຍເປັນຫຼັກຖານທີ່ພຽງພໍໃນການພິຈາລະນາຄະດີ ບໍ່ແມ່ນເປັນພຽງແຕ່ເລື່ອງເລົ່າເຫດການທີ່ຕ້ອງການຫຼັກຖານພິສູດ.

- **ຄວາມປອດໄພຂອງຜູ້ຖືກເຄາະຮ້າຍເປັນບູລິມະສິດຕົ້ນຕໍ**
  - ຜູ້ພິພາກສາຈະຕ້ອງໃຫ້ຄວາມສຳຄັນຕໍ່ການປົກປ້ອງ ແລະ ຄວາມປອດໄພເປັນບູລິມະສິດຕົ້ນຕໍ
  - ຜູ້ພິພາກສາ ຈະຕ້ອງມີການປະເມີນຄວາມສ່ຽງຢ່າງຫ້າວຫັນ, ລວມທັງປະເມີນລະດັບຄວາມອັນຕະລາຍ ແລະນຳໃຊ້ມາດຕະການທີ່ມີປະສິດທິພາບ, ພ້ອມທັງຍຸດທະສາດການສະກັດກັ້ນ, ເພື່ອປ້ອງກັນບໍ່ໃຫ້ເກີດຄວາມຮຸນແຮງເພີ່ມເຕີມຂຶ້ນອີກ. ເຖິງແມ່ນວ່າຂັ້ນຕອນດັ່ງກ່າວໄດ້ດຳເນີນໄປແລ້ວກໍຕາມໃນສ່ວນການປະກອບເອກະສານໃນການຕິດຕໍ່ເບື້ອງຕົ້ນ, ຄວນມີການປະກອບເອກະສານຄືນອີກຄັ້ງໃນລະຫວ່າງຂັ້ນຕອນການສຳພາດ ເພື່ອວ່າ ຄວາມສ່ຽງເພີ່ມຂຶ້ນອີກ.

[40] ດັດປັບມາຈາກ ເອກະສານຂອງ UN Women, UNFPA, WHO, UNDP, UNODC ວ່າດ້ວຍ ຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະເດັກຍິງທີ່ຂຶ້ນກັບຄວາມຮຸນແຮງ ເຂົ້າເຖິງໄດ້ທີ່: https://www.unwomen.org/en/digital-library/publications/2015/12/essential-services-package-for-women-and-girls-subject-to-violence

- ຜູ້ພິພາກສາຍັງຕ້ອງໄດ້ຄຳນຶງໄວ້ວ່າ ຄະດີອາຍາ ແມ່ນຈະແນໃສ່ພຽງແຕ່ເຫດການອັນສະເພາະ ຫຼື ເຫດການຄວາມຮຸນແຮງໃດໜຶ່ງເທົ່ານັ້ນ, ຜູ້ຖືກເຄາະຮ້າຍອາດຕ້ອງໄດ້ປະເຊີນກັບຄວາມຮຸນແຮງ ຫຼື ການນາບຂູ່ຕ່າງໆມາເປັນເວລາດົນນານແລ້ວກ່ອນທີ່ຄະດີຄວາມນີ້ຈະຖືກນຳເຂົ້າສູ່ຂະບວນການຕັດສິນທາງກົດໝາຍ.

- **ເຂົ້າໃຈພຶດຕິກຳຂອງຜູ້ຖືກຄວາມຮຸນແຮງ:** ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ ອາດຈະປະພຶດ ຫຼື ມີທ່າທີກິລະຍາຄືກັບຜູ້ຖືກເຄາະຮ້າຍໃນກໍລະນີອື່ນໆ ເນື່ອງຈາກບາດແຜທາງດ້ານຈິດໃຈ. ລາວອາດຈະສະແດງ ຫຼື ບໍ່ສະແດງຄວາມຮູ້ສຶກໂສກເສົ້າ ຫຼື ບໍ່ສາມາດເລົ່າເຖິງເຫດການທີ່ເກີດຂຶ້ນແບບກະທັດຮັດ, ໄດ້ໃຈຄວາມທີ່ຊັດເຈນ ແລະ ຕໍ່ເນື່ອງໄດ້. ເຈົ້າໜ້າທີ່ທຸກຄົນຕ້ອງໄດ້ເຂົ້າໃຈວ່າ ຍ້ອນແນວນັ້ນບໍ່ໄດ້ໝາຍຄວາມວ່າ ລາວກຳລັງເວົ້າຕົວະຢູ່

- **ຫຼີກລ້ຽງການກ່າວໂທດຜູ້ຖືກເຄາະຮ້າຍ:** ການມີຄວາມເຊື່ອໂດຍການຕັ້ງສົມມຸດຕິຖານໄວ້ກ່ອນວ່າ ຜູ້ຖືກເຄາະຮ້າຍ "ທີ່ແທ້ຈິງ" ຄວນປະຕິບັດແນວໃດ ອາດສົ່ງຜົນຕໍ່ການໃຫ້ການຊ່ວຍເຫຼືອທີ່ຍຸຕິທຳ ແລະ ໃຫ້ພວກເຂົາບໍ່ສາມາດພິຈາລະນາຄະດີຄວາມ ໂດຍອີງຕາມຄວາມເປັນຈິງໄດ້. ສິ່ງດັ່ງກ່າວອາດນຳໄປສູ່ການກ່າວໂທດຜູ້ຖືກເຄາະຮ້າຍໄດ້.

- **ຫຼີກລ້ຽງທັດສະນະແນວຄິດຄອງເດີມ**
  - ຄວາມລຳອຽງທາງເພດ, ບໍ່ວ່າຈະຢູ່ໃນຮູບແບບບໍ່ຊັດເຈນ (ບໍ່ຕັ້ງໃຈ) ຫຼື ຊັດເຈນ (ຕັ້ງໃຈ) ກໍ່ຕາມ, ແມ່ນສິ່ງທີ່ຖືກກໍ່ໃຫ້ເກີດຂຶ້ນ ໂດຍຜ່ານທັດສະນະແນວຄິດຄອງເດີມ ແລະ ທັດສະນະຄະຕິກ່ຽວກັບເພດສະພາບ. ຄວາມລຳອຽງທາງເພດ ແລະ ດ້ານອື່ນໆ ທີ່ຖືກສະແດງອອກຢ່າງບໍ່ຕັ້ງໃຈ ອາດກາຍມາເປັນອຸປະສັກສຳຄັນໃນການຮັບປະກັນ ການເຂົ້າເຖິງຂະບວນການຍຸຕິທຳແບບເທົ່າທຽມ.
  - ຮັບຮູ້ວ່າອາດເກີດມີຄວາມຄິດລຳອຽງ, ຂໍ້ສົມມຸດ ແລະ ທັດສະນະແນວຄິດຄອງເດີມຕ່າງໆ ເກີດຂຶ້ນ ແລະ ທີມງານພວກເຂົາກໍຮັບຮູ້ເຊັ່ນດຽວກັນ

- **ພຶດຕິກຳຂອງຜູ້ກະທຳຜິດ**
  - ຜູ້ພິພາກສາຈະຕ້ອງສັງເກດເບິ່ງກົນວິທີທີ່ຜູ້ກະທຳຜິດນຳໃຊ້ ເພື່ອຊັກຈູງລະບົບຍຸຕິທຳ ແລະ ວິທີທີ່ພວກເຂົາປະກົດໂຕໃນສານ.
  - ຜູ້ກະທຳຜິດມັກຈະປະຕິເສດຄວາມຈິງ ຫຼາຍກວ່າສະແດງຄວາມຮັບຜິດຊອບຕໍ່ພຶດຕິກຳຮຸນແຮງຂອງຕົນ.

- **ຂໍ້ຄວນເອົາໃຈໃສ່ພິເສດສຳລັບຜູ້ຖືກເຄາະຮ້າຍທີ່ເປັນເດັກ**
  - ຕ້ອງຖາມຄຳເຫັນຈາກເດັກຜູ້ຖືກເຄາະຮ້າຍ ວ່າເລືອກຈະເຂົ້າການໄຕ່ສວນ ຫຼື ບໍ່
  - ການໄຕ່ສວນຕ້ອງດຳເນີນຢ່າງປິດລັບ
  - ໃຫ້ເດັກນັ່ງໃກ້ພໍ່, ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງ
  - ນຳໃຊ້ຄຳສັບ, ຄຳເວົ້າທີ່ເຂົ້າໃຈງ່າຍ, ມີລັກສະນະເປັນມິດກັບເດັກ ໂດຍບໍ່ໃຫ້ເດັກເກີດຄວາມຢ້ານກົວ, ຫຼີກເວັ້ນການຕັ້ງຄຳຖາມແບບກົດດັນ, ແບບຊີ້ນຳ ຫຼື ຄຳຖາມເປີດ ຫຼື ຄຳຖາມຊັກຈູງ
  - ການໄຕ່ສວນເດັກຜູ້ຖືກເຄາະຮ້າຍ, ເດັກເປັນພະຍານ ຫຼື ເດັກພິການ ສາມາດອະນຸຍາດໃຫ້ສຳພາດຜ່ານວິດີໂອໄດ້. ຖ້າບໍ່ມີເງື່ອນໄຂດັ່ງກ່າວ, ການສຳພາດ ຄວນຫຼີກເວັ້ນການປະເຊີນໜ້າກັບຈຳເລີຍ ດ້ວຍການໃຊ້ຜ້າກັ້ງ ຫຼື ສິ່ງກຳບັງ ຫຼື ໃຫ້ຈຳເລີຍ ອອກຈາກຫ້ອງປະຊຸມສານເສຍກ່ອນ ຫຼື ການສຳພາດຜ່ານວິດີໂອຖ້າມີເງື່ອນໄຂ

- **ການປັບປຸງການຕອບໂຕ້ຂອງສານຍຸຕິທຳ ຕໍ່ຄວາມຮຸນແຮງໃນຄອບຄົວຕໍ່ແມ່ຍິງ**
  - ສິ່ງທີ່ສຳຄັນທີ່ສຸດ, ເນື່ອງຈາກຕຳແໜ່ງອັນສະເພາະຂອງພວກເຂົາໃນລະບົບຍຸຕິທຳ ແລະ ໃນຊຸມຊົນຂອງພວກເຂົາ, ຜູ້ພິພາກສາຖືເປັນຜູ້ທີ່ເຮັດໜ້າທີ່ສົ່ງສານເຖິງຜູ້ຖືກຄວາມຮຸນແຮງ, ຜູ້ກະທຳຄວາມຜິດ ແລະ ສັງຄົມໂດຍລວມ, ວ່າສານຈະດຳເນີນການພິພາກສາຄະດີຄວາມຮຸນແຮງຕໍ່ແມ່ຍິງຢ່າງຈິງຈັງ.

- ຜູ້ພິພາກສາຍັງສາມາດຊ່ວຍໃຫ້ການສຶກສາອົບຮົມພາຍໃນສານ ແລະ ຫັນເຫຄວາມສົນໃຈຂອງຊຸມຊົນໄປຍັງບັນຫາຄວາມປອດໄພຂອງແມ່ຍິງຫຼາຍຂຶ້ນ.

### 4.5.4. ຄວາມຮັບຜິດຊອບຂອງຜູ້ກະທຳຜິດ ແລະ ການໃຊ້ແທນຄ່າເສຍຫາຍ

**ກ່ອງ 15: ຂອບເຂດນິຕິກຳຂອງ ສປປ ລາວ ສຳລັບຄວາມຮັບຜິດຊອບຂອງຜູ້ກະທຳຜິດ**

**ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ**

ຂັ້ນຕອນຕ່າງໆໃນການພິຈາລະນາຄະດີໃນຫ້ອງປະຊຸມລັບ ແລະ ການອອກມາອ່ານຄຳຕັດສິນ ແມ່ນໄດ້ຖືກລະບຸໄວ້ໃນ ພາກທີ VIII ໝວດທີ 7 (ມາດຕາ 204-210)

**ປະມວນກົດໝາຍອາຍາ**

ການວາງໂທດຄວນດຳເນີນຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນບັນດາມາດຕາດັ່ງຕໍ່ໄປນີ້:

– ມາດຕາ. 169 ການເຜີຍແຜ່ສິ່ງລາມົກຜ່ານລະບົບຄອມພິວເຕີ
– ມາດຕາ. 188 ການຄາດຕະກຳ
– ມາດຕາ. 189 ການຈ້າງໃຫ້ຄາດຕະກຳ
– ມາດຕາ. 190 ການຄາດຕະກຳຍ້ອນຖືກຜົນກະທົບທາງດ້ານຈິດໃຈ
– ມາດຕາ. 194 ການທຳຮ້າຍຮ່າງກາຍ
– ມາດຕາ. 195 ການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບໃນເວລາປະຕິບັດໜ້າທີ່ທາງການ
– ມາດຕາ. 197 ການເຮັດໃຫ້ຜູ້ອື່ນຂ້າຕົວຕາຍ
– ມາດຕາ. 200 ການເຮັດໃຫ້ຜູ້ອື່ນທີ່ຢູ່ໃນການຄຸ້ມຄອງຂອງຕົນໄດ້ຮັບບາດເຈັບ
– ມາດຕາ. 203 ການຂູ່ຈະຄາດຕະກຳ
– ມາດຕາ. 205 ການນິນທາ ແລະ ການໃສ່ຮ້າຍ
– ມາດຕາ. 206 ການເຮັດໃຫ້ບຸກຄົນອັບອາຍ
– ມາດຕາ. 207 ການປ້ອຍດ່າ
– ມາດຕາ. 208 ການເຮັດໃຫ້ຜູ້ອື່ນເສຍຊີວິດດ້ວຍຄວາມບໍ່ລະມັດລະວັງ
– ມາດຕາ. 209 ການເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງ
– ມາດຕາ. 217 ການຈັບຕົວ, ການກັກຕົວ ຫຼື ການກັກຂັງ ໂດຍບໍ່ຖືກຕ້ອງຕາມກົດໝາຍ
– ມາດຕາ. 221 ການລ່ວງລະເມີດເສລີພາບຂອງບຸກຄົນ
– ມາດຕາ. 224 ການຈຳແນກເພດຍິງ
– ມາດຕາ. 229 ການລ່ວງລະເມີດຄວາມລັບສ່ວນຕົວ
– ມາດຕາ. 247 ການທຳມິດສະຈານ
– ມາດຕາ. 248 ການຂົ່ມຂືນທຳຊຳເລົາ
– ມາດຕາ. 249 ການຂົ່ມຂືນທຳຊຳເລົາແລ້ວຂ້າຖິ້ມ
– ມາດຕາ. 250 ການທຳຊຳເລົາເດັກ
– ມາດຕາ. 251 ການໃຊ້ເລ່ຫຼ່ຽມເພື່ອມີເພດສຳພັນ
– ມາດຕາ. 252 ການບັງຄັບຮ່ວມເພດກັບເພຍ
– ມາດຕາ. 253 ການບັງຄັບໃຫ້ເປັນໂສເພນີ
– ມາດຕາ. 254 ການຄ້າປະເວນີຂອງບຸກຄົນອື່ນ

- ມາດຕາ. 255 ການຮ່ວມປະເວນີກັບຍາດໃກ້ຊິດ
- ມາດຕາ. 256 ການເຜີຍແຜ່ສິ່ງລາມົກເດັກ
- ມາດຕາ. 257 ການຄອບຄອງສິ່ງລາມົກເດັກ
- ມາດຕາ. 258 ການທຳລະມົກ
- ມາດຕາ. 259 ການທຳອະນາຈານ
- ມາດຕາ. 261 ການບໍ່ປະຕິບັດພັນທະໃນການລ້ຽງດູລູກ, ພໍ່, ແມ່ ຫຼື ຜົວເມຍ
- ມາດຕາ. 263 ການທາລຸນແມ່ຍິງ ແລະ ເດັກ
- ມາດຕາ. 267 ການເຜີຍແຜ່ສິ່ງທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ
- ມາດຕາ. 268 ການບັງຄັບໃຫ້ແຕ່ງດອງ ຫຼື ຢ່າຮ້າງ ແລະ ການກີດກັ້ນການແຕ່ງດອງ ຫຼື ຢ່າຮ້າງ
- ມາດຕາ. 269 ການແຕ່ງດອງກັບເດັກ
- ມາດຕາ. 270 ການປະຕິບັດທີ່ບໍ່ເໝາະສົມກັບຍາດໃກ້ຊິດ

- *ໃນຊ່ວງໄລຍະເວລາທີ່ຮ່າງມາດຕະຖານການດຳເນີນງານສະບັບນີ້, ປະມວນກົດໝາຍອາຍາ ແມ່ນນິຕິກຳສະບັບຫຼ້າສຸດແລະເປັນນິຕິກຳທີ່ສະໜອງການປົກປ້ອງທີ່ດີທີ່ສຸດທີ່ຄວນຖືກນຳໃຊ້.

### ຜູ້ພິພາກສາຄວນເອົາໃຈໃສ່ປະຕິບັດຕາມມາດຖານຕໍ່ໄປນີ້ ຕະຫຼອດຂະບວນການພິຈາລະນາຄະດີ:

ໃນການພິຈາລະນາຄະດີ ແລະ ການວາງໂທດ ໃນຫ້ອງປະຊຸມລັບ, ຄະນະສານຕ້ອງເຮັດຢ່າງລະອຽດ, ຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ອີງໃສ່ຜົນຂອງການໄຕ່ສວນໃນທີ່ປະຊຸມສານເປັນຕົ້ນຕໍ ເພື່ອໃຫ້ຄຳຕັດສິນຖືກຕ້ອງ ແລະ ຍຸຕິທຳ.

ຄວນໃຫ້ໂອກາດຜູ້ຖືກເຄາະຮ້າຍ ແຈ້ງກັບສານກ່ຽວກັບການຖືກທຳຮ້າຍຮ່າງກາຍ ແລະ ຈິດໃຈ ແລະ ຜົນກະທົບທີ່ໄດ້ຮັບຈາກການເປັນຜູ້ຖືກເຄາະຮ້າຍ ໃນຂັ້ນການໄຕ່ສວນຄະດີຢູ່ສານເພື່ອກຳນົດກ່ຽວກັບລະດັບຄວາມເໝາະສົມໃນການໃຊ້ແທນຄ່າເສຍຫາຍ[41].

- **ການວາງໂທດ**

ສານເປັນຜູ້ວາງໂທດ ໃນຂອບເຂດຂອງມາດຕາກົດໝາຍທີ່ກຳນົດໂທດໃສ່ການກະທຳຜິດນັ້ນ (ມາດຕາ 61 ຂອງປະມວນກົດໝາຍອາຍາ). ສານປະຊາຊົນອາດຕັດສິນໃຈໃນການວາງໂທດ ຫຼື ການພົ້ນຈາກຂໍ້ກ່າວຫາ (ມາດຕາ 208 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ). ໃນການວາງໂທດນັ້ນ ສານຕ້ອງອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງຜູ້ກະທຳຜິດ ແລະ ເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ການເພີ່ມຄວາມຮັບຜິດຊອບທາງອາຍາ.

ສຳລັບການກຳນົດໂທດຕ່າງໆ ຄວນດຳເນີນຕາມຂະບວນການຕ່າງໆທີ່ໄດ້ກຳນົດໄວ້ໃນບັນດາມາດຕາຂອງປະມວນກົດໝາຍອາຍາ ຕາມທີ່ໄດ້ກຳນົດໄວ້ໃນກ່ອງຂ້າງເທິງນີ້ ແລະ ກົດໝາຍອື່ນໆ.

- **ການໃຊ້ແທນຄ່າເສຍຫາຍ ສຳລັບຄະດີອາຍາ**

ຮັບປະກັນຕໍ່ການຄິດໄລ່ຄ່າເສຍຫາຍຂອງຜູ້ຖືກຄວາມຮຸນແຮງ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກຄວາມຮຸນແຮງ ຕ້ອງໄດ້ມີການອະທິບາຍຢ່າງກວ້າງຂວາງ ແລະ ມີຈຸດປະສົງເພື່ອການປ່ຽນແປງຫຼາຍກວ່າການສິ່ງພວກ

[41] ດັດປັບມາຈາກເອກະສານຂອງ UN Women, UNFPA, WHO, UNDP, UNODC ວ່າດ້ວຍ ຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະເດັກຍິງທີ່ຂຶ້ນກັບຄວາມຮຸນແຮງ ເຂົ້າເຖິງໄດ້ທີ່ https://www.unwomen.org/en/digital-library/publications/2015/12/essential-services-package-for-women-and-girls-subject-to-violence

ເຂົາກັບຄືນໄປບ່ອນເກົ່າກ່ອນໜ້າຄວາມຮຸນແຮງ ແຕ່ຍັງແກ້ໄຂຄວາມບໍ່ສະເໝີພາບ ທີ່ເຮັດໃຫ້ພວກເຂົາມີຄວາມສ່ຽງຕໍ່ກັບ ຄວາມຮຸນແຮງ.

ຄ່າເສຍຫາຍຄວນລວມມີ:

- ປະເມີນຄວາມເສຍຫາຍ ແລະ ບາດແຜທາງດ້ານຮ່າງກາຍ ແລະ ຈິດໃຈ ລວມທັງ ກຽດສັກສີ ຫຼື ຊື່ສຽງ, ຄວາມເຈັບປວດ ແລະ ຄວາມທໍລະມານ ແລະ ຄວາມທຸກໃຈທາງດ້ານຄວາມຮູ້ສຶກ.
- ຄ່າເສຍໂອກາດ ລວມທັງການມີວຽກເຮັດງານທຳ, ເບ້ຍບຳນານ, ການສຶກສາ ແລະ ຜົນປະໂຫຍດທາງສັງຄົມ, ລວມທັງການສູນເສຍລາຍຮັບທີ່ເຂົາຈະໄດ້
- ປະເມີນຄວາມເສຍຫາຍ ຍັງຄຳນຶງເຖິງກິດຈະກຳໃນຄົວເຮືອນ ແລະ ການເບິ່ງແຍງເດັກທີ່ບໍ່ໄດ້ຮັບຄ່າຕອບແທນ
- ປະເມີນຄວາມເສຍຫາຍ ໂດຍຄຳນຶງເຖິງສະຖານະການຂອງເດັກຍິງທີ່ຖືກຄວາມຮຸນແຮງ ລວມທັງການຟື້ນຟູ/ການເຊື່ອມຄືນເຂົ້າສັງຄົມ ແລະ ການສຶກສາ
- ຄ່າໃຊ້ຈ່າຍສຳລັບການບໍລິການສຸຂະພາບ, ກົດໝາຍ, ຈິດໃຈ ແລະ ສັງຄົມ
- ຄ່າທຳນຽມສານ ແລະ ອື່ນໆ ຍ້ອນຈາກປະສົບການຄວາມຮຸນແຮງ ລວມທັງ ການເດີນທາງ, ທາງກົດໝາຍ, ຈິດໃຈ ແລະ ການບໍລິການທາງສັງຄົມ.

ປະທານຄະນະສານ ແລະ ຄະນະສານ ຕ້ອງໄດ້ອ່ານຄຳຕັດສິນຂອງສານໃນຊ່ວງຕົ້ນຂອງການເລີ່ມການດຳເນີນຄະດີໃນສານ (ມາດຕາ 206 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ) ແລະ ແນະນຳກ່ຽວກັບສິດຂອງຄູ່ຄວາມຕາມທີ່ໄດ້ລະບຸໄວ້ໃນມາດຕາ 207 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໃນການຂໍອຸທອນຈາກຄຳຕັດສິນຂອງສານ. ຮັບປະກັນໃຫ້ມີການແປພາສາຂອງຄຳຕັດສິນຂອງສານ ສຳລັບຄູ່ຄວາມທີ່ບໍ່ເຂົ້າໃຈພາສາລາວ.

ຄຳຕັດສິນຂອງສານຈະຕ້ອງຖືກພິມອອກ ແລະ ມອບໃຫ້ກັບທຸກພາກສ່ວນທີ່ກ່ຽວຂ້ອງ ຕາມມາດຕາ 210 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ລວມເຖິງຜູ້ປະສານງານຂັ້ນບ້ານ.

**ບົດຮຽນສາກົນທີ່ຄວນເອົາໃຈໃສ່ ໃນຄຳຕັດສິນຂອງສານ:**

- ລະບຸໃຫ້ມີການຟື້ນຟູຄືນ: ຊຶ່ງເປັນບັນດາມາດຕະການເພື່ອການຟື້ນຟູຜູ້ຖືກຄວາມຮຸນແຮງ ໃຫ້ກັບຄືນ ສູ່ສະພາບຂອງພວກເຂົາກ່ອນຖືກຄວາມຮຸນແຮງ ເຊິ່ງຖືເປັນສ່ວນໜຶ່ງໃນການຕັດສິນຄະດີ. ການຟື້ນຟູຄືນ ແລະ ການໃຊ້ແທນຄ່າເສຍຫາຍສຳລັບການທຳຮ້າຍທີ່ໄດ້ກະທຳໄປແລ້ວ ຕໍ່ກັບຜູ້ຖືກຄວາມຮຸນແຮງ ຄວນຖືເປັນບູລິມາສິດມາກ່ອນ ການປັບໄໝ ແລະ ລົງໂທດ ແລະ ບໍ່ຄວນກີດກັ້ນຕໍ່ຜູ້ຖືກຄວາມຮຸນແຮງ ໃນການດຳເນີນການທາງແພ່ງ ຫຼື ວິທີການແກ້ໄຂອື່ນໆ.

  ເຊິ່ງການຟື້ນຟູຄືນ ແລະ ການໃຊ້ແທນຄ່າເສຍຫາຍ ແມ່ນບໍ່ໄດ້ຖືກໃຊ້ເພື່ອເປັນການທົດແທນ ຕໍ່ການຕັດສິນຂອງສານໃນການຄຸ້ມຄອງ.

- ໃນຄະດີແພ່ງ, ກົດໝາຍຄອບຄົວ ແລະ/ຫຼື ບໍລິຫານ:
  - ຮັບປະກັນວ່າ ການຕັດສິນຂອງສານກ່ຽວກັບຄະດີຂອງຄອບຄົວ ທີ່ພົວພັນກັບຄວາມຮຸນແຮງຕໍ່ກັບແມ່ຍິງ ຕ້ອງໄດ້ຄຳນຶງເຖິງຜົນກະທົບຕໍ່ກັບຜູ້ຖືກຄວາມຮຸນແຮງ ແລະ ຄອບຄົວຂອງລາວ, ໂດຍສະເພາະລູກຂອງຜູ້ຖືກຄວາມຮຸນແຮງ ແລະ ບຸກຄົນອື່ນໆທີ່ກ່ຽວຂ້ອງ.
  - ຮັບປະກັນວ່າ ມີການປົວແປງທາງແພ່ງທີ່ທັນເວລາ, ມີປະສິດທິພາບ, ເອົາໃຈໃສ່ບົດບາດຍິງ-ຊາຍ ແລະ ເໝາະສົມກັບອາຍຸ ສຳລັບແຕ່ລະຄວາມເຈັບປວດທີ່ປະເຊີນໂດຍແມ່ຍິງ ແລະ ເດັກ.

### 4.5.5. ຂະບວນການຫຼັງການພິຈາລະນາຄະດີ

**ກ່ອງ 16 : ຂອບເຂດນິຕິກຳຂອງ ສປປ ລາວ ຕໍ່ຂະບວນການຫຼັງການພິຈາລະນາຄະດີ**

**ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2021**

ມາດຕາ 11 (ປັບປຸງ) ການສົ່ງຄຳຕັດສິນຂອງສານ: ສານປະຊາຊົນທີ່ກ່ຽວຂ້ອງ ຕ້ອງສົ່ງຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ, ອົງການໄອຍະການປະຊາຊົນ ແລະ ຂະແໜງການປ້ອງກັນຄວາມສະຫງົບ ສຳລັບຄຳຕັດສິນຄະດີອາຍາ ພາຍໃນເວລາ ສາມສິບວັນ ນັບແຕ່ວັນຄຳຕັດສິນໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ.

ມາດຕາ 53 (ໃໝ່) ມາດຕະການໃນການປະຕິບັດຄຳຕັດສິນຂອງສານ:

1) ການພາຕົວ
2) ການຍຶດຊັບ
3) ການອາຍັດຊັບ
4) ການຫັກເງິນໃນບັນຊີຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ
5) ການຫັກລາຍຮັບຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ
6) ການຫັກລາຍໄດ້ຈາກການດຳເນີນທຸລະກິດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ
7) ການມອບເງິນຂອງບຸກຄົນອື່ນຮັກສານ ຫຼື ມີໜີ້ຕ້ອງສົ່ງ
8) ມາດຕະການຮີບດ່ວນ
9) ມາດຕະການອື່ນໆ

ມາດຕາ 64 (ໃໝ່) ການປະຕິບັດຄຳຕັດສິນຄະດີອາຍາ: ການປະຕິບັດຄຳຕັດສິນຄະດີອາຍາ ແມ່ນ ການປະຕິບັດໂທດຕັດອິດສະຫຼະພາບ, ໂທດປັບໃໝ, ໂທກຮິບຊັບ, ໂທດຮິບວັດຖຸສິ່ງຂອງ, ໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ ແລະ ການໃຊ້ແທນຄ່າເສຍຫາຍທາງແພ່ງ.

ມາດຕາ 65 (ປັບປຸງ) ການປະຕິບັດໂທດປັບໃໝ: ການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດປັບໃໝໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຫາ ມາດຕາ 63 ຂອງກົດໝາຍສະບັບນີ້.

ສຳລັບຜູ້ທີ່ຍັງປະຕິບັດໂທດ, ຜູ້ໄດ້ຮັບອະໄພຍະໂທດ, ຜູ້ພົ້ນໂທດຕັດອິດສະຫຼະພາບແລ້ວ ແຕ່ປະຕິບັດໂທດປັບໃໝຍັງບໍ່ທັນຄົບຖ້ວນນັ້ນ ກໍໃຫ້ສືບຕໍ່ປະຕິບັດຈົນສຳເລັດ.

ມາດຕາ 66 (ປັບປຸງ) ການປະຕິບັດໂທດຮິບຊັບ ແລະ ໂທດຮິບວັດຖຸສິ່ງຂອງ: ການປະຕິບັດຄຳຕັດສິນຄະດີອາຍາ ກ່ຽວກັບໂທດຮິບຊັບ ແລະ ໂທດຮິບວັດຖຸສິ່ງຂອງ ໃຫ້ດຳເນີນຕາມທີ່ໄດ້ກຳນົດໄວ້ໃນຄຳຕັດສິນຂອງສານນັ້ນທຸກປະການ ເຖິງວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານຍັງປະຕິບັດໂທດຢູ່, ໄດ້ຮັບການອະໄພຍະໂທດ ຫຼື ພົ້ນໂທດແລ້ວກໍຕາມ.

# ພາກທີ V: ການເຂົ້າເຖິງການບໍລິການທີ່ຈຳເປັນຂອງແມ່ຍິງທີ່ດ້ອຍໂອກາດ

## 1. ການຄຳນຶງເຖິງຄວາມແຕກຕ່າງຂອງກຸ່ມແມ່ຍິງ ແລະ ເດັກທີ່ດ້ອຍໂອກາດ

ແມ່ຍິງອາດຈະປະສົບກັບການຖືກຈຳແນກເຊິ່ງມາຈາກທາງເພດຂອງເຂົາ ແຕ່ພວກເຂົາຍັງປະສົບກັບການຖືກຈຳແນກແບບອື່ນໆອີກຕົວຢ່າງເຊັ່ນຊົນເຜົ່າ ຫຼື ສີຜິວຂອງລາວ, ອາຍຸ, ສະຖານະການແຕ່ງດອງ, ສະພາບຄວາມພິການ. ການເລືອກປະຕິບັດໂດຍບັນດາປັດໄຈດັ່ງກ່າວ ສາມາດກາຍເປັນການສ້າງອຸປະສັກໃຫ້ແກ່ແມ່ຍິງ ໃນການເຂົ້າເຖິງຂະບວນການຍຸຕິທຳ. ດ້ວຍເຫດຜົນດັ່ງກ່າວ, ທຸກໆຂັ້ນຕອນໃນຂະບວນການທາງຍຸຕິທຳຕ້ອງຕອບສະໜອງຕາມຄວາມຕ້ອງການທີ່ຫຼາກຫຼາຍຂອງແມ່ຍິງ.

ຜູ້ໃຫ້ບໍລິການທາງດ້ານຂະບວນການຍຸຕິທຳຄວນເອົາໃຈໃສ່:[42]

- ແກ້ໄຂບັນທັດຖານທາງສັງຄົມທີ່ຈຳແນກ ທີ່ສົ່ງຜົນໃຫ້ເກີດການດູຖູກ ແລະ ການຈຳແນກຕໍ່ກຸ່ມຄົນຕ່າງໆໃນຊຸມຊົນ-ໂດຍຜ່ານການເອົາໃຈໃສ່ແກ່ຊຸມຊົນ ແລະ ຜູ້ໃຫ້ຄວາມຊ່ວຍເຫຼືອຢູ່ທ້ອງຖິ່ນໃຫ້ມີຄວາມເຂົ້າໃຈໃນເລື່ອງດັ່ງກ່າວເຊັ່ນ ເຈົ້າໜ້າໃນຂັ້ນທ້ອງຖິ່ນ ແລະ ອຳນາດການປົກຄອງບ້ານ ໂດຍສະເພາະແມ່ນບັນດາສະມາຊິກໃນການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.
- ກຳນົດກຸ່ມ ໂດຍຜ່ານການວິເຄາະບົດບາດຍິງ-ຊາຍ, ຄວາມພິການ ແລະ ການລວມເອົາທຸກຄົນໃນສັງຄົມເພື່ອເຂົ້າໃຈສະຖານະການໃນຊຸມຊົນທີ່ແຕກຕ່າງກັນຂອງແມ່ຍິງທີ່ດ້ອຍໂອກາດ ຫຼື ມີຄວາມສ່ຽງເພີ່ມຂຶ້ນເພື່ອກຳນົດ ແລະ ແກ້ໄຂອຸປະສັກຕໍ່ການໃຫ້ບໍລິການແກ່ເຂົາເຈົ້າ ແລະ ການແກ້ໄຂອຸປະສັກຕໍ່ການບໍລິການທາງດ້ານຍຸຕິທຳ.
- ຮວບຮວມເອົາຂໍ້ມູນຢ່າງສະໝ່ຳສະເໝີ ແລະ ຕໍ່ເນື່ອງຈາກຜູ້ເຄາະຮ້າຍ ຫຼື ຜູ້ລອດຊີວິດ ດ້ວຍຕົນເອງ ຕໍ່ກັບອຸປະສັກທີ່ພົບພໍ້ໃນການເຂົ້າເຖິງບໍລິການ ແລະ ສ້າງຍຸດທະສາດເພື່ອຕອບສະໜອງຄວາມຕ້ອງການ ການຊ່ວຍເຫຼືອຂອງຜູ້ຖືກເຄາະຮ້າຍ
- ໃຫ້ບໍລິການເຊັ່ນ: ການແປພາສາເປັນປະຈຳໃນເຂດທີ່ມີການເວົ້າຫຼາຍພາສາ ຫຼື ມີແຮງງານເຄື່ອນຍ້າຍຫຼາຍ
- ກຳຈັດສິ່ງກີດຂວາງທີ່ອາດມີຢູ່ຈຸດບໍລິການເຊັ່ນ: ໂຮງໝໍ, ສຸກສາລາ, ສິ່ງອຳນວຍຄວາມ ສະດວກ ທາງດ້ານກົດໝາຍ, ທີ່ພັກອາໄສທີ່ປອດໄພ ແລະ ອື່ນໆ ເພື່ອຮັບປະກັນການເຂົ້າເຖິງການຊ່ວຍເຫຼືອຂອງຜູ້ຖືກເຄາະຮ້າຍ ແລະ/ຫຼື ລວມເຖິງການໃຫ້ທາງເລືອກເພີ່ມຕື່ມທາງອອນລາຍໃນການເຂົ້າເຖິງການບໍລິການຕ່າງໆ

ຜູ້ຖືກເຄາະຮ້າຍຄວນໄດ້ຮັບການປຶກສາຫາລືກ່ອນທີ່ຈະພົບກັບກັບຜູ້ເບິ່ງແຍງ ຫຼື ສະມາຊິກໃນຄອບຄົວເພາະວ່າໃນບາງກໍລະນີ ຜູ້ເບິ່ງແຍງ ຫຼື ສະມາຊິກໃນຄອບຄົວແມ່ນຜູ້ກະທຳຜິດ ໃນກໍລະນີນີ້ ແມ່ນມີຄວາມຈຳເປັນທີ່ຈະເຂົ້າໃຈວ່າການມີສ່ວນຮ່ວມຂອງພວກເຂົານັ້ນປອດໄພ ຫຼື ບໍ່.

[42] ດັດປັບມາຈາກເອກະສານຂອງ UN Women, UNFPA, WHO, UNDP, UNODC ວ່າດ້ວຍ ຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະເດັກຍິງທີ່ຂື້ນກັບຄວາມຮຸນແຮງ ເຂົ້າເຖິງໄດ້ທີ່ https://www.unwomen.org/en/digital-library/publications/2015/12/essential-services-package-for-women-and-girls-subject-to-violence

## 2. ການພິຈາລະນາສຳລັບກຸ່ມແມ່ຍິງ ແລະ ເດັກທີ່ມີຄວາມສ່ຽງສະເພາະ

ລາຍລະອຽດຄຳແນະນຳສຳລັບແຕ່ລະກຸ່ມຄົນຈະຖືກລວມເຂົ້າໃນການຝຶກອົບຮົມສຳລັບຜູ້ໃຫ້ບໍລິການ.

### 2.1. ຜູ້ຖືກເຄາະຮ້າຍ ທີ່ມີຄວາມພິການ

- ແມ່ຍິງ ແລະ ເດັກ ທີ່ມີຄວາມພິການມັກຈະພົບກັບຄວາມສ່ຽງຈາກຄວາມຮຸນແຮງ ສູງກວ່າ ແລະ ຍັງເປັນກຸ່ມຄົນທີ່ປະສົບກັບສິ່ງກີດຂວາງເພີ່ມຕື່ມຂຶ້ນອີກໃນການເຂົ້າເຖິງການບໍລິການຕ່າງໆ,
- ເພື່ອຮັບປະກັນວ່າແມ່ຍິງ ທີ່ມີຄວາມພິການສາມາດໃຫ້ການຍິນຍອມ, ມີການກະກຽມສິ່ງອຳນວຍຕ່າງໆ (ຕົວຢ່າງເຊັ່ນ:ການແປພາສາມື). ຖ້າຜູ້ຖືກຄວາມຮຸນແຮງບໍ່ສາມາດໃຫ້ການຍິນຍອມ,ຜູ້ໃຫ້ການບໍລິການຊ່ວຍເຫຼືອຄວນຕ້ອງໃຊ້ຫຼັກການທີ່ໃຫ້ຜົນປະໂຫຍດສູງສຸດແກ່ຜູ້ລອດຊີວິດ (ການປິດເປັນຄວາມລັບ, ການເຄົາລົບ, ຄວາມປອດໄພ, ການບໍ່ມີການຈຳແນກ).

### 2.2. ຜູ້ຖືກເຄາະຮ້າຍທີ່ມີຄວາມແຕກຕ່າງທາງເພດ

- ກຸ່ມຄົນແຕກຕ່າງທາງເພດ ແມ່ນເຕັມໄປດ້ວຍຄວາມຫຼາກຫຼາຍ ແລະ ຜູ້ໃຫ້ບໍລິການຕ້ອງເຂົ້າໃຈ ແລະ ນຳໃຊ້ສັບພາສາ ແລະ ການລະບຸທີ່ແຕກຕ່າງອອກໄປຢ່າງເໝາະສົມ ແລະ ບໍ່ຄາດເດົາໄປເອງກ່ຽວກັບລົດສະນິຍົມທາງເພດຂອງພວກເຂົາ.
- ການຖາມຄຳຖາມທີ່ບໍ່ຈຳເປັນ ແລະ ບໍ່ກ່ຽວຂ້ອງ ຕໍ່ກັບ ເພດສະພາບ ຫຼື ລົດສະນິຍົມທາງເພດຂອງພວກເຂົາ ແມ່ນເປັນພຶດຕິກຳທີ່ບໍ່ເໝາະສົມ.
- ຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດທີ່ມີຄວາມແຕກຕ່າງທາງເພດ ແມ່ນເນື່ອງຈາກມັກປະສົບກັບບັນຫັດຖານທີ່ຈຳແນກຂອງສັງຄົມ ແລະ ການຖືກກີດກັນ ເນື່ອງຈາກຄວາມເປັນຕົວຕົນຂອງພວກເຂົາ; ສະນັ້ນການປິດເປັນຄວາມລັບກ່ຽວກັບເພດສະພາບ ຫຼື ລົດສະນິຍົມທາງເພດ ແມ່ນມີຄວາມສຳຄັນເປັນພິເສດ.

### 2.3. ແຮງງານເຄື່ອນຍ້າຍເພດຍິງ

- ພວກເຂົາເປັນກຸ່ມຄົນທີ່ພົບກັບຄວາມສ່ຽງສູງກວ່າໃນການປະສົບກັບຄວາມຮຸນແຮງ ແລະ ອາດຈະຖືກກີດຂວາງຈາກການຂໍຄວາມຊ່ວຍເຫຼືອ ເນື່ອງຈາກອຸປະສັກທາງດ້ານກົດໝາຍທີ່ກ່ຽວພັນກັບສະຖານະການເຄື່ອນຍ້າຍແຮງງານຂອງພວກເຂົາ, ຄວາມແຕກຕ່າງທາງດ້ານວັດທະນະທຳ, ອຸປະສັກທາງດ້ານພາສາ ແລະ ການບໍ່ໄດ້ຮັບການສະໜັບສະໜູນຈາກເຄືອຄ່າຍສັງຄົມ.

### 2.4. ແມ່ຍິງທີ່ມາຈາກກຸ່ມຊົນເຜົ່າ

- ພວກເຂົາອາດຈຳເປັນຕ້ອງການການແປພາສາໃຫ້ເປັນພາສາທ້ອງຖິ່ນ ສະນັ້ນການສະໜອງໃຫ້ມີນາຍແປພາສາ ຈຶ່ງມີຄວາມຈຳເປັນເພື່ອຮັບປະກັນໃນການແຈ້ງການຍິນຍອມ
- ພວກເຂົາອາດຈະບໍ່ເຊື່ອໝັ້ນໃນກົນໄກຂອງຂະບວນການຍຸຕິທຳທີ່ເປັນທາງການ ຫຼື ອົງການປົກຄອງເນື່ອງຈາກມີນທິນເກົ່າທີ່ຜ່ານມາ ແລະ ການຈຳແນກ ທີ່ຢຸດການເຂົ້າເຖິງການຊ່ວຍເຫຼືອໄວ້
- ຖ້າພວກເຂົາອາໄສຢູ່ໃນເຂດຊົນນະບົດ ທີ່ຫ່າງໄກຈາກການບໍລິການ ແລະ ການສະໜັບສະໜູນຕ່າງໆ ເຊິ່ງພວກເຂົາເຈົ້າອາດຈະພົບພໍ້ກັບອຸປະສັກທາງດ້ານທີ່ຕັ້ງພູມສາດ ແລະ ການຂົນສົ່ງ ເພື່ອດຳເນີນ ການຂໍຄວາມຊ່ວຍເຫຼືອ.

## 2.5. ກຸ່ມຄົນທີ່ຖືກບັງຄັບໃຫ້ເປັນໂສເພນີ

- ພວກເຂົາອາດບໍ່ມີຄວາມເຊື່ອຖືໃນບັນດາຜູ້ໃຫ້ການບໍລິການຂະບວນການຍຸຕິທຳ ແລະ/ຫຼື ອົງການປົກຄອງ ເນື່ອງຈາກປະສົບການທີ່ຜ່ານມາ ຍ້ອນມົນທິນ ແລະ ການຈຳແນກຂອງສັງຄົມ.
- ພວກເຂົາອາດຈະຕົກເປັນເຫຍື່ອຂອງການຄ້າມະນຸດ ສະນັ້ນ, ມັນຈຳເປັນຕ້ອງໃຫ້ການຊ່ວຍເຫຼືອເພີ່ມຕື່ມ ແລະການສົ່ງຕໍ່. ຜູ້ໃຫ້ບໍລິການຈຳເປັນຕ້ອງໄດ້ເຂົ້າໃຈຄວາມຄິດມຸມມອງຂອງການຍິນຍອມ ແລະອາຊີບຂອງຜູ້ຖືກເຄາະຮ້າຍ ແມ່ນບໍ່ກ່ຽວກັບຄວາມໜ້າເຊື່ອຖືຂອງເຫດການທີ່ເກີດຂຶ້ນ.

## 2.6. ຜູ້ຖືກເຄາະຮ້າຍທີ່ເປັນຜູ້ສູງອາຍຸ

- ແມ່ຍິງທີ່ສູງອາຍຸແມ່ນມີເງື່ອນໄຂຈຳເປັນສະເພາະທາງດ້ານສຸຂະພາບ ແລະ ປະສົບການຕ່າງໆ ແລະ ພວກເຂົາມັກພົບກັບ ການຈຳແນກທາງອາຍຸ ແລະ ອຸປະສັກໃນການ ເຂົ້າເຖິງການເບິ່ງແຍງຮັກສາດູແລ.

## 2.7. ແມ່ຍິງ ຜູ້ທີ່ຖືກກັກຂັງຢູ່ໃນຄ້າຍຄຸມຂັງ ບໍ່ວ່າດ້ວຍເຫດຜົນໃດກໍຕາມ

- ຮັບປະກັນການເຂົ້າເຖິງການຊ່ວຍເຫຼືອ ແລະ ມາດຕະການ ເພື່ອແກ້ໄຂຄວາມຮຸນແຮງທີ່ເກີດຂຶ້ນໃນລະຫວ່າງຢູ່ສະຖານທີ່ຄຸມຂັງ:
  - ຂໍ້ມູນກ່ຽວກັບສິດທິຂອງຜູ້ຖືກເຄາະຮ້າຍ ເພື່ອສາມາດຮ້ອງຟ້ອງ ແລະ ດຳເນີນບາດກ້າວ ແລະ ຂັ້ນຕອນ.
  - ຂະບວນການຮ້ອງຟ້ອງແມ່ນງ່າຍດາຍ, ປອດໄພ ແລະ ປິດລັບ.
  - ເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ.
  - ການປົກປ້ອງໄລຍະຮີບດ່ວນ ແລະ ໄລຍະຍາວຈາກຮູບແບບຕ່າງໆຂອງການທຳຮ້າຍ.
  - ເຂົ້າເຖິງການຊ່ວຍເຫຼືອ ແລະ ການໃຫ້ຄຳປຶກສາທາງດ້ານຈິດໃຈ.
  - ອຳນາດການປົກຄອງທີ່ເປັນເອກະລາດກວດສອບທຸກບົດລາຍງານຄວາມຮຸນແຮງໂດຍນັກໂທດ ໂດຍໃຫ້ຄວາມເຄົາລົບຫຼັກການການຮັກສາຄວາມລັບ.
- ຮັບປະກັນໃຫ້ມີການບໍລິການເພື່ອຮັບມື ແລະ ປ້ອງກັນຄວາມຮຸນແຮງຕໍ່ກັບແມ່ຍິງ ຜູ້ທີ່ຖືກກັກຂັງຍ້ອນເຫດຜົນໃດໜຶ່ງ.
  - ກວດຄົ້ນນັກໂທດຍິງແຕ່ລະຄົນ ໂດຍພະນັກງານຍິງເທົ່ານັ້ນ
  - ການກວດກາສະຖານທີ່ຄຸມຂັງແຕ່ລະໄລຍະ ໂດຍເຈົ້າໜ້າທີ່ຕຳຫຼວດຍິງ ຫຼື/ແລະ ເຈົ້າໜ້າທີ່ຕຳຫຼວດຊາຍ.
  - ອຳນວຍຄວາມສະດວກໃນການຕິດຕໍ່ກັບໂລກພາຍນອກ, ຄອບຄົວ ແລະ/ຫຼື ລູກ.
  - ແຍກສະຖານທີ່ສຳລັບນັກໂທດ ອີງໃສ່ເພດ ແລະ ຜູ້ໃຫຍ່/ເດັກນ້ອຍ.
- ຮັບປະກັນມາດຕະການພິເສດ ເພື່ອປົກປ້ອງແມ່ຍິງຜູ້ທີ່ຖືກກັກຂັງກັບລູກຂອງພວກເຂົາ.
- ຮັບປະກັນມີການບໍລິການສຳລັບແມ່ຍິງຢູ່ສະຖານທີ່ຄຸມຂັງ ຜູ້ທີ່ປະສົບຄວາມຮຸນແຮງກ່ອນຖືກຄຸມຂັງ.
- ກຳນົດ ແລະ ປ້ອງກັນການຕົກເປັນເຫຍື່ອອີກຄັ້ງຂອງນັກໂທດຍິງ ໃນລະຫວ່າງການຢ້ຽມຢາມໂດຍຄູ່ຮັກ/ຜົວ ຫຼື ອະດີດຄູ່ຮັກທີ່ໃຊ້ຄວາມຮຸນແຮງ.

# ພາກທີ VI: ການເກັບກຳຂໍ້ມູນ ແລະ ການລາຍງານ

ຂໍ້ມູນບໍລິຫານໝາຍເຖິງຂໍ້ມູນທີ່ຖືກເກັບກຳຮວບຮວມໂດຍຜູ້ທີ່ໃຫ້ບໍລິການ ເພື່ອບັນທຶກຂໍ້ມູນທີ່ຖືກເກັບກຳຢ່າງສະໝ່ຳສະເໝີໃນການໃຫ້ບໍລິການທີ່ສາມາດໃຫ້ຄວາມເຂົ້າໃຈກ່ຽວກັບຄຸນະພາບຂອງການບໍລິການທີ່ຊອກຫາ, ການສົ່ງຕໍ່ທີ່ເຮັດໄດ້, ຜົນໄດ້ຮັບຂອງການບໍລິການ ເຊັ່ນດຽວກັນກັບຮູບແບບ ແລະ ແນວໂນ້ມໃນການລາຍງານ, ຄຳຕອບ ແລະ ການເຂົ້າເຖິງການບໍລິການ ຊຶ່ງເຮັດໃຫ້ຜູ້ໃຫ້ບໍລິການສາມາດຕິດຕາມຄວາມຕ້ອງການສຳລັບການບໍລິການ ແລະ ກຳນົດຊ່ອງຫວ່າງໃນການບໍລິການ.

ສະນັ້ນ, ຂໍ້ມູນບໍລິຫານທີ່ຖືກເກັບກຳເປັນປະຈຳໃນການບໍລິການແມ່ນແຫຼ່ງຂໍ້ມູນທີ່ສຳຄັນທີ່ສາມາດວິເຄາະການສະໜອງຂໍ້ມູນກ່ຽວກັບການເຂົ້າເຖິງການບໍລິການ. ເນື່ອງຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແມ່ນມີລັກສະນະ ທີ່ລະອຽດອ່ອນທັງຕໍ່ກັບຜູ້ຖືກຄວາມຮຸນແຮງ ແລະ ຜູ້ໃຫ້ການບໍລິການ, ການປິດລັບຂໍ້ມູນ ແລະ ຄວາມປອດໄພ ແມ່ນເປັນສິ່ງທີ່ສຳຄັນທີ່ສຸດ. ນີ້ໝາຍເຖິງ ການພັດທະນາລະບົບເພື່ອການເຜີຍແຜ່ຂໍ້ມູນທີ່ຮັກສາຄວາມລັບ ແລະ ຄວາມເປັນສ່ວນຕົວ ແລະ ເປັນລະບົບ ເພື່ອການວິເຄາະ ແລະ ລາຍງານເອກະສານປະກອບເບື້ອງຕົ້ນ ແມ່ນມີຂໍ້ມູນ ພື້ນຖານກ່ຽວກັບການເກັບກຳຂໍ້ມູນທີ່ກຳລັງດຳເນີນຢູ່ ແລະ ການຈັດການຂອງຂໍ້ມຸນບໍລິຫານ.

## 1. ການຈັດເກັບຂໍ້ມູນ[43]

**ການເປີດເຜີຍຄວາມລັບ** ແມ່ນການທຳລາຍຄວາມເຊື່ອໃຈ.

**ການຮັກສາຂໍ້ມູນສ່ວນຕົວໃຫ້ປອດໄພ ແລະ ເປັນຄວາມລັບ** ແມ່ນພື້ນຖານສຳຄັນຂອງ ຈະລິຍະທຳ ແລະ ຄຸນນະພາບການດຳເນີນການບໍລິການ. ຄວາມເປັນສ່ວນຕົວແມ່ນສິ່ງສຳຄັນຕໍ່ຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ເນື່ອງຈາກສິ່ງດັ່ງກ່າວເປັນການເຮັດໃຫ້ພວກເຂົາຕົກຢູ່ໃນອັນຕະລາຍ ແລະ ອາດຈະເຖິງຂັ້ນຄວາມເປັນຄວາມຕາຍ. ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງອາດຈະປະສົບກັບຄວາມສ່ຽງຕໍ່ຄວາມຮຸນແຮງທີ່ເກີດຂຶ້ນ ຖ້າຫາກມີການເປີດເຜີຍເຖິງການຂໍຄວາມຊ່ວຍເຫຼືອ ແລະ ສັງຄົມອາດຈະເຮັດໃຫ້ພວກເຂົາອັບອາຍ ແລະ ດູຖູກເຂົາເຈົ້າ.

**ຄວາມປອດໄພ ແລະ ການຮັກສາຄວາມລັບຕໍ່ຂໍ້ມູນ**ຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແມ່ນເປັນສິ່ງທີ່ສຳຄັນ ທີ່ບໍ່ເປັນພຽງແຕ່ການປົກປ້ອງຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງເທົ່ານັ້ນ ແຕ່ຍັງລວມຜູ້ໃຫ້ການບໍລິການ ເຊິ່ງພວກເຂົາອາດຈະປະສົບກັບການໂຈມຕີ, ການຂົ່ມຂູ່ ແລະ ຄວາມຮຸນແຮງໃນການສະໜັບສະໜຸນຜູ້ຖືກເຄາະຮ້າຍ ຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

ສະນັ້ນ, ການຈັດການຂໍ້ມູນຈຳເປັນຕ້ອງຖືກຮັກສາຢ່າງປອດໄພ, ຮັກສາເປັນຄວາມລັບ ແລະ ຖືເອົາຜູ້ລອດຊີວິດຈາກ ຄວາມຮຸນແຮງເປັນໃຈກາງ. ເຈົ້າໜ້າທີ່ບໍ່ຄວນທີ່ຈະປະເອກະສານໄວ້ໃນບ່ອນທີ່ຄົນທົ່ວໄປສາມາດພົບເປັນໄດ້ ເມື່ອມີການບັນທຶກຂໍ້ມູນຈາກ ແມ່ຍິງ ກ່ຽວກັບປະສົບການຄວາມຮຸນແຮງ, ເຈົ້າໜ້າທີ່ ທີ່ໃຫ້ການສຳພາດຄວນຫຼີກລ້ຽງການຖາມ ຫຼື ບັນທຶກຂໍ້ມູນຢູ່ສະຖານ ທີ່ສາທາລະນະ. ເຈົ້າໜ້າທີ່ຈະບໍ່ຂຽນເຈາະຈິງຊີ້ແຈງວ່າເປັນຄວາມຮຸນແຮງຈາກຜົວ/ຄູ່ຮ່ວມຊີວິດຂອງຕົນເອງ ຫຼື ຄວາມຮຸນແຮງທາງເພດຢູ່ໜ້າທຳອິດຂອງປົດບັນທຶກ, ເຊິ່ງເປັນສ່ວນທີ່ສາມາດເປີດແລ້ວເຫັນໄດ້ທຳອິດເລີຍ. ຖ້າຫາກມີຂໍ້ມູນໃດທີ່ລະອຽດອ່ອນທີ່ຈຳເປັນຕ້ອງໄດ້ທຳລາຍ ແມ່ນຈະຖືກລຶບຖິ້ມໂດຍເຈົ້າໜ້າທີ່ ທີ່ໄດ້ອະນຸຍາດ ເທົ່ານັ້ນ.

---

43 ຄຊກມດ (2022). ແລະ ອີງການ UN Women (2020) “ຄູ່ມືກ່ຽວກັບການເກັບກຳ ແລະ ການນຳໃຊ້ຂໍ້ມູນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງໃນພາກພື້ນອາຊຽນ”ເຂົ້າເບິ່ງໄດ້ທີ່::https://asiapacific.unwomen.org/en/digital-library/publications/2018/04/asean-regional-guidelines-on-violence-against-women-and-girls

ຂໍ້ມູນຂອງກໍລະນີທີ່ມີການລະບຸຕົວຕົນ ຕ້ອງເກັບຮັກສາໄວ້ຢ່າງປອດໄພ. ຖ້າຫາກວ່າຂໍ້ມູນ/ ແຟ້ມປະຫວັດຂອງກໍລະນີ ເປັນເຈ້ຍເອກະສານ, ເອກະສານເຫຼົ່ານັ້ນຕ້ອງໄດ້ເກັບຮັກສາໄວ້ໃນຕູ້ທີ່ມີກະແຈໃສ່ໄວ້ຄັກແນ່ ແລະ ມີແຕ່ພະນັກງານທີ່ໄດ້ຮັບອະນຸຍາດເທົ່ານັ້ນຈຶ່ງສາມາດເຂົ້າເຖິງເອກະສານເຫຼົ່ານັ້ນໄດ້. ຖ້າຫາກວ່າຂໍ້ມູນ/ ແຟ້ມປະຫວັດຂອງກໍລະນີ ໄດ້ຖືກເກັບຮັກສາໄວ້ທາງເອເລັກໂຕຣນິກ, ຕ້ອງໄດ້ມີລະບົບປ້ອງກັນຂໍ້ມູນເພື່ອປ້ອງກັນການເຂົ້າເຖິງຂໍ້ມູນ ໂດຍສະເພາະຂໍ້ມູນທີ່ມີການລະບຸຕົວຕົນ. ແຕ່ລະອົງການຕ້ອງໄດ້ສ້າງລະບຽບການໃນການເກັບມ້ຽນຂໍ້ມູນຂອງຕົນເອງ.

## 2. ການແລກປ່ຽນຂໍ້ມູນ

**ການຍິນຍອມຕໍ່ກັບການແລກປ່ຽນຂໍ້ມູນ:** ພາຍຫຼັງຜູ້ຖືກເຄາະຮ້າຍ ໄດ້ຮັບແຈ້ງທາງເລືອກໃນການບໍລິການ, ໄດ້ຮັບຂໍ້ມູນກ່ຽວກັບການສົ່ງຕໍ່ແລ້ວ ຂໍ້ມູນຈະສາມາດແລກປ່ຽນກັບໜ່ວຍງານສົ່ງຕໍ່ໄດ້ກໍຕໍ່ເມື່ອຜູ້ຖືກເຄາະຮ້າຍ ໃຫ້ການຍິນຍອມເທົ່ານັ້ນ. ແບບຟອມການຍິນຍອມ ຕ້ອງຂຽນໃຫ້ຄົບຖ້ວນ ແລະ ເຊັນລົງນາມ ເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍ ໄດ້ຮັບການສະໜອງຂໍ້ມູນກ່ຽວກັບຂໍ້ມູນທີ່ຈະຖືກແລກປ່ຽນ ແລະ ແລກປ່ຽນໃຫ້ພາກສ່ວນໃດແດ່. ສຳລັບເດັກທີ່ມີອາຍຸບໍ່ຮອດເກນທີ່ຈະໃຫ້ການຍິນຍອມ, ພໍ່ແມ່ ຫຼື ຜູ້ປົກຄອງທີ່ບໍ່ໄດ້ກະທຳຜິດ ຫຼື ຖ້າບໍ່ມີ ແມ່ນໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຜ່ານຄະນະກຳມະການປົກປ້ອງເດັກ ມີຄວາມຮັບຜິດຊອບຕໍ່ການຕັດສິນໃຈໃຫ້ແກ່ເດັກ.

ແຟ້ມປະຫວັດຂອງຜູ້ມາຮັບການບໍລິການ ສາມາດນຳໄປເຜີຍແຜ່ ແລະ ແລກປ່ຽນໄດ້ເພື່ອຈຸດປະສົງວຽກງານການສົ່ງຕໍ່ເທົ່ານັ້ນ ແລະ ຕ້ອງໄດ້ຮັບການຍິນຍອມເຫັນດີຈາກຜູ້ຖືກເຄາະຮ້າຍ.

ສຳລັບການລາຍງານຂໍ້ມູນພື້ນຖານໃນຊຸດຂໍ້ມູນທີ່ມີການເກັບ, ຂໍ້ມູນສະຖິຕິການແຍກເພດສາມາດນຳໄປເຜີຍແຜ່ ແລະ ແລກປ່ຽນໄດ້ ໂດຍປາສະຈາກຂໍ້ມູນທີ່ມີການລະບຸຕົວຕົນ. ຕົວຢ່າງ ຂໍ້ມູນກ່ຽວກັບຈຳນວນ ແລະ ປະເພດຂອງກໍລະນີ, ແຕ່ບໍ່ມີຊື່ ຫຼື ທີ່ຢູ່ຂອງກໍລະນີ.

ຊຸດຂໍ້ມູນພື້ນຖານຄວນຈະເຊື່ອມໂຍງກັບຖານຂໍ້ມູນທີ່ມີຢູ່ແລ້ວຂອງລັດຖະບານ. ເຖິງຢ່າງໃດກໍ່ຕາມ, ແມ່ຍິງມີສິດທີ່ຈະປະຕິເສດການບໍລິການ, ຮັບການບໍລິການຈາກຜູ້ໃຫ້ບໍລິການສະເພາະ, ດັ່ງນັ້ນຕ້ອງມີການເຄົາລົບວິທີການເກັບຂໍ້ມູນໃຫ້ເປັນຄວາມລັບ.

## 3. ການການລາຍງານ ແລະ ວິເຄາະຂໍ້ມູນ

ລະບົບຖານຂໍ້ມູນ ແລະ ສະຖິຕິ ຕ້ອງໄດ້ຮັບການພັດທະນາສຳລັບແຕ່ລະອົງການເພື່ອລາຍງານຂໍ້ມູນ ທີ່ບໍ່ໄດ້ລະບຸຕົວຕົນໂດຍອີງໃສ່ຊຸດຂໍ້ມູນພື້ນຖານ ແລະ ສາມາດເຊື່ອມໃສ່ກັນໄດ້ໃນຂະບວນການຍຸຕິທຳ ເພື່ອເປັນການຕິດຕາມຄວາມຄືບໜ້າໃນຂະບວນການຍຸຕິທຳແຕ່ລະກໍລະນີ.

ການວິເຄາະຂໍ້ມູນສາມາດໃຊ້ເພື່ອເປັນທິດທາງໃນການປັບປຸງລະບົບການບໍລິການໃຫ້ດີຂຶ້ນໃນຕໍ່ໜ້າ. ການວິເຄາະຂໍ້ມູນຈະສາມາດຊ່ວຍກຳນົດແນວໂນ້ມຂອງປະເພດຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນການຂໍການຊ່ວຍເຫຼືອ, ຄວາມຖີ່ ແລະ ຄວາມຮຸນແຮງຂອງປະເພດຄວາມຮຸນແຮງທີ່ເຂົາເຈົ້າພົບພໍ້, ຮູບແບບໃນການເຂົ້າເຖິງການບໍລິການ ເພື່ອເປັນທິດທາງໃນການປັບປຸງລະບົບການບໍລິການໃຫ້ດີຂຶ້ນໃນຕໍ່ໜ້າ ແລະ ການສົ່ງຕໍ່.

ຜົນຕອບຮັບຈາກຜູ້ໄດ້ຮັບຄວາມຮຸນແຮງ ຫຼື ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຄວນມີການເກັບກຳໃນທຸກໆປີເຊິ່ງສຸມໃສ່ການປຶກສາຫາລືຮ່ວມກັນເປັນກຸ່ມ,ແລະ/ຫຼືບົດສຳຫຼວດຄວາມເພິ່ງພໍໃຈ.ການຕອບສະໜອງແບບບໍ່ອອກນາມຄວນໄດ້ຮັບການປົກປ້ອງ ແລະ ຄວາມມີກົນໄກກຽມພ້ອມໃນການຮັບປະກັນ ຕໍ່ກັບສິ່ງດັ່ງກ່າວ.

ການວິເຄາະຂໍ້ມູນເພື່ອການຕິດຕາມກວດກາ ແລະ ການປະເມີນຜົນຂອງການບໍລິການຄວນຈັດຂຶ້ນທຸກໆໄຕມາດ ບົນພື້ນຖານພາຍໃຕ້ຄວາມຮັບຜິດຊອບຂອງອົງກອນທີ່ກ່ຽວຂ້ອງ ທຸກໆ 3 ເດືອນ, ຄະນະຮັບຜິດຊອບການປົກປ້ອງ ແລະ ຊ່ວຍເຫຼືອທາງດ້ານຂະບວນການຍຸຕິທຳສຳລັບແມ່ຍິງທີ່ຖືກຄວາມຮຸນແຮງ (EVAW Focal Team)[44] ຄວນມີການປະຊຸມ ເພື່ອລາຍງານກ່ຽວກັບ ຜົນໄດ້ຮັບໃນແຕ່ລະໄລຍະ ທີ່ຜ່ານມາ ເພື່ອປະເມີນຕີລາຄາຈຸດດີ ແລະ ຈຸດອ່ອນ ໃນການບໍລິການ ແລະ ຕິດຕາມການເຮັດວຽກທີ່ບໍ່ໄປໃນລວງດຽວກັນກັບແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ຂອບວຽກການຕິດຕາມ ແລະ ປະເມີນຜົນ ຜ່ານຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ເພື່ອລາຍງານລັດຖະບານ.

## 4. ແບບຟອມການເກັບກຳຂໍ້ມູນ ແລະ ເອກະສານຂອງຜູ້ຖືກເຄາະຮ້າຍ

1) ຕາຕະລາງຈັດປະເພດຄວາມຮີບດ່ວນ ຂອງຄະດີຄວາມຮຸນແຮງຕໍ່ແມ່ຍິງ.
2) ແບບພິມບັນທຶກຄະດີຄວາມຮຸນແຮງຕໍ່ແມ່ຍິງ.
3) ແບບພິມຍິນຍອມແລກປ່ຽນຂໍ້ມູນ.

44 ກຸ່ມປະສານງານຢູ່ພາຍໃນແຕ່ລະອົງການເພື່ອເຂົ້າຮ່ວມທຸກກິດຈະກຳທີ່ຕິດພັນກັບການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 5 ປີ ຄັ້ງທີ 2 ໄລຍະ 2021-2025 ຄະນະທີ່ຖືກແຕ່ງຕັ້ງປັດຈຸບັນແມ່ນພາຍໃຕ້ໃບແຕ່ງຕັ້ງເລກທີ 339/ສປສ, 535/ອຍກມ, 962/ປກສ ແລະ 21/ຍຕທ. ຄກມດ

# ເອກະສານຊ້ອນທ້າຍ 1 : ຕາຕະລາງຈັດປະເພດຄວາມຮີບດ່ວນ ຂອງຄະດີຄວາມຮຸນແຮງຕໍ່ແມ່ຍິງ

| ປະເພດຂອງຄວາມສ່ຽງ ແລະ ຮູບແບບຂອງຄວາມອັນຕະລາຍ | **ລະດັບ 1**<br>**ມີຄວາມເປັນອັນຕະລາຍຢ່າງຮ້າຍແຮງ ແລະ ຕ້ອງໄດ້ມີໂຕ້ຕອບຢ່າງຮີບດ່ວນ.**<br>**ບໍ່ອະນຸຍາດໃຫ້ມີການໄກ່ເກ່ຍຢູ່ຂັ້ນບ້ານ ຕ້ອງດຳເນີນຄະດີ** | **ລະດັບ 2**<br>**ອັນຕະລາຍ ຕ້ອງການໃຫ້ມີການແກ້ໄຂ** | **ລະດັບ 3**<br>**ຢູ່ໃນຄວາມຄວາມສ່ຽງທີ່ຈະເກີດມີອັນຕະລາຍ** | **ລະດັບ 4**<br>**ບໍ່ມີການສະແດງເຖິງຄວາມສ່ຽງໃດໆ** |
|---|---|---|---|---|
| **ຜູ້ກະທຳຜິດ** | - **ຕ້ອງລາຍງານຕໍ່ເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າໜ້າທີ່ຕຳຫຼວດຕ້ອງດຳເນີນການສືບສວນ**<br>- **ຜູ້ກະທຳຜິດຕ້ອງຖືກກັກຕົວ ຫຼື ກັກຂັງ (ອີງຕາມ ກດອ ມາດຕາ 140).** | **ອຳນາດການປົກຄອງບ້ານຈະຕ້ອງຕິດຕາມສະຖານະການ ແລະ ຕິດຕາມ ຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດທຸກໆ 3 ວັນ.** | **ອຳນາດການປົກຄອງບ້ານຈະຕ້ອງຕິດຕາມສະຖານະການ ແລະ ຕິດຕາມ ຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດທຸກໆ 7 ວັນ.** | **ບໍ່ຈຳເປັນຕ້ອງມີການດຳເນີນໃດໆຕໍ່ໄປ ແລະ ຖືວ່າສິ້ນສຸດຄະດີໄດ້.** |
| **ການສະໜັບສະໜູນຜູ້ຖືກເຄາະຮ້າຍ** | ອີງໃສ່ ມາດຕະຖານດຳເນີນການຊ່ວຍເຫຼືອຂອງຂະແໜງສາທາລະນະສຸກ ແລະ ຂະແໜງສັງຄົມ ທີ່ໄດ້ລະບຸໄວ້ໃນ ມາດຕະຖານດຳເນີນການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ **ແມ່ນມີຄວາມຈຳເປັນໃນການໃຫ້ການຊ່ວຍເຫຼືອເບິ່ງແຍງຜູ້ຖືກເຄາະຮ້າຍ.** | ອີງໃສ່ ມາດຕະຖານດຳເນີນການຊ່ວຍເຫຼືອຂອງຂະແໜງສາທາລະນະສຸກ ແລະ ຂະແໜງສັງຄົມທີ່ ໄດ້ລະບຸໄວ້ໃນ ມາດຕະຖານດຳເນີນການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ | ອີງໃສ່ ມາດຕະຖານດຳເນີນ ການຊ່ວຍເຫຼືອຂອງຂະແໜງສາທາລະນະສຸກ ແລະ ຂະແໜງສັງ ຄົມທີ່ໄດ້ລະບຸໄວ້ໃນມາດຕະຖານດຳເນີນການປະ ສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ | ອີງໃສ່ ມາດຕະຖານດຳເນີນການຊ່ວຍເຫຼືອຂອງຂະແໜງສາທາລະນະສຸກ ແລະ ຂະແໜງສັງຄົມທີ່ໄດ້ ລະບຸໄວ້ໃນ ມາດຕະຖານດຳເນີນການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່ |
| **ຄວາມຮຸນແຮງທາງຮ່າງກາຍ** | • ການບາດເຈັບສາຫັດ (ກະດູກຫັກ, ແຜບາດໃໝ່ທີ່ຮ້າຍແຮງ, ຮອຍຊ້ຳໜັກ, ເປັນຕົ້ນ) | • ມີສິ່ງທີ່ບອກໄດ້ເຖິງການຖືກທຳຮ້າຍ (ມີບາງຮອຍຊ້ຳ, ຮອຍບາດແຜ, ເປັນຕົ້ນ) | • ມີການຂົ່ມຂູ່ທາງຮ່າງກາຍເຮັດໃຫ້ໄດ້ຮັບບາດເຈັບ (ຍູ້, ຊຸກ, ຕົບ, ດຶງຜົມ) | • ບໍ່ມີຄວາມຮຸນແຮງທາງຮ່າງກາຍ<br>• ຜູ້ກະທຳຜິດບໍ່ໄດ້ຢູ່ກັບຜູ້ຖືກເຄາະຮ້າຍແລ້ວ |

| | | | | |
|---|---|---|---|---|
| - **ບໍ່ອະນຸຍາດໃຫ້ມີການໄກ່ເກ່ຍຢູ່ຂັ້ນບ້ານຕ້ອງດໍາເນີນຄະດີ** | • ການຂົ່ມຂູ່ທາງຮ່າງກາຍທີ່ສາມາດນໍາໄປສູ່ຄວາມພິການ<br>• ເດັກຖືກທໍາຮ້າຍ | • ມີການທໍາຮ້າຍຮ່າງກາຍ (ທຸບຕີດ້ວຍກໍາປັ້ນ ຫຼື ວັດຖຸແຂງ, ເຕະ, ເຮັດໃຫ້ຂາດອາກາດຫາຍໃຈ ຫຼື ຮັດຄໍ) ໃຫ້ແກ່ຜູ້ຖືກເຄາະຮ້າຍ | | |
| **ຄວາມຮຸນແຮງທາງເພດ**<br><br>- **ບໍ່ອະນຸຍາດໃຫ້ມີການໄກ່ເກ່ຍ** | • ການຂົ່ມຂືນທໍາຊໍາເລົາ<br>• ການທໍາຮ້າຍທາງເພດ<br>• ການບັງຄັບໃຫ້ເປັນໂສເພນີ<br>• ການເຜີຍແຜ່ສິ່ງລາມົກ<br>• ຄອບຄອງ ຫຼື ເຜີຍແຜ່ສິ່ງລາມົກເດັກ | • ການລ່ວງລະເມີດທາງເພດ | • ການບັງຄັບໃຫ້ແຕ່ງດອງ | • ບໍ່ມີປັດໄຈໃດສະແດງເຖິງຄວາມອັນຕະລາຍທາງເພດ |
| **ຄວາມຮຸນແຮງທາງຈິດໃຈ** | • ການທໍາຮ້າຍຕົນເອງຂອງຜູ້ຖືກເຄາະຮ້າຍ ຫຼື ຄວາມພະຍາຍາມ ໃນການຂ້າຕົວຕາຍ | • ຖືກແຍກປ່ຽວເລື້ອຍໆ, ດູຖູກ, ຫຼື ເຮັດໃຫ້ອັບອາຍ ຢ່າງຕໍ່ ເນື່ອງ.<br>• ການຂົ່ມຂູ່ທີ່ຈະທໍາຮ້າຍ ຫຼື ຂ້າ ຜູ້ຖືກເຄາະຮ້າຍ, ລູກ, ຫຼື ຄົນທີ່ພວກເຂົາຫ່ວງໃຍ. | • ດູຖູກ, ປ່ອຍປະລະເລີຍ ຫຼື ເຮັດໃຫ້ອັບອາຍ ບາງຄັ້ງຄາວ.<br>• ຄູ່ຂອງທ່ານ ສະແດງຄວາມໂມໂຫໃຈຮ້າຍ ຖ້າຫາກເຫັນທ່ານລົມກັບຜູ້ຊາຍຄົນອື່ນ.<br>• ກົດດັນໃຫ້ບອກບ່ອນຢູ່ຂອງຜູ້ຖືກເຄາະຮ້າຍຢູ່ເລື້ອຍໆ<br>• ພະຍະຍາມບໍ່ໃຫ້ຜູ້ຖືກເຄາະຮ້າຍພົບກັບໝູ່ເພື່ອນ ຫຼື ຕິດຕໍ່ກັບຄອບຄົວຂອງເຈົ້າ<br>• ໄດ້ຂູ່ໄວ້ວ່າຈະເອົາລູກໄປຈາກພວກລາວ | • ຜູ້ຖືກເຄາະຮ້າຍໄດ້ຮັບການຊ່ວຍເຫຼືອ ແລະ ເງື່ອນໄຂທີ່ ເໝາະສົມທີ່ໄດ້ແກ້ໄຂຄວາມເປັນຄວາມຮຸນແຮງທາງອາລົມແລ້ວ. |
| **ຄວາມຮຸນແຮງທາງເສດຖະກິດ** | • ການຈູດເຜົາທີ່ພາໃຫ້ເກີດຄວາມເສຍຫາຍທາງຊັບສິນ | ການທໍາລາຍ, ມ້າງເພ ເຮືອນຊານ ແລະ ວັດຖຸສິ່ງຂອງ | • ກີດຂວາງບໍ່ໃຫ້ຜູ້ຖືກເຄາະຮ້າຍດໍາເນີນການຕັດສິນໃຈໃດໆກ່ຽວກັບການເງິນຂອງຄອບຄົວ<br>• ຫ້າມໃຫ້ຜູ້ຖືກເຄາະຮ້າຍເຮັດວຽກນອກບ້ານ | • ຜູ້ຖືກເຄາະຮ້າຍໄດ້ຮັບການຊ່ວຍເຫຼືອ ແລະ ເງື່ອນໄຂທີ່ເໝາະສົມທີ່ໄດ້ແກ້ໄຂຄວາມຮຸນແຮງທາງອາລົມແລ້ວ. |

# ເອກະສານຊ້ອນທ້າຍ 2 : ແບບພິມບັນທຶກລະດີຄວາມຮຸນແຮງ

**ເອກະສານປິດລັບ**

| | |
|---|---|
| **ຄໍາແນະນໍາ** | 1. ເອກະສານສະບັບນີ້ຕ້ອງຖືກຕື່ມໂດຍເຈົ້າໜ້າທີ່ຜູ້ຮັບຜິດຊອບໜ່ວຍບໍລິການເທົ່ານັ້ນ. |
| | 2. ຕ້ອງຕື່ມຄໍາຕອບໃສ່ທຸກຄໍາຖາມທີ່ມີໝາຍດອກຈັນ (*) ເຊິ່ງເປັນມາດຕະຖານຂັ້ນຕໍ່າຂອງຊຸດຂໍ້ມູນທີ່ຕ້ອງມີ ໃນກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ. |
| | 3. ຍົກເວັ້ນໄດ້ລະບຸໄວ້ເປັນຢ່າງອື່ນ, ໃຫ້ໝາຍພຽງແຕ່ໜຶ່ງຄໍາຕອບສໍາລັບແຕ່ລະຫົວພາກ |

**ກ່ອນເລີ່ມດໍາເນີນການບັນທຶກ ໃຫ້ແຈ້ງຄືນ ຜູ້ຖືກເຄາະຮ້າຍ ເຖິງສິດທິຂອງພວກເຂົາ ກ່ຽວກັບຄວາມເປັນສ່ວນຕົວ ແລະ ການເກັບຮັກສາທຸກຂໍ້ມູນໄວ້ເປັນຄວາມລັບ. ຂໍ້ມູນຈະຖືກເຜີຍແຜ່ໄດ້ ກໍຕໍ່ເມື່ອ ຜູ້ຖືກເຄາະຮ້າຍໄດ້ຮັບການຍິນຍອມຜ່ານການຈົດບັນທຶກເປັນລາຍລັກອັກສອນ ແລະ ໄດ້ຮັບການແຈ້ງໃຫ້ຊາບແລ້ວວ່າ ຂໍ້ມູນດັ່ງກ່າວຈະຖືກເຜີຍແຜ່ຕໍ່ໃຫ້ພາກສ່ວນໃດ. ບາງຄໍາຖາມຕໍ່ໄປນີ້ຈໍາເປັນຕ້ອງໄດ້ຕອບ ແຕ່ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ສາມາດເລືອກທີ່ຈະບໍ່ຕອບຄໍາຖາມເຫຼົ່ານັ້ນ ທີ່ເຫັນວ່າ ບໍ່ຈໍາເປັນ.**

| **1-ຂໍ້ມູນບໍລິຫານ** | | |
|---|---|---|
| **ເລກທີກໍລະນີ:** | **ລະຫັດຜູ້ຖືກເຄາະຮ້າຍ:** | **ລະຫັດຜູ້ຮັບຜິດຊອບກໍລະນີ:** |
| **ວັນທີເດືອນປີສໍາພາດ:** | **ວັນທີເດືອນປີທີ່ເກີດເຫດ*:** | |
| ລາຍງານໂດຍຜູ້ຜູ້ຖືກເຄາະຮ້າຍ ຫຼື ລາຍງານໂດຍ ຜູ້ທີ່ນໍາພາຜູ້ຖືກເຄາະຮ້າຍ ເຂົ້າແຈ້ງຄວາມ ແລະ ຜູ້ຖືກເຄາະຮ້າຍ ກໍປາກົດຕົວໃນການລາຍງານ.<br>ລາຍງານໂດຍຜູ້ອື່ນທີ່ບໍ່ແມ່ນຜູ້ຖືກເຄາະຮ້າຍ ແລະ ຜູ້ຖືກເຄາະຮ້າຍບໍ່ໄດ້ປາກົດຕົວໃນການລາຍງານ. | | |

| **2- ລາຍລະອຽດຜູ້ຖືກເຄາະຮ້າຍ** | | |
|---|---|---|
| **2.1 ອາຍຸ*:** | **2.2 ເພດ*:** ຍິງ ຊາຍ | |
| **2.3 ບ້ານເກີດ*:** | **2.4 ສັນຊາດ (ກໍລະນີຄົນຕ່າງປະເທດ):** | |
| **2.5 ຊົນເຜົ່າ:** | **2.6 ການສໍາພາດຈໍາເປັນຕ້ອງມີລ່າມແປພາສາບໍ?***<br>☐ ຕ້ອງການ ☐ ບໍ່ຕ້ອງການ | |
| **2.7 ສະຖານະພາບຄອບຄົວ*:**<br>☐ ໂສດ<br>☐ ແຕ່ງງານແລ້ວ/ອາໄສຢູ່ຮ່ວມກັນ | **2.8 ຈໍານວນ ແລະ ອາຍຸລູກ ຫຼື ຜູ້ທີ່ຮັບມາລ້ຽງດູອື່ນໆ:** | **2.9 ອາຊີບ:** |

| | | | | |
|---|---|---|---|---|
| ☐ ຢ່າງຮ້າງ/ແຍກກັນຢູ່<br>☐ ໝ້າຍ | | | | |
| **ບ່ອນຢູ່ປັດຈຸບັນ:** | | | | |
| **2.10 ຜູ້ຖືກເຄາະຮ້າຍ ແມ່ນຜູ້ທີ່ມີຄວາມພິການບໍ່? *** *(ເລືອກເອົາທຸກຫົວຂໍ້ທີ່ເໝາະສົມ)*: | | | | |
| ບໍ່ມີ | ຄວາມພິການທາງຮ່າງກາຍ | | ຄວາມພິການທາງສະຕິປັນຍາ | ຄວາມພິການທາງຈິດ |
| **2.11 ຜູ້ຖືກເຄາະຮ້າຍ ແມ່ນເດັກບໍ່?*:** | | | | |
| ບໍ່ແມ່ນ (ໄປທີ່ຂໍ້ 3) | ເດັກທີ່ບໍ່ມີຜູ້ປົກຄອງ | | ເດັກທີ່ຖືກແຍກອອກຈາກຄອບຄົວ | ເດັກທີ່ດ້ອຍໂອກາດອື່ນໆ |
| | (ໄປທີ່ຂໍ້ 2.12) | | | |
| ***ພາກສ່ວນລຸ່ມແມ່ນສຳລັບຜູ້ຖືກເຄາະຮ້າຍທີ່ເປັນເດັກ (ອາຍຸຕ່ຳກວ່າ 18 ປີ)*** | | | | |
| **2.12 ເດັກຜູ້ຖືກເຄາະຮ້າຍ ອາໄສຢູ່ຜູ້ດຽວບໍ?**<br>ແມ່ນ ( ຖ້າແມ່ນ,__)<br>ບໍ່ແມ່ນ (ຖ້າບໍ່ແມ່ນ, ໄປທີ່ຂໍ້ 2.13) | | | | |
| **2.13 ເດັກຜູ້ຖືກເຄາະຮ້າຍ ມີສາຍພົວພັນແນວໃດ ກັບຜູ້ທີ່ເຂົ້າອາໄສຢູ່?** | | | | |
| ພໍ່ແມ່/ ຜູ້ປົກຄອງ<br>(ໄປທີ່ຂໍ້ 2.14-15) | ຍາດພີ່ນ້ອງ<br>(ໄປທີ່ຂໍ້ 2.14-15) | | ຜົວ ຫຼື ເມຍ / ຄູ່ຮ່ວມອາໄສ (ໄປທີ່ຂໍ້ 3) | ອື່ນໆ:____________ |
| **2.14 ສະຖານະທາງຄອບຄົວຂອງຜູ້ດູແລເປັນແນວໃດ?** | | | | |
| ໂສດ | ແຕ່ງງານແລ້ວ / ຄູ່ຮ່ວມອາໄສ | ຢ່າຮ້າງ/ແຍກກັນຢູ່ | ໝ້າຍ | ບໍ່ຮູ້/ບໍ່ລະບຸ |
| **2.15 ອາຊີບຫຼັກຂອງຜູ້ລ້ຽງດູແມ່ນຫຍັງ?:** | | | | |

## 3- ລາຍລະອຽດຂອງເຫດການ

**ລາຍລະອຽດເຫດການ/ຂໍ້ມູນອະທິບາຍເຫດການ*:**

(ສະຫຼຸບລາຍລະອຽດຕ່າງໆຂອງເຫດການຈາກຄຳສຳພາດຂອງຜູ້ຖືກເຄາະຮ້າຍ)

**3.1 ເວລາທີ່ເກີດເຫດ*:**

- ☐ ຖ້າບໍ່ຮູ້, ໃຫ້ເຈາະຈົງເຖິງ:
- ☐ ເວລາຕອນເຊົ້າ (ນັບຕັ້ງແຕ່ຕາເວັນຂຶ້ນ ຕົ້ນເຖິງ ທ່ຽງ)
- ☐ ຕອນສວຍ (ທ່ຽງ ຈົນເຖິງຕາເວັນຕົກດິນ)
- ☐ ຕອນແລງ/ກາງຄືນ (ຕາເວັນຕົກ ຈົນເຖິງຕາເວັນຂຶ້ນ)
- ☐ ບໍ່ຮູ້/ບໍ່ສາມາດລະບຸໄດ້

**3.2 ສະຖານທີ່ເກີດເຫດ*:**

**3.3 ປະເພດຂອງຄວາມຮຸນແຮງ*:**

(ໃຫ້ເລືອກປະເພດໃດໜຶ່ງ)

**ຄວາມຮຸນແຮງທາງເພດ**

- ☐ ການຂົ່ມຂືນທຳຊຳເລົາ (ລວມທັງການກະທຳຊຳເລົາເປັນກຸ່ມ, ການບັງຄັບຮ່ວມເພດ)
- ☐ ການລ່ວງລະເມີດທາງເພດ (ລວມທັງຄວາມພະຍາຍາມໃນການກະທຳຊຳເລົາ, ການລະເມີດ/ຄວາມຮຸນແຮງທາງເພດທີ່ບໍ່ມີການສອດໃສ່ອະໄວຍະວະເພດ)
- ☐ ການຄຸກຄາມທາງເພດ (ລວມທັງການກະທຳ ຫຼື ຄຳເວົ້າທີ່ບໍ່ເພິ່ງປາຖະໜາທາງເພດ)
- ☐ ການບັງຄັບການແຕ່ງດອງ (ລວມທັງການແຕ່ງດອງກ່ອນໄວອັນຄວນ)

**ຄວາມຮຸນແຮງທາງຮ່າງກາຍ**

- ☐ (ລວມທັງການຕີ, ຕົບ, ເຕະ, ຍູ້, ຄວາມພະຍາຍາມໃນການ ລັກພາຕົວ. ເປັນຕົ້ນ. ທີ່ບໍ່ເປັນລັກສະນະການທຳຮ້າຍທາງເພດ)

**ຄວາມຮຸນແຮງທາງຈິດໃຈ**

- ☐ (ລວມທັງການຂົ່ມຂູ່, ການໝິ່ນປະໝາດກຽດສັກສີ)

**1. ເຫດການທີ່ເກີດຂຶ້ນມີການສອດໃສ່ທາງອະໄວຍະວະເພດບໍ່?**

ຖ້າມີ → ການຂົ່ມຂືນທຳຊຳເລົາ

ຖ້າບໍ່ມີ → ຂ້າມໄປຮູບແບບຕໍ່ໄປຂອງຄວາມຮຸນແຮງ

**2. ເຫດການທີ່ເກີດເປັນການພົວພັນທາງເພດທີ່ບໍ່ເພິ່ງປາຖະໜາບໍ່?**

ຖ້າແມ່ນ → ການລ່ວງລະເມີດທາງເພດ

ຖ້າບໍ່ແມ່ນ → ຂ້າມໄປຮູບແບບຕໍ່ໄປຂອງຄວາມຮຸນແຮງ

**3. ເຫດການທີ່ເກີດຂຶ້ນໄດ້ພົວພັນກັບການນຳໄປສູ່ການຄຸກຄາມທາງເພດບໍ່?**

ຖ້າແມ່ນ → ການຄຸກຄາມທາງເພດ

ຖ້າບໍ່ແມ່ນ → ຂ້າມໄປຮູບແບບຕໍ່ໄປຂອງຄວາມຮຸນແຮງ

**ຄວາມຮຸນແຮງທາງເສດຖະກິດ**

- ☐ (ການກີດກັ້ນທາງຊັບພະຍາກອນ, ໂອກາດ ຫຼື ການເຂົ້າເຖິງການບໍລິການຕ່າງໆ)
- ☐ **ບໍ່ແມ່ນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ,** ກະລຸນາເຈາະຈົງລາຍລະອຽດ:

________________________________________

________________________________________

________________________________________

________________________________________

________________________________________

**4.ເຫດການທີ່ເກີດຂຶ້ນໄດ້ກ່ຽວຂ້ອງກັບການບັງຄັບໃນການແຕ່ງດອງບໍ່?**

ຖ້າແມ່ນ → ແມ່ນການບັງຄັບການແຕ່ງດອງ

ຖ້າບໍ່ແມ່ນ → ຂ້າມໄປຮູບແບບຕໍ່ໄປຂອງຄວາມຮຸນແຮງ

**5.ເຫດການທີ່ເກີດຂຶ້ນມີການພົວພັນເຖິງຄວາມຮຸນແຮງທາງຮ່າງກາຍຫຼືບໍ່?**

ຖ້າແມ່ນ → ແມ່ນຄວາມຮຸນແຮງທາງຮ່າງກາຍ

ຖ້າບໍ່ແມ່ນ → ຂ້າມໄປຮູບແບບຕໍ່ໄປຂອງຄວາມຮຸນແຮງ

**6. ເຫດການທີ່ເກີດຂຶ້ນພົວພັນກັບທຳຮ້າຍທາງຈິດໃຈ ຫຼື ອາລົມ ບໍ່?**

ຖ້າແມ່ນ → ແມ່ນຄວາມຮຸນແຮງທາງດ້ານຈິດໃຈ

ຖ້າບໍ່ແມ່ນ → ຂ້າມໄປຮູບແບບຕໍ່ໄປຂອງຄວາມຮຸນແຮງ

**7. ເຫດການທີ່ເກີດຂຶ້ນ ພົວພັນກັບການກີດຂວາງໃນການເຂົ້າເຖິງທາງຊັບພະຍາກອນ, ໂອກາດ ຫຼື ທາງບໍລິການຫຼືບໍ່?**

ຖ້າມີ → ແມ່ນຄວາມຮຸນແຮງທາງເສດຖະກິດ

ຖ້າບໍ່ແມ່ນ → ຂ້າມໄປຮູບແບບຕໍ່ໄປຂອງຄວາມຮຸນແຮງ

**8. ເຫດການທີ່ນຳເຂົ້າແຈ້ງຄວາມແມ່ນກໍລະນີຄວມຮຸນແຮງຕໍ່ແມ່ຍິງແລະ ເດັກບໍ່?**

ຖ້າແມ່ນ → ເລີ່ມຈາກຂໍ້ 1 ແລະ ໃຫ້ຈັດປະເພດອີກຄັ້ງ. ຖ້າທາງໄດ້ລອງແຍກປະເພດຫຼາຍຄັ້ງແລ້ວ, ໃຫ້ທ່ານປຶກສາກັບຫົວໜ້າຂອງທ່ານ ຫຼື ສູນໃຫ້ຄຳປຶກສາຂອງ ສສຍລ ເພື່ອຊ່ວຍໃນການຈັດປະເພດຂອງເຫດການທີ່ເກີດຂຶ້ນ.

ຖ້າບໍ່ → ໃຫ້ຈັດເຂົ້າໃນປະເພດ ບໍ່ແມ່ນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ແລະ ລະບຸລາຍລະອຽດກ່ຽວກັບເຫດການທີ່ເກີດຂຶ້ນ.

**3.4 ເຫດການຄວາມຮຸນແຮງນີ້ມີຄວາມກ່ຽວພັນກັບ ການແລກປ່ຽນຜົນປະໂຫຍດໂດຍເງິນ, ສິນຄ້າ, ຜົນປະໂຫຍດ ຫຼື ການບໍລິການອື່ນໆບໍ່?**

- ☐ ມີ
- ☐ ບໍ່ມີ

| |
|---|
| **3.5 ຜູ້ຖືກເຄາະຮ້າຍເຄີຍແຈ້ງຄວາມຢູ່ໃສມາກ່ອນບໍ່?** |
| ☐ ບໍ່ເຄີຍ |
| ☐ ໜ່ວຍບໍລິການທາງສຸຂະພາບ/ໂຮງໝໍ ____________________ |
| ☐ ໜ່ວຍບໍລິການທາງສຸຂະພາບຈິດ/ສູນໃຫ້ຄຳປຶກສາ____________________ |
| ☐ ຫ້ອງການໃຫ້ການຊ່ວຍເຫຼືອທາງກົດໝາຍ____________________ |
| ☐ ຫ້ອງການຕຳຫຼວດ/ໜ່ວຍງານຮັກສາຄວາມປອດໄພອື່ນໆ____________________ |
| ☐ ເຮືອນ/ສູນພັກເຊົາທີ່ປອດໄພ____________________ |
| ☐ ອື່ນໆ, ກະລຸນາລະບຸ:____________________ |

| |
|---|
| **3.6 ຜູ້ຖືກເຄາະຮ້າຍເຄີຍຖືກຄວາມຮຸນແຮງຈາກຜູ້ກະທຳຜິດມາກ່ອນບໍ່?** |
| ☐ ເຄີຍ |
| ☐ ບໍ່ເຄີຍ |
| **ຖ້າເຄີຍ, ໃຫ້ອະທິບາຍໂດຍຫຍໍ້:** |

| **4- ຂໍ້ມູນຂອງຜູ້ຖືກຫາ** | | | | | | |
|---|---|---|---|---|---|---|
| **4.1 ຈຳນວນຜູ້ຖືກຫາ:** | | | | | | |
| 1 | 2 | 3 | | | ຫຼາຍກວ່າ 3 | ບໍ່ຮູ້ |
| **4.2 ເພດຂອງຜູ້ຖືກຫາ** | | ຍິງ | ຊາຍ | | ທັງຍິງ ແລະ ຊາຍ | |
| **ຖ້າຫຼາຍກວ່າ 1 ຜູ້ຖືກຫາແມ່ນໃຫ້ຕື່ມຂໍ້ມູນແຕ່ລະຜູ້ຖືກຫາໃນພາກນີ້** | | | | | | |
| **4.3 ອາຍຸຂອງຜູ້ຖືກຫາ (ຖ້າຮູ້ ຫຼື ສາມາດກຳນົດໄດ້):** | | | | | | |
| ຕ່ຳກວ່າ 15 ປີ | 15-ຕ່ຳກວ່າ 18ປີ | 18-25ປີ | 26-40 ປີ | 41-60ປີ | 61+ ປີ | ບໍ່ຮູ້ |
| **4.4 ສາຍພົວພັນລະຫວ່າງຜູ້ຖືກຫາ ແລະ ຜູ້ລອດຊີວິດ:** (ເລືອກໜຶ່ງຕົວເລືອກທີ່ເໝາະສົມທີ່ສຸດ) | | | | | | |
| ☐ ຜົວ/ເມຍ ລວມທັງ ອະດີດຜົວ/ເມຍ<br>☐ ຄອບຄົວ<br>☐ ຜູ້ດູແລ<br>☐ ຄອບຄົວ ຄົນອື່ນ ນອກຈາກຜົວ/ເມຍຂອງຜູ້ດູແລ | | | | ☐ ຄູ່ຮ່ວມເຊົ່າ/ຄູ່ຮ່ວມອາໄສ<br>☐ ຄອບຄົວໝູ່/ເພື່ອນບ້ານ<br>☐ ແຮງງານເຄື່ອນຍ້າຍພາຍໃນປະເທດ/ຜູ້ພັດຖິ່ນພາຍໃນປະເທດ/ຜູ້ອົບພະຍົບກັບຄືນປະເທດ<br>☐ ສະມາຊິກຜູ້ພັກອາໄສຢູ່ຊຸມຊົນອື່ນໆ | | |

| | |
|---|---|
| ☐ ຄົນທີ່ຮູ້ຈັກໃນຊຸມຊົນ<br>☐ ຫົວໜ້າ/ນາຍຈ້າງ<br>☐ ໝູ່ໂຮງຮຽນ<br>☐ ຄູ/ອາຈານ/ພະນັກງານໂຮງຮຽນ<br>☐ ໜ່ວຍງານບໍລິການ<br>☐ ເພື່ອນຮ່ວມວຽກ, ໂຮງກຮຽນ, ອົບຮົມ | ☐ ອື່ນໆ<br>☐ ບໍ່ມີສາຍພົວພັນ<br>☐ ບໍ່ຮູ້ |

**4.5 ອາຊີບຫຼັກຂອງຜູ້ຖືກຫາ (ຖ້າຮູ້):**

**4.6 ການປະເມີນຄວາມສ່ຽງ**

| | | |
|---|---|---|
| **ຜູ້ຖືກເຄາະຮ້າຍທີ່ເຄີຍຖືກຄວາມຮຸນແຮງມາກ່ອນ** | | |
| **ຄຳຖາມ** | **ແມ່ນ** | **ບໍ່ ແມ່ນ** |
| ແມ່ນຄວາມຮຸນແຮງທາງຮ່າງກາຍ ຫຼື ທາງເພດບໍ່? | | |
| ແມ່ນກໍລະນີທີ່ເຄີຍຖືກທຳຮ້າຍໂດຍການນຳໃຊ້ຄວາມຮຸນແຮງມາກ່ອນບໍ່? | | |
| ຜູ້ກະທຳຜິດໄດ້ຂົ່ມຂູ່ຈະທຳຮ້າຍຜູ້ຖືກເຄາະຮ້າຍບໍ່? | | |
| ກຳລັງຮູບແບບ ຫຼື ການນຳໃຊ້ຄວາມຮຸນແຮງເກີດຂຶ້ນບໍ່? | | |
| ຜູ້ຖືກເຄາະຮ້າຍຮູ້ສຶກຢ້ານກົວບໍ່? | | |
| ຜູ້ຖືກເຄາະຮ້າຍ ຖືກທຳຮ້າຍໃນຂະນະທີ່ກຳລັງຖືພາ ຫຼື ພາຍຫລັງທີ່ຫາກໍໃຫ້ກຳເນີດລູກບໍ່? | | |
| ຜ່ານມາເຄີຍໄດ້ແຈ້ງເຈົ້າໜ້າທີ່ຕຳຫຼວດລາຍງານເຖິງຜູ້ກະທຳຜິດນີ້ບໍ່? | | |
| ຜ່ານມາເຄີຍໄດ້ມີການໄກ່ເກ່ຍກໍລະນີດັ່ງກ່າວສຳລັບການໄກ່ເກ່ຍກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ລະຫວ່າງ ຜູ້ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດມາກ່ອນບໍ່? | | |
| ມີຄວາມຮຸນແຮງຕໍ່ເດັກໃນຄອບຄົວບໍ່? | | |
| ຜູ້ກະທຳຜິດເຄີຍມີບັນທຶກການແຈ້ງໂທດ ຫຼື ກຳລັງຖືກດຳເນີນຄະດີຢູ່ບໍ່? | | |

| | | |
|---|---|---|
| | | |
| **ບັນຫາເລື່ອງຢາເສບຕິດ ແລະ ການດື່ມສິ່ງມຶນເມົາຂອງຜູ້ກະທຳຜິດ** | | |
| **ຄຳຖາມ** | **ແມ່ນ** | **ບໍ່ແມ່ນ** |
| ຜູ້ກະທຳຜິດມີບັນຫາເລື່ອງເຄື່ອງດື່ມມຶນເມົາ ຫຼື ຢາເສບຕິດບໍ່? | | |
| **ພຶດຕິກຳການໝົກໝຸ້ນຂອງຜູ້ກະທຳຜິດ ແລະ ຄວາມຫຶງຫວງ** | | |
| **ຄຳຖາມ** | **ແມ່ນ** | **ບໍ່ແມ່ນ** |
| ຜູ້ກະທຳຜິດມີພຶດຕິກຳຄວາມຫຶງຫວງ ຫຼື ຄວບຄຸມບໍ່? | | |
| ມີການຂົ່ມຂູ່ໃດໆຫຼືບໍ່ຫາກຜູ້ຖືກເຄາະຮ້າຍຊອກຕ້ອງການຊອກຫາຄວາມຊ່ວຍເຫຼືອ? | | |
| **ປະຫວັດສຸຂະພາບທາງຈິດຂອງຜູ້ກະທຳຜິດ (ຕົວຢ່າງ ການພະຍາຍາມ ຫຼື ການວາງແຜນໃນການຂ້າຕົວຕາຍ, ຄວາມພະຍາຍາມທີ່ຜ່ານມາ ແລະ ການຂົ່ມຂູ່)** | | |
| **ຄຳຖາມ** | **ແມ່ນ** | **ບໍ່ແມ່ນ** |
| ເຄີຍມີການຂົ່ມຂູ່ໃນການຂ້າຕົວຕາຍຂອງຜູ້ກະທຳຜິດບໍ່? | | |
| ຜູ້ກະທຳຜິດເຄີຍມີປະຫວັດກ່ຽວກັບສຸຂະພາບທາງຈິດ ຫຼື ບັນຫາທາງຈິດບໍ່? | | |
| **ສະຖານະທາງສາຍພົວພັນ** | | |
| **ຄຳຖາມ** | **ແມ່ນ** | **ບໍ່ແມ່ນ** |
| ຜູ້ຖືກເຄາະຮ້າຍ ໄດ້ແຍກທາງກັນແລ້ວ ຫຼື ກຳລັງແຍກທາງ ຫຼື ຫ່າງຄວາມສຳພັນກັນຢູ່ບໍ່? | | |
| ຜູ້ຖືກເຄາະຮ້າຍກຳລັງໜີຈາກຜູ້ກະທຳຜິດຢູ່ບໍ່? | | |
| ຜູ້ຖືກເຄາະຮ້າຍມີການທີ່ຈະບອກເລີກ, ແຍກທາງ ຫຼື ຢ່າຮ້າງ ຕໍ່ຜູ້ກະທຳຜິດໃນໄລຍະເວລາທີ່ໃກ້ຈະມາຮອດນີ້ບໍ່?; ມີການປ່ຽນແປງໃນສິດການດູແລລູກ ແລະ/ຫຼື ມີການປ່ຽນທີ່ຢູ່ອາໄສຂອງຜູ້ຖືກເຄາະຮ້າຍໃນຊ່ວງເວລາໃກ້ໆນີ້ບໍ? | | |
| ການສັງເກດ ແລະ ປະເມີນຄວາມສ່ຽງ | | |

## 5- ການສົ່ງຕໍ່

**5.1 ໃຜແມ່ນຜູ້ສົ່ງຕໍ່ຜູ້ຖືກເຄາະຮ້າຍຫາທ່ານ?**

- ☐ ຜູ້ເຄາະຮ້າຍມາຂໍຄວາມຊ່ວຍເຫຼືອດ້ວຍຕົນເອງຈຸດຕິດຕໍ່ທໍາອິດໜ່ວຍໃຫ້ບໍລິການທາງການແພດ/ໂຮງໝໍ
- ☐ ໜ່ວຍບໍລິການທາງສຸຂະພາບຈິດ/ສູນໃຫ້ຄໍາປຶກສາ
- ☐ ຫ້ອງການໃຫ້ການຊ່ວຍເຫຼືອທາງກົດໝາຍ
- ☐ ຫ້ອງການຕໍາຫຼວດ/ໜ່ວຍງານຮັກສາຄວາມປອດໄພອື່ນໆ
- ☐ ໂຄງການສົ່ງເສີມຊີວິດການເປັນຢູ່ທີ່ດີຂຶ້ນ
- ☐ ສູນພັກເຊົາທີ່ປອດໄພ
- ☐ ຄູ/ອາຈານ/ພະນັກງານໂຮງຮຽນ
- ☐ ຫົວໜ້າຊຸມຊົນ ຫຼື ຫົວໜ້າຄ້າຍ
- ☐ ໜ່ວຍງານມະນຸດສະທໍາ ຫຼື ໜ່ວຍງານພັດທະນາອື່ນໆ
- ☐ ໜ່ວຍງານອື່ນໆຂອງລັດຖະບານ
- ☐ ອື່ນໆ (ລະບຸລາຍລະອຽດ)________________________

**5.2 ທ່ານໄດ້ສົ່ງຜູ້ຖືກເຄາະຮ້າຍໄປທີ່ສູນພັກເຊົາບໍ່?**

- ☐ ສົ່ງ (ຂ້າມໄປທີ່ຂໍ້ 5.2.2) ບໍ່ໄດ້ສົ່ງ (ຂ້າມໄປທີ່ຂໍ້ 5.2.1)
- ☐ ບໍ່ໄດ້ລະບຸ

**5.2.1 ຖ້າ 'ບໍ່', ເຫດຜົນ?**

- ☐ ການບໍລິການທີ່ໄດ້ຖືກກະກຽມໄວ້ໂດຍໜ່ວຍງານຂອງທ່ານ
- ☐ ການບໍລິການທີ່ໄດ້ຮັບຈາກໜ່ວຍງານອື່ນມາແລ້ວ
- ☐ ຜູ້ເຄາະຮ້າຍເລືອກທີ່ຈະຢູ່ເຮືອນພີ່ນ້ອງ ຫຼື ໝູ່
- ☐ ການປະຕິເສດການສົ່ງຕໍ່ໂດຍຜູ້ຖືກເຄາະຮ້າຍ
- ☐ ບໍ່ມີການໃຫ້ການບໍລິການດັ່ງກ່າວ

**5.2.2 ຖ້າ 'ແມ່ນ',**

**ວັນທີເດືອນປີທີ່ໄດ້ເຂົ້າແຈ້ງຄວາມ ຫຼື ວັນ ແລະ ເວລານັດພົບໃນຄັ້ງຕໍ່ໄປ:**

**ຊື່ ແລະ ສະຖານທີ່:**

**ບັກທຶກ (ລວມທັງປະຕິບັດ ຫຼື ຂໍ້ແນະນໍາໃນການປະຕິບັດຕໍ່ກໍລະນີທີ່ເຂົ້າແຈ້ງຄວາມ):**

**5.3 ທ່ານໄດ້ສົ່ງຕໍ່ຜູ້ຖືກເຄາະຮ້າຍໄປທີ່ໜ່ວຍງານໃຫ້ບໍລິການທາງການແພດ/ໂຮງໝໍບໍ່?**

- ☐ ສົ່ງ (ຂ້າມໄປຂໍ້ 5.3.2)ບໍ່ໄດ້ສົ່ງ (ຂ້າມໄປທີ່ 5.3.1)

**5.3.2 ຖ້າ 'ແມ່ນ',**

**ວັນທີເດືອນປີທີ່ໄດ້ເຂົ້າແຈ້ງຄວາມ ຫຼື ວັນ ແລະ ເວລານັດພົບໃນຄັ້ງຕໍ່ໄປ:**

**ຊື່ ແລະ ສະຖານທີ່:**

| | |
|---|---|
| ☐ ບໍ່ໄດ້ລະບຸ | **ບັກທຶກ (ລວມທັງປະຕິບັດ ຫຼື ຂໍ້ແນະນຳໃນການປະຕິບັດຕໍ່ກໍລະນີທີ່ເຂົ້າແຈ້ງຄວາມ):** |
| **5.3.1 ຖ້າ 'ບໍ່ແມ່ນ', ເຫດຜົນ?**<br>☐ ການບໍລິການທີ່ໄດ້ຖືກກະກຽມໄວ້ໂດຍໜ່ວຍງານຂອງທ່ານ<br>☐ ການບໍລິການທີ່ໄດ້ຮັບຈາກໜ່ວຍງານອື່ນມາແລ້ວ<br>☐ ບໍ່ມີການໃຫ້ການບໍລິການດັ່ງກ່າວໂດຍຜູ້ຖືກເຄາະຮ້າຍເອງ<br>☐ ບໍ່ມີການໃຫ້ການບໍລິການດັ່ງກ່າວ | |
| **5.4 ທ່ານໄດ້ສົ່ງຕໍ່ຜູ້ຖືກເຄາະຮ້າຍໄປທີ່ຫ້ອງການໃຫ້ການຊ່ວຍເຫຼືອທາງກົດໝາຍບໍ່?**<br>☐ ແມ່ນ (ຂ້າມໄປທີ່ຂໍ້ 5.4.2) ຖ້າບໍ່ມີ (ຂ້າມໄປທີ່ຂໍ້ 5.4.1)<br>☐ ບໍ່ລະບຸ | **5.4.2 ຖ້າ 'ແມ່ນ',**<br>**ວັນທີເດືອນປີທີ່ໄດ້ເຂົ້າແຈ້ງຄວາມ ຫຼື ວັນ ແລະ ເວລານັດພົບຄັ້ງຕໍ່ໄປ:**<br>**ຊື່ ແລະ ສະຖານທີ່:**<br>**ບັກທຶກ (ລວມທັງປະຕິບັດ ຫຼື ຂໍ້ແນະນຳໃນການປະຕິບັດຕໍ່ກໍລະນີທີ່ເຂົ້າແຈ້ງຄວາມ):** |
| **5.4.1 ຖ້າ 'ບໍ່ແມ່ນ', ເຫດຜົນ?**<br>☐ ການບໍລິການທີ່ໄດ້ຖືກກະກຽມໄວ້ໂດຍໜ່ວຍງານຂອງທ່ານ<br>☐ ການບໍລິການທີ່ໄດ້ຮັບຈາກໜ່ວຍງານອື່ນມາແລ້ວ<br>☐ ບໍ່ມີການໃຫ້ການບໍລິການດັ່ງກ່າວໂດຍຜູ້ຖືກເຄາະຮ້າຍເອງ<br>☐ ບໍ່ມີການບໍລິການດັ່ງກ່າວ | |
| **5.5 ທ່ານໄດ້ສົ່ງຜູ້ຖືກເຄາະຮ້າຍໃຫ້ສູນໃຫ້ຄຳປຶກສາບໍ່?**<br>☐ **ແມ່ນ** (ຂ້າມໄປທີ່ຂໍ້ 5.4.2)<br>☐ **ບໍ່ແມ່ນ (ຂ້າມໄປທີ່ຂໍ້ 5.4.1)**<br>☐ **ບໍ່ລະບຸ** | **5.5.2 ຖ້າ 'ແມ່ນ',**<br>**ວັນທີເດືອນປີທີ່ໄດ້ເຂົ້າແຈ້ງຄວາມ ຫຼື ວັນ ແລະ ເວລານັດພົບຄັ້ງຕໍ່ໄປ:**<br>**ຊື່ ແລະ ສະຖານທີ່:** |

<table>
<tr>
<td>5.5.1 ຖ້າບໍ່, ເຫດຜົນ?<br>☐ ການບໍລິການທີ່ໄດ້ຖືກກະກຽມໄວ້ໂດຍໜ່ວຍງານຂອງທ່ານ<br>☐ ການບໍລິການທີ່ໄດ້ຮັບຈາກໜ່ວຍງານອື່ນມາແລ້ວ<br>☐ ບໍ່ມີການໃຫ້ການບໍລິການດັ່ງກ່າວໂດຍຜູ້ຖືກເຄາະຮ້າຍເອງ<br>☐ ບໍ່ມີການບໍລິການດັ່ງກ່າວ</td>
<td>ບັກທຶກ (ລວມທັງປະຕິບັດ ຫຼື ຂໍ້ແນະນຳໃນການປະຕິບັດຕໍ່ກໍລະນີທີ່ເຂົ້າແຈ້ງຄວາມ):</td>
</tr>
<tr>
<td>5.6 ທ່ານໄດ້ສົ່ງຜູ້ເຄາະຮ້າຍໃຫ້ໄດ້ຮັບການຊ່ວຍເຫຼືອທາງເສດຖະກິດບໍ່?<br>☐ ແມ່ນ (ຂ້າມໄປທີ່ຂໍ້ 5.4.2)<br>☐ ບໍ່ແມ່ນ (ຂ້າມໄປທີ່ຂໍ້ 5.4.1)<br>☐ ບໍ່ລະບຸ</td>
<td rowspan="2">5.6.2 ຖ້າ 'ແມ່ນ',<br>ວັນທີເດືອນປີທີ່ໄດ້ເຂົ້າແຈ້ງຄວາມ ຫຼື ວັນ ແລະ ເວລານັດພົບຄັ້ງຕໍ່ໄປ:<br>ຊື່ ແລະ ສະຖານທີ່:<br>ບັກທຶກ (ລວມທັງປະຕິບັດ ຫຼື ຂໍ້ແນະນຳໃນການປະຕິບັດຕໍ່ກໍລະນີທີ່ເຂົ້າແຈ້ງຄວາມ):</td>
</tr>
<tr>
<td>5.6.1 ຖ້າບໍ່, ເຫດຜົນ?<br>☐ ການບໍລິການທີ່ໄດ້ຖືກກະກຽມໄວ້ໂດຍໜ່ວຍງານຂອງທ່ານ<br>☐ ການບໍລິການທີ່ໄດ້ຮັບຈາກໜ່ວຍງານອື່ນມາແລ້ວ<br>☐ ບໍ່ມີການໃຫ້ການບໍລິການດັ່ງກ່າວໂດຍຜູ້ຖືກເຄາະຮ້າຍເອງ<br>☐ ບໍ່ມີການບໍລິການດັ່ງກ່າວ</td>
</tr>
<tr>
<td>5.7 ທ່ານໄດ້ສົ່ງຜູ້ເຄາະຮ້າຍໃຫ້ໄດ້ຮັບການດູແລເດັກບໍ່?<br>☐ ແມ່ນ (ຂ້າມໄປທີ່ຂໍ້ 5.4.2)<br>☐ ບໍ່ແມ່ນ (ຂ້າມໄປທີ່ຂໍ້ 5.4.1)<br>☐ ບໍ່ລະບຸ</td>
<td rowspan="2">5.7.2 ຖ້າ 'ແມ່ນ',<br>ວັນທີເດືອນປີທີ່ໄດ້ເຂົ້າແຈ້ງຄວາມ ຫຼື ວັນ ແລະ ເວລານັດພົບຄັ້ງຕໍ່ໄປ:<br>ຊື່ ແລະ ສະຖານທີ່:<br>ບັກທຶກ (ລວມທັງປະຕິບັດ ຫຼື ຂໍ້ແນະນຳໃນການປະຕິບັດຕໍ່ກໍລະນີທີ່ເຂົ້າແຈ້ງຄວາມ):</td>
</tr>
<tr>
<td>5.7.1 ຖ້າບໍ່, ເຫດຜົນ?<br>☐ ການບໍລິການທີ່ໄດ້ຖືກກະກຽມໄວ້ໂດຍໜ່ວຍງານຂອງທ່ານ<br>☐ ການບໍລິການທີ່ໄດ້ຮັບຈາກໜ່ວຍງານອື່ນມາແລ້ວ<br>☐ ບໍ່ມີການໃຫ້ການບໍລິການດັ່ງກ່າວໂດຍຜູ້ຖືກເຄາະຮ້າຍເອງ</td>
</tr>
</table>

| | |
|---|---|
| ☐ ບໍ່ມີການບໍລິການດັ່ງກ່າວ | |
| **5.8 ທ່ານໄດ້ສົ່ງຜູ້ເຄາະຮ້າຍໃຫ້ໄດ້ຮັບການສຶກສາ ແລະ ອົບຮົມວິຊາຊີບບໍ່?**<br>☐ **ແມ່ນ** (ຂ້າມໄປທີ່ຂໍ້ 5.4.2)<br>☐ **ບໍ່ແມ່ນ (ຂ້າມໄປທີ່ຂໍ້ 5.4.1)**<br>☐ **ບໍ່ລະບຸ** | **5.7.2 ຖ້າ 'ແມ່ນ',**<br>**ວັນທີເດືອນປີທີ່ໄດ້ເຂົ້າແຈ້ງຄວາມ ຫຼື ວັນ ແລະ ເວລານັດພົບຄັ້ງຕໍ່ໄປ:**<br>**ຊື່ ແລະ ສະຖານທີ່:**<br>**ບັນທຶກ (ລວມທັງປະຕິບັດ ຫຼື ຂໍ້ແນະນຳໃນການປະຕິບັດຕໍ່ກໍລະນີທີ່ເຂົ້າແຈ້ງຄວາມ):** |
| **5.8.1 ຖ້າບໍ່, ເຫດຜົນ?**<br>☐ ການບໍລິການທີ່ໄດ້ຖືກກະກຽມໄວ້ໂດຍໜ່ວຍງານຂອງທ່ານ<br>☐ ການບໍລິການທີ່ໄດ້ຮັບຈາກໜ່ວຍງານອື່ນມາແລ້ວ<br>☐ ບໍ່ມີການໃຫ້ການບໍລິການດັ່ງກ່າວໂດຍຜູ້ຖືກເຄາະຮ້າຍເອງ<br>☐ ບໍ່ມີການບໍລິການດັ່ງກ່າວ | |
| **5.9 ທ່ານໄດ້ສົ່ງຜູ້ເຄາະຮ້າຍໃຫ້ໄດ້ຮັບການສະໜັບສະໜູນໃຫ້ເຂົ້າກັບສັງຄົມ ແລະ ຄອບຄົວບໍ່?**<br>☐ **ແມ່ນ** (ຂ້າມໄປທີ່ຂໍ້ 5.4.2)<br>☐ **ບໍ່ແມ່ນ (ຂ້າມໄປທີ່ຂໍ້ 5.4.1)**<br>☐ **ບໍ່ລະບຸ** | **5.9.2 ຖ້າ 'ແມ່ນ',**<br>**ວັນທີເດືອນປີທີ່ໄດ້ເຂົ້າແຈ້ງຄວາມ ຫຼື ວັນ ແລະ ເວລານັດພົບຄັ້ງຕໍ່ໄປ:**<br>**ຊື່ ແລະ ສະຖານທີ່:**<br>**ບັນທຶກ (ລວມທັງປະຕິບັດ ຫຼື ຂໍ້ແນະນຳໃນການປະຕິບັດຕໍ່ກໍລະນີທີ່ເຂົ້າແຈ້ງຄວາມ):** |
| **5.9.1 ຖ້າບໍ່, ເປັນຫຍັງ?**<br>☐ ການບໍລິການທີ່ໄດ້ຖືກກະກຽມໄວ້ໂດຍໜ່ວຍງານຂອງທ່ານ<br>☐ ການບໍລິການທີ່ໄດ້ຮັບຈາກໜ່ວຍງານອື່ນມາແລ້ວ<br>☐ ບໍ່ມີການໃຫ້ການບໍລິການດັ່ງກ່າວໂດຍຜູ້ຖືກເຄາະຮ້າຍເອງ<br>☐ ບໍ່ມີການບໍລິການດັ່ງກ່າວ | |

**ຜູ້ລາຍງານ/ແຈ້ງຄວາມ** **ຜູ້ບັນທຶກ/ຮັບແຈ້ງຄວາມ**

ທີ່...........................ວັນທີ......../......../............ ທີ່...........................ວັນທີ......../......../..........

# ເອກະສານຊ້ອນທ້າຍ 3: ແບບພິມຍິນຍອມແລກປ່ຽນຂໍ້ມູນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ເອກະພາບ ປະຊາທິປະໄຕ ວັດທະນາຖາວອນ**

## ແບບຟອມຍິນຍອມໃຫ້ເປີດເຜີຍຂໍ້ມູນ

ຂ້າພະເຈົ້າ,____________________________________________, ອະນຸຍາດໃຫ້ (ຊື່ຂອງອົງການຈັດຕັ້ງ) ແບ່ງປັນຂໍ້ມູນກ່ຽວກັບເຫດການທີ່ຂ້າພະເຈົ້າໄດ້ລາຍງານໃຫ້ອົງການຮັບຮູ້ ແລະ ຂ້າພະເຈົ້າເຂົ້າໃຈດັ່ງທີ່ອະທິບາຍຂ້າງລຸ່ມນີ້:

1. ຂ້າພະເຈົ້າເຂົ້າໃຈວ່າໃນການອະນຸຍາດ ຫຼື ມອບສິດຂອງຕົນຕາມລາຍລະອຽດຂ້າງລຸ່ມນີ້, ໃຫ້ (ຊື່ອົງການ) ແມ່ນເປັນການອະນຸຍາດໃຫ້ແຍ່ງປັນຂໍ້ມູນສະເພາະຂອງກໍລະນີຈາກການລາຍງານເຫດການທີ່ເກີດຂຶ້ນກັບຕົນເອງ ໃຫ້ກັບຜູ້ໃຫ້ບໍລິການທີ່ຂ້າພະເຈົ້າລະບຸໄວ້ເທົ່ານັ້ນ, ເພື່ອໃຫ້ຕົນເອງສາມາດໄດ້ຮັບການຊ່ວຍເຫຼືອດ້ານຄວາມປອດໄພ, ດ້ານສຸຂະພາບ, ຈິດໃຈ ແລະ/ຫຼື ທາງດ້ານກົດໝາຍ.

   ຂ້າພະເຈົ້າເຂົ້າໃຈວ່າຂໍ້ມູນທີ່ແບ່ງປັນຈະຖືກປະຕິບັດດ້ວຍການປິດລັບ ແລະ ຄວາມເຄົາລົບ, ແລະແບ່ງປັນພຽງແຕ່ຕາມຄວາມຈຳເປັນ ເພື່ອສະໜອງການຊ່ວຍເຫຼືອທີ່ຂ້າພະເຈົ້າຮ້ອງຂໍ.

   ຂ້າພະເຈົ້າເຂົ້າໃຈວ່າການເປີດເຜີຍຂໍ້ມູນນີ້ໝາຍຄວາມວ່າບຸກຄົນຈາກອົງການ ຫຼື ບໍລິການທີ່ໝາຍ “X” ຢູ່ຂ້າງລຸ່ມອາດຈະມາລົມກັບຕົນເອງ. ໃນຈຸດໃດກໍຕາມ, ຂ້າພະເຈົ້າມີສິດທີ່ຈະປ່ຽນໃຈກ່ຽວກັບການແລກປ່ຽນຂໍ້ມູນກັບອົງການ/ຈຸດປະສານງານທີ່ຖືກກຳນົດໄວ້ຂ້າງລຸ່ມນີ້.

   ຂ້າພະເຈົ້າຕ້ອງການໃຫ້ຂໍ້ມູນຂອງຕົນເອງຖືກເປີດເຜີຍກັບ:

   (ສາມາດໝາຍໄດ້ບໍ່ຈຳກັດ ຕາມຄວາມເປັນຈິງ ແລະ ກະລຸນາຂຽນບອກຂໍ້ມູນລະອຽດກ່ຽວກັບສະຖາບັນ ຫຼື ອົງການ ຕາມຄວາມເປັນຈິງ)

| ແມ່ນ | ບໍ່ແມ່ນ | |
|---|---|---|
| ☐ | ☐ | ບໍລິການທາງຄວາມປອດໄພ (ຂໍ້ມູນ ຫຼື ຊື່ສະເພາະເຈາະຈົງ):____________________________ |
| ☐ | ☐ | ບໍລິການທາງຈິດຕະ (ຂໍ້ມູນ ຫຼື ຊື່ສະເພາະເຈາະຈົງ):__________________________________ |
| ☐ | ☐ | ບໍລິການທາງການແພດ (ຂໍ້ມູນ ຫຼື ຊື່ສະເພາະເຈາະຈົງ):______________________________ |
| ☐ | ☐ | ທີ່ພັກປອດໄພ/ສູນພັກເຊົາ (ຂໍ້ມູນ ຫຼື ຊື່ສະເພາະເຈາະຈົງ):___________________________ |
| ☐ | ☐ | ບໍລິການທາງກົດໝາຍ (ຂໍ້ມູນ ຫຼື ຊື່ສະເພາະເຈາະຈົງ):______________________________ |
| ☐ | ☐ | ບໍລິການທາງ (ທັກສະຊີວິດ (ຂໍ້ມູນ ຫຼື ຊື່ສະເພາະເຈາະຈົງ):_____________________________ |
| | | ອື່ນໆ (ເຈາະຈົງປະເພດຂອງການໃຫ້ບໍລິການ, ຊື່ ແລະ ອົງການ ):___________________________ |

| | | |
|---|---|---|
| 1. ການອະນຸຍາດທີ່ຈະໝາຍໂດຍຜູ້ຖືກກະທຳ:<br>( ຫຼືພໍ່ແມ່/ຜູ້ປົກຄອງຖ້າຜູ້ຖືກກະທຳມີອາຍຸສູງກວ່າ 18 ປີ ) | ☐ ແມ່ນ | ☐ ບໍ່ແມ່ນ |

2. ຂ້າພະເຈົ້າໄດ້ຮັບແຈ້ງ ແລະ ເຂົ້າໃຈວ່າບາງຂໍ້ມູນທີ່ບໍ່ສາມາດລະບຸຕົວຕົນອາດຈະຖືກແບ່ງປັນເພື່ອລາຍງານ. ຂໍ້ມູນໃດໆທີ່ແບ່ງປັນຈະບໍ່ສາມາດບອກໄດ້ວ່າເປັນຂ້າພະເຈົ້າ ຫຼື ເຫດການທີ່ເກີດກັບຕົນເອງ. ຜູ້ໃດຜູ້ໜຶ່ງທີ່ໄດ້ຟັງ ຈະບໍ່ສາມາດລະບຸຕົວວ່າເປັນຂ້າພະເຈົ້າໄດ້ ໂດຍອີງໃສ່ຂໍ້ມູນທີ່ຖືກແບ່ງປັນ. ຂ້າພະເຈົ້າເຂົ້າໃຈວ່າຂໍ້ມູນທີ່ໄດ້ຖືກແບ່ງປັນຈະຖືກປະຕິບັດດ້ວຍຄວາມລັບ ແລະ ຄວາມເຄົາລົບ.

ລາຍເຊັນ/ຈ້ຳໂປ້ຜູ້ທີ່ລາຍງານ______________________________________________

| | | |
|---|---|---|
| 2. ການອະນຸຍາດທີ່ຈະໝາຍໂດຍຜູ້ຖືກເຄາະຮ້າຍ:<br>( ຫຼືພໍ່ແມ່/ຜູ້ປົກຄອງຖ້າຜູ້ຖືກກະທຳມີອາຍຸຕ່ຳກວ່າ 18 ປີ ) | ☐ ແມ່ນ | ☐ ບໍ່ແມ່ນ |

(ຫຼື ພໍ່ແມ່/ຜູ້ປົກຄອງ ຖ້າກໍລະນີຜູ້ມາແຈ້ງມີອາຍຸຕ່ຳກວ່າ 18 ປີ)
_____________________________________________________________

ລະຫັດຜູ້ຮັບຜິດຊອບກໍລະນີ:______________________________________________

ວັນທີ:____________________________ ເຫັນດີໃຫ້ສາມາດແລກປ່ຽນ ແລະ ເປີດເຜີຍ

**ການເກັບເປັນຄວາມລັບ**

ຂໍ້ມູນສຳລັບການຄຸ້ມຄອງກໍລະນີ

ຊື່ຜູ້ຖືກກະທຳ:______________________________________________

ຊື່ຂອງຜູ້ດູແລ (ຖ້າຜູ້ເຄາະຮ້າຍເປັນເດັກ):______________________________

ເບີໂທຕິດຕໍ່:______________________________________________

ທີ່ຢູ່:______________________________________________

**ລາຍຊື່ຄະນະຮັບຜິດຊອບຮ່າງ ມາດຕະຖານດຳເນີນການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍ ຈາກຄວາມຮຸນແຮງ ຢູ່ ສປປ ລາວ**

**ກະຊວງຍຸຕິທຳ**

| | | |
|---|---|---|
| 1. | ທ່ານ ແສງພະຈັນ ວົງໂພທອງ | ຮອງຫົວໜ້າຫ້ອງການ |
| 2. | ທ່ານ ນາງ ສາຍຄິດ ວິສີສົມບັດ | ຮອງຫົວໜ້າກົມຮ່ວມມືສາກົນ |
| 3. | ທ່ານ ລັດສະໝີ ພິລາວັນ | ຮອງຫົວໜ້າກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ |
| 4. | ທ່ານ ນາງ ລິດຈະນາ ເຂັມທອງ | ຫົວໜ້າພະແນກຄຸ້ມຄອງອົງການຈັດຕັ້ງຍຸຕິທຳ |
| 5. | ທ່ານ ນາງ ກອງສີ ອິນມະວົງສາ | ຫົວໜ້າພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ |

**ກະຊວງປ້ອງກັນຄວາມສະຫງົບ**

| | | |
|---|---|---|
| 1. | ທ່ານ ພົອ ຄານທະລີ ວົງນະລາດ | ຮອງຫົວໜ້າກົມນິຕິກຳ ແລະ ກົດໝາຍ |
| 2. | ທ່ານ ພົທ ວຽງໄຊ ບານຈັນທະວົງ | ຮອງກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ |
| 3. | ທ່ານ ພົທ ໄຊຊະນະ ພູສະຫວັນ | ຮອງຫົວໜ້າກົມຕຳຫຼວດສືບສວນ-ສອບສວນ |
| 4. | ທ່ານ ພົທ ນາງ ແສງດາລີ ໄຊຫົງຄຳ | ຫົວໜ້າພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ |
| 5. | ທ່ານ ພົທ ສົມສັກ ອະໄພຍະວົງ | ຫົວໜ້າພະແນກສອບສວນ |
| 6. | ທ່ານ ພົທ ເສີດ ທຳມະວົງ | ຫົວໜ້າພະແນກສະກັດກັ້ນແລະຕ້ານອາດຊະຍາກຳທາງຄອມພິວເຕີ |

**ອົງການໄອຍະການປະຊາຊົນສູງສຸດ**

| | | |
|---|---|---|
| 1. | ທ່ານ ນາງ ປີຍາ ພົນເສນາ | ຮອງຫົວໜ້າກົມຕິດຕາມກວດກາການດຳເນີນຄະດີອາຍາ |
| 2. | ທ່ານ ນາງ ສຸກພາວັນ ທຳມະວົງ | ຫົວໜ້າພະແນກກວດກາລັດ |
| 3. | ທ່ານ ນາງ ພູທອງ ສີວິໄຊ | ຫົວໜ້າຂະແໜງຕິດຕາມການກວດກາທົ່ວໄປ |
| 4. | ທ່ານ ນາງ ພອນພະຈັນ ພູເຮືອງຫົງ | ຮອງຫົວໜ້າພະແນກຕິດຕາມກວດກາການດຳເນີນຄະດີການຄ້າ, ຄອບຄົວ ແລະ ເດັກ |
| 5. | ທ່ານ ນາງ ອານີສາ ສີພົນ | ຮອງຫົວໜ້າພະແນກສັງລວມ |

**ສານປະຊາຊົນສູງສຸດ**

| | | |
|---|---|---|
| 1. | ທ່ານ ທິບພະສອນ ລາດວົງໄຊ | ຫົວໜ້າຫ້ອງການ |
| 2. | ທ່ານ ເດດອຳນາດ ສິດທິພອນ | ຮອງຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ |
| 3. | ທ່ານ ນາງ ປັງຄຳ ເຂັມພອນເທບ | ຫົວໜ້າພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ |
| 4. | ທ່ານ ຈາລຶກ ແສນຈາລຶກ | ຜູ້ພິພາກສາ ຊັ້ນໜຶ່ງ ຄະນະສານເດັກ |
| 5. | ທ່ານ ນາງ ວັດທະນາ ສຸລິຍະວົງ | ຜູ້ພິພາກສາ ຊັ້ນໜຶ່ງ ຄະນະສານແພ່ງ |
| 6. | ທ່ານ ນາງ ສຸພັນນາ ວົງພະຈັນ | ຜູ້ຊ່ວຍຜູ້ພິພາກສາ ຄະນະສານອາຍາ |
| 7. | ທ່ານ ນາງ ມີນາ ລາດບັນດິດ | ຜູ້ຊ່ວຍຜູ້ພິພາກສາຄະນະສານຄອບຄົວ |

**ຫ້ອງການ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ**

| | | |
|---|---|---|
| 1. | ທ່ານ ນາງ ມະນີວອນ ຫຼວງສີມບັດ | ຫົວໜ້າຫ້ອງການ ຄຊກມດ |
| 2. | ທ່ານ ນາງ ວິໄລວັນ ບຸບຜານຸວົງ | ຮອງຫົວໜ້າຫ້ອງການ ຄຊກມດ |
| 3. | ທ່ານ ນາງ ໜູແດງ ຈັນມະນີ | ຫົວໜ້າພະແນກຄວາມສະເໝີພາບຍິງ-ຊາຍ |
| 4. | ທ່ານ ໄຊຊະນະ ໄຊອາລາມຂັນຕະມາດ | ວິຊາການ ພະແນກຄວາມສະເໝີພາບຍິງ-ຊາຍ |
| 5. | ທ່ານ ນາງ ດາວຽງສຸກ ຫວ່າງວິຈິດ | ວິຊາການ ພະແນກຄວາມສະເໝີພາບຍິງ-ຊາຍ |

**ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP)**

| | | |
|---|---|---|
| 1. | ທ່ານ ນາງ ເຄທລີນ ພອດເຕີ້ | ຫົວໜ້າພະແນກການປົກຄອງ |
| 2. | ທ່ານ ນາງ ແຢຢອງ ຈອນ | ຜູ້ຮັບຜິດຊອບວຽກງານໂຄງການ |
| 3. | ທ່ານ ນາງ ມີອາ ຣຸນ | ທີ່ປຶກສາໂຄງການ |
| 4. | ທ່ານ ນາງ ທິບພາວັນ ວິຣະຄົມ | ຜູ້ຊ່ວຍໂຄງການ |
| 5. | ທ່ານ ຊອນ ໂອຄອນນໍລ | ອະດີດຫົວໜ້າພະແນກການປົກຄອງ |
| 6. | ທ່ານ ນາງ ຊາຣ່າ ແທ | ອະດີດຜູ້ຊ່ຽວຊານຮັບຜິດຊອບວຽກງານບົດບາດຍິງ-ຊາຍ |

ສະໜັບສະໜູນໂດຍ:

KOICA
Korea International
Cooperation Agency

ຄັນຮົ່ມ
Khan Hom

ຈັດພິມຄັ້ງທຳອິດ:   ຈຳນວນ  200  ສະບັບ (ພາສາລາວ)

ຈັດພິມໂດຍ:

ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າ ຂອງແມ່ຍິງ, ແມ່ ແລະ ເດັກ ແລະ
ອົງການ ສະຫະປະຊາຊາດ ເພື່ອການພັດທະນາ